# ການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ຢູ່ ສປປ ລາວ

## ລົງທຶນໃສ່ຄົນຮຸ້ນໜຸ່ມ ແມ່ນການລົງທຶນເພື່ອອະນາຄົດທີ່ສົດໃສ


ໂດຍ

ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ

ອົງການ ສະຫະປະຊາຊາດ ກອງທຶນສໍາລັບປະຊາກອນ, ສປປ ລາວ



**2014**

**ຈັດພິມໂດຍ:**

ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ສປປ ລາວ

ຖະໜົນໂພນທັນ

ນະຄອນຫຼວງວຽງຈັນ, ສປປ ລາວ

ຕູ້ໄປສະນີ 736

www.saonoulao.org.la

ຈັດພິມຄັ້ງທຳອິດ ໃນປີ 2014

**ສະໜັບສະໜູນໂດຍ:**

ອົງການ ສະຫະປະຊາຊາດ ກອງທຶນສຳລັບປະຊາກອນ ປະຈຳ ສປປ ລາວ

ອີເມວ: laos.office@unfpa.org

ເວັບໄຊ: http://lao.unfpa.org

http://facebook.com/unfpalaos

**ຮູບພາບໂດຍ:**

ຫຼັງ ແລະ ໜ້າປົກ - Micka Perier/UNFPA ສປປ ລາວ

**© ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ສປປ ລາວ**

ບົດລາຍງານນີ້ ແມ່ນໄດ້ຮັບການສະຫງວນລິກະສິດ ບໍ່ສາມາດຈັດພິມຄືນ, ອັດສຳເນົາ, ບັນທຶກ, ເກັບມ້ຽນ ໃນລະບົບທີ່ສາມາດດຶງອອກມາໃຊ້ ຫຼື ສິ່ງຕໍ່ທາງເອເລັກໂຕນິກ ໃນຮູບບແບບໃດກໍ່ຕາມ ໂດຍບໍ່ໄດ້ຮັບອະນຸຍາດລ່ວງໜ້າ.

# ສາລະບານ

**ຄຳສັບຫຍໍ້**

**ຄຳນຳ..............................................................................................V**

**ບົດຂອບໃຈ.......................................................................................VI**

**ບົດສັງລວມຫຍໍ້ການວິໄຈ.......................................................................VII**

**I ພາກສະເໜີ.........................................................................................1**

1.1 ຄວາມເປັນມາ ແລະ ເຫດຜົນ.......................................................................1

1.2 ນິຍາມກອບຄວາມຄິດ ກ່ຽວກັບ ຄົນຮຸ້ນໜຸ່ມ........................................................2

1.3 ຂໍ້ມູນປະຊາກອນຂອງຊາວໜຸ່ມ ໃນ ສປປ ລາວ......................................................2

1.4 ຈຸດປະສົງ ແລະ ຂັ້ນຕອນໂດຍຫຍໍ້..................................................................3

1.5 ວິທີວິທະຍາ........................................................................................4

1.5.1 ການຄັດເລືອກພື້ນທີ່ການສຶກສາ...............................................................7

1.5.2 ການເກັບກຳຂໍ້ມູນ ແລະ ການວິໄຈ...........................................................8

1.6 ສິ່ງທ້າທາຍ ແລະ ຂໍ້ຈຳກັດຂອງການວິໄຈ.........................................................9

**II ກອບອົງກໃນລະດັບຊາດ ທີ່ສະໜັບສະໜູນຄົນຮຸ້ນໜຸ່ມ..........................................10**

2.1 ກອບນິຕິກຳແຫ່ງຊາດ ທີ່ສະໜັບສະໜູນຊາວໜຸ່ມ..................................................10

2.2 ແຜນງານທີ່ສະໜັບສະໜູນໂດຍຜູ້ໃຫ້ທຶນ ແລະ ລັດຖະບານ ສຳລັບຊາວໜຸ່ມ.......................12

2.3 ຂໍ້ແນະນຳຕໍ່ນະໂຍບາຍ ແລະ ແຜນງານ...........................................................15

**III ສຸຂະພາບ.........................................................................................17**

3.1 ນະໂຍບາຍ ແລະ ແຜນງານທາງດ້ານສຸຂະພາບ ຕໍ່ກັບຊາວໜຸ່ມ ແລະ ເຍົາວະຊົນ.......................17

3.2 ສະພາບດ້ານສຸຂະພາບ.............................................................................18

3.2.1 ການດື່ມເຫຼົ້າ, ສູບຢາ ແລະ ໃຊ້ສານເສບຕິດ..................................................19

3.2.2 ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ...............................................21

3.2.3 ການມີລູກແຕ່ຍັງນ້ອຍ.........................................................................25

3.2.4 ພະຍາດທີ່ມາຈາກຍຸງ...........................................................................26

3.2.5 ຄວາມເຈັບເປັນທີ່ມາຈາກອາຫານແລະນໍ້າ......................................................27

3.2.6 ອຸບັດຕິເຫດ ແລະ ການບາດເຈັບ...............................................................27

3.3 ອຸປະສັກ ຕໍ່ການປ້ອງກັນພະຍາດ ແລະ ຮັກສາສຸຂະພາບ...................,,.........................27

3.4 ສະຫຼຸບ..............................................................................................29

**IV ການສຶກສາ.......................................................................................31**

4.1 ນະໂຍບາຍ ແລະ ແຜນງານ ດ້ານການສຶກສາສຳລັບຊາວໜຸ່ມ ແລະ ເຍົາວະຊົນ........................31

4.2 ສະພາບດ້ານການສຶກສາ,,,.........................................................................32

4.2.1 ອັດຕາສ່ວນການເຂົ້າຮຽນ ແລະ ການຮູ້ໜັງສື..................................,,,,,.........32

4.2.2 ຄວາມບໍ່ເທົ່າທຽມດ້ານການສຶກສາ.............................................................33

4.2.3 ການເຂົ້າໂຮງຮຽນ ແລະ ການປະລະການຮຽນ...................................................33

4.2.4 ການເຂົ້າເຖິງການສຶກສາຊັ້ນສູງ ແລະ ການຝຶກອົບຮົມວິຊາຊີບ....34
4.3 ອຸປະສັກຕໍ່ການສຶກສາ....35
4.4 ສະຫຼູບ....36

**V ການມີວຽກເຮັດງານທຳ....38**
5.1 ນະໂຍບາຍ ແລະ ແຜນງານ ທີ່ກ່ຽວຂ້ອງເຖິງຊາວໜຸ່ມ ແລະ ການມີວຽກເຮັດງານທຳ....38
5.2 ສະພາບການມີວຽກເຮັດງານທຳ....39
5.2.1 ຄວາມແຕກຕ່າງທາງດ້ານບົດບາດຍິງ-ຊາຍ....40
5.2.2 ການເຄື່ອນຍ້າຍ....40
5.3 ອຸປະສັກ ຕໍ່ການມີວຽກເຮັດງານທຳ....41
5.4 ສະຫຼູບ....42

**VI ການປົກປ້ອງ....44**
6.1 ນະໂຍບາຍ ແລະ ແຜນງານທີ່ພົວພັນກັບການປົກປ້ອງສຳລັບຄົນລຸ້ນໜຸ່ມ....44
6.2 ສະພາບດ້ານການປົກປ້ອງ,,,,,....45
6.2.1 ການໃຊ້ຄວາມຮຸນແຮງ ແລະ ການລ່ວງລະເມີດທາງຮ່າງກາຍ....46
6.2.2 ອາດຊະຍາກຳ....47
6.2.3 ການຊູດຮີດ/ການເອົາລັດເອົາປຽບ....48
6.3 ອຸປະສັກຕໍ່ການປົກປ້ອງ.....,....48
6.4 ສະຫຼູບ....49

**VII ການມີສ່ວນຮ່ວມ....51**
7.1 ນະໂຍບາຍ ແລະ ແຜນງານ ທີ່ກ່ຽວພັນເຖິງ ຊາວໜຸ່ມ ແລະ ການມີສ່ວນຮ່ວມ....51
7.2 ສະພາບດ້ານການມີສ່ວນຮ່ວມ....,,,,,....51
7.3 ອຸປະສັກຕໍ່ການມີສ່ວນຮ່ວມ....52
7.4 ສະຫຼູບ....53

**VIII ປະເດັນທີ່ກ່ຽວກັບທຸກຂະແໜງການ....55**
8.1 ການດື່ມເຫຼົ້າ ແລະ ໃຊ້ສິ່ງເສບຕິດ ....55
8.2 ການຖືພາແຕ່ອາຍຸຍັງນ້ອຍ....55
8.3 ການເຄື່ອນຍ້າຍ....55
8.4 ບົດບາດຍິງ-ຊາຍ....56
8.5 ການສື່ສານ ແລະ ຄົນຮຸ້ນໜຸ່ມ....56

**IX ສະຫຼຸບ....58**

**X ຂໍ້ແນະນຳເພື່ອຈັດຕັ້ງປະຕິບັດ....60**

**XI ເອກະສານອ້າງອີງ....62**

**XII ເອກະສານຊ້ອນທ້າຍ....65**

# ຄຳສັບຫຍໍ້

| | |
|---|---|
| ADRA | ອົງການ ພັດທະນາ ແລະ ບັນເທົາທຸກ |
| AIDS | ພະຍາດພູມຄຸ້ມກັນເຊື່ອມ (ພະຍາດເອດ) |
| ASEAN | ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ |
| ASRH | ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນໄວໜຸ່ມ |
| AUD | ເງິນໂດລາ ປະເທດ ອົດສະຕຣາລີ |
| AUSAID | ອົງການພັດທະນາຂອງປະເທດ ອົດສະຕຣາລີ |
| AYSA | ການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ |
| BI | ສະຖາບັນ ເບີເນັດ |
| BCC | ການສື່ສານເພື່ອປ່ຽນແປງພຶດຕິກຳ |
| CAD | ເງິນໂດລາ ປະເທດ ການາດາ |
| CCO | ຫ້ອງການໃຫ້ຄຳປຶກສາທາງດ້ານອາຊີບ |
| CCU | ການນຳໃຊ້ຖົງຢາງອານາໄມຢ່າງຕໍ່ເນື່ອງ |
| CHAS | ສູນຕ້ານເອດ HIV/AIDS ແລະ ພະຍາດຕິດຕໍ່ທາງເພດ |
| CRC | ສົນທິສັນຍາຂອງອົງການສະຫະປະຊາຊາດວ່າດ້ວຍສິດທິເດັກ |
| CSE | ເພດສຶກສາແບບຄົບຊຸດ |
| CSO | ອົງການຈັດຕັ້ງທາງສັງຄົມສັງຄົມ |
| DIC | ສູນຂໍ້ມູນ (Drop-in centre) |
| DPPE | ກົມ ອະນຸບານ ແລະ ປະຖົມສຶກສາ |
| DREC | ໂຄງການຫຼຸດຜ່ອນຄວາມສ່ຽງໄພພິບັດສຳລັບເດັກ |
| DRR | ການຫຼຸດຜ່ອນຄວາມສ່ຽງໄພພິບັດ |
| EU | ສະຫະພາບເອີຣົບ |
| FGD | ການສົນທະນາກຸ່ມສະເພາະ |
| GBV | ຄວາມຮຸນແຮງບົນພື້ນຖານທາງເພດ |
| GFATM | ກອງທຶນໂລກເພື່ອຕ້ານ ໂລກ AIDS, ວັນນະໂລກ ແລະ ມາເລເຣັຍ |
| GSHS | ການສຳຫຼວດສຸຂະພາບນັກຮຽນທົ່ວໂລກ |
| HIV | ເຊື້ອໄວຣັສທຳລາຍພູມຄຸ້ມກັນຂອງມະນຸດ (ເຮສໄອວີ) |
| IBBS | ການເຝົ້າລະວັງດ້ານຊີວະ ແລະ ພຶດຕິກຳແບບປະສົມປະສານ |
| ICPD | ກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ |
| ICPD PoA | ແຜນດຳເນີນງານ ຂອງ ກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະການພັດທະນາ |
| IEC | ຂໍ້ມູນສຳລັບການສຶກສາ ແລະ ການສື່ສານ |
| ILO | ອົງການແຮງງານສາກົນ |
| INGO | ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ |
| IOM | ອົງການສາກົນເພື່ອການເຄື່ອນຍ້າຍ |
| JICA | ອົງການຮ່ວມມືສາກົນປະເທດຍີ່ປຸ່ນ |
| KAP | ການສຳຫຼວດ ຄວາມຮູ້, ທັດສະນະ ແລະ ການປະຕິບັດ |
| KII | ການສຳພາດຜູ້ໃຫ້ຂໍ້ມູນຫຼັກ |
| Lao-ITECC | ສູນປະຊຸມ ແລະ ວາງສະແດງສິນຄ້າສາກົນທີ່ນະຄອນຫຼວງວຽງຈັນ, ສປປ ລາວ |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LaoPHA | ສະມາຄົມສຸຂະພາບ ລາວ (Lao Positive Health Association) |
| LCDC | ກຳມາທິການແຫ່ງຊາດລາວເພື່ອຄວບຄຸມ ແລະ ຄຸ້ມຄອງຢາເສບຕິດ |
| LDC | ປະເທດດ້ອຍພັດທະນາ |
| LGBT | ກຸ່ມຮັກຮ່ວມເພດ ຍິງຕໍ່ຍິງ, ຊາຍຕໍ່ຊາຍ, ຫຼິ້ນສອງເພດ, ຜູ້ຜ່າຕັດປ່ຽນເພດ |
| LPRYU | ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ |
| LSIS | ການສຳຫຼວດດັດຊະນີໝາຍທາງສັງຄົມລາວ |
| LWU | ສະຫະພັນແມ່ຍິງລາວ |
| LYU | ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ |
| MCH | ສຸຂະພາບແມ່ ແລະ ເດັກ |
| M&E | ການຕິດຕາມ ແລະ ການປະເມີນຜົນ |
| MDGs | ເປົ້າໝາຍສະຫັດສະຫວັດແຫ່ງການພັດທະນາ |
| MoES | ກະຊວງ ສຶກສາທິການ ແລະ ກິລາ |
| MoH | ກະຊວງ ສາທາລະນະສຸກ |

| | |
|---|---|
| MoHA | ກະຊວງ ພາຍໃນ |
| MoICT | ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ |
| MoJ | ກະຊວງຍຸດຕິທຳ |
| MoLSW | ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ |
| MoPWT | ກະຊວງໂຍທາທິການ ແລະຂົນສົ່ງ |
| MoU | ບົດບັນທຶກຄວາມເຂົ້າໃຈ |
| MPI | ກະຊວງ ແຜນການ ແລະ ການລົງທຶນ |
| MoPS | ກະຊວງປ້ອງກັນຄວາມສະຫງົບ |
| MSM | ຜູ້ຊາຍທີ່ມີເພດສຳພັນກັບຊາຍ |
| MtF | ການປ່ຽນຈາກເພດຊາຍເປັນຍິງ (ຜູ້ທີ່ຜ່າຕັດປ່ຽນເພດ) |
| NCD | ພະຍາດບໍ່ຕິດຕໍ່ |
| NERI | ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ |
| NGO | ອົງການຈັດຕັ້ງບໍ່ສັງກັດລັດ |
| NIOPH | ສະຖາບັນສາທາລະນະສຸກສາດແຫ່ງຊາດ |
| NORAD | ອົງການຮ່ວມມື-ພັດທະນາຂອງປະເທດ ນໍອກແວ |
| NPA | ສະມາຄົມບໍ່ຫວັງຜົນກຳໄລ |
| NTO | ອົງການດ້ານວິຊາການແຫ່ງຊາດ |
| NYP | ເຄືອຂ່າຍໄວໜຸ່ມ |
| NZMFAT | ກະຊວງ ການຕ່າງປະເທດ ແລະ ການຄ້າ ຂອງປະເທດ ນິວຊີແລັນ |
| PCCA | ຄະນະກຳມະການຄວບຄຸມ AIDS ຂັ້ນແຂວງ |
| PPG | ກຸ່ມເພື່ອນປົກປ້ອງເພື່ອນ |
| PPR | ການທົບທວນ ນະໂຍບາຍ ແລະ ແຜນງານ |
| PSI | ອົງການສາກົນບໍລິການປະຊາຊົນ |
| RIES | ສະຖາບັນຄົ້ນຄ້ວາການສຶກສາ ແລະ ກິລາ |
| ROR | ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ |
| SC | ຄະນະກຳມະການຊີ້ນຳການວິເຄາະ AYSA |
| SCF | ກອງທຶນຊ່ວຍເຫຼືອເດັກ |
| SEAMO | ອົງການກ່ຽວກັບລັດຖະມົນຕີສຶກສາຂອງອາຊີຕາເວັນອອກສ່ຽງໃຕ້ |
| SRH | ສຸຂະພາບທາງເພດ ແລະ ຈະເລີນພັນ |
| SRHR | ສິດທິທາງດ້ານສຸຂະພາບຈະເລີນພັນ ແລະ ສຸຂະພາບທາງເພດ |
| SSEAYP | ແຜນງານເດີນທະເລສຳລັບຊາວໜຸ່ມອາຊີຕາເວັນອອກສ່ຽງໃຕ້ |
| STEPS | ການສະໜັບສະໜູນທ່າແຮງຄວາມສາມາດຂອງຜູ້ປະກອບການ |
| STI | ພະຍາດຕິດຕໍ່ທາງເພດສຳພັນ |
| TraC | ການຕິດຕາມຜົນໄດ້ຮັບຢ່າງຕໍ່ເນື່ອງ (ບົດລາຍງານ) |
| TVET | ການຝຶກອົບຮົມ ແລະ ການສຶກສາເຕັກນິກວິຊາຊີບ |
| TWG | ຄະນະວິຊາການ ຂອງ AYSA |
| UN | ອົງການສະຫະປະຊາຊາດ |
| UNESCO | ອົງການສະຫະປະຊາຊາດດ້ານການສຶກສາ, ວິທະຍາສາດ ແລະ ວັດທະນະທຳ |
| UNFPA | ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ |
| UNIAP | ໂຄງການຮ່ວມມືຂອງອົງສະຫະປະຊາດ ເພື່ອຕ້ານການຄ້າມະນຸດ |
| UNICEF | ອົງການສະຫະປະຊາຊາດກອງທຶນສຳລັບເດັກ |
| UNODC | ອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະ ອາສະຍາກຳ |
| USAID | ອົງການພັດທະນາ ສາກົນຂອງປະເທດ ສະຫະລັດອາເມລິກາ |
| USD | ເງິນໂດລາສະຫະລັດ |
| UXO | ລະເບີດທີ່ຍັງບໍ່ທັນແຕກ |
| WHO | ອົງການອະນາໄມໂລກ |
| WIFS | ການເສີມທາດເຫຼັກປະຈຳອາທິດ |
| WRA | ແມ່ຍິງໄວຈະເລີນພັນ |
| YEAL | ສະມາຄົມນັກທຸລະກິດໜຸ່ມຂອງ ປະເທດ ລາວ |
| YPN | ເຄືອຂ່າຍໄວໜຸ່ມ AYSA |

# ຄຳນຳ

ສປປ ລາວ ເປັນໜຶ່ງປະເທດໃນອາຊີຕາເວັນອອກສ່ຽງໃຕ້ທີ່ມີປະຊາກອນໜຸ່ມຫຼາຍທີ່ສຸດ. ຄົນຮຸ້ນໜຸ່ມ ກວມເອົາປະຊາກອນ ສ່ວນໃຫຍ່ຂອງປະຊາຊົນລາວ ເຊິ່ງເກືອບຮອດ 60% ຂອງປະຊາກອນ ມີອາຍຸ ຕ່ຳກວ່າ 25 ປີ ແລະ ຫຼາຍກວ່າ 30% ຂອງປະຊາກອນມີອາຍຸລະຫວ່າງ 10 ຫາ 24 ປີ. ການທີ່ມີປະຊາກອນໜຸ່ມນ້ອຍໃນສັດສ່ວນຫຼາຍ ໄດ້ນຳເອົາທັງກາລະໂອກາດ ແລະ ສິ່ງທ້າທາຍທີ່ໃຫຍ່ຫຼວງມາສູ່ປະເທດ.

ສປປ ລາວ ໄດ້ມີຄວາມຄືບໜ້າຫຼາຍສົມຄວນທີ່ຈະບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ໃນປີ 2015 ແລະ ມີຈຸດປະສົງເພື່ອໃຫ້ບັນລຸເປົ້າ ໝາຍແຫ່ງຊາດ ໃນການຫຼຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ ໃນປີ 2020. ຄົນຮຸ້ນໜຸ່ມມີບົດບາດສຳຄັນໃນການພັດທະນາປະເທດຊາດ ໃນປັດຈຸບັນ ແລະ ອານາຄົດ.

ນີ້ແມ່ນຄັ້ງທຳອິດທີ່ໄດ້ດຳເນີນການວິເຄາະສະພາບຊາວໜຸ່ມ ແລະ ເຍົາວະຊົນ (AYSA) ຢູ່ ສປປ ລາວ, ຊຶ່ງໄດ້ສັງລວມເອົາຂໍ້ມູນທີ່ມີກ່ຽວກັບຊາວໜຸ່ມ ແລະ ເຍົາວະຊົນ ໂດຍມີຈຸດປະສົງ ເພື່ອດຳເນີນການທົບທວນສະພາບລວມຂອງບັນດານະໂຍບາຍ ແລະ ນິຕິກຳທີ່ມີຢູ່ເພື່ອເພີ່ມທະວີບັນດາແຜນງານ ກ່ຽວກັບຄົນຮຸ້ນໜຸ່ມ ໃນປັດຈຸບັນ ແລະ ອານາຄົດ. ຖືວ່າເປັນບາດກ້າວທຳອິດເພື່ອຊ່ວຍລັດຖະບານ, ອົງການຈັດຕັ້ງສາກົນ ແລະ ຊາວໜຸ່ມເອງ ເພື່ອພັດທະນາ ແລະ ປັບປຸງແຜນງານ ແລະ ນະໂຍບາຍຕ່າງໆ ໃຫ້ຫລາກຫລາຍ ແລະ ມີສ່ວນຮ່ວມ ຊຶ່ງຈະສາມາດແກ້ໄຂຄວາມຕ້ອງການສະເພາະຂອງຄົນຮຸ້ນໜຸ່ມໄດ້ຢ່າງມີປະສິດທະຜົນ ໂດຍສະເພາະໃນວຽກງານສາທາ, ສຶກສາ, ການມີສ່ວນຮ່ວມ, ການມີວຽກເຮັດງານທຳ ແລະ ການປົກປ້ອງ; ເຊັ່ນ ແຜນການ 5 ປີ ຂອງ ຂະແໜງສຶກສາ, ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຂະແໜງສາທາລະນະສຸກ, ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ຍຸດທະສາດການພັດທະນາຊາວໜຸ່ມແຫ່ງຊາດ ຂອງສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ (LPRYU/LYU). ຄາດວ່າສິ່ງທີ່ຄົ້ນພົບ ແລະ ຂໍ້ສະເໜີແນະຈາກບົດລາຍງານສະບັບນີ້ ຈະສາມາດ ເຍືອງທາງ ແລະ ເພີ່ມທະວີຄວາມເອົາໃຈໃສ່ຕໍ່ກັບຄວາມສຳຄັນໃນການລົງທຶນໃສ່ຄົນຮຸ້ນໜຸ່ມ ເພື່ອປັບປຸງຊີວິດຂອງພວກເຂົາ ກໍ່ຄືພັດທະນາເສດຖະກິດ, ສັງຄົມ ແລະ ວັດທະນະທຳຂອງປະເທດໂດຍລວມ.

ດຣ. ວິໄລວົງ ບຸດດາຄຳ
ເລຂາທິການ
ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ

Dr. Hassan Mohtashami
ຜູ້ຕາງໜ້າ
ອົງການສະຫະປະຊາຊາດກອງທຶນສຳລັບ
ປະຊາກອນ ປະຈຳ ສປປ ລາວ

# ບົດຂອບໃຈ

ການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ (AYSA) ໄດ້ຮັບການຈັດຕັ້ງປະຕິບັດໂດຍ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (LYU) ໂດຍປະສານສົມທົບກັບ ກະຊວງ ແຜນການ ແລະ ການລົງທຶນ, ກະຊວງ ສຶກສາ ແລະ ກິລາ, ກະຊວງ ສາທາ, ກະຊວງ ຍຸຕິທຳ, ກະຊວງ ພາຍໃນ ແລະ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ. UNFPA ແມ່ນອົງການຈັດຕັ້ງຫຼັກທີ່ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ງົບປະມານ ໃນການດຳເນີນການວິໄຈນີ້. ນອກຈາກນັ້ນ, ອົງການ UNICEF, UNESCO, ILO ແລະ WHO ຍັງປະກອບສ່ວນທາງດ້ານວິຊາການ ຕໍ່ກັບການວິໄຈ ໃນຄັ້ງນີ້ອີກດ້ວຍ.

ພວກເຮົາຂໍສະແດງຄວາມຮູ້ບຸນຄຸນມາຍັງທຸກອົງການຈັດຕັ້ງ ແລະ ບຸກຄົນທີ່ໄດ້ປະກອບສ່ວນເຮັດໃຫ້ການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນດັ່ງກ່າວມີຜົນສຳເລັດ. ໂດຍສະເພາະຢ່າງຍິ່ງ ຂໍສະແດງຄວາມຂອບໃຈອັນຈິງໃຈມາຍັງຄະນະກຳມະການຊີ້ນຳການສຶກສາການວິໄຈໃນຄັ້ງນີ້ ທີ່ໄດ້ນຳພາ ແລະ ຊີ້ທິດເບື້ອງທາງ, ແລະ ໜ່ວຍງານວິຊາການທີ່ໄດ້ໃຊ້ຄວາມພະຍາຍາມອັນລ້ຳຄ່າ, ສະຫຼະເວລາຂອງຕົນ ເຂົ້າໃນການດຳເນີນການວິໄຈຄັ້ງນີ້ ແລະ ກອງເລຂາທີ່ໄດ້ຫ້າງຫະກະກຽມ ແລະ ປະຕິບັດວຽກງານປະຈຳວັນໃຫ້ສຳເລັດຜົນໄປດ້ວຍດີ.

ຂໍສະແດງຄວາມຮູ້ບຸນຄຸນຕໍ່ການປະກອບສ່ວນຢ່າງຫຼວງຫຼາຍຂອງອຳນາດການປົກຄອງທ້ອງຖິ່ນ ປະກອບມີຫ້ອງການຊາວໜຸ່ມເມືອງ ແລະ ແຂວງ ພ້ອມດ້ວຍອຳນາດການປົກຄອງບ້ານ ທີ່ໄດ້ອຳນວຍຄວາມສະດວກໃນການເກັບກຳຂໍ້ມູນ ແລະ ມີສ່ວນຮ່ວມໃນການປະກອບສ່ວນຂໍ້ມູນຕ່າງໆທີ່ເປັນປະໂຫຍດ. ການວິໄຈດັ່ງກ່າວນີ້ອາດບໍ່ສາມາດປະສົບຜົນສຳເລັດໄດ້ ຖ້າຫາກປາສະຈາກການຮ່ວມມືຂອງຄູອາຈານ, ພໍ່ແມ່ ແລະ ໂດຍສະເພາະຄົນຮຸ້ນໜຸ່ມ. ຂໍສະແດງຄວາມຂອບໃຈຢ່າງລົ້ນເຫຼືອມາຍັງທຸກທ່ານທີ່ເຂົ້າຮ່ວມໃນການວິໄຈໃນຄັ້ງນີ້.

ຂໍຂອບໃຈເປັນພິເສດມາຍັງທີ່ປຶກສາດ້ານວິຊາການ, Dr. Bruce Dick ແລະ ສະຖາບັນເບີເນັດ ທີ່ໄດ້ໃຫ້ການສະໜັບສະໜູນດ້ານວິຊາການໃນການວິເຄາະສະພາບຊາວໜຸ່ມ ແລະ ເຍົາວະຊົນໃນຄັ້ງນີ້.

ນອກນັ້ນ, ຍັງສະແດງຄວາມຂອບໃຈມາຍັງຄູ່ຮ່ວມງານ ຈາກ ອົງການໃນເຄືອຍຄ່າຍສະຫະປະຊາຊາດ ແລະ ອົງການຈັດຕັ້ງທາງສັງຄົມ ທີ່ໄດ້ປະກອບສ່ວນໃນກອງປະຊຸມປຶກສາຫາລືໃນແຕ່ລະຄັ້ງ.

ທ້າຍສຸດນີ້, ພວກເຮົາຂໍສະແດງຄວາມຮູ້ບຸນຄຸນມາຍັງ ອົງການ UNFPA ທີ່ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນ ທີ່ເຮັດໃຫ້ການສຶກສາດັ່ງກ່າວນີ້ເປັນໄປໄດ້ ແລະ ປະກົດຜົນເປັນຈິງ.

# ບົດສັງລວມຫຍໍ້ການວິໄຈ

ການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ (AYSA) ນີ້ ໄດ້ເນັ້ນໜັກໃສ່ກຸ່ມອາຍຸ 10-24 ປີ. ການສຶກສາດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ ເພື່ອສ້າງຄວາມເຂົ້າໃຈທີ່ດີຂຶ້ນກວ່າເກົ່າຕໍ່ກັບຊີວິດຂອງຊາວໜຸ່ມ ແລະ ເຍົາວະຊົນ ໃນ ສປປ ລາວ ແລະ ປັດໃຈຕ່າງໆທີ່ມີຜົນກະທົບຕໍ່ກັບພວກເຂົາ, ທັງດ້ານບວກ ແລະ ດ້ານລົບ, ໂດຍມີຈຸດປະສົງເພື່ອ ກຳນົດຂົງເຂດບູລິມະສິດໃນການລົງມືປະຕິບັດ ທີ່ອາດສາມາດປັບປຸງຊີວິດຂອງເຂົາເຈົ້າ ແລະ ປະກອບສ່ວນຕໍ່ກັບ ການພັດທະນາເສດຖະກິດ-ສັງຄົມຂອງປະເທດ, ທັງໃນປະຈຸບັນ ແລະ ອະນາຄົດ.

ສາທາລະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນປະເທດທີ່ບໍ່ມີທາງອອກສູ່ທະເລ ຕັ້ງຢູ່ອາຊີຕາວັນອອກສ່ຽງໃຕ້ ມີປະຊາກອນຫຼາຍຊົນຊາດຊົນເຜົ່າ (49 ຊົນເຜົ່າທີ່ແຕກຕ່າງກັນ) ເຊິ່ງເຜົ່າລາວກວມເອົາ 52.5% ຂອງພົນລະ ເມືອງທັງໝົດ ແລະ ອາໃສຢູ່ເຂດທົ່ງພຽງຕາມລ້ອງແມ່ນ້ຳຂອງ. ເຖິງແມ່ນວ່າການເຄື່ອນຍ້າຍຈາກຊົນນະບົດຫາຕົວ ເມືອງມີການເພີ່ມຂຶ້ນ, ແຕ່ໃນນັ້ນ 68% ຂອງພົນລະເມືອງ ຍັງອາໃສຢູ່ເຂດຊົນນະບົດ.

ໃນປີ 2011 ສປປ ລາວ ໄດ້ຫຼຸດພົ້ນອອກຈາກສະຖານະພາບປະເທດທີ່ມີລາຍຮັບຕ່ຳ ແລະ ກ້າວສູ່ເສດຖະກິດທີ່ມີ ລາຍຮັບປານກາງ. ການພັດທະນານີ້ ສະແດງໃຫ້ເຫັນວ່າປະເທດແມ່ນໄດ້ເດີນໄປຕາມທິດ ເພື່ອບັນລຸວິໄສທັດທີ່ຍາວ ໄກໃນການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020.[1] ໃນຖານະທີ່ເປັນສະມະຊິກຂອງ ກຸ່ມອາຊຽນ, ສປປ ລາວ "ໄດ້ເພີ່ມການເຊື່ອມໂຍງ ເສດຖະກິດເຂົ້າໃນລະດັບພາກພື້ນ ແລະ ລະດັບໂລກ".[2] ແຕ່ເຖິງ ຢ່າງໃດກໍ່ຕາມ ເຖິງວ່າອັດຕາການ ເຕີບໂຕດ້ານເສດຖະກິດຢູ່ລາວຈະສູງຍ້ອນຄວາມຮັ່ງມີຂອງຊັບພະຍາກອນທຳມະ ຊາດ, 27.6% ຂອງ ພົນລະເມືອງຍັງດຳລົງຊີວິດພາຍໃຕ້ຄວາມທຸກຍາກ, ຕ່ຳກວ່າເສັ້ນກຳນົດຄວາມທຸກຍາກແຫ່ງ ຊາດ (2007/2008).[3]

ສປປ ລາວ ມີປະຊາກອນທີ່ເປັນຊາວໜຸ່ມເຖິງ 60% ຂອງພົນລະເມືອງທັງໝົດ 6 ລ້ານຄົນ ເຊິ່ງ ຊາວໜຸ່ມດັ່ງກ່າວ ມີອາຍຸຕ່ຳກວ່າ 25 ປີ. ພວກເຂົາສ້າງເງື່ອນໄຂທີ່ດີໃຫ້ແກ່ປະເທດຊາດ ໃນການໄດ້ຮັບຜົນປະໂຫຍດທາງດ້ານປະຊາ ກອນ. ການເພີ່ມການລົງທຶນ ໃຫ້ແກ່ການພັດທະນາຊັບພະຍາ ກອນມະນຸດ ໂດຍສະເພາະ ໃນຂົງເຂດວຽກງານການສຶກ ສາ, ສາທາລະນະສຸກ, ການສ້າງວຽກເຮັດງານທຳ, ການປົກປ້ອງ ແລະ ການມີສ່ວນຮ່ວມ ຈະຊ່ວຍຮັບປະກັນວ່າຊາວ ໜຸ່ມທຸກຄົນສາມາດບັນລຸຄວາມຜົນສຳເລັດຕາມຄວາມສາດມາດຂອງພວກເຂົາ.

ການວິໄຈ ສະພາບຊາວໜຸ່ມ ແລະ ເຍົາວະຊົນ ໄດ້ເນັ້ນໃສ່ 5 ຂົງເຂດທີ່ສຳຄັນຕໍ່ກັບຊີວິດຂອງຄົນຮຸ້ນໜຸ່ມເຊັ່ນ: ຂົງ ເຂດການສຶກສາ, ສຸຂະພາບ, ແຮງງານ, ການປົກປ້ອງ ແລະ ການມີສ່ວນຮ່ວມ. ການສຶກສາການວິໄຈດັ່ງກ່າວ ຍັງໄດ້ ທົບທວນ ແລະ ສັງລວມເອົາຂໍ້ມູນທີ່ມີຢູ່ ກ່ຽວກັບຄົນຮຸ້ນໜຸ່ມ, ນຳສະເໜີທັດສະນະຂອງຄົນຮຸ້ນໜຸ່ມ ແລະ ຜູ້ໃຫຍ່ ທີ່ມີບົດບາດສຳຄັນຕໍ່ກັບຊີວິດຂອງພວກເຂົາ, ແລະ ກຳນົດຂໍ້ສະຫຼູບ ແລະ ຊ່ອງຫວ່າງ ທີ່ຈຳເປັນຕ້ອງໄດ້ຮັບການແກ້ ໄຂ.

ຂໍ້ມູນໃນການວິ ໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ແມ່ນໄດ້ມາຈາກຫຼາຍແຫຼ່ງເຊັ່ນ: ການທົບທວນບັນດານະ ໂຍບາຍ, ກົດໝາຍ ແລະ ຍຸດທະສາດທີ່ມີຢູ່ທີ່ກ່ຽວພັນກັບຄົນຮຸ້ນໜຸ່ມ, ເພື່ອຊອກຫາຂອບເຂດຄວາມຮັບຜິດຊອບ, ຄວາມຕໍ່ເນື່ອງ, ຊ່ອງຫວ່າງ ແລະ ບົດຮຽນທີ່ຖອດຖອນໄດ້; ການວິເຄາະຂໍ້ມູນດ້ານປະລິມານ ແລະ ຄຸນນະພາບ ຈາກຂໍ້ ມູນມືສອງທີ່ມີຢູ່ເພື່ອອະທິບາຍເຖິງສະພາບຂອງຄົນຮຸ້ນໜຸ່ມ; ການທົບທວນບັນດາແຜນງານ ແລະ ໂຄງການທີ່ຖືກ ຈັດຕັ້ງປະຕິບັດສຳລັບຄົນຮຸ້ນໜຸ່ມ, ເພື່ອປະເມີນຈຸດສຸມ ແລະ ຂອບເຂດການປະຕິບັດຂອງບັນດາໂຄງການ ແລະ ແຜນ ງານເຫຼົ່ານັ້ນ ພ້ອມທັງກຳນົດບົດຮຽນທີ່ຖອດຖອນໄດ້; ການເກັບກຳ ແລະ ວິເຄາະຂໍ້ມູນມືໜຶ່ງ ໂດຍຜ່ານກຸ່ມສົນທະນາ,

---

1 ອົງການທະນາຄານໂລກ. *ພາບລວມ ສປປ ລາວ.* ເວັບໄຊຂອງອົງການທະນາຄານໂລກ: http://www.worldbank.org/en/country/lao/overview.

2 *Ibid.*

3 ລັດຖະບານ ສປປ ລາວ ແລະ ອົງການ ສະຫະປະຊາຊາດ (2013). *ບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ* (The Millennium Development Goals. Progress Report for the Lao PDR) 2013, p.19

ການເກັບກຳຂໍ້ມູນໄດ້ຖືກລົງປະຕິບັດກັບກຸ່ມຄົນຮຸ່ນໜຸ່ມ, ຜູ້ປົກຄອງ ແລະ ອຳນາດການປົກຄອງບ້ານ, ແລະ ໄດ້ມີການສຳພາດຜູ້ໃຫ້ຂໍ້ມູນຫຼັກ ເຊິ່ງປະກອບດ້ວຍຜູ້ທີ່ຮັບຜິດຊອບໃນການວາງແຜນ ແລະ ຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ແຜນງານທີ່ເນັ້ນໃສ່ຄົນຮຸ່ນໜຸ່ມ.

## ສະພາບຂອງ ຊາວໜຸ່ມ ແລະ ເຍົາວະຊົນ ໃນ ສປປ ລາວ

ຂໍ້ມູນຈາກການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ໄດ້ສະແດງໃຫ້ເຫັນວ່າ ມີຄົນຮຸ່ນໜຸ່ມຈຳນວນຫຼາຍ ໃນ ສປປ ລາວ ຍັງມີສຸຂະພາບແຂງແຮງ, ມີໂອກາດເຂົ້າໂຮງຮຽນ, ມີເວລາສຳລັບກິດຈະກຳເວລາຫວ່າງ ແລະ ປະກອບສ່ວນຫຼາຍໆດ້ານຕໍ່ກັບຄອບຄົວ ແລະ ທ້ອງຖິ່ນຕົນເອງ. ແຕ່ຍັງມີຫຼາຍຄົນກໍ່ບໍ່ເປັນເຊັ່ນນັ້ນ, ຄົນຮຸ່ນໜຸ່ມຈຳນວນໜຶ່ງຍັງມີສຸຂະພາບບໍ່ແຂງແຮງ, ບໍ່ສາມາດເຂົ້າເຖິງການສຶກສາ, ປະເຊີນກັບສະພາບແວດລ້ອມໃນການເຮັດວຽກທີ່ເປັນອັນຕະລາຍ ແລະ ສະພາບການທີ່ບໍ່ສາມາດສະແດງສິດທິ ແລະ ພັດທະນາຕົນເອງໄດ້.

ສປປ ລາວ ມີພົນລະເມືອງທີ່ມີອາຍຸໜຸ່ມ, 60% ຂອງພົນລະເມືອງລາວທັງໝົດ 6 ລ້ານກວ່າຄົນ ແມ່ນມີອາຍຸຕ່ຳກວ່າ 25 ປີ ແລະ ໃນນັ້ນ 50% ແມ່ນເພດຍິງ. 70% ຂອງພົນລະເມືອງທີ່ມີອາຍຸໜຸ່ມ ແມ່ນອາໃສຢູ່ໃນເຂດຊົນນະບົດ ເຊິ່ງຈຳນວນຊາວໜຸ່ມຫຼາຍທີ່ສຸດ ແມ່ນອາໃສຢູ່ໃນແຂວງໃຫຍ່ໆຂອງປະເທດ ເຊັ່ນ ແຂວງສະຫວັນນະເຂດ, ນະຄອນຫຼວງວຽງຈັນ ແລະ ແຂວງຈຳປາສັກ. 52.5% ເປັນຊົນເຜົ່າລາວລຸ່ມ. ຊາວໜຸ່ມເພດຍິງໃນເກນອາຍຸ 15-19 ປີ (ເພດຍິງ 59% ແລະ ເພດຊາຍ 19%) ແລະ 20-24 ປີ (ເພດຍິງ 36% ແລະ ເພດຊາຍ 6%) ໄດ້ແຕ່ງງານແລ້ວຫຼາຍກວ່າເພດຊາຍໃນກຸ່ມອາຍຸດຽວກັນ. ການແຕ່ງງານແຕ່ອາຍຸຍັງນ້ອຍ ແມ່ນເປັນເລື່ອງປົກກະຕິ ໃນ ສປປ ລາວ. ອາຍຸສະເລ່ຍໃນການແຕ່ງງານຄັ້ງທຳອິດ ຂອງແມ່ຍິງອາຍຸລະຫວ່າງ 25-49 ປີ ແມ່ນ 19.2 ປີ, ເຊິ່ງບໍ່ມີການປ່ຽນແປງຫຼາຍ ໃນສອງທົດສະວັດທີ່ຜ່ານມາ. ອັດຕາສ່ວນຂອງຊາວໜຸ່ມທີ່ແຕ່ງງານ ມີຄວາມກ່ຽວພັນຢ່າງໃກ້ຊິດກັບລະດັບການສຶກສາ ແລະ ຖານະທາງເສດຖະກິດຂອງເຂົາເຈົ້າ. ອັດຕາສ່ວນການແຕ່ງງານແຕ່ຍັງນ້ອຍຂອງຊາວໜຸ່ມ ໃນຕົວເມືອງ ແມ່ນມີໜ້ອຍກວ່າເມື່ອທຽບໃສ່ໃນເຂດຊົນນະບົດ, ແລະ ການແຕ່ງງານແຕ່ອາຍຸຍັງນ້ອຍ ຢູ່ໃນບາງຊົນເຜົ່າແມ່ນຍັງມີຫຼາຍ.

ສປປ ລາວ ຍັງເປັນປະເທດໜຶ່ງທີ່ມີອັດຕາການເກີດລູກຂອງໄວໜຸ່ມສູງທີ່ສຸດ ໃນພາກພື້ນ, ມີເດັກເກີດ 94 ຄົນ ຕໍ່ໄວໜຸ່ມຍິງ ຈຳນວນ 1,000 ຄົນ (ອາຍຸ 15-19 ປີ), ແລະ ມີຄວາມແຕກຕ່າງກັນຫຼາຍລະຫວ່າງ ເຂດຊົນນະບົດ ແລະ ຕົວເມືອງ (ເດັກເກີດ 114 ແລະ 44 ຄົນ ຕໍ່ໄວໜຸ່ມຍິງ 1,000 ຄົນ, ຕາມລຳດັບ).

ໃນດ້ານການສຶກສາ, ອັດຕາການເຂົ້າໂຮງຮຽນຊັ້ນປະຖົມຂອງເດັກນ້ອຍແມ່ນ 95.2%. ອັດຕາການຮູ້ໜັງສືຂອງຊາວໜຸ່ມອາຍຸ 15-19 ປີ ແມ່ນສູງກວ່ານ້ອຍໜຶ່ງ ຖ້າສົມທຽບກຸ່ມອາຍຸ 20-24 ປີ, ແລະ ອັດຕາການຮູ້ໜັງສືຂອງຊາວໜຸ່ມເພດຍິງ ແມ່ນຕ່ຳກວ່າເພດຊາຍທີ່ຢູ່ໃນກຸ່ມອາຍຸ 15-24 ປີ, ຄິດເປັນ 69% ແລະ 77% ຕາມລຳດັບ.

ການມີສ່ວນຮ່ວມໃນກຳລັງແຮງງານຂອງຄົນໜຸ່ມ ຢູ່ ສປປ ລາວ ແມ່ນມີສູງ. ອັດຕາການມີສ່ວນຮ່ວມໃນກຳລັງແຮງງານຂອງພົນລະເມືອງໃນກຸ່ມອາຍຸ 15-19 ປີ ແມ່ນ 48.9% ແລະ 83.7% ໃນກຸ່ມອາຍຸ 20-24 ປີ. ໃນປະຈຸບັນ, ອັດຕາການມີວຽກເຮັດຂອງແມ່ຍິງ ແມ່ນສູງກວ່າອັດຕາການມີວຽກເຮັດຂອງເພດຊາຍໃນກຸ່ມອາຍຸ 15-24 ປີ. ອັດຕາການຫວ່າງງານ ໃນກຸ່ມອາຍຸ 15-24 ປີ ແມ່ນສູງກວ່າກຸ່ມທີ່ມີອາຍຸແກ່ກວ່າເຂົາເຈົ້າ ແລະ ຈະຄ້ອນຂ້າງສູງຢູ່ໃນຕົວເມືອງ. ອັດຕາການຫວ່າງງານຂອງຊາວໜຸ່ມໃນກຸ່ມອາຍຸ 15-24 ປີ, ສຳລັບເພດຍິງ ແມ່ນ 2.5% ແລະ ສຳລັບເພດຊາຍແມ່ນ 3.5%.

### ສຸຂະພາບ

ການເຕີບໂຕທາງດ້ານເສດຖະກິດ ແລະ ການພັດທະນາຢ່າງໄວວາໃນ ສປປ ລາວ ມີຜົນກະທົບຫຼາຍຢ່າງຕໍ່ກັບສຸຂະພາບຂອງຄົນໜຸ່ມ. ການຫັນປ່ຽນທາງດ້ານວັດທະນະທຳ ແລະ ສັງຄົມເຮັດໃຫ້ເກີດມີອິດທິພົນໃຫ້ກັບຊາວໜຸ່ມມີພຶດ

ຕິກຳສ່ຽງ, ເຮັດໃຫ້ມີສິ່ງຈູງໃຈຄົນໜຸ່ມໃຫ້ໄປກ່ຽວຂ້ອງກັບພຶດຕິກຳສ່ຽງ, ພ້ອມກັນນັ້ນມັນກໍ່ຍັງເຮັດໃຫ້ຊາວໜຸ່ມຕ້ອງໄດ້ສ້າງຄວາມສາມາດ ທີ່ຈະຮັບມືກັບສະພາບການທີ່ມີຄວາມສ່ຽງດັ່ງກ່າວ. ໂອກາດທາງດ້ານການເຄື່ອນຍ້າຍເຮັດໃຫ້ມີຄວາມສ່ຽງຕໍ່ກັບພະຍາດຕິດຕໍ່ສຳລັບຜູ້ເຄື່ອນຍ້າຍທີ່ມີອາຍຸຍັງໜຸ່ມ, ແລະ ຄວາມສ່ຽງທາງສຸຂະພາບອື່ນໆ ເຊັ່ນການນາໃຊ້ຢາເສບຕິດ (ໂດຍສະເພາະຢາບ້າ) ແລະ ການບາດເຈັບຈາກອຸບັດຕິເຫດທາງຖະໜົນ.

ການນຳໃຊ້ຢາເສບຕິດໄດ້ມີການແຜ່ຂະຫຍາຍໄປທົ່ວປະເທດ, ຍ້ອນຫຼາກຫຼາຍເຫດຜົນ. ຢູ່ໃນຊຸມຊົນເຂດຊົນນະບົດຊາວໜຸ່ມໄດ້ນຳໃຊ້ຢາບ້າເພື່ອຊ່ວຍໃນການເຮັດວຽກ  ແຕ່ຢູ່ໃນຕົວເມືອງຊາວໜຸ່ມນຳໃຊ້ຢາບ້າເພື່ອຜ່ອນຄາຍອາລົມ. ການບໍລິໂພກສິ່ງມຶນເມົາທີ່ເພີ່ມຂຶ້ນຂອງຄົນໜຸ່ມເຊິ່ງຖືວ່າເປັນທີ່ຍອມຮັບໄດ້ໃນສັງຄົມ ໄດ້ສ້າງຄວາມສ່ຽງທີ່ຮ້າຍແຮງຕໍ່ກັບສຸຂະພາບ ແລະ ຊີວິດຂອງເຂົາເຈົ້າ.

ການມີລູກກ່ອນໄວອັນຄວນບໍ່ໄດ້ຖືກຮັບຮູ້ວ່າເປັນບັນຫາ ແລະ ຖືວ່າເປັນເລື່ອງຜິດປົກກະຕິ, ສະນັ້ນ ສປປ ລາວ ຈຶ່ງມີອັດຕາການຖືພາຂອງໄວໜຸ່ມສູງທີ່ສຸດໃນພາກພື້ນ. ພຶດຕິກຳສ່ຽງຕໍ່ການມີເພດສຳພັນ, ລວມທັງການບໍ່ນິຍົມໃຊ້ຖົງຢາງອະນາໄມ ແລະ ຍັງມີຄູ່ນອນຫຼາຍຄົນ ເປັນເລື່ອງເກີດຂຶ້ນກັບຊາວໜຸ່ມໂດຍທົ່ວໄປ ໂດຍສະເພາະແມ່ນໃນບາງກຸ່ມຊົນເຜົ່າ. ຊາວໜຸ່ມຍິງ ແລະ ຊາຍ ໂດຍທົ່ວໄປແລ້ວບໍ່ນິຍົມໃຊ້ຖົງຢາງອະນາໄມ ນອກຈາກກັບຜູ້ຍິງທີ່ຂາຍບໍລິການ, ສະນັ້ນ, ຈຶ່ງກໍ່ໃຫ້ເກີດມີການຖືພາໂດຍບໍ່ພຶງປາຖະໜາ ແລະ ການເອົາລູກອອກແບບຜິດກົດໝາຍ ເຊິ່ງຂໍ້ມູນດັ່ງກ່າວຂ້ອນຂ້າງມີຈຳກັດ .

ໃນຂະນະທີ່ ການຕິດເຊື້ອເຮສໄອວີ ໃນຈຳນວນປະຊາກອນທົ່ວໄປຍັງຕ່ຳ, ມີປະມານ 0.2%[4], ພຶດຕິກຳສ່ຽງຕໍ່ການຕິດຕໍ່ເຮສໄອວີ ຍັງຖືເປັນເລື່ອງປົກກະຕິ. ການຈະເລີນເຕີບໂຕຂອງເສດຖະກິດ, ການປ່ຽນແປງຂອງສັງຄົມ ແລະ ຈຸດທີ່ຕັ້ງຂອງ ສປປ ລາວ ອາດກໍ່ໃຫ້ເກີດການເພີ່ມຂຶ້ນຂອງຜູ້ຕິດເຊື້ອເຮສໄອວີ. ເຖິງແມ່ນວ່າ ການຕິດເຊື້ອເຮສໄອວີ ໃນປະເທດ ແມ່ນຕ່ຳ, 80% ຂອງຊາວໜຸ່ມອາຍຸ 15-19 ປີ ເຄີຍໄດ້ຍິນກ່ຽວກັບພະຍາດເອດ ແຕ່ລະດັບຄວາມເຂົ້າໃຈຮອບດ້ານກ່ຽວກັບການປ້ອງກັນເຮສໄອວີ ໃນໝູ່ຊາວໜຸ່ມ ແມ່ນຍັງຕ່ຳ. ສອງການສຶກສາໄດ້ຊີ້ໃຫ້ເຫັນວ່າ ໜຶ່ງສ່ວນສີ່ຂອງຊາວໜຸ່ມອາຍຸ 15-19 ປີ ມີຄວາມຮູ້ຮອບດ້ານກ່ຽວກັບການຕິດເຊື້ອເຮສໄອວີ/ພະຍາດເອດ.[5] [6]

ເຖິງແມ່ນວ່າ ອັດຕາການຕິດເຊື້ອເຮສໄອວີໃນກຸ່ມຄົນທົ່ວໄປແມ່ນຢູ່ໃນລະດັບຕ່ຳ, ແຕ່ອັດຕາການຕິດພະຍາດຕິດຕໍ່ທາງເພດສຳພັນ (ພຕພ) ມີຕົວເລກທີ່ສູງ ໃນນັ້ນລວມທັງ ໜອງໃນທຽມ ແລະ  ໜອງໃນ.[7] ໃນຕົວເມືອງໃຫຍ່ ຊາວໜຸ່ມສາມາດເຂົ້າຫາຂໍ້ມູນກ່ຽວກັບພະຍາດຕິດຕໍ່ທາງເພດສຳພັນໄດ້ງ່າຍກວ່າ, ແຕ່ຍັງມີຫຼາຍເຫດຜົນທີ່ເຮັດໃຫ້ຊາວໜຸ່ມ ບໍ່ປະຕິບັດຕາມວິທີການ ການມີເພດສຳພັນທີ່ປອດໄພ. ໃນຊົນນະບົດ ໂດຍສະເພາະແມ່ນເຂດທີ່ມີເສັ້ນທາງເຂົ້າເຖິງຍາກ ຊາວໜຸ່ມຍັງຂາດຄວາມຮູ້ກ່ຽວກັບສຸຂະ ພາບຈະເລີນພັນ ແລະ ສຸຂະພາບທາງເພດ  ແລະ ບໍ່ສາມາດການເຂົ້າເຖິງຖົງຢາງອາໄມ, ເຊິ່ງເປັນປັດໄຈສຳຄັນພາໃຫ້ມີການຖືພາແບບບໍ່ຕັ້ງໃຈ ແລະ  ຕິດພະຍາດຕິດຕໍ່ທາງເພດສຳພັນ. ການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ ເພີ່ມຄວາມສ່ຽງຕໍ່ການສິ່ງຕໍ່ ແລະ ການຕິດເຊື້ອເຮສໄອວີ.

ການຂາດການເຂົ້າເຖິງ ຫຼື ມີຄວາມຈຳກັດໃນການເຂົ້າເຖິງການບໍລິການໃຫ້ຄຳປຶກສາ ດ້ານສຸຂະພາບຈະເລີນພັນ ແລະສຸຂະພາບທາງເພດທີ່ເປັນມິດຕໍ່ກັບໄວໜຸ່ມ ແລະ ຄວາມຈຳກັດໃນການເຂົ້າຫາຂໍ້ມູນ ແລະ ການບໍລິການ ສຳລັບຊາວໜຸ່ມທີ່ແຕ່ງງານ ແລະ ບໍ່ໄດ້ແຕ່ງງານ, ຄ່າບໍລິການ, ທັດສະນະຄະຕິຂອງແພດໝໍ, ການຄວບຄຸມຕົນເອງໃນການເວົ້າວ່າ, ການຢ້ານສັງຄົມປະນາມ, ການຂາດຄວາມໝັ້ນໃຈກ່ຽວກັບການຮັກສາຄວາມລັບຂອງແຫຼ່ງບໍລິການ, ລ້ວນແລ້ວແຕ່ເປັນສິ່ງຂວາງ ບໍ່ໃຫ້ຊາວໜຸ່ມເຂົ້າຫາການບໍລິການ ແລະ ຂໍ້ມູນທີ່ຊາວໜຸ່ມຕ້ອງການ.

---

4 Centre for HIV/AIDS/STI (CHAS) (2012). *Global AIDS Reponse Progress (GARP)  Country Report, Lao PDR.*

5 UNICEF and MoE (2009). *Assement Life-Skills Curriculum Project in Lao PDR. Scaling up the response for Children.*

6 Thanavanh B, Harun-Or-Rashid M, Kasuya H, Sakamoto J. (2013). *Knolwege, attitudes and practices regarding HIV/AIDS among male high schiil students in Lao Peoples Democractic Republic:* J Int AIDS Soc., 16:p.17387

7 Ibid.

ຍັງມີຄວາມຕ້ອງການ ທີ່ຕ້ອງສືບຕໍ່ຫຼຸດຜ່ອນຄວາມແຕກໂຕນກັນ ໃນການເຂົ້າເຖິງການບໍລິການສຸຂະພາບຂອງແຕ່ລະກຸ່ມຄົນຮຸ່ນໜຸ່ມ. ບໍ່ພຽງແຕ່ຂະແໜງການສາທາລະນະສຸກເທົ່ານັ້ນ ແຕ່ທຸກຂະແໜງຕ່າງໆກໍ່ມີບົດບາດທີ່ສໍາຄັນທີ່ຈະເພີ່ມການໂຄສະນາຂົນຂວາຍ ແລະ ປູກຈິດສໍານຶກ ຕໍ່ແຜນງານສຸຂະພາບສຶກສາຕ່າງໆ ໃຫ້ແກ່ຄົນຮຸ່ນໜຸ່ມໃນທຸກລະດັບ ຕົວຢ່າງ: ການເຊື່ອມທັກສະຊີວິດເຂົ້າໃນຫຼັກສູດຫຼັກແຫ່ງຊາດໃນໂຮງຮຽນ.

## ການສຶກສາ

ວຽກງານການສຶກສາໃນ ສປປ ລາວ ໄດ້ມີຄວາມຄືບໜ້າທີ່ເຫັນໄດ້ຊັດເຈນ, ເຊິ່ງເຫັນໄດ້ຈາກໃນຫຼາຍໆນະໂຍບາຍ, ແຜນການ ແລະ ແຜນງານ. ຄວາມແຕກໂຕນກັນຂອງບົດບາດຍິງ-ຊາຍ ໃນການສຶກສາລະດັບຊັ້ນປະຖົມ ໄດ້ມີການຫຼຸດລົງຢ່າງຫຼວງຫຼາຍ. ຄົນຮຸ່ນໜຸ່ມ, ພໍ່ແມ່ຜູ້ປົກຄອງ ແລະ ອໍານາດການປົກຄອງຕ່າງໆ ກໍ່ເຫັນໄດ້ຄຸນຄ່າຂອງການສຶກສາເປັນຢ່າງສູງ.

ເຖິງແມ່ນວ່າການສຶກສາຈະມີຄວາມຄືບໜ້າຫຼາຍຢ່າງ, ແຕ່ກໍ່ຍັງມີຄວາມແຕກໂຕນກັນ ແລະ ຍັງມີສິ່ງທ້າທາຍຫຼາຍຢ່າງທີ່ກ່ຽວພັນກັບຄຸນະພາບ, ປະສິດຕິຜົນ ແລະ ການເຂົ້າເຖິງການສຶກສາ. ມີອຸປະສັກຫຼາຍຢ່າງສໍາລັບຄົນຮຸ່ນໜຸ່ມໃນການເຂົ້າຮຽນ ຕົ້ນຕໍແມ່ນອຸປະສັກດ້ານການເງິນ ແລະ ການໄດ້ຮັບການສະໜັບສະໜູນຈາກພໍ່ແມ່ຂອງເຂົາເຈົ້າ. ຍັງຄົງມີຄວາມແຕກໂຕນກັນທາງດ້ານບົດບາດຍິງ-ຊາຍ ໃນການສຶກສາຊັ້ນມັດທະຍົມ ໂດຍສະເພາະຢູ່ໃນເຂດຊົນນະບົດ ແລະ ໃນບາງກຸ່ມຊົນເຜົ່າ.

ໂດຍລວມແລ້ວ ຫຼາຍຄົນຍັງເຫັນວ່າການສຶກສາຊັ້ນສູງ ມີຄຸນຄ່າຫຼາຍກວ່າການສຶກສາສາຍວິຊາຊີບ. ເຖິງແນວໃດກໍ່ຕາມ, ໃນເວລາດຽວກັນ ຍັງມີຄວາມບໍ່ສອດຄ່ອງກັນລະຫວ່າງການສຶກສາ ແລະ ໂອກາດໃນການມີວຽກເຮັດງານທໍາ, ຄົນຮຸ່ນໜຸ່ມມີຄວາມຮູ້ສຶກວ່າ ການສຶກສາທີ່ເຂົາໄດ້ຮັບບໍ່ໄດ້ຊ່ວຍໃນການກະກຽມຕົນເອງ ດັ່ງທີ່ພວກເຂົາຄາດຫວັງເອົາໄວ້. ຄົນຮຸ່ນໜຸ່ມ, ພໍ່ແມ່ຜູ້ປົກຄອງ ແລະ ອໍານາດການປົກຄອງຜູ້ທີ່ເຂົ້າຮ່ວມໃນການເກັບກໍາຂໍ້ມູນມີໜຶ່ງບາງຄົນ ຍັງກ່າວເຖິງສາຍພົວພັນລະຫວ່າງຄວາມບໍ່ສາມາດທີ່ຈະຮຽນຕໍ່ໃນລະດັບສູງ ແລະ ການມີວຽກເຮັດງານທໍາກັບການມີສາຍພົວພັນທີ່ເອື້ອອໍານວຍພວກເຂົາ.

ມີຄວາມຈໍາເປັນທີ່ຕ້ອງເພີ່ມທະວີການຮ່ວມມືລະຫວ່າງ ຂະແໜງສຶກສາ ແລະ ຂະແໜງແຮງງານ ເພື່ອຮັບປະກັນວ່າຄົນຮຸ່ນໜຸ່ມທຸກຄົນ, ໂດຍບໍ່ຄໍານຶງເຖິງ ເພດ, ຄວາມພິການ ຫຼື ຊົນເຜົ່າ ໄດ້ຮັບຜົນປະໂຫຍດຈາກໂອກາດທີ່ເພີ່ມຂຶ້ນໃນ ສປປ ລາວ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ການສົ່ງຕໍ່ລະຫວ່າງ ໂຮງຮຽນ ແລະ ການເຮັດວຽກ ຈຶ່ງຕ້ອງມີປະສິດຕິຜົນທີ່ສຸດ.

## ການມີວຽກເຮັດງານທໍາ

ໂອກາດການມີວຽກເຮັດງານທໍາ ມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍລະຫວ່າງເຂດຕົວເມືອງ, ເຂດຊົນນະບົດ ແລະ ເຂດທີ່ມີເສັ້ນທາງເຂົ້າເຖິງຍາກ, ລະຫວ່າງຊາວໜຸ່ມຍິງ ແລະ ຊາວໜຸ່ມຊາຍ. ຄົນຮຸ່ນໜຸ່ມສ່ວນຫລາຍບໍ່ມີທັກສະພຽງພໍທີ່ຈະຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງປະເພດວຽກງານທີ່ມີຢູ່, ນອກຈາກນີ້, ຊາວໜຸ່ມຍັງມີຄວາມຈໍາກັດໃນການເຂົ້າຫາຂໍ້ມູນກ່ຽວກັບໂອກາດການມີວຽກເຮັດງານທໍາ. ການຈ້າງງານຂອງຊາວໜຸ່ມສ່ວນໃຫຍ່ແມ່ນຢູ່ໃນປະເພດວຽກທີ່ມີຝີມືຕໍ່າ, ໄດ້ຮັບຄ່າແຮງຕໍ່າ, ຜະລິດຕະພາບຕໍ່າ, ແລະ ວຽກທີ່ບໍ່ໄດ້ຄ່າຕອບແທນ. ຫຼາຍອາຊີບດັ້ງເດີມ ເຊັ່ນ ກະສິກໍາແບບກຸ້ມຕົນເອງ ບໍ່ໄດ້ເປີດໂອກາດໃຫ້ຄົນຮຸ່ນໜຸ່ມຫຼຸດພົ້ນອອກຈາກວົງຈອນຂອງຄວາມທຸກຍາກ.

ຊາວໜຸ່ມທີ່ບໍ່ແຕ່ງງານ ແລະ ແຕ່ງງານ ໂດຍສະເພາະຊາວໜຸ່ມຍິງ ມີການເຄື່ອນຍ້າຍເພີ່ມຂຶ້ນຢູ່ພາຍໃນປະເທດ ແລະ ອອກນອກປະເທດ. ຊາວໜຸ່ມທີ່ເຄື່ອນຍ້າຍສ່ວນຫຼາຍມັກຈະບໍ່ໄດ້ຮັບການປົກປ້ອງຢ່າງພຽງພໍທາງດ້ານສຸຂະພາບ ແລະ ຄວາມຕ້ອງການໃນສະຖານະພາບດ້ານກົດໝາຍ.

ສິ່ງສຳຄັນແມ່ນການສ້າງກາລະໂອກາດ ແລະ ຄວາມອາດສາມາດໃຫ້ຄົນຮຸ່ນໜຸ່ມ ເພື່ອຮັບປະກັນວ່າເຂົາເຈົ້າຈະສາມາດແຂ່ງຂັນໄດ້ພາຍໃນພາກພື້ນ ພາຍໃຕ້ກອບປະຊາຄົມເສດຖະກິດອາຊຽນ. ຢາກໄດ້ແນວນັ້ນຕ້ອງໄດ້ສ້າງສະພາບແວດລ້ອມທີ່ເອື້ອອຳນວຍຫຼາຍຢ່າງ ເປັນຕົ້ນແມ່ນນະໂຍບາຍວ່າດ້ວຍການຈ້າງງານທີ່ເປີດໂອກາດໃຫ້ເຂົ້າເຖິງການຝຶກອາຊີບຂັ້ນພື້ນຖານ, ແລະ ສ້າງສິ່ງຈູງໃຈ ໃນການຊ່ວຍໃຫ້ ກຸ່ມຄົນທີ່ດ້ອຍໂອກາດ ໄດ້ມີວຽກເຮັດ, ທັງໝົດນັ້ນແມ່ນປະເດັນສຳຄັນຕໍ່ກັບການພັດທະນາເສດຖະກິດຂອງປະເທດໃຫ້ມີຄວາມຍືນຍົງ.

## ການປົກປ້ອງ ແລະ ຄວາມສ່ຽງ

ຍັງມີຫຼາຍບັນຫາ ທີ່ກ່ຽວກັບການປົກປ້ອງ ເຊັ່ນ ການແຕ່ງງານກ່ອນໄວອັນຄວນ, ດ້ານຊົນເຜົ່າ, ບົດບາດຍິງ-ຊາຍ, ການໃຊ້ຄວາມຮຸນແຮງ, ການຄ້າມະນຸດ ແລະ ການນຳໃຊ້ສານເສບຕິດ, ທີ່ເຮັດໃຫ້ຊາວໜຸ່ມມີຄວາມສ່ຽງເພີ່ມຂຶ້ນ ແລະ ກີດຂວາງສິດທິທາງດ້ານສຸຂະພາບ, ການສຶກສາ ແລະ ການພັດທະນາຂອງເຂົາເຈົ້າ.

ຊາວໜຸ່ມບາງກຸ່ມໂດຍສະເພາະແມ່ນຜູ້ຢູ່ສະຖານະພາບສ່ຽງ - ສິດທິທາງດ້ານສຸຂະພາບ ແລະ ການສຶກສາຂອງພວກເຂົາ ມີໂອກາດໜ້ອຍສຸດທີ່ຈະໄດ້ຮັບການປົກປ້ອງ, ໄດ້ຮັບການເຄົາລົບ ແລະ ນຳໃຊ້. ຫຼາຍຄົນໃນກຸ່ມເຫຼົ່ານີ້ ໄດ້ຖືກລະບຸຢູ່ໃນການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ເຊັ່ນ: ກຸ່ມຊາວໜຸ່ມທີ່ມີຄວາມພິການ, ກຸ່ມຮັກຮ່ວມເພດຊາຍຮັກຊາຍ, ຍິງຮັກຍິງ, ຫຼິ້ນສອງເພດ, ຜ່າຕັດປ່ຽນເພດ (LGBT), ແຮງງານເດັກນ້ອຍ, ຜູ້ຍົກຍ້າຍທີ່ມີອາຍຸນ້ອຍ, ຊາວໜຸ່ມຫວ່າງງານໃນຕົວເມືອງ, ກຸ່ມປະຊາກອນສະເພາະ (ກະເທີຍ, ເພດຊາຍທີ່ມີເພດສຳພັນກັບເພດຊາຍ, ຊາຍໜຸ່ມຍິງທີ່ພົວພັນກັບການຂາຍບໍລິການທາງເພດ), ຊາວໜຸ່ມຍິງທີ່ຖືພາ ໂດຍສະເພາະຊາວໜຸ່ມຍິງທີ່ຍັງບໍ່ທັນແຕ່ງງານ, ຜູ້ທີ່ໃຊ້ຢາເສບຕິດ ແລະ ກຸ່ມສ່ຽງໃນການທົດລອງໃຊ້ຢາເສບຕິດ, ຊາວໜຸ່ມຍິງໃນເຂດທີ່ມີຫົນທາງເຂົ້າເຖິງຍາກ, ຊາວໜຸ່ມທີ່ທຸກຍາກໃນເຂດຊົນນະບົດ ແລະ ຊາວໜຸ່ມໃນບາງກຸ່ມຊົນເຜົ່າ.

ການປ່ຽນແປງທີ່ເກີດຂຶ້ນ ໃນ ສປປ ລາວ ໄດ້ມີຜົນກະທົບຕໍ່ກັບຄົນຮຸ່ນໜຸ່ມແຕ່ລະຄົນແຕກຕ່າງກັນ. ດັ່ງນັ້ນ, ສິ່ງສຳຄັນແມ່ນຕ້ອງຮັບປະກັນວ່າ ບາງກຸ່ມຂອງຄົນຮຸ່ນໜຸ່ມຈະບໍ່ໄດ້ຖືກປະລະ. ການນຳໃຊ້ວິທີການ ທີ່ອີງໃສ່ສິດທິພື້ນຖານເພື່ອການພັດທະນາ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາທຸກຂັ້ນຕອນ ເປັນຈຸດສຳຄັນທີ່ສາມາດເຮັດໃຫ້ມີຄວາມເທົ່າທຽມກັນໃນການເບິ່ງແຍງຊາວໜຸ່ມ, ເຊິ່ງລວມທັງການຈັດຕັ້ງປະຕິບັດ ແລະ ການທົບທວນຢ່າງເປັນລະບົບຕໍ່ກັບຄຳແນະນຳ ຂອງຄະນະກຳມະການວ່າດ້ວຍສິດທິເດັກ, ຄະນະກຳມະການວ່າດ້ວຍການລົບລ້າງທຸກຮູບແບບຂອງການຈຳແນກຕໍ່ແມ່ຍິງ ແລະ ຄະນະກຳມະການວ່າດ້ວຍສິດທິຄົນພິການ.

## ການມີສ່ວນຮ່ວມ

ຊາວໜຸ່ມ ແລະ ບັນດາອຳນາດການປົກຄອງອາດເຂົ້າໃຈແນວຄວາມຄິດຂອງການມີສ່ວນຮ່ວມແຕກຕ່າງກັນ. ການມີສ່ວນຮ່ວມມັກຈະອ້າງອີງເຖິງການເຂົ້າຮ່ວມຂອງຊາວໜຸ່ມ ໃນກິດຈະກຳຂອງບ້ານ ແລະ ງານບຸນຕ່າງໆ ເຊິ່ງຖືເປັນການສ້າງຄວາມສາມັກຄີພາຍໃນຊຸມຊົນຂອງເຂົາເຈົ້າ.

ຊາວໜຸ່ມມີໂອກາດໜ້ອຍ ໃນການປະກອບສ່ວນເຂົ້າໃນການຕັດສິນບັນຫາຕໍ່ກັບຊີວິດຂອງພວກເຂົາເອງໃນທຸກລະດັບ. ສຽງຂອງຄົນຮຸ່ນໜຸ່ມ ໃນຕົວເມືອງ ແລະ ຊົນນະບົດ ຍັງບໍ່ໄດ້ຖືກລວມເຂົ້າໃນການວາງແຜນພັດທະນາ ໃນລະດັບທ້ອງຖິ່ນ ຫຼື ລະດັບຊາດ. ຍັງມີສິ່ງທ້າທາຍອີກຫຼາຍຢ່າງ ແລະ ຂໍ້ຈຳກັດການມີສ່ວນຮ່ວມຂອງຄົນຮຸ່ນໜຸ່ມ ເຊັ່ນການທີ່ບໍ່ມີຜູ້ຕາງໜ້າຂອງຊາວໜຸ່ມ, ໂອກາດທີ່ມີສ່ວນຮ່ວມທີ່ຈຳກັດ, ຄວາມເຂົ້າໃຈຂອງອຳນາດການປົກຄອງ ແລະ ຜູ້ປົກຄອງຕໍ່ກັບບົດບາດຄົນຮຸ່ນໜຸ່ມ ແລະ ຂາດເວທີ ສຳລັບສະແດງຄຳຄິດເຫັນຂອງຊາວໜຸ່ມ. ຖ້າປາສະຈາຜູ້ຕາງໜ້າຈາກອົງການຈັດຕັ້ງ ເຊັ່ນ ສູນກາງ ຊາວໜຸ່ມແລ້ວ, ຊາວໜຸ່ມ ໃນ ສປປ ລາວ ແມ່ນບໍ່ມີເວທີອື່ນໆທີ່ຈະສາມາດມີສ່ວນຮ່ວມອອກຄຳຄິດຄຳເຫັນໄດ້.

## ສະພາບການດ້ານນະໂຍບາຍ

ໂດຍທົ່ວໄປແລ້ວ ມີນະໂຍບາຍທີ່ເອື້ອອຳນວຍຕໍ່ກັບ ຄົນຮຸ່ນໜຸ່ມ ໃນ ສປປ ລາວ, ແຕ່ວ່າ ໃນບາງຂົງເຂດສະເພາະຍັງມີຄວາມຈຳເປັນທີ່ຈະຕ້ອງໄດ້ພັດທະນາເພີ່ມອີກ ເຊິ່ງບັນຫາດັ່ງກ່າວໄດ້ຖືກຍົກຂຶ້ນໃນບົດສຶກສາການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ (ຕົວຢ່າງ, ຊາວໜຸ່ມ ແລະ ການດື່ມສິ່ງມຶນເມົາ ແລະ ສະຖານທີ່ບັນເທີງຕ່າງໆ). ແຕ່ເຖິງຢ່າງໃດກໍ່ຕາມ ຍັງບໍ່ມີນະໂຍບາຍຮອບດ້ານ ໃນລະດັບຊາດສະເພາະຄົນຮຸ່ນໜຸ່ມ ທີ່ເຊື່ອມບັນດານະໂຍບາຍຂອງແຕ່ລະຂະແໜງການ ແລະ ກົດໝາຍທີ່ມີຢູ່ .

ຊາວໜຸ່ມມີຄວາມຈຳເປັນ ທີ່ຈະຕ້ອງໄດ້ຮັບການປູກຈິດສຳນຶກຕິດພັນກັບກົດໝາຍ ແລະ ນະໂຍບາຍທີ່ຄຸ້ມຄອງ ແລະ ປົກປ້ອງພວກເຂົາເອງ; ເຂົາເຈົ້າຕ້ອງຮູ້ກ່ຽວກັບສິດທິຂອງພວກເຂົາທີ່ກ່ຽວພັນກັບສຸຂະພາບ, ການສຶກສາ ແລະ ການມີວຽກເຮັດງານທຳ. ຍ້ອນບໍ່ມີຄວາມຮູ້ກ່ຽວກັບກົດໝາຍທີ່ສາມາດປົກປ້ອງພວກເຂົາ, ດັ່ງນັ້ນເຂົາເຈົ້າຈຶ່ງມີຄວາມສ່ຽງຕໍ່ກັບການຖືກເອົາປຽບ, ແລະ ອາດຈະບໍ່ຊອກຫາການຊ່ວຍເຫຼືອຈາກອຳນາດການປົກຄອງໃນເວລາຈຳເປັນ. ແຕ່ໃນຂະນະດຽວກັນ, ຜູ້ທີ່ຮັບຜິດຊອບໃນວຽກງານຂອງຊາວໜຸ່ມ ກໍ່ມີຄວາມຈຳເປັນທີ່ຈະຕ້ອງຮູ້ ແລະ ເຂົ້າໃຈວິທີການແນະນຳປະຕິບັດກົດໝາຍ ແລະ ນະໂຍບາຍຕ່າງໆທີ່ກ່ຽວພັນກັບຄົນຮຸ່ນໜຸ່ມ.

ນະໂຍບາຍທີ່ດີ ກໍ່ຕໍ່ເມື່ອໄດ້ຖືກຈັດຕັ້ງປະຕິບັດ. ປະຊາຊົນຈຳນວນຫຼາຍ ທີ່ປະກອບສ່ວນໃນການດຳເນີນ ການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ສະແດງຄວາມເປັນຫວ່ງຕໍ່ກັບນະໂຍບາຍການປົກປ້ອງຊາວໜຸ່ມ ໃນປະຈຸບັນ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດ, ການບັງຄັບໃຊ້ ແລະ ການຕິດຕາມກວດກາບັນດານະໂຍບາຍ ແລະ ກົດໝາຍເຫຼົ່ານີ້ ແມ່ນຍັງບໍ່ທັນໄດ້ດີສົມຄວນ.

## ສະພາບການຂອງແຜນງານຕ່າງໆ

ບັນດາປັດໄຈທີ່ມີຜົນສະທ້ອນຕໍ່ກັບສຸຂະພາບ ແລະ ວຽກງານການພັດທະນາຄົນຮຸ່ນໜຸ່ມ ແມ່ນມີຫຼາຍລະດັບ ເຊັ່ນ: ລະດັບບຸກຄົນ; ຄອບຄົວ ແລະ ໝູ່ເພື່ອນ; ໂຄງລ່າງພື້ນຖານ ໃນນັ້ນລວມທັງຂອບເຂດ ແລະ ຄຸນະພາບຂອງການບໍລິການສາທາລະນະສຸກ ແລະ ບັນດາໂຮງຮຽນ; ບັນດານະໂຍບາຍ ແລະ ນິຕິກຳ, ຄຸນຄ່າທາງດ້ານສັງຄົມ ແລະ ບັນທັດຖານ. ແນ່ນອນມັນມີຄວາມສຳຄັນຕໍ່ກັບຄົນຮຸ່ນໜຸ່ມໂດຍກົງ, ຕົວຢ່າງ ໃນການຮັບປະກັນການເຂົ້າເຖິງທາງດ້ານຂໍ້ມູນ (ສຳລັບສຸຂະພາບຂອງພວກເຂົາ, ໃຫ້ໂອກາດພວກເຂົາ ໃນການຝຶກອົບຮົມ ແລະ ການມີວຽກເຮັດງານທຳ), ການພັດທະນາທັກສະ (ລວມທັງທັກສະ, ຄວາມຮູ້ດ້ານການເງິນ ແລະ ທັກສະການດຳລົງຊີວິດ) ແລະການເຂົ້າເຖິງ ການບໍລິການສາທາລະນະສຸກ ແລະ ການບໍລິການອື່ນໆ. ແຕ່ມັນກໍ່ຍັງມີຄວາມສຳຄັນ ທີ່ຈະຕ້ອງຮັບປະກັນການເພີ່ມທະວີຄວາມສາມາດໃຫ້ຜູ້ຮັບຜິດຊອບ (ຕົວຢ່າງ ຜູ້ໃຫ້ບໍລິການ, ຜູ້ປົກຄອງ ແລະ ຄູອາຈານ) ແລະ ຮັບປະກັນວ່ານະໂຍບາຍ ແລະ ນິຕິກຳ, ຄຸນຄ່າ ແລະ ບັນທັດຖານທາງສັງຄົມ ໃຫ້ການສະໜັບສະໜູນ ແລະ ຕອບສະໜອງຄວາມຕ້ອງການ ແລະ ສິດທິຂອງຄົນໜຸ່ມ, ເຊັ່ນ ການແຕ່ງງານກ່ອນໄວອັນຄວນ ແລະ ການມີລູກຕັ້ງແຕ່ອາຍຸຍັງນ້ອຍ.

ໃນ ສປປ ລາວ ມີແຜນງານຈຳນວນໜ້ອຍທີ່ທີ່ມີເປົ້າໝາຍສະເພາະເຈາະຈົງເນັ້ນໃສ່ຄົນຮຸ່ນໜຸ່ມ, ເຖິງແມ່ນວ່າຫຼາຍແຜນງານມີເປົ້າໝາຍ ສຳລັບພົນລະເມືອງລາວທົ່ວໄປ ແຕ່ມັນກໍ່ກວມລວມກ່ຽວພັນເອົາກຸ່ມຂອງຊາວໜຸ່ມເຊັ່ນດຽວກັນ. ສ່ວນຫຼາຍບັນດາແຜນງານທີ່ແນ່ໃສ່ຊາວໜຸ່ມໂດຍກົງ ແມ່ນອີງໃສ່ແຫຼ່ງທຶນຈາກຕ່າງປະເທດ - ເຊິ່ງສະໜອງໂອກາດໃນການທົດລອງ ແລະ ດັດປັບ, ແຕ່ວ່າແຜນງານເຫຼົ່ານີ້ ສ່ວນຫຼາຍບໍ່ມີຄວາມຍືນຍົງ ເຖິງແມ່ນວ່າຜູ້ຈັດຕັ້ງປະຕິບັດຈະແມ່ນລັດຖະບານ ຫຼື ອົງການຈັດຕັ້ງທ້ອງຖິ່ນກໍ່ຕາມ. ຫຼາຍແຜນງານ ແມ່ນຖືກຈັດຕັ້ງປະຕິບັດໃນວົງແຄບ, ເຊັ່ນໃນຂອບເຂດພູມສັນຖານ ແລະ ກຸ່ມຊາວໜຸ່ມເປົ້າໝາຍທີ່ຈຳກັດ, ແລະຍັງຂາດລະບົບໃນການຕິດຕາມ ແລະ ປະເມີນຜົນທີ່ເປັນລະບົບ ເຊິ່ງເຮັດໃຫ້ບໍ່ສາມາດປະເມີນປະສິດທິພາບຂອງແຜນງານເຫຼົ່ານີ້ໄດ້.

ການພັດທະນານະໂຍບາຍ ແລະ ແຜນງານສໍາລັບຄົນຮຸ່ນໜຸ່ມ ບໍ່ສາມາດທີ່ຈະຢູ່ນອກກອບຂອງບັນດານະໂຍບາຍ ແລະ ຍຸດທະສາດທີ່ນໍາໃຊ້ສໍາລັບພົນລະເມືອງໂດຍທົ່ວໄປໄດ້. ເຖິງຢ່າງໃດກໍ່ຕາມ, ທຸກໆນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຄວນພິຈາລະນາຄວາມຕ້ອງການສະເພາະຂອງຄົນຮຸ່ນໜຸ່ມ, ແລະ ເມື່ອບັນດາແຜນງານຕ່າງໆໄດ້ມີການພັດທະນາແລ້ວ ມັນມີຄວາມຈໍາເປັນທີ່ຈະຕ້ອງໄດ້ມີການທົບທວນຜ່ານມູມມອງຂອງຄົນຮຸ່ນໜຸ່ມ ແລະ ສໍາຄັນທີ່ສຸດ ຄວນຮັບປະກັນວ່າແຜນງານທີ່ກ່ຽວກັບຊາວໜຸ່ມຕ້ອງມີການມີສ່ວນຮ່ວມຂອງຄົນຮຸ່ນໜຸ່ມ.

## ການປະສານງານກັບຫຼາຍຂະແໜງການ

ເນື່ອງຈາກວ່າມີຫຼາຍປັດໄຈທີ່ມີຜົນກະທົບຕໍ່ຊີວິດຂອງຄົນຮຸ່ນໜຸ່ມ, ດັ່ງນັ້ນ ຄູ່ຮ່ວມງານຈາກຫຼາຍຂະແໜງຕ້ອງເຮັດວຽກຮ່ວມກັນ ເພື່ອປັບປຸງສຸຂະພາບ, ການສຶກສາ ແລະ ການພັດທະນາຂອງພວກເຂົາ, ແລະ ເພີ່ມທ່າແຮງຂອງເຂົາເຈົ້າໃຫ້ສູງສຸດ ເພື່ອປະກອບສ່ວນເຂົ້າໃນການພັດທະນາ ໃນປະຈຸບັນ ແລະ ອະນາຄົດ. ມັນມີຄວາມຈໍາເປັນທີ່ຈະຕ້ອງໄດ້ປະສານງານກັນຢ່າງແໜ້ນແກ່ນ ລະຫວ່າງຂະແໜງການ ດ້ານສຸຂະພາບ, ການສຶກສາ, ແຮງງານ, ການປົກປ້ອງ ແລະ ການມີສ່ວນຮ່ວມ ທັງໝົດນັ້ນ ແມ່ນເພື່ອການປະກອບສ່ວນເຂົ້າໃນສ້າງອະນາຄົດຂອງຄົນຮຸ່ນໜຸ່ມ ໃນ ສປປ ລາວ.

ໃນປັດຈຸບັນ, ຍັງບໍ່ມີໜ່ວຍງານທີ່ເປັນກົນໄກຫຼັກ ໃນການປະສານງານລະຫວ່າງແຕ່ລະຂະແໜງການ. ໃນຂະນະທີ່ບາງນະໂຍບາຍຂອງບາງຂະແໜງການໄດ້ກ່າວເຖິງຄົນຮຸ່ນໜຸ່ມ, ແບບລວມໆຫຼາຍກວ່າເຈາະຈີ້, ຍັງບໍ່ທັນມີແຜນຍຸດທະສາດລວມສໍາລັບຄົນຮຸ່ນໜຸ່ມໝົດທຸກກຸ່ມ ໃນ ສປປ ລາວ. ສະນັ້ນ ມີຄວາມຈໍາເປັນທີ່ຈະພິຈາລະນາໃຫ້ມີ ຫຼື ປັບປຸງ ເວທີການຮ່ວມມືຂອງບັນດາຄູ່ຮ່ວມງານ ໃນລະດັບຊາດ ແລະ ໃນລະດັບຊຸມຊົນ ເພື່ອປະກອບສ່ວນເຂົ້າໃນດ້ານສຸຂະພາບ, ການພັດທະນາ ແລະ ການປັບປຸງຊີວິດການເປັນຢູ່ຂອງຄົນຮຸ່ນໜຸ່ມ.

ນອກຈາກນັ້ນ, ຜົນຂອງການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ຍັງສາມາດນໍາໃຊ້ເຂົ້າໃນການສ້າງແຜນພັດທະນາຍຸດທະສາດແຫ່ງຊາດ  ແລະ ສ້າງຄວາມເຂັ້ມແຂງ ໃນການປະສານງານ ແລະ ການຮ່ວມມືລະຫວ່າງຂະແໜງການ, ພາຍໃຕ້ກອບເປົ້າໝາຍ ແລະ ຄາດໝາຍທີ່ວາງອອກຢ່າງຊັດເຈນ. ນອກຈາກນັ້ນ ບົດການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນຄວນຖືກພິຈາລະນານໍາໃຊ້ເປັນບົດລາຍງານພື້ນຖານ ໃນການປຶກສາຫາລືລະດັບຊາດ ແລະ ໂຄສະນາປຸກລະດົມໃນວາລະຕ່າງໆ, ແລະ ເພື່ອກໍານົດບູລິມະສິດໃນໄລຍະສັ້ນ ແລະ ຍາວ, ແລະ ເພື່ອຕົກລົງເຫັນດີຕໍ່ກັບເປົ້າໝາຍ, ຄາດໝາຍ ແລະ ຂັ້ນຕອນໃນການປະສານງານ.



ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ

1

# I ພາກສະເໜີ



## 1.1 ຄວາມເປັນມາ ແລະ ເຫດຜົນ

ຊາວໜຸ່ມ (10-24 ປີ) ໃນ ສປປ ລາວ ແມ່ນເປັນຈຸດໃຈກາງທີ່ສຳຄັນສຳລັບການພັດທະນາປະເທດ ໃນປັດຈຸບັນ ແລະ ອະນາຄົດ: ໃນໄລຍະສັ້ນເພື່ອໃຫ້ບັນລຸເປົ້າໝາຍສະຫັດສະຫວັດແຫ່ງການພັດທະນາ (MDGs) ແລະ ໃນໄລຍະຍາວ ເພື່ອຮັບປະກັນວ່າປະເທດລາວ ຈະສາມາດໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍໃນການພັດທະນາເສດຖະກິດ ຈາກການເຊື່ອມໂຍງກັບປະຊາຄົມເສດຖະກິດອາຊຽນ, ແລະ ກໍ່ເພື່ອບັນລຸເປົ້າໝາຍແຫ່ງຊາດ ໃນການຫຼຸດພົ້ນອອກຈາກສະພາບປະເທດດ້ອຍພັດທະນາ ພາຍໃນປີ 2020.

ສປປ ລາວ ໄດ້ຮັບຜົນປະໂຫຍດຈາກການປ່ຽນແປງທາງດ້ານປະຊາກອນ, ທີ່ກ່ຽວພັນກັບອັດຕາການຈະເລີນໃນປະຈຸບັນ ແລະ ອັດຕາການເອື່ອຍອີງ, ເຊິ່ງຜົນປະໂຫຍດນີ້ ຍັງຈະດຳເນີນໄປອີກໃນຫຼາຍທົດສະຫວັດ. ປະຊາກອນຊາວໜຸ່ມໃນມື້ນີ້ຈະກາຍເປັນຜູ້ໃຫຍ່ໃນອະນາຄົດ ດັ່ງນັ້ນ ສຸຂະພາບ, ການສຶກສາ, ທັກສະ ແລະ ການພັດທະນາ ໂດຍລວມຂອງເຂົາເຈົ້າຈະສົ່ງຜົນກະທົບໄລຍະຍາວຕໍ່ກັບທ່າແຮງ ໃນອະນາຄົດ ແລະ ຄວາມສາມາດຂອງປະຊາກອນຜູ້ໃຫຍ່ ໃນການປະກອບສ່ວນໃຫ້ແກ່ຄວາມຮັ່ງມີທາງດ້ານເສດຖະກິດສັງຄົມ ແລະ ສະຖຽນລະພາບຂອງປະເທດ.

ໃນປັດຈຸບັນເປັນທີ່ຮັບຮູ້ກັນໂດຍກວ້າງຂວາງວ່າ  ຊາວໜຸ່ມລາວແມ່ນໄລຍະທີ່ສຳຄັນທີ່ສຸດໃນຊ່ວງຊີວິດຂອງບຸກຄົນໃນແງ່ສຸຂະພາບ, ເຊິ່ງການພັດທະນາທາງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມ ຂອງພວກເຂົາ ແມ່ນມີຄວາມສຳຄັນເພື່ອການພັດທະນາການໃນທາງບວກຈາກເດັກນ້ອຍກາຍເປັນຜູ້ໃຫຍ່, ພ້ອມທີ່ຈະຮັບບົດບາດ ແລະ ໜ້າຮັບຜິດຊອບຂອງການເປັນຜູ້ໃຫຍ່.[8,9,10] ສິ່ງທີ່ເກີດຂຶ້ນກັບໄລຍະຊີວິດຊາວໜຸ່ມໃນປັດຈຸບັນ ແມ່ນມີຜົນກະທົບທີ່ສຳຄັນ, ບໍ່ພຽງແຕ່ຕໍ່ກັບສຸຂະພາບຂອງພວກເຂົາເຈົ້າໃນປັດຈຸບັນ, ແຕ່ຍັງມີຜົນຕໍ່ກັບຄວາມສາມາດ ແລະ ສຸຂະພາບຂອງພວກເຂົາ ໃນເວລາທີ່ພວກເຂົາກາຍເປັນຜູ້ໃຫຍ່ ແລະ ລວມທັງສຸຂະພາບຂອງລູກຂອງພວກເຂົາອີກດ້ວຍ.[11] ການພັດທະນາການທາງດ້ານບວກໃນການກາຍເປັນຜູ້ໃຫຍ່ ແມ່ນມີຄວາມສຳຄັນສຳລັບສຸຂະພາບ ແລະ ຄວາມຈະເລີນຮຸ່ງເຮືອງໃນອະນາຄົດຂອງພວກເຂົາເອງ, ຄອບຄົວ ແລະ ຊຸມຊົນ, ສຳລັບການສ້າງຄອບຄົວ; ການມີວຽກເຮັດງານທຳ ແລະ ການຕັດສິນໃຈຢ່າງມີຄວາມຮັບຜິດຊອບ.

ເປັນທີຮັບຮູ້ກັນວ່າມີຫຼາຍປັດໄຈທີ່ມີຜົນກະທົບຕໍ່ກັບການປ່ຽນແປງຢ່າງໄວທາງຮ່າງກາຍ, ຈິດໃຈ ແລະ ອາລົມຈິດ ຂອງຊາວໜຸ່ມທີ່ມັກເກີດຂຶ້ນໃນຊ່ວງທົດສະວັດທີສອງຂອງຊີວິດ, ເຊິ່ງມີປັດໄຈພາຍໃນ (ຕົວຢ່າງ ໂພສະນາການ ຫລື ການພັດທະນາພຶດຕິກຳທີ່ມີຄວາມສ່ຽງສູງ  ເຊັ່ນ ການດື່ມເຫຼົ້າ), ແລະ ປັດໄຈພາຍນອກ.[12] ບໍ່ສະເພາະແຕ່ຄົນຮຸ້ນໜຸ່ມທີ່ມີການປ່ຽນແປງໄວ, ສິ່ງແວດລ້ອມທີ່ເຂົາເຈົ້າອາໃສຢູ່, ຮ່ຳຮຽນ ແລະ ທຳມາຫາກິນກໍ່ປ່ຽນແປງໄວເຊັ່ນກັນ. ຢູ່ທຸກຫົນທຸກແຫ່ງ ແລະ ເກືອບຢູ່ໃນສັງຄົມທຸກລະດັບ ຢູ່ ສປປ ລາວ, ການປ່ຽນແປງກຳລັງເກີດຂຶ້ນ. ພື້ນຖານໂຄງລ່າງຂອງປະເທດກຳລັງໄດ້ຮັບພັດທະນາ, ເຊັ່ນ ຖະໜົນຫົນທາງ, ໂຮງຮຽນ, ສະຖານທີ່ໃຫ້ບໍລິການສຸຂະພາບ, ນ້ຳສະອາດ, ນອກຈາກນັ້ນ ຮູບແບບຊີວິດແບບດັ້ງເດີມ, ທັດສະນະ, ຄ່ານິຍົມ ກຳລັງປ່ຽນແປງ ແລະ ໄດ້ຮັບຄວາມທ້າທາຍ; ຄົນຮຸ້ນໜຸ່ມກຳລັງຫຼັ່ງໄຫຼເຂົ້າມາໃນເມືອງ, ໂທລະສັບມືຖື ແລະ ອິນເຕີເນັດມີການນຳໃຊ້ຫຼາຍຂຶ້ນ; ກາລະໂອກາດໃໝ່ກໍ່ເກີດຂຶ້ນຢ່າງຫຼວງຫຼາຍ ແຕ່ໃນເວລາດຽວກັນຄວາມສ່ຽງ ແລະ ຄວາມອັນຕະລາຍກໍ່ອາດຂົ່ມຂູ່ຕໍ່ຄວາມຢູ່ດີຜາສຸກຂອງຄົນຮຸ້ນໜຸ່ມ, ເຊິ່ງພໍ່ແມ່ຜູ້ປົກຄອງ ບໍ່ເຄີຍຜ່ານປະສົບການທີ່ກ່າວມານີ້ມາກ່ອນ.

ການສຸມໃສ່ຄົນຮຸ້ນໜຸ່ມຈະມີຄວາມສຳຄັນເພື່ອໃຫ້ບັນລຸຜົນສຳເລັດ ແລະ ສ້າງຄວາມຍືນຍົງ ໃຫ້ກັບເປົ້າໝາຍ MDGs ແລະ ຕໍ່ກັບການພັດທະນາພາຍຫຼັງວາລະການຈັດຕັ້ງປະຕິບັດແຜນດຳເນີນງານ ຂອງກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ (ICPD) ພາຍຫຼັງປີ 2014 ແລະ ແນວທາງການພັດທະນາພາຍຫຼັງປີ 2015; ແລະເພື່ອໃຫ້ບັນລຸແນວທາງທີ່ຍັງບໍ່ທັນສຳເລັດຜົນ, ເຊັ່ນ ສິດທິ ແລະ ສຸຂະພາບທາງດ້ານສຸຂະພາບຈະເລີນພັນ ແລະ ສຸຂະພາບທາງເພດ (SRHR),  ລວມທັງ ເຮສໄອວີ (HIV), ແລະ ຮັບມືກັບບັນຫາໃໝ່ໆ ເປັນຕົ້ນພະຍາດບໍ່ຕິດຕໍ່ (NCDs), ສຸຂະພາບທາງຈິດ ແລະ ການບາດເຈັບຕ່າງໆ; ພຶດຕິກຳທີ່ເປັນສາຍເຫດຂອງພະຍາດບໍ່ຕິດຕໍ່ ເຊິ່ງສ່ວນຫຼາຍແມ່ນເລີ່ມຕົ້ນໃນຊ່ວງເປັນເດັກນ້ອຍ ແລະ ຊາວໜຸ່ມ, ແລະ ໄດ້ມີການຄາດຄະເນວ່າ 75% ຂອງການເຈັບເປັນດ້ານສຸຂະພາບຈິດ ແມ່ນເລີ່ມຕົ້ນສະແດງອອກກ່ອນອາຍຸ 25 ປີ.[13]

---

8 WHO (2014): *Health for the worlds adolescents  a second chance in the second decade,* http://apps.who.int/adolescent/second-decade/.

9 Kessler RC et al. (2005). *Lifetime prevalence and age-of-onset distributions of dsm-iv disorders in the national comorbidity survey replication:* Archives of General Psychiatry, 62(6): p.593602.

10 WHO (2011): *Controlling NCDs: protecting health promoting development,* http://www.who.int/nmh/events/2011/ncds_booklet_2011.pdf?ua=1.

11 WHO (2012): *Preconception care to reduce maternal and childhood mortality and morbidity, meeting report,* http://www.who.int/maternal_child_adolescent/documents/concensus_preconception_care/en/.

12 WHO (2014): *Health for the worlds adolescents - a second chance in the second decade,* http://apps.who.int/adolescent/second-decade/.

13 Kessler RC et al. (2005). *Lifetime prevalence and age-of-onset distributions of dsm-iv disorders in the national comorbidity survey replication:* Archives of General Psychiatry, 62(6): p.593602.

ຊາວໜຸ່ມໄດ້ສະແດງໃຫ້ເຫັນໃນຫຼາຍຂົງເຂດວ່າ ພວກເຂົາສາມາດເປັນກ້ອນກຳລັງທີ່ແຮງກ້າພັກດັນໃຫ້ມີການປ່ຽນແປງ, ໂດຍສະເພາະ ເປັນຜູ້ຍົກບັນຫາທີ່ເປັນປະເດັນຂອງຄວາມຫຍໍ້ທໍ້ ແລະ ຄວາມບໍ່ຍຸດຕິທຳໃນສັງຄົມທີ່ຢູ່ໃນສະພາບແວດລ້ອມຂອງພວກເຂົາ. ສປປ ລາວ ຈຳເປັນຕ້ອງມີຄວາມສາມາດທີ່ຈະໄດ້ຮັບຜົນປະໂຫຍດຈາກຄວາມອາດສາມາດ ແລະ ສະຕິປັນຍາຂອງຊາວໜຸ່ມ ໃນການຊ່ວຍແກ້ໄຂສິ່ງທ້າທາຍຕ່າງໆ ທີ່ປະເທດກຳລັງປະເຊີນຢູ່. ສິ່ງທ້າທາຍອັນຕົ້ນຕໍແມ່ນເຮັດແນວໃດ ໃຫ້ຊາວໜຸ່ມສາມາດໄດ້ຮັບຜົນປະໂຫຍດຈາກໂອກາດ ທີ່ຢູ່ຮອບຕົວພວກເຂົາ ແລະ ຜ່ານຜ່າຄວາມສ່ຽງທີ່ຕິດພັນກັບການພັດທະນາຕົນເອງຂອງພວກເຂົາ; ໃນເວລາດຽວກັນ, ຍັງ ໄດ້ຮັບການປົກປ້ອງຈາກອັນຕະລາຍ, ພຶດຕິກຳສ່ຽງທີ່ສູງທີ່ຈະສົ່ງຜົນຕໍ່ກັບສຸຂະພາບ ແລະ  ຄວາມສາມາດຂອງພວກເຂົາ ໃນປັດຈຸບັນ ແລະ ອານາຄົດ.

ເພື່ອຮັບປະກັນວ່າຊາວໜຸ່ມແລະເຍົາວະຊົນ ຈະສາມາດໄດ້ຮັບຜົນປະໂຫຍດທີ່ກ່າວມາຂ້າງເທິງ, ມັນມີຄວາມສຳຄັນທີ່ຈະຕ້ອງເອົາໃຈໃສ່ສຸຂະພາບ, ການສຶກສາ, ທັກສະ ແລະ ໂອກາດຂອງຄົນໜຸ່ມຕໍ່ກັບວຽກງານທີ່ດີ, ການປົກປ້ອງຈາກການຂູດຮີດ ແລະ ເອົາລັດເອົາປຽບ ແລະ ຄວນມີເວທີໃຫ້ເຂົາເຈົ້າເຂົ້າຮ່ວມໃນການຕັດສິນໃຈ ຕໍ່ສິ່ງທີ່ມີຜົນກະທົບຕໍ່ກັບຊີວິດຂອງເຂົາເຈົ້າ.

ສຸດທ້າຍນີ້ ມີຄວາມຈຳເປັນທີ່ຈະຕ້ອງຮັບຮູ້ ແລະ ເຂົ້າໃຈວ່າການປ່ຽນແປງທີ່ກຳລັງເກີດຂຶ້ນ ແມ່ນບໍ່ໄດ້ສົ່ງຜົນກະທົບຕໍ່ກັບຄົນຮຸ່ນໜຸ່ມທຸກຄົນຄືກັນ ຫຼື ໃນລັກສະນະດຽວກັນ ເຊິ່ງມີຫຼາຍປັດໄຈທີ່ມີຜົນກະທົບຕໍ່ບັນຫານີ້, ລວມທັງ ບົດບາດຍິງ-ຊາຍ, ລະດັບການສຶກສາ, ຖານະດ້ານເສດຖະກິດ, ທີ່ຢູ່ອາໃສ, ຊົນເຜົ່າ, ຄວາມພິການ ແລະ ການຂາດການແນະນຳ ແລະ ການສະໜັບສະໜູນຂອງພໍ່ແມ່. ດ້ວຍເຫດນັ້ນ, ມັນມີຄວາມສຳຄັນທີ່ສຸດທີ່ຈະຮັບປະກັນວ່າບໍ່ມີກຸ່ມຄົນຮຸ່ນໜຸ່ມກຸ່ມໃດຖືກປະປ່ອຍ, ຮັບປະກັນວ່າຄວາມແຕກໂຕນກັນຖືກຫຼຸດຜ່ອນຫຼາຍເທົ່າທີ່ເປັນໄປໄດ້ ແລະ ຄວາມສະເໝີພາບ ແລະ ສິດທິມະນຸດ ແລະ ບູລິມະສິດຕໍ່ກັບຄົນຮຸ່ນໜຸ່ມທີ່ຢູ່ໃນສະພາບຄວາມສ່ຽງ ແລະ ດ້ອຍໂອກາດ ໄດ້ຖືກເຊື່ອມເຂົ້າໃນບັນດານະໂຍບາຍ ແລະ ແຜນງານທີ່ສ້າງຂຶ້ນສຳລັບປະຊາກອນສະເພາະກຸ່ມດັ່ງກ່າວ.

## 1.2 ນິຍາມກອບຄວາມຄິດ ກ່ຽວກັບ ຊາວໜຸ່ມ

ການວິເຄາະນີ້ ສຸມໃສ່ຄົນຮຸ່ນໜຸ່ມ, ປະກອບດ້ວຍເຍົາວະຊົນ (ອາຍຸ 10-19 ປີ) ແລະ ຊາວໜຸ່ມ (ອາຍຸ 20-24 ປີ). ການວິໄຈນີ້ບໍ່ໄດ້ລວມເອົາຊາວໜຸ່ມຕາມນິຍາມທີ່ໄດ້ກຳນົດຢູ່ ສປປ ລາວ (ແຕ່ອາຍຸ 15-34 ປີ) ດັ່ງທີ່ກ່າວ ໃນການສົນທະນາເບື້ອງຕົ້ນ ເນື່ອງຈາກວ່າການວິເຄາະນີ້ ແມ່ນມີເປົ້າໝາຍ ແລະ ຄວາມຄາດຫວັງສູງ ແລະ ການລວມເອົາຄົນ ໃນກຸ່ມອາຍຸ 24-34 ປີ ເພີ່ມຕື່ມ ຍິ່ງຈະເຮັດໃຫ້ບົດລາຍງານກວ້າງຂຶ້ນຕື່ມ, ຊຶ່ງກຸ່ມອາຍຸນີ້ຍັງມີຄວາມແຕກຕ່າງກັບກຸ່ມທີ່ສຶກສາວິໄຈໃນບົດລາຍງານນີ້ ບໍ່ວ່າຈະໃນແງ່ການພັດທະນາ, ຄວາມສາມາດ, ການຂ້າມຜ່ານທາງສັງຄົມ, ຄວາມມຸ້ງຫວັງ, ຄວາມຄາດຫວັງ, ບົດບາດ ແລະ ຄວາມຮັບຜິດຊອບ.

## 1.3 ຂໍ້ມູນປະຊາກອນຂອງຊາວໜຸ່ມ ໃນ ສປປ ລາວ

ສປປ ລາວ ແມ່ນປະເທດທີ່ບໍ່ມີທາງອອກສູ່ທະເລ ແລະ ຕັ້ງຢູ່ອາຊີຕາເວັນອອກສ່ຽງໃຕ້, ປະກອບມີ 49 ຊົນເຜົ່າ ໃນນັ້ນ ຊົນເຜົ່າລາວປະກອບມີ 52.5% ຂອງປະຊາກອນທັງໝົດ.[14] ທາງດ້ານພູມີປະເທດ, ປະເທດລາວ ຖືກ ແບ່ງອອກເປັນເຂດທົ່ງພຽງລຽບຕາມແມ່ນ້ຳຂອງ, ເຂດພູພຽງ ແລະ ພູສູງ. ປະຊາກອນສ່ວນໃຫຍ່ ແມ່ນອາໃສຢູ່ເຂດຊົນນະບົດ ແລະ ມີການເຄື່ອນຍ້າຍຈາກຊົນນະບົດເຂົ້າສູ່ຕົວເມືອງ, ເຊິ່ງປະຊາກອນອາໃສໃນຊົນນະບົດໄດ້ຫຼຸດລົງ ຈາກ 72.9% ຫາ 68.0% ໃນປີ 2005 ແລະ 2009 ຕາມລຳດັບ.[15]

ສປປ ລາວ ແມ່ນປະເທດໜຶ່ງທີ່ມີປະຊາກອນສ່ວນຫຼາຍ ຊາວໜຸ່ມ (ເອກະສານຊ້ອນທ້າຍ 3). ໃນຈຳນວນປະຊາກອນປະມານ 6 ລ້ານ ກວ່າຄົນ, ປະຊາກອນປະມານ 60% ແມ່ນມີອາຍຕ່ຳກວ່າ 25 ປີ.[16] ອີງຕາມການສຳຫຼວດດັດຊະນີໝາຍສັງຄົມລາວ ປີ 2012 (LSIS)[17], ພົບວ່າໃນຈຳນວນປະຊາກອນທັງໝົດ: 13% ມີ ອາຍຸ ລະຫວ່າງ 10-14 ປີ; 10% ມີອາຍຸລະຫວ່າງ 15-19 ປີ; ແລະ 7.7% ມີອາຍຸລະຫວ່າງ 20-24 ປີ (ຮູບ 1 ເອກະ ສານຊ້ອນທ້າຍ 3). ຮູບທາດປະຊາກອນ ຊີ້ໃຫ້ເຫັນຈຸດເດັ່ນ ແລະ ຄວາມສຳຄັນຂອງການປ່ຽນແປງທາງດ້ານປະ ຊາກອນ ທີ່ໄດ້ເກີດຂຶ້ນໃນ ສປປ ລາວ ແລະ ຜົນປະໂຫຍດທາງດ້ານປະຊາກອນທີ່ປະເທດໄດ້ຮັບໃນປະຈຸບັນຫາ 30 ປີ ຕໍ່ໜ້າ.

ນອກຈາກນັ້ນ ຍັງພົບວ່າກຸ່ມປະຊາກອນທີ່ເຄື່ອນຍ້າຍ ແມ່ນມີອາຍຸນ້ອຍກວ່າກຸ່ມປະຊາກອນທີ່ບໍ່ເຄື່ອນຍ້າຍ. ຕາມການສຳຫຼວດປະຊາກອນໃນລະຫວ່າງປີ 1995 ຫາ 2005, ປະຊາກອນທີ່ເຄື່ອນຍ້າຍ ທີ່ມີອາຍຸ 10 ປີ ຂຶ້ນໄປ ເຊິ່ງເຄື່ອນຍ້າຍລະຫວ່າງແຂວງຫາແຂວງ ພົບວ່າ 11.5% ມີອາຍຸ 10-14 ປີ, ແລະ 42% ມີອາຍຸ 15-24 ປີ.[18] ໃນຂະນະດຽວກັນ ຍັງພົບວ່າປະຊາກອນທີ່ເຄື່ອນຍ້າຍ ໃນກຸ່ມອາຍຸ 10-14 ປີ ແລະ 15-24 ປີ ສ່ວນຫຼາຍ ແມ່ນຜູ້ຍິງ (ໃນກຸ່ມອາຍຸອື່ນໆ, ອັດຕາສ່ວນຂອງຜູ້ຍິງ ແມ່ນຕ່ຳກ່ວາຜູ້ຊາຍ).[19]

---

14 Health of adolescents in Lao PDR, WHO, *publication date unknown.*

15 Population census (2005).

16 *Ibid.*

17 MoH and Lao Statistics Bureau (2012). *Lao Social Indicator Survey.*

18 Ministry of Planning and Investment (2011). *Internal Migration in the Lao Peoples Democratic Republic. An Exploratory Study.*

19 *Ibid.*

ການສຶກສາຄົ້ນຄວ້າ ກ່ຽວກັບການເຄື່ອນຍ້າຍຂອງຊາວໜຸ່ມ ໃນຂົງເຂດລຸ່ມແມ່ນໍ້າຂອງ ປີ 2007 ພົບວ່າສາເຫດຕົ້ນຕໍທີ່ພາໃຫ້ຊາວໜຸ່ມມີການເຄື່ອນຍ້າຍອອກຈາກຊຸມຊົນຊົນນະບົດຂອງຕົນເຂົ້າສູ່ຕົວເມືອງໃຫຍ່ ເຊັ່ນ ນະຄອນ ຫຼວງວຽງຈັນ ລວມມີ ຄວາມປາຖະໜາທີ່ຈະຫຼຸດພົ້ນອອກຈາກຄວາມທຸກຍາກ, ໂອກາດໃນການເຂົ້າຮຽນລະດັບສູງ ແລະ ໂອກາດທີ່ດີກວ່າໃນການມີເຮັດວຽກງານທຳ, ແລະ ອິດສະລະໃນການຊອກຫາ ແລະ ເລືອກວິຖີການດຳລົງຊີວິດອັນໃໝ່.[20] ບົດຄົ້ນຄວ້າຍັງພົບວ່າ ຊາວໜຸ່ມທີ່ເຄື່ອນຍ້າຍມີຄວາມຮູ້ທີ່ຈຳກັດກ່ຽວກັບການເຂົ້າເຖິງຂໍ້ມູນ ແລະ ການບໍລິການທາງດ້ານສຸຂະພາບຈະເລີນພັນ. ອຸປະສັກໃນການເຂົ້າເຖິງສະຖານບໍລິການໄດ້ແກ່ການເດີນທາງ, ຄວາມຕ້ອງການຜູ້ໄປເປັນໝູ່ ແລະ ຄ່າໃຊ້ຈ່າຍ.

ຊາວໜຸ່ມ ໃນ ສປປ ລາວ ມີທ່າອ່ຽງທີ່ຈະແຕ່ງງານແຕ່ອາຍຸຍັງນ້ອຍ ໂດຍສະເພາະຜູ້ຍິງ ເຊິ່ງອາຍຸສະເລ່ຍ ໃນການແຕ່ງງານຄັ້ງທຳອິດ ແມ່ນ 19.4 ປີ. ທາງດ້ານກົດໝາຍ, ອາຍຸຕໍ່າສຸດໃນການແຕ່ງງານແມ່ນ 18 ປີ ສຳລັບ ທັງແມ່ຍິງແລະຜູ້ຊາຍ, ແຕ່ໃນກົດໝາຍຄອບຄົວ ປີ 1990 ຍັງໄດ້ລະບຸໄວ້ວ່າອາຍຸ 15 ປີ ກໍ່ສາມາດແຕ່ງງານໄດ້ ໃນກໍລະນີພິເສດ ແລະ ຈຳເປັນ.

ການສຳຫຼວດ LSIS ພົບວ່າ ຜູ້ຕອບແບບສອບຖາມ ທີ່ມີອາຍຸລະຫວ່າງ 20-24 ປີ ໃນ ເວລາສຳຫຼວດ:[21]

- ແມ່ຍິງ 8.9% ແລະ ຜູ້ຊາຍ 2.6% ໄດ້ແຕ່ງງານ ເມື່ອອາຍຸ 15 ປີ;
- ແມ່ຍິງ 35.4% ແລະ ຜູ້ຊາຍ 12.7% ໄດ້ແຕ່ງງານ ເມື່ອອາຍຸ 18 ປີ;
- ແມ່ຍິງ 56.0% ແລະ ຜູ້ຊາຍ ແລະ 27.1% ໄດ້ແຕ່ງງານ ເມື່ອອາຍຸ 20 ປີ.

ອັດຕາສ່ວນຂອງຊາວໜຸ່ມທີ່ແຕ່ງງານແລ້ວ ແມ່ນ ມີສາຍພົວພັນ ໂດຍກົງກັບລະດັບການສຶກສາ ແລະ ສະຖານະທາງດ້ານເສດຖະກິດຂອງເຂົາເຈົ້າ. ຖ້າສົມທຽບແລ້ວ, ຊາວໜຸ່ມທີ່ແຕ່ງງານແລ້ວ ໃນຕົວເມືອງແມ່ນມີອັດຕາສ່ວນໜ້ອຍກວ່າອັດຕາສ່ວນຂອງຊາວໜຸ່ມທີ່ແຕ່ງງານແລ້ວ ໃນເຂດຊົນນະບົດ, ແລະ ການແຕ່ງງານໄວຍັງພົບເຫັນຫຼາຍໃນບາງກຸ່ມຊົນເຜົ່າ.[22]

ໂດຍລວມແລ້ວ, ແມ່ຍິງ ມີທ່າອ່ຽງທີ່ຈະແຕ່ງງານກັບຜູ້ຊາຍທີ່ມີອາຍຸແກ່ກວ່າ. ຜູ້ຍິງທີ່ມີອາຍຸ 15-24 ປີ ຈຳນວນ 1 ໃນ 4 ຄົນ ແມ່ນແຕ່ງງານກັບຜູ້ຊາຍທີ່ມີອາຍຸແກ່ກວ່າ ປະມານ 5 ຫາ 9 ປີ. ຄວາມແຕກໂຕນທາງດ້ານອາຍຸຂອງຄູ່ຜົວເມຍ ແມ່ນພົບຫຼາຍຢູ່ເຂດຕົວເມືອງ ແລະ ໃນກຸ່ມຄົນທີ່ມີຖານະຮັ່ງມີ.[23]

## 1.4 ຈຸດປະສົງ ແລະ ຂັ້ນຕອນໂດຍຫຍໍ້

ການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ໄດ້ຮັບການຊີ້ນຳໂດຍ ສູນກາງຊາວໜຸ່ມ ແລະ ໄດ້ຮັບການສະໜັບສະໜູນຫຼັກຈາກ ອົງການ UNFPA. ຂະບວນການວິໄຈ ແມ່ນໄດ້ຮັບການສະໜັບສະໜູນທາງດ້ານວິຊາການຈາກ ສະຖາບັນເບີເນັດ (BI) ແລະ ອົງການອື່ນໆ ໃນເຄືອຂ່າຍ ສປຊ. ການວິໄຈຄັ້ງນີ້ ໄດ້ເນັ້ນໃສ່ 5 ຂົງເຂດທີ່ສຳຄັນຂອງຊີວິດຂອງຄົນຮຸ່ນໜຸ່ມ (ສຸຂະພາບ, ການສຶກສາ, ວຽກເຮັດງານທຳ, ການປົກປ້ອງ ແລະ ການມີສ່ວນຮ່ວມ) ແລະ ມີຈຸດປະສົງເພື່ອ:

1. ສັງລວມຂໍ້ມູນທີ່ມີຈາກເອກະສານ ແລະ ບົດລາຍງານທີ່ມີ ເພື່ອສະໜອງໃຫ້ເຫັນພາບລວມຂອງສະພາບຊາວໜຸ່ມ ແລະ ເຍົາວະຊົນ ໃນປັດຈຸບັນ;
2. ທົບທວນບັນດານິຕິກຳ ແລະ ນະໂຍບາຍໃນປັດຈຸບັນ ແລະ ກຳນົດບົດຮຽນທີ່ຖອດຖອນໄດ້ຈາກບັນດາແຜນງານຕ່າງໆທີ່ມີຢູ່ ທີ່ໄດ້ສຸມໃສ່ຊາວໜຸ່ມແລະເຍົາວະຊົນ;
3. ປະເມີນແນວຄວາມຄິດຂອງຊາວໜຸ່ມ ແລະ ຜູ້ໃຫຍ່ທີ່ມີຄວາມສຳຄັນຕໍ່ກັບຊີວິດຂອງເຂົາເຈົ້າ (ໝາຍເຖິງຜູ້ໃຫຍ່ທີ່ມີໜ້າທີ່ກ່ຽວຂ້ອງກັບຊາວໜຸ່ມ);
4. ກຳນົດຊ່ອງຫວ່າງ ແລະ ຂໍ້ສະຫຼຸບ ເພື່ອຈັດຕັ້ງປະຕິບັດ ໃນການປັບປຸງຊີວິດຂອງຄົນຮຸ່ນໜຸ່ມ;
5. ຈັດຕັ້ງປະຕິບັດການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ໂດຍຮັບປະກັນຄວາມເປັນເຈົ້າການ ແລະ ການປະກອບສ່ວນຈາກຂະແໜງການຕ່າງໆ ແລະ ປະກອບສ່ວນເຂົ້າໃນການສ້າງຄວາມອາດສາມາດໃຫ້ແກ່ສູນກາງຊາວໜຸ່ມ.

ຂໍ້ມູນຂອງການວິໄຈສະພາບຊາວໜຸ່ມແລະເຍົາວະຊົນ ແມ່ນມາຈາກຫລາຍແຫລ່ງຂໍ້ມູນທີ່ແຕກຕ່າງກັນ:

1. **ການທົບທວນນະໂຍບາຍ ແລະ ນິຕິກຳ:** ບັນດາຍຸດທະສາດ, ກົດໝາຍ ແລະ ນະໂຍບາຍທີ່ມີຄວາມສຳຄັນຕໍ່ກັບຄົນຮຸ່ນໜຸ່ມ ໄດ້ຖືກກຳນົດ ແລະ ທົບທວນ ເພື່ອຄົ້ນຫາຂອບເຂດ, ການປົກຄຸມ, ແລະ ຄວາມສະໝໍ່າສະເໝີ ເພື່ອເປັນບ່ອນອີງສຳລັບການສຶກສາໃນອະນາຄົດ, ແລະ ຊ່ວຍໃນການກຳນົດຊ່ອງຫວ່າງ ທີ່ອາດຕ້ອງເພີ່ມຄວາມເອົາໃຈໃສ່ ແລະ ບົດຮຽນທີ່ສາມາດຖອດຖອນໄດ້.

[20] National Maternal and Child Health Centre, MoH (2007): *Adolescent Migrants in the Greater Mekong Sub-Region: Are they equipped to protect themselves against sexual and reproductive health risks?*

[21] MoH and Lao Statistics Bureau (2012): *Lao Social Indicator Survey.*

[22] *Ibid.*

[23] *Ibid.*

2. **<u>ການທົບທວນແຜນງານ</u>:** ບັນດາແຜນງານທີ່ໄດ້ຮັບການພັດທະນາສາລັບຄົນຮຸ່ນໜຸ່ມ, ຫຼື ກວມເອົາຄົນຮຸ່ນໜຸ່ມຈຳນວນຫຼາຍທີ່ເປັນຜູ້ທີ່ໄດ້ຮັບຜົນປະໂຫຍດ, ແມ່ນໄດ້ຖືກວິໄຈ ເພື່ອເຫັນໄດ້ສະພາບລວມຂອງການຕອບສະໜອງ ໃນປັດຈຸບັນ ຕໍ່ກັບຄວາມຕ້ອງການຂອງຄົນຮຸ່ນໜຸ່ມ, ຊີ້ໃຫ້ເຫັນບົດຮຽນທີ່ຖອດຖອນໄດ້ຈາກ ແຜນງານທີ່ມີຢູ່ ແລະ ຊ່ອງຫວ່າງຕ່າງໆ.
3. **<u>ການວິເຄາະຂໍ້ມູນມືສອງ</u>:** ໄດ້ດຳເນີນການທົບທວນບົດລາຍງານ, ບົດການຄົ້ນຄ້ວາ ແລະ ບົດການປະເມີນຜົນຫຼ້າສຸດ ເພື່ອສັງລວມເອົາຂໍ້ມູນທາງດ້ານປະລິມານ ແລະ ຄຸນນະພາບ ທີ່ໄດ້ຖືກເກັບກຳ ແລະ ວິເຄາະໃນປະເທດແຕ່ປີ 2005 ເປັນຕົ້ນມາ, ເຊິ່ງໄດ້ເວົ້າເຖິງສະພາບຂອງຊາວໜຸ່ມ ແລະ ເຍົາວະຊົນ ໃນປັດຈຸບັນ.
4. **<u>ການເກັບກຳ ແລະ ການວິເຄາະຂໍ້ມູນມືໜຶ່ງ</u>:** ຂໍ້ມູນມືໜຶ່ງ ແມ່ນເນັ້ນໃສ່ຂໍ້ມູນໃນແບບຄຸນະພາບ ເຊິ່ງໄດ້ມາຈາກຄວາມເປັນຈິງ ແລະໄດ້ມາຈາກຫລາຍແຫຼ່ງຂໍ້ມູນ; ການສົນທະນາກຸ່ມເປົ້າໝາຍ (FGDs) ໄດ້ຮັບການຈັດຕັ້ງປະຕິບັດກັບກຸ່ມຊາວໜຸ່ມ, ເຍົາວະຊົນ, ພໍ່ແມ່ ແລະອຳນາດການປົກຄອງບ້ານ ແລະ ການສຳພາດຜູ້ໃຫ້ຂໍ້ມູນຫຼັກ (KII) ກັບບຸກຄົນ ແລະ ສະຖາບັນຕ່າງໆ ເພື່ອເກັບກຳຂໍ້ມູນທີ່ກ່ຽວກັບປະເດັນທີ່ຕ້ອງການສຶກສາ.

ເພື່ອສ້າງຄວາມໝັ້ນໃຈ ໃນການຕອບສະໜອງທາງດ້ານວິຊາການ ແລະ ເປີດໂອກາດການປະກອບສ່ວນ ແລະ ການມີສ່ວນຮ່ວມຈາກຫຼາຍຂະແໜງການ ແລະ ຄູ່ຮ່ວມງານ, ສູນກາງຊາວໜຸ່ມ ໄດ້ສ້າງໂຄງຮ່າງການຈັດຕັ້ງ ແລະ ຂັ້ນຕອນການປະຕິບັດການວິໄຈດັ່ງລຸ່ມນີ້:

1. **<u>ຄະນະກຳມະການຊີ້ນຳ (SC)</u>:** ຄະນະດັ່ງກ່າວປະກອບດ້ວຍຜູ້ຕາງໜ້າຂັ້ນບໍລິຫານ ຈາກສູນກາງຊາວໜຸ່ມ ແລະ ບັນດາກະຊວງທີ່ກ່ຽວຂ້ອງ ໃນຂົງເຂດວຽກງານສາທາ, ສຶກສາ, ການມີວຽກເຮັດງານທຳ ແລະ ການປົກປ້ອງໄວໜຸ່ມ, ໂດຍມີຈຸດປະສົງເພື່ອຊີ້ນຳ ແລະ ຕິດຕາມການວິໄຈ.
2. **<u>ຄະນະປະຕິບັດງານດ້ານວິຊາການ (TWG)</u>:** ຄະນະດັ່ງກ່າວປະກອບດ້ວຍພະນັກງານວິຊາການຈາກສູນກາງຊາວໜຸ່ມ ແລະ ກະຊວງຕ່າງໆ, ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ແລະ ອົງການສະຫະປະຊາຊາດ, ໂດຍມີເປົ້າໝາຍເພື່ອຮັບປະກັນຄວາມສອດຄ່ອງ ແລະການແລກປ່ຽນຂອງຂໍ້ມູນ ກ່ຽວກັບການວິໄຈ ແລະ ສະໜອງຄຳແນະນຳດ້ານວິຊາການທີ່ຈຳເປັນໂດຍອີງໃສ່ປະສົບການພາຍໃນປະເທດ.
3. **<u>ເຄືອຂ່າຍຂອງຊາວໜຸ່ມ (NYP)</u>:** ໄດ້ກຳນົດກຸ່ມຊາວໜຸ່ມ, ຊຶ່ງຫຼາຍຄົນກໍໄດ້ເປັນສະມາຊິກຂອງເຄືອຂ່າຍຊາວໜຸ່ມທີ່ມີຢູ່ແລ້ວ, ເພື່ອຮັບປະກັນໃຫ້ມີເວທີໃນການສະແດງອອກທາງດ້ານທັດສະນະຂອງຊາວໜຸ່ມ ທີ່ຈະໄດ້ປະກອບສ່ວນເຂົ້າໃນການວາງແຜນ ແລະ ຜົນໄດ້ຮັບຈາກການວິໄຈ.
4. **<u>ອົງການດ້ານວິຊາການແຫ່ງຊາດ (NTO)</u>:** ສະຖາບັນເບີເນັດ (BI) ໄດ້ຖືກຄັດເລືອກຜ່ານຂະບວນການທີ່ໂປ່ງໃສ ເພື່ອໃຫ້ການສະໜັບສະໜູນດ້ານວິຊາການໃນການວິໄຈ, ລວມທັງການຊ່ວຍພັດທະນາຂີດຄວາມສາມາດໃຫ້ແກ່ບຸກຄະລະກອນ ໃນສູນກາງຊາວໜຸ່ມທີ່ກ່ຽວພັນເຖິງການເກັບກຳຂໍ້ມູນມືໜຶ່ງ ແລະ ມືສອງ ແລະ ການວິໄຈ.

ຕະຫຼອດໄລຍະຂອງການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ, ກໍໄດ້ມີການຈັດກອງປະຊຸມປະຈຳອາທິດລະຫວ່າງພະນັກງານຫຼັກຂອງສູນກາງຊາວໜຸ່ມ, UNFPA ແລະ ສະຖາບັນເບີແນດ ທີ່ເປັນຜູ້ຮັບຜິດຊອບໃນການວິໄຈ, ເພື່ອສ້າງຄວາມເຂັ້ມແຂງໃນການບໍລິຫານ ແລະ ວິຊາການທີ່ມີຄຸນນະພາບເຂົ້າໃນການວິໄຈ. ພ້ອມກັນນັ້ນຍັງມີກອງປະຊຸມປົກກະຕິກັບຄະນະວິຊາການ ເພື່ອອຳນວຍຄວາມສະດວກໃນການເຊື່ອມສານຂໍ້ມູນທີ່ມີໃນປັດຈຸບັນກັບບັນດາກະຊວງຫຼັກ ທີ່ມີຄວາມຮັບຜິດຊອບຕໍ່ກັບຊາວໜຸ່ມ ແລະ ເຍົາວະຊົນ. ໄດ້ຈັດກອງປະຊຸມຄະນະຊີ້ນຳ 6 ຄັ້ງ ໃນແຕ່ລະໄລຍະທີ່ສຳຄັນຂອງການວິໄຈ ເພື່ອໃຫ້ທິດຊີ້ນຳລວມ.

ນອກຈາກນັ້ນ, ໄດ້ຈັດກອງປະຊຸມລະດັບຊາດ 3 ຄັ້ງ ທີ່ປະກອບຄະນະວິຊາການ ແລະ ສະມາຊິກຂອງເຄືອຂ່າຍໄວໜຸ່ມ, ຄູ່ຮ່ວມງານຂອງສະຫະປະຊາຊາດ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານພາຍ ໃນປະເທດ ແລະ ສະຖາບັນການສຶກສາ. ກອງປະຊຸມຄັ້ງທີໜຶ່ງ ໄດ້ຈັດຂຶ້ນເພື່ອສະໜອງທິດຊີ້ນຳໃຫ້ແກ່ການວາງແຜນໂດຍລວມກ່ຽວກັບການວິໄຈ; ກອງປະຊຸມຄັ້ງທີສອງໄດ້ເປັນເວທີ ເພື່ອສົນທະນາຜົນຂອງການວິໄຈຂໍ້ມູນມືສອງ ແລະປະກອບສ່ວນເຂົ້າໃນການວາງແຜນການເກັບກຳຂໍ້ມູນມືໜຶ່ງ; ແລະ ກອງປະຊຸມຄັ້ງທີສາມໄດ້ຈັດຂຶ້ນເພື່ອທົບທວນສິ່ງທີ່ຄົ້ນພົບຈາກການເກັບກຳຂໍ້ມູນມືໜຶ່ງ ແລະ ການທົບທວນແຜນງານ ແລະ ນະໂຍບາຍ, ການກຳນົດຂໍ້ສະຫຼຸບ ແລະ ການໃຫ້ຂໍ້ສະເໜີແນະເພື່ອແກ້ໄຂບັນຫາ, ເຊິ່ງຕໍ່ມາກໍໄດ້ຮັບການທົບທວນ ແລະ ສະຫຼຸບຄືນໂດຍຄະນະກຳມະການຊີ້ນຳ.

## 1.5 ວິທີວິທະຍາ

ການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ໄດ້ຈັດຕັ້ງປະຕິບັດໃນໄລຍະປີ 2013, ເລີ່ມຕົ້ນຈາກກອງປະຊຸມວາງແຜນລະດັບຊາດທີ່ໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ, ເດືອນ ທັນວາ 2012.

ຂໍ້ມູນສຳລັບການວິໄຈ ແມ່ນໄດ້ມາຈາກແຫຼ່ງຂໍ້ມູນທີ່ແຕກຕ່າງກັນ:

**<u>ການທົບທວນບັນດານິຕິກຳ, ນະໂຍບາຍ ແລະ ຍຸດທະສາດ ທີ່ສຳຄັນ ສຳລັບຊາວໜຸ່ມ:</u>**

ບັນດາແຜນການ, ນະໂຍບາຍ ແລະ ກົດໝາຍ ມີຜົນກະທົບທີ່ສຳຄັນຕໍ່ກັບຜົນປະໂຫຍດ, ບັນຫາ, ກາລະໂອກາດ ແລະ ສິ່ງທ້າທາຍຂອງ ຊາວໜຸ່ມແລະ ເຍົາວະຊົນ ທີ່ເຂົາເຈົ້າໄດ້ປະເຊີນໃນຊີວິດ. ເອກະສານເຫຼົ່ານີ້ ກຳນົດກອບວຽກໂດຍລວມທີ່ໄດ້ລະບຸພາລະບົດບາດ ຫຼື ອຳນວຍຄວາມສະດວກກິດຈະກຳຕ່າງໆທີ່ເຄົາລົບ, ປົກປ້ອງ ແລະ ເຮັດໃຫ້ສິດຂອງຊາວໜຸ່ມ ແລະ ເຍົາວະຊົນ ປະກົດຜົນເປັນຈິງ. ນອກຈາກນັ້ນ ບັນດາແຜນການ, ນະໂຍບາຍ ແລະ ກົດໝາຍ ຍັງສະແດງໃຫ້ເຫັນວິໄສທັດຂອງລັດຖະບານ, ສິ່ງໃດຄວນ ແລະ ບໍ່ຄວນດຳເນີນເພື່ອປັບປຸງສຸຂະພາບ, ການສຶກສາ, ການມີວຽກ

ເຮັດວຽກທໍາ, ການປົກປ້ອງ ແລະ ການມີສ່ວນຮ່ວມຂອງເຍົາວະຊົນ ແລະ ຊາວໜຸ່ມ, ແລະ ລະບຸການຈັດຕັ້ງປະຕິບັດທີ່ເປັນບຸລິມະສິດເພື່ອໃຫ້ບັນລຸວິໄສທັດນີ້.

ການທົບທວນບັນດາແຜນການ, ນະໂຍບາຍ ແລະ ກົດໝາຍທີ່ມີຢູ່ທີ່ກ່ຽວຂ້ອງກັບຄົນຮຸ່ນໜຸ່ມ ຢູ່ ສປປ ລາວ ຈຶ່ງໄດ້ຮັບການປະຕິບັດ ເປັນອົງປະກອບສະເພາະອັນໜຶ່ງສໍາລັບການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ, ເພື່ອຊອກຮູ້ຄວາມກ່ຽວພັນ ແລະ ຄວາມກົມກຽວຂອງບັນດານະໂຍບາຍ ແລະ ນິຕິກໍາທີ່ມີຢູ່, ເພື່ອນໍາໃຊ້ເປັນບ່ອນອີງສໍາລັບການຄົ້ນຄວ້າ ໃນອະນາຄົດ ແລະ ເພື່ອກໍານົດຊ່ອງຫວ່າງທີ່ຕ້ອງໄດ້ເອົາໃຈໃສ່ເພີ່ມເຕີມ.

ໄດ້ເກັບກໍາເອກະສານຈາກກະຊວງຍຸຕິທໍາ ທີ່ເປັນຜູ້ສັງລວມຂໍ້ມູນກ່ຽວກັບກົດໝາຍທີ່ພົວພັນກັບຊາວໜຸ່ມ ແລະ ເຍົາວະຊົນ ຈາກສະພາແຫ່ງຊາດ, ແລະ ເວັບໄຊ ຂອງ ລັດຖະບານລາວ. ທຸກກົດໝາຍທີ່ພົວພັນເຖິງຄົນຮຸ່ນໜຸ່ມ ຕ່າງກໍໄດ້ຮັບການວິເຄາະໂດຍນໍາໃຊ້ຕາຕະລາງທີ່ກໍານົດຂຶ້ນ, ແລະ ລາຍລະອຽດແມ່ນມີຢູ່ໃນເອກະສານຊ້ອນທ້າຍ 5. ບົດສະຫຼຸບຂອງການວິໄຈນີ້ ທີ່ຖືກນໍາສະເໜີໃນ *ພາກ II* ແມ່ນສັງລວມບັນດາກົດໝາຍກ່ຽວພັນກັບຊາວໜຸ່ມ ແລະ ເຍົາວະຊົນ ໃນ ສປປ ລາວ, ລວມທັງ ຂໍ້ກໍານົດສໍາລັບປົກປ້ອງຜົນປະໂຫຍດຂອງຄົນຮຸ່ນໜຸ່ມ ແລະ ການລົງໂທດຜູ້ລ່ວງລະເມີດຂໍ້ກໍານົດເຫຼົ່ານີ້.

ນອກຈາກນັ້ນ, ບັນດາເອກະສານແຜນການ ແລະ ນະໂຍບາຍຂອງກະຊວງກໍ່ໄດ້ຮັບການທົບທວນ ເພື່ອກໍານົດລັກສະນະສະເພາະຂອງນະໂຍບາຍ ແລະ ຍຸດທະສາດທີ່ມີຢູ່ ທີ່ໄດ້ມີຈຸດສຸມຕໍ່ກັບຄົນຮຸ່ນໜຸ່ມ. ການທົບທວນດັ່ງກ່າວນີ້ ໄດ້ຮັບການສະໜັບສະໜູນໂດຍຂໍ້ມູນທີ່ໄດ້ຈາກການສໍາພາດກັບຜູ້ໃຫ້ຂໍ້ມູນຫຼັກ ໂດຍສະເພາະ ພະນັກງານລັດ.

**<u>ທົບທວນແຜນງານ ທີ່ໄດ້ສ້າງຂຶ້ນ ສໍາລັບຊາວໜຸ່ມ, ຫຼື ກວມເອົາຊາວໜຸ່ມຈໍານວນຫຼາຍ ທີ່ເປັນຜູ້ໄດ້ຮັບຜົນປະໂຫຍດ:</u>**

ການຕອບສະໜອງຄວາມຕ້ອງການຂອງຊາວໜຸ່ມທີ່ມີໃນປັດຈຸບັນ ຢູ່ໃນຂະແໜງການ ສຸຂະພາບ, ການສຶກສາ, ການມີວຽກເຮັດງານທໍາ, ການປົກປ້ອງ ແລະ ການມີສ່ວນຮ່ວມຂອງຊາວໜຸ່ມ, ໄດ້ຖືກຮັບໂຮມ ແລະ ທົບທວນ ເພື່ອອະທິບາຍແຜນງານທີ່ມີຢູ່ ແລະ ລັກສະນະຂອງຊ່ອງຫວ່າງ. ການທົບທວນ ແຜນງານ ໄດ້ເລີ່ມຈັດຕັ້ງປະຕິບັດ ແຕ່ເດືອນ ມິຖຸນາ ຫາ ເດືອນຕຸລາ ປີ 2013.

ຈຸດປະສົງຂອງການທົບທວນແຜນງານມີດັ່ງນີ້:

1. ກໍານົດ ແລະ ສ້າງແຜນວາດທີ່ກ່ຽວກັບການບໍລິການ ແລະ ແຜນງານຕ່າງໆທີ່ມີໃນປັດຈຸບັນ ສໍາລັບ ຊາວໜຸ່ມ ແລະ ເຍົາວະຊົນ (ສຸຂະພາບ, ການສຶກສາ, ວິຊາຊີບ, ຊີວິການເປັນຢູ່, ການພັກຜ່ອນ, ການປົກປ້ອງ, ອາສະໝັກ ແລະ ເຄືອຂ່າຍ)
2. ກໍານົດຊ່ອງຫວ່າງ ແລະ ສິ່ງທີ່ຊໍ້າຊ້ອນກັນ ໃນການສະໜອງການບໍລິການ ແລະ ແຜນງານ;
3. ປະເມີນການປະກອບສ່ວນດ້ານວິຊາການ ແລະ ການເງິນ;
4. ປະເມີນວ່າຊາວໜຸ່ມແລະເຍົາວະຊົນເຂົ້າໃຈ, ເຂົ້າເຖິງ ແລະ ຮັບຮູ້ແນວໃດ ກ່ຽວກັບການບໍລິການ.

ຄະນະວິຊາການວິໄຈ ໄດ້ສັງລວມລາຍຊື່ຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (iNGOs), ອົງການໃນເຄືອຂ່າຍ ສປຊ (UN), ອົງການຈັດຕັ້ງມະຫາຊົນ, ສະມາຄົມບໍ່ຫວັງຜົນກໍາໄລ (NPAs) ແລະ ບັນດາກົມກອງທີ່ຂຶ້ນກັບກະຊວງຕ່າງໆ ທີ່ໄດ້ຈັດຕັ້ງປະຕິບັດວຽກງານຢູ່ ສປປ ລາວ. ລາຍຊື່ດັ່ງກ່າວໄດ້ອີງໃສ່ ປຶ້ມສັງລວມການບໍລິການທີ່ຈໍາເປັນແຫ່ງຊາດສໍາລັບຊາວໜຸ່ມ ແລະ ເຍົາວະຊົນຢູ່ ສປປ ລາວ,[24] ແລະ ປຶ້ມສັງລວມອິນເຕີແນດຂອງອົງການຈັດຕັ້ງບໍ່ສັງກັດລັດຖະບານທີ່ມີຢູ່ໃນ ສປປ ລາວ.[25] ອີງໃສ່ເອກະສານດັ່ງກ່າວ, ອົງການຈັດຕັ້ງ, ສະມາຄົມ ແລະ ກົມກອງຕ່າງໆ ໄດ້ຮັບການຕິດຕໍ່ທາງອີເມວ ແລະ ໂທລະສັບ, ແນະນໍາໃຫ້ຮູ້ກ່ຽວກັບການວິໄຈ ແລະ ການທົບທວນແຜນງານ ແລະ ໄດ້ຮຽກຮ້ອງໃຫ້ສະໜອງຂໍ້ມູນກ່ຽວກັບການບໍລິການ ແລະ ແຜນງານທີ່ກ່ຽວຂ້ອງ. ນອກຈາກນັ້ນ, ໄດ້ມີການຊອກຄົ້ນຂໍ້ມູນ ຈາກບັນຊີສັງລວມທາງອິນເຕີແນດຂອງອົງການຈັດຕັ້ງບໍ່ສັງກັດລັດຖະບານທີ່ມີ ຢູ່ ສປປ ລາວ ແລະ ເວບໄຊຂອງຂອງອົງການຈັດຕັ້ງຕ່າງໆ ເພື່ອຊອກຫາຂໍ້ມູນກ່ຽວກັບແຜນງານເພີ່ມເຕີມ.

ໄດ້ນໍາໃຊ້ຫຼາຍບັນທັດຖານ ເພື່ອປະເມີນເງື່ອນໄຂຄວາມເໝາະສົມຂອງແຜນງານທີ່ໄດ້ກໍານົດເພື່ອສັງ ລວມເຂົ້າໃນການທົບທວນແຜນງານ:

**<u>ກຸ່ມອາຍຸ:</u>** ແຜນງານຄວນກໍານົດເປົ້າໝາຍຊາວໜຸ່ມແລະເຍົາວະຊົນຢ່າງຈະແຈ້ງ ອາຍຸລະຫວ່າງ 10-24 ປີ; ຫຼື ຖ້າຫາກແຜນງານດັ່ງກ່າວເນັ້ນໃສ່ປະຊາກອນທົ່ວໄປ ກໍ່ຄວນລວມເອົາບາງອົງປະກອບທີ່ເນັ້ນໃສ່ສະເພາະຄົນຮຸ່ນໜຸ່ມ; ຫຼື ຖ້າຫາກແຜນການຫາກກໍານົດກຸ່ມຄວາມສ່ຽງສະເພາະ, ອັດຕາສ່ວນໃຫຍ່ຂອງກຸ່ມເປົ້າໝາຍຄວນຢູ່ໃນເກນອາຍຸ 10-24 ປີ;

**<u>ການປົກຄຸມ:</u>** ແຜນງານຄວນເປັນແຜນງານແຫ່ງຊາດ; ຫຼື ຖ້າເປັນແຜນງານຂັ້ນແຂວງ ກໍ່ຄວນເນັ້ນໃສ່ຢ່າງໜ້ອຍ 3 ເມືອງ;

**<u>ໄລຍະເວລາ:</u>** ຢ່າງໜ້ອຍແຜນງານຄວນໄດ້ຮັບການຈັດຕັ້ງປະຕິບັດ ເປັນເວລາ 3 ປີ, ບໍ່ວ່າກໍາລັງຈັດຕັ້ງປະຕິບັດຢູ່ ຫຼື ໄດ້ຈັດຕັ້ງປະຕິບັດໃນໄລຍະຫ້າປີຜ່ານມາ; ຫຼື ຖ້າແຜນງານນັ້ນຍັງຢູ່ໃນຂັ້ນຕອນການວາງແຜນ, ຄວນມີແຜນງົບປະມານ ແລະ ເອກະສານໂຄງການທີ່ໄດ້ຮັບການພັດທະນາເປັນຢ່າງດີ.

---

24 Lao Women's Union (2012/13). *National Directory of Essential Services for Children and Youth in Lao PDR*. Vientiane, Lao PDR.

25 Internet Directory of Non-Government Organizations (NGOs) in the Lao PDR (2014), http://www.directoryofngos.org.

ບັນດາແຜນງານທີ່ບໍ່ສອດຄ່ອງກັບໜຶ່ງໃນຂໍ້ກຳນົດບັນທັດຖານ, ແຕ່ເນັ້ນໃສ່ຜູ້ທີ່ຢູ່ໃນກຸ່ມດ້ອຍໂອກາດ, ກຸ່ມທີ່ສັງຄົມຍອມຮັບໄດ້ຍາກ ຫຼື ກຸ່ມທີ່ທີ່ມີຄວາມສ່ຽງຕ່າງໆ ກໍ່ໄດ້ຮັບການພິຈາລະນາໄປຕາມແຕ່ກໍລະນີ. ນອກຈາກນັ້ນ, ຍັງມີການສັງລວມເອົາແຜນງານຈຳນວນໜຶ່ງ ທີ່ຖືກເວົ້າເຖິງ ໃນໄລຍະການສຳພາດຜູ້ໃຫ້ຂໍ້ມູນຫຼັກກັບບາງກະຊວງ, ອົງການຈັດຕັ້ງໃນເຄືອຂ່າຍ ສປຊ ແລະ NGOs.

ສຳລັບການຄັດຈ້ອນຂໍ້ມູນຈາກແຕ່ລະແຜນງານທີ່ຖືກຄັດເລືອກ, ໄດ້ມີການຮອບຮອມດັ່ງຕໍ່ໄປນີ້:

- ລາຍລະອຽດຂອງອົງການຈັດຕັ້ງ ແລະ ຄູ່ຮ່ວມງານ, ລວມທັງລາຍລະອຽດໃນການຕິດຕໍ່ພົວພັນ
- ປະເພດແຜນງານ
- ກຸ່ມເປົ້າໝາຍ: ອາຍຸ, ເພດ, ຊົນເຜົ່າ, ກຸ່ມສ່ຽງ
- ຂອບເຂດພູມສັນຖານ: ຂັ້ນເມືອງ ແລະ ຂັ້ນແຂວງ
- ໄລຍະເວລາ
- ຈຸດປະສົງ ແລະ ເປົ້າໝາຍ
- ງົບປະມານ
- ແຫຼ່ງທຶນ (ຄວາມຍືນຍົງ)
- ການມີສ່ວນຮ່ວມຂອງຄົນຮຸ້ນໜຸ່ມ
- ລະບົບການຕິດຕາມ ແລະ ປະເມີນຜົນ (M&E)
- ຂໍ້ມູນທີ່ມີ ແລະ ສິ່ງທີ່ຄົ້ນພົບຈາກການຕິດຕາມ ແລະ ປະເມີນຜົນ

ແຜນງານຕ່າງໆໄດ້ກຳນົດເປັນຫົວຂໍ້ກວ້າງໆ ເຊັ່ນ: ສຸຂະພາບ, ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ (SRH), ພະຍາດເອດ, ການສຶກສາ, ການພັດທະນາທັກສະ, ການຈ້າງງານ, ການປົກປ້ອງ, ຄວາມພິການ, ການມີສ່ວນຮ່ວມ ແລະ ການຫຼຸດຜ່ອນຄວາມສ່ຽງ. ປະເພດສຸຂະພາບປະກອບດ້ວຍສຸຂະສຶກສາ, ການບໍລິການສຸຂະພາບ, ແລະ ສຸຂະພາບທີ່ພົວພັນກັບໂພສະນາການ, ແຕ່ບໍ່ໄດ້ລວມເອົາການບໍລິການ ແລະ ສຸຂະສຶກສາທີ່ສະເພາະເຈາະຈົງກັບສຸຂະພາບຈະເລີນພັນ, ສຸຂະພາບທາງເພດ ແລະ ພະຍາດເອດ. ການຫຼຸດຜ່ອນຄວາມສ່ຽງປະກອບດ້ວຍຄວາມປອດໄພທາງຖະໜົນ, ການປ້ອງກັນອຸບັດເຫດ ແລະ ການຫຼຸດຜ່ອນຄວາມສ່ຽງໄພພິບັດ.

ການວິເຄາະດ້ານການອະທິບາຍ ໄດ້ດຳເນີນກັບບາງແຜນງານທີ່ໄດ້ຮັບການຄັດເລືອກ ເຊິ່ງໄດ້ສັງລວມກິດຈະກຳອອກເປັນ 5 ອົງປະກອບຂອງການວິໄຈ AYSA: ສາທາ, ສຶກສາ, ການຈ້າງງານ, ການມີສ່ວນຮ່ວມ ແລະ ການປົກປ້ອງ. ນອກຈາກນັ້ນ, ການຈັດຕັ້ງປະຕິບັດຕ່າງໆ ຍັງໄດ້ຮັບການທົບທວນອີງໃສ່ປະເພດຕ່າງໆຂອງແຜນງານ, ລວມທັງ ແຫຼ່ງທຶນ, ການຄຸ້ມຄອງບໍລິຫານ, ກຸ່ມເປົ້າໝາຍ, ການປົກຄຸມ, ການພັດທະນາຄວາມສາມາດ ແລະ ການຕິດຕາມ ແລະ ປະເມີນຜົນ.

**<u>ການວິເຄາະຂໍ້ມູນມືສອງ:</u>**

ໄດ້ທົບທວນເບິ່ງບັນດາບົດລາຍງານ, ບົດຄົ້ນຄວ້າ ແລະ ບົດປະເມີນ ເພື່ອສັງລວມບັນດາຂໍ້ມູນທາງດ້ານຄຸນະພາບ ແລະ ປະລິມານ ທີ່ໄດ້ເກັບກຳ ແລະ ວິໄຈ ໃນໄລຍະຜ່ານມາ ຕັ້ງແຕ່ ປີ 2005.

**ຈຸດປະສົງລວມຂອງການທວນທວນເອກະສານມີ 2 ແມ່ນ** ເພື່ອກຳນົດແຫຼ່ງຂໍ້ມູນມືສອງທີ່ເໝາະສົມ, ສຳເລັດການເກັບກຳ ແລະ ຄັດຈ້ອນຂໍ້ມູນຫຼັກ ກ່ຽວກັບຄົນໜຸ່ມ ໃນອາຍຸລະຫວ່າງ 10-24 ປີ ໂດຍນຳໃຊ້ຕາຕະລາງມາດຕະຖານ. ຊ່ອງຫວ່າງຕ່າງໆທີ່ສຳຄັນໃນຂໍ້ມູນ ແລະ ການວິໄຈທີ່ມີ ແມ່ນໄດ້ຖືກກຳນົດ ແລະ ນອກຈາກນັ້ນ ຊ່ວຍໃນການກຳນົດຮ່າງຂອງການເກັບຂໍ້ມູນມືໜຶ່ງ, ເພື່ອຮັບປະກັນວ່າ ຂໍ້ມູນມືໜຶ່ງທີ່ໄດ້ຮອບຮອມຈະສາມາດຊ່ວຍ ແລະ ເພີ່ມເຂົ້າໃນຂໍ້ມູນທີ່ມີຢູ່ແລ້ວໃຫ້ສົມບູນຂຶ້ນ.

ຄະນະວິຊາການວິໄຈສະພາບຊາວໜຸ່ມແລະເຍົາວະຊົນ, ໂດຍການສະໜັບສະໜູນ ຈາກອົງການ UNFPA ພ້ອມການປະກອບສ່ວນດ້ານວິຊາການຈາກອົງການໃນເຄືອຂ່າຍ ສປຊ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ INGOs, ໄດ້ດຳເນີນການກຳນົດ ແລະ ເກັບກຳເອກະສານຄວາມເປັນມາ. ໄດ້ມີການສົ່ງໜັງສືສະເໜີຂໍບົດລາຍງານ ແລະ ເອກະສານທີ່ກ່ຽວຂ້ອງຕ່າງໆ ເຖິງໜ່ວຍງານຂອງລັດຖະບານ, ອົງການໃນເຄືອຂ່າຍ ສປຊ ແລະ NGOs. ເອກະສານທີ່ໄດ້ຮັບ ໄດ້ຖືກທົບທວນອີງໃສ່ສາມບັນທັດຖານທີ່ກຳນົດໄວ້.[26] ສາມາດເກັບກຳໄດ້ຫຼາຍກວ່າ 50 ເອກະສານ, ແຕ່ມີພຽງ 31 ເອກະສານຕອບສະໜອງຕາມບັນທັດຖານທີ່ໄດ້ກຳນົດໄວ້ (ເອກະສານຊ້ອນທ້າຍ 6). ແຕ່ລະເອກະສານ ແມ່ນໄດ້ມີການສະຫຼຸບຫຍໍ້ ໃນຕາຕະລາງສັງລວມ. ໄດ້ກອບຂໍ້ມູນໃສ່ຕາຕະລາງດັ່ງກ່າວ ເປັນພາສາດຽວກັນກັບພາສາທີ່ໃຊ້ໃນເອກະສານສະບັບຕົ້ນ (ລາວ ຫຼື ອັງກິດ) ແລະ ຫຼັງຈາກນັ້ນ ໄດ້ແປຕາມຄວາມເໝາະສົມ. ກອງປະຊຸມໄດ້ຈັດຂຶ້ນເປັນປົກກະຕິ ຮ່ວມກັບສູນກາງຊາວໜຸ່ມ ແລະ ຄະນະວິຊາການວິໄຈ ເພື່ອເປີດໂອກາດໃຫ້ສະມາຊິກໄດ້ປະກອບສ່ວນເຂົ້າໃນການວິໄຈຂໍ້ມູນມືສອງ.

[26] 1. ຕ້ອງແມ່ນບົດລາຍງານການປະເມີນຜົນ ຫຼື ການຄົ້ນຄວ້າ; 2. ຕ້ອງໄດ້ຮັບການຈັດພິມ ໃນ 5 ປີ ຜ່ານມາ (ຍົກເວັ້ນ ໃນກໍລະນີ ການສຶກສາກ່ຽວກັບ ແຮງງານເດັກ ແລະ ການສຶກສາເພື່ອວັດແທກອັດຕາການຕິດເຊື້ອ ເຮສໄອວີ (HIV) ໃນກຸ່ມຊາຍຮັກຊາຍ (2007), ເຊິ່ງບໍ່ມີຂໍ້ມູນໃໝ່ໆ); 3. ຕ້ອງມີຂໍ້ມູນກ່ຽວກັບຊາວໜຸ່ມ ອາຍຸ 10-24 ປີ.

ຂະບວນການ ການວິເຄາະຂໍ້ມູນມືສອງ, ເຊິ່ງໄດ້ເລີ່ມດຳເນີນການໃນໄຕມາດທຳອິດຂອງປີ 2013, ໄດ້ສະແດງໃຫ້ເຫັນເຖິງຂໍ້ມູນທີ່ມີຢູ່ ກ່ຽວກັບສະພາບຄົນຮຸ່ນໜຸ່ມ ຢູ່ ສປປ ລາວ. ໂດຍສະເພາະ ການສຳຫຼວດດັດຊະນີໝາຍສັງຄົມລາວ (LSIS), ທີ່ຈັດຕັ້ງປະຕິບັດໂດຍ ກະຊວງ ສາທາລະນະສຸກ ແລະ ສູນສະຖິຕິແຫ່ງຊາດ ເຊິ່ງເຫັນວ່າເປັນຂໍ້ມູນທີ່ມີຄວາມຄົບຖ້ວນ ແລະ ມີຂໍ້ມູນລ້າສຸດກ່ຽວກັບຊາວໜຸ່ມ.

**<u>ການເກັບກຳ ແລະ ວິໄຈຂໍ້ມູນມືໜຶ່ງ</u>**

ການເກັບກຳຂໍ້ມູນມືໜຶ່ງສຳລັບການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ໄດ້ຮັບການພັດທະນາ ແລະ ມີຈຸດປະສົງເພື່ອສະໜັບສະໜູນຕໍ່ສິ່ງທີ່ຄົ້ນພົບ ຈາກການທົບທວນນະໂຍບາຍ, ນິຕິກຳ ແລະ ແຜນງານ, ແລະ ການວິເຄາະຂໍ້ມູນມືສອງ. ຂໍ້ມູນມືໜຶ່ງໂດຍພື້ນຖານແລ້ວ ແມ່ນຂໍ້ມູນດ້ານຄຸນນະພາບທີ່ໄດ້ມາຈາກຄວາມເປັນຈິງ ໃນປັດຈຸບັນ ແລະ ໄດ້ເກັບກຳມາຈາກຫຼາຍແຫຼ່ງຂໍ້ມູນ.

**<u>ການສົນທະນາກຸ່ມສະເພາະກັບຊາວໜຸ່ມ (FGDs)</u>**

ຊາວໜຸ່ມໄດ້ຖືກເຊີນເຂົ້າຮ່ວມສົນທະນາກຸ່ມເພື່ອສະເໜີແນວຄິດ ແລະ ມູມມອງ ຕໍ່ກັບການປ່ຽນແປງທີ່ເກີດຂຶ້ນ ໃນປັດຈຸບັນ ທີ່ມີຜົນຕໍ່ຊີວິດຂອງຊາວໜຸ່ມ, ຄວາມໄຝ່ຝັນ, ສຸຂະພາບ, ການສຶກສາ, ການມີວຽກເຮັດງານທຳ, ການປົກປ້ອງ, ການມີສ່ວນຮ່ວມ ແລະ ການພັກຜ່ອນ. ໄດ້ມີຄວາມພະຍາຍາມເພື່ອຮັບປະກັນວ່າຊາວໜຸ່ມ ທີ່ໄດ້ເຂົ້າໃນການສົນທະນາກຸ່ມແມ່ນເປັນຕົວແທນຂອງບາງປັດໄຈທີ່ເຫັນໄດ້ວ່າມີຄວາມສຳຄັນ ແລະ ໜ້າສົນໃຈຈາກການວິເຄາະຂໍ້ມູນມືສອງ ເປັນຕົ້ນ ອາຍຸ, ເພດ, ລະດັບການສຶກສາ ແລະ ອົງປະກອບດ້ານທີ່ຕັ້ງພູມສັນຖານ (ຕົວເມືອງ, ຊົນນະບົດ ແລະ ຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ). ການສົນທະນາກຸ່ມ ຍັງຖືກດຳເນີນກັບກຸ່ມຂອງຜູ້ປົກຄອງ, ອຳນາດການປົກຄອງບ້ານ, ນາຍບ້ານ, ຮອງນາຍບ້ານ, ແນວໂຮມ, ຫົວໜ້າຊາວໜຸ່ມ, ຫົວໜ້າແມ່ຍິງ, ຄູສອນ, ແພດໃນສຸກສາລາ, ເພື່ອແນໃສ່ ການເຂົ້າເຖິງຂໍ້ມູນມູມມອງຂອງອຳນາດການປົກຄອງທີ່ກ່ຽວພັນເຖິງຊາວໜຸ່ມ.

ການສົນທະນາກຸ່ມ ແມ່ນໃຊ້ເວລາ 1-2 ຊົ່ວໂມງ ໃນແຕ່ລະສະຖານທີ່, ເຊິ່ງນຳພາກຸ່ມສົນທະນາໂດຍບຸກຄະກອນຈາກສູນກາງຊາວໜຸ່ມ ໂດຍການສະໜັບສະໜູນ ທາງດ້ານວິຊາການໂດຍ ສະຖາບັນເບີແນດ. ໃນການສົນທະນາກຸ່ມ ໄດ້ມີການແບ່ງລະຫວ່າງກຸ່ມແມ່ຍິງ ແລະ ຜູ້ຊາຍ ແລະ ຕາມກຸ່ມອາຍຸ (10-14 ປີ, 15-19 ປີ,  20-24 ປີ) (ເບິ່ງຕາຕະລາງ 1, 2 ແລະ 3 ໃນເອກະສານຊ້ອນທ້າຍ 7).

ການສົນທະນາກຸ່ມໄດ້ຖືກຈັດຂຶ້ນສຳລັບກຸ່ມຂອງຄູບາ ໃນແຂວງຫຼວງພະບາງ ແລະ ສຳລັບກຸ່ມນັກສຶກສາມະຫາໄລ ຍິງ-ຊາຍ ຢູ່ນະຄອນຫຼວງວຽງຈັນ.

**<u>ການສຳພາດຜູ້ໃຫ້ຂໍ້ມູນຫຼັກ (KII):</u>**

ການສຳພາດຜູ້ໃຫ້ຂໍ້ມູນຫຼັກ ຖືກດຳເນີນໄປດ້ວຍການສຳພາດເພີ່ມເຕີມກັບບາງບຸກຄົນ ລວມມີ:

- ຜູ້ຕາງໜ້າຈາກຂະແໜງການ ສາທາ, ສຶກສາ, ສູນກາງຊາວໜຸ່ມ, ຕຳຫຼວດ ແລະ ກຳມະບານ, ໃນບັນດາເມືອງທີ່ຖືກຄັດເລືອກຈາກບັນດາແຂວງ ເຊັ່ນ: ເມືອງເທດສະບານ ໃນແຂວງຫຼວງພະບາງ, ເມືອງ ຊົນນະບົດ ໃນແຂວງສະຫວັນນະເຂດ, ແລະ ເມືອງຫ່າງໄກຊອກຫຼີກທີ່ມີເສັ້ນທາງເຂົ້າຫາຍາກ ໃນແຂວງອັດຕະປື;
- ເຈົ້າຂອງຮ້ານບັນເທີງ, ໄດ້ມີການສຳພາດລົງເລິກກັບເຈົ້າຂອງຮ້ານບັນເທີງ 3 ທ່ານ ໃນແຕ່ລະແຂວງ ລວມເອົາ ເຂດຕົວເມືອງ, ເຂດຊົນນະບົດ, ແລະ ເຂດຫ່າງໄກຊອກຫຼີກທີ່ມີເສັ້ນທາງເຂົ້າເຖິງຍາກ.
- ອົງການຈັດຕັ້ງທີ່ເຮັດວຽກສະເພາະເຈາະຈົງ ຊາວໜຸ່ມ ເຊັ່ນ ບັນດາອົງການໃນເຄືອຂ່າຍຂອງ ສປຊ, ອົງການທີ່ບໍ່ຂຶ້ນກັບລັດຖະບານທີ່ເຮັດວຽກກ່ຽວພັນເຖິງການເຄື່ອນຍ້າຍ ແລະ ຜູ້ພິການ ທີ່ສາມາດສະໜອງຂໍ້ມູນທີ່ສຳຄັນຕໍ່ກັບບັນຫາທີ່ວາງອອກ (ຕາຕະລາງ 4, ເອກະສານຊ້ອນທ້າຍ 7);
- ບັນດາກະຊວງທີ່ມີຄວາມຮັບຜິດຊອບເລື່ອງສຸຂະພາບ, ການສຶກສາ, ການມີວຽກເຮັດງານທຳ, ການປົກປ້ອງ ແລະ ການມີສ່ວນຮ່ວມ ຂອງຊາວໜຸ່ມ ໃນນັ້ນມີ: ກະຊວງແຜນການ ແລະ ການລົງທຶນ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ.

ຄະນະວິຊາການວິໄຈ, ຮ່ວມກັບສະມາຊິກເຄືອຂ່າຍຊາວໜຸ່ມ ແລະ ຄະນະກຳມະການຊີ້ນຳການວິໄຈ ໄດ້ສົນທະນາ ກ່ຽວກັບຜົນຂອງການເກັບກຳຂໍ້ມູນ, ເພື່ອກຳນົດຂໍ້ສະຫຼຸບ ແລະ ຂໍ້ແນະນຳສຳລັບນະໂຍບາຍ ແລະ ແຜນງານຕ່າງໆ.

## 1.5.1 ການຄັດເລືອກພື້ນທີ່ການສຶກສາ

ການດຳເນີນການເກັບກຳຂໍ້ມູນມືໜຶ່ງໄດ້ຖືກປະຕິບັດ ໃນໜຶ່ງແຂວງທາງພາກເໜືອ, ໜຶ່ງແຂວງໃນສູນພາກກາງ ແລະ ໜຶ່ງແຂວງໃນພາກໃຕ້: ແຂວງຫຼວງພະບາງ, ແຂວງສະຫວັນນະເຂດ ແລະ ແຂວງອັດຕະປື, ດ້ວຍເຫດຜົນດັ່ງລຸ່ມນີ້:

- ມັນອາດມີຄວາມເປັນໄປໄດ້ທີ່ຈະສົມທຽບລະຫວ່າງຕົວເມືອງ, ຊົນະບົດ, ຊົນະບົດຫ່າງໄກຊອກຫຼີກທີ່ເຂົ້າເຖິງຍາກ ໃນໜຶ່ງແຂວງ (ແຂວງຫຼວງພະບາງ).
- ມັນອາດມີຄວາມເປັນໄປໄດ້ທີ່ຈະສົມທຽບລະຫວ່າງພື້ນທີ່ແຕ່ລະປະເພດຢ່າງໜ້ອຍຢູ່ໃນສອງແຂວງ.

- ຕົວເມືອງເທດສະບານ ຂອງ ແຂວງ ຫຼວງພະບາງ ແລະ ແຂວງ ສະຫວັນນະເຂດ ກໍ່ແມ່ນໜຶ່ງໃນບັນດາຕົວເມືອງທີ່ໃຫຍ່ທີ່ສຸດໃນປະເທດ ແລະ ສາມາດໃຫ້ຕົວຢ່າງທີ່ດີ ກ່ຽວກັບຊາວໜຸ່ມໃນເຂດຕົວເມືອງ.
- ແຂວງ ຫຼວງພະບາງ ແລະ ແຂວງ ສະຫວັນນະເຂດ ຕ່າງກໍ່ມີເຂດຊົນນະບົດທີ່ສາມາດສົມທຽບກັນ.
- ແຂວງ ຫຼວງພະບາງ ແລະ ແຂວງ ສະຫວັນນະເຂດ ມີປະຊາກອນທີ່ຢູ່ໃນກຸ່ມຊາວໜຸ່ມໃນອັດຕາສ່ວນທີ່ສູງ.
- ແຂວງ ອັດຕະປື ໄດ້ຮັບຄັດເລືອກຍ້ອນເປັນແຂວງຊົນນະບົດທີ່ມີຄວາມຫຼາກຫຼາຍດ້ານຊົນເຜົ່າ.
- ສາມແຂວງທີ່ຖືກເລືອກລ້ວນແຕ່ມີບັນຫາສະເພາະທີ່ອາດມີຜົນກະທົບຕໍ່ກັບຊາວໜຸ່ມ ເປັນຕົ້ນ ການເຄື່ອນຍ້າຍພາຍໃນ ແລະ ລະຫວ່າງປະເທດ, ການຂາຍບໍລິການທາງເພດ ແລະ ວິຖີການດຳລົງຊີວິດທີ່ມີການປ່ຽນແປງ.

ນະຄອນຫຼວງວຽງຈັນ ບໍ່ໄດ້ຮັບການຄັດເລືອກເປັນໜຶ່ງໃນເຂດສຶກສາຂອງການເກັບກຳຂໍ້ມູນນີ້ໜຶ່ງ ເນື່ອງຈາກວ່າ ຂໍ້ມູນມີສອງກ່ຽວກັບຊາວໜຸ່ມຢູ່ທີ່ນະຄອນຫຼວງວຽງຈັນ ແມ່ນມີຫຼາຍ ແລະ ສາມາດເຂົ້າເຖິງໄດ້.

## 1.5.2 ການເກັບກຳຂໍ້ມູນ ແລະ ການວິໄຈ

ບັນດາຊຸດໂຄງຮ່າງຄຳຖາມ ສຳລັບການສຳພາດຜູ້ໃຫ້ຂໍ້ມູນຫຼັກ ແລະ ການສົນທະນາກຸ່ມໄດ້ຮັບການພັດທະນາ ໂດຍໄດ້ຮັບການປຶກສາຫາລືກັບ ຄະວິຊາການວິໄຈ TWG, UNFPA, ທີ່ປຶກສາພາຍໃນ ແລະ ສາກົນ ແລະ ຄູ່ຮ່ວມພັດທະນາຫຼັກ, ເປັນຕົ້ນ ອົງການ UNICEF, UNESCO ແລະ ILO. ເຄື່ອງມືແບບມີສ່ວນຮ່ວມ ແລະ ເຊັ່ນ: ເຕັກນິກປະຈຳວັນ ແລະ "ໝາກໄມ້ສິບແກ່ນ"[27] ກໍໄດ້ຮັບການກະກຽມ ເພື່ອອຳນວຍຄວາມສະດວກການສົນທະນາທີ່ມີລັກສະນະມີສ່ວນຮ່ວມກັບຊາວໜຸ່ມ, ໂດຍສະເພາະ ກຸ່ມອາຍຸ 10-14 ປີ. ຄຳຖາມ ແລະ ເຄື່ອງມືຕ່າງໆໄດ້ທົດສອບພາກສະໜາມຢູ່ທີ່ ແຂວງ ວຽງຈັນ ພາຍຫຼັງທີ່ໄດ້ດຳເນີນການຝຶກອົບຮົມ, ແລະ ຈາກນັ້ນກໍໄດ້ດັດປັບຕາມຄວາມຈຳເປັນ.

ມີສະມາຊິກໃນຄະນະວິໄຈທັງໝົດ 28 ຄົນ ພ້ອມກັບ ອາສະໝັກຈາກ ສູນກາງຊາວໜຸ່ມ ແລະ ອົງການ Care ສາກົນ ເຂົ້າຮ່ວມການຝຶກອົບຮົມກ່ຽວກັບວິທີການເກັບກຳຂໍ້ມູນ. ການຝຶກອົບຮົມໄດ້ຈັດຂຶ້ນຢູ່ ທ່າລາດ, ແຂວງ ວຽງຈັນ ແລະ ປະກອບດ້ວຍການຝຶກອົບຮົມຫຼັກເປັນເວລາ 5 ວັນກ່ຽວກັບຈຸດປະສົງຂອງການວິໄຈ, ວິທີການດຳເນີນການສົນທະນາກຸ່ມ ແລະ ການສຳພາດຜູ້ໃຫ້ຂໍ້ມູນຫຼັກ ໂດຍນຳໃຊ້ຄຳຖາມແນະນຳ/ເຄື່ອງມືທີ່ໄດ້ກະກຽມ, ການຄຸ້ມຄອງຂໍ້ມູນ ແລະ ຈັນຍາບັນໃນການຄົ້ນຄວ້າ. ພາຍຫຼັງການເຝິກອົບຮົມ, ສອງວັນແມ່ນສຳລັບການທົດສອບແບບສອບຖາມທີ່ພາກສະໜາມ ແລະ ອີກສອງວັນສຳລັບການປ້ອນຂໍ້ມູນ. ພາຍຫຼັງການຝຶກອົບຮົມ, ໄດ້ກຳນົດເອົາ ຜູ້ສຳພາດຈຳນວນ 18 ຄົນ ແລະ ຜູ້ປະສານງານໜຶ່ງຄົນຕໍ່ແຂວງ ຈາກບັນດາສຳມະນາກອນ ແລະ ຫຼັງຈາກນັ້ນ ກໍ່ໄດ້ມີການແບ່ງປັນ ແລະ ກຳນົດຄວາມຮັບຜິດຊອບຂອງທີມງານໃນການເກັບກຳຂໍ້ມູນ.

ໄດ້ສ້າງທັງໝົດ 6 ທີມ ໃນການລົງເກັບກຳຂໍ້ມູນ. ທີມເກັບກຳຂໍ້ມູນເພດຍິງໜຶ່ງທີມ ແລະ ທີມເກັບກຳຂໍ້ມູນເພດຊາຍໜຶ່ງທີມຕໍ່ແຂວງ, ຊຶ່ງແຕ່ລະທີມປະກອບດ້ວຍຜູ້ດຳເນີນການສຳພາດ ຫຼື ຜູ້ນຳພາໜຶ່ງຄົນ ແລະ ຜູ້ບັນທຶກສອງຄົນ. ການເກັບກຳຂໍ້ມູນ ແມ່ນໄດ້ຮັບການຊີ້ນຳ ແລະ ຕິດຕາມໂດຍສະຖາບັນເບີເນັດ.

ວິທີການເກັບກຳຂໍ້ມູນໄດ້ຮັບອະນຸຍາດຈາກຄະນະກຳມະການຈັນຍາບັນແຫ່ງຊາດ ແລະ ຜູ້ເຂົ້າຮ່ວມທັງໝົດໃນການສົນທະນາກຸ່ມ ແລະ ຜູ້ໃຫ້ຂໍ້ມູນຫຼັກໄດ້ຮັບຮູ້ກ່ຽວກັບຈຸດປະສົງຂອງການດຳເນີນການວິໄຈ, ການຮັບປະກັນກ່ຽວກັບການຮັກສາຄວາມລັບ ແລະ ລະບົບທີ່ມີໃນການບໍ່ເປີດເຜີຍເອກະລັກຂໍ້ມູນຂອງພວກເຂົາ, ແຈ້ງໃຫ້ຮູ້ວ່າເຂົາເຈົ້າມີສິດທີ່ຈະຖອນຕົວໄດ້ຕະຫຼອດເວລາຂອງການສົນທະນາ, ແລະ ຂໍໃຫ້ຜູ້ເຂົ້າຮ່ວມໃຫ້ການຍິນຍອມທາງວາຈາ ກ່ອນການເກັບກຳຂໍ້ມູນ. ສຳລັບການສົນທະນາກຸ່ມຂອງເດັກນ້ອຍອາຍຸລະຫວ່າງ 10-14 ປີ, ແມ່ນໄດ້ຮັບການເຫັນພ້ອມ ແລະ ອະນຸຍາດຈາກພໍ່ແມ່ ແລະ ຜູ້ປົກຄອງ.

ຜູ້ເຂົ້າຮ່ວມໃນການສົນທະນາກຸ່ມສະເພາະ ແລະ ການສຳພາດຜູ້ໃຫ້ຂໍ້ມູນຫຼັກ ໄດ້ຮັບຄັດເລືອກໂດຍການສະໜັບສະໜູນຈາກອຳນາດການປົກຄອງບ້ານ ແລະ ເມືອງ, ໂດຍອີງຕາມບັນທັດຖານທີ່ໄດ້ວາງອອກ ຊຶ່ງກວມເອົາ ອາຍຸ, ເພດ, ກຸ່ມຊົນເຜົ່າ, ຊາວໜຸ່ມທີ່ເຂົ້າໂຮງຮຽນ ແລະ ບໍ່ໄດ້ເຂົ້າໂຮງຮຽນ, ຜູ້ທີ່ແຕ່ງງານ ແລະ ຍັງບໍ່ທັນໄດ້ແຕ່ງງານ, ແລະ ຜູ້ທີ່ເປັນສະມາຊິກ ແລະ ບໍ່ເປັນສະມາຊິກຊາວໜຸ່ມ. ການສຳພາດ ແລະການສົນທະນາໄດ້ຮັບການຈັດຕັ້ງປະຕິບັດເປັນພາສາທ້ອງຖິ່ນ, ແລະ ນຳໃຊ້ຜູ້ແປພາສາ ໃນກໍລະນີມີຄວາມຈຳເປັນ.

ທຸກການສົນທະນາກຸ່ມ ແລະ ການສຳພາດຜູ້ໃຫ້ຂໍ້ມູນຫຼັກ ແມ່ນໄດ້ນຳໃຊ້ທັງການອັດສຽງ ຫຼື ຈົດບັນທຶກລະອຽດໂດຍຜູ້ເກັບກຳຂໍ້ມູນ. ຫຼັງຈາກນັ້ນທີມງານໄດ້ສັງລວມເອົາຂໍ້ມູນທີ່ໄດ້ບັນທຶກໃນແຕ່ລະວັນເພື່ອຮັບປະກັນວ່າທຸກຂໍ້ມູນສາມາດເກັບກຳໄດ້, ໃນເວລາຄວາມຈຳກ່ຽວກັບການສົນທະນາຍັງຄົງສົດຢູ່. ຕໍ່ມາຂໍ້ມູນທີ່ໄດ້ບັນທຶກໄວ້ເພື່ອອຳນວຍຄວາມສະດວກໃນການເກັບຮັກສາ ແລະ ການວິເຄາະ. ພະນັກງານເກັບກຳຂໍ້ມູນໄດ້ສະຫຼຸບນຳກັນໃນແຕ່ລະວັນ ເພື່ອແກ້ບັນຫາທີ່ອາດເກີດຂຶ້ນ ຫຼື ຕ້ອງການປັບປຸງ, ສະນັ້ນ, ຈຶ່ງຮັບປະກັນວ່າເຂົາເຈົ້າສາມາດເກັບກຳຂໍ້ມູນທີ່ມີຄວາມໝາຍຄົບຖ້ວນຈາກຜູ້ໃຫ້ຂໍ້ມູນໄດ້.

ຫຼັງຈາກສຳເລັດການເກັບກຳຂໍ້ມູນ, ສະມາຊິກໃນທີມງານໄດ້ມາເຂົ້າຮ່ວມກອງປະຊຸມສອງມື້ເພື່ອວິເຄາະຂໍ້ມູນ ເພື່ອຮຽນຮູ້ວິທີວິໄຈຂໍ້ມູນດ້ານຄຸນນະພາບ. ຕໍ່ມາເຂົາເຈົ້າໄດ້ວິເຄາະຂໍ້ມູນເປັນເວລາຫຼາຍກວ່າ 10 ວັນ ພາຍໃຕ້ການຊີ້ນຳຂອງພະນັກງານ ຈາກສະຖາບັນເບີເນັດ. ເນື້ອໃນຂອງການສົນທະນາກຸ່ມໄດ້ຮັບການວິເຄາະໂດຍຜ່ານການຄັດຈ້ອນເຂົ້າໃນແຕ່ລະຫົວຂໍ້ໃຫຍ່ຂອງການວິໄຈ, ເຊິ່ງຂົງເຂດຫຼັກ ໄດ້ແກ່ ສາທາ, ສຶກສາ, ການມີວຽກ ເຮັດງານທຳ,

[27] Jarakayan, R. (2002): *The Ten Seed Technique.*

Intro

ການປົກປ້ອງ ແລະ ການມີສ່ວນຮ່ວມ. ຫົວຂໍ້ ແລະ ຫົວຂໍ້ຍ່ອຍໄດ້ຖືກກຳນົດຢູ່ໃນຕາຕະລາງບັນທຶກຂໍ້ມູນຂອງການສົນທະນາກຸ່ມເປົ້າໝາຍ ໂດຍນັກວິໄຈຫຼັກ 6 ທ່ານ ທີ່ມາຈາກ ແຕ່ລະທີມງານເກັບກຳຂໍ້ມູນ, ເຊິ່ງເປັນຜູ້ທີ່ໄດ້ຕິດຕາມ, ໂດຍອີງຕາມຄວາມແຕກຕ່າງທາງດ້ານກຸ່ມອາຍຸຕ່າງໆ ແລະ ມີການສົມທຽບຄຳຕອບຂອງເພດຍິງ ແລະ ເພດຊາຍ. ຂໍ້ມູນດິບໄດ້ດຶງອອກຈາກພາສາລາວ ແລະ ແປປາກເປົ່າເປັນການໃສ່ລະຫັດເຂົ້າໃນໂປຼແກມ Excel ເປັນພາສາອັງກິດ. ເມື່ອຢູ່ໃນແບບຂອງ Excel ແລ້ວ, ໄດ້ສະຫຼຸບສິ່ງທີ່ຄ້າຍຄືກັນຢູ່ໃນກຸ່ມຕ່າງໆ ແລະ ຄຳອະທິບາຍດ້ານສະພາບໂດຍລວມໄດ້ຮັບການກະກຽມ ສຳລັບແຕ່ລະກຸ່ມຍ່ອຍຫຼັກ, ຈັດຕາມແຂວງ.

## 1.6 ສິ່ງທ້າທາຍ ແລະ ຂໍ້ຈຳກັດຂອງການວິໄຈ

ໃນໄລຍະຂອງການດຳເນີນການວິໄຈ ມີຫລາຍສິ່ງທ້າທາຍ ແລະ ຂໍ້ຈຳກັດ ດັ່ງນີ້:

### ສິ່ງທ້າທາຍ

- ມີຄວາມຫຍຸ້ງຍາກໃນການປະກອບສ່ວນຈາກທຸກກະຊວງ ທີ່ມີຄວາມຮັບຜິດຊອບຕໍ່ກັບ ຊາວໜຸ່ມ ແລະ ເຍົາວະຊົນ ເພາະມີພັນທະ ແລະ ບູລິມະສິດອື່ນໆ. ມັນບໍ່ງ່າຍເພື່ອຈະປະຕິບັດການວິໄຈໃຫ້ສອດຄ່ອງກັບໄລຍະເວລາ ເນື່ອງຈາກວ່າ ໜຶ່ງໃນຈຸດປະສົງຂອງການວິໄຈ ແມ່ນເພື່ອສ້າງຂີດຄວາມສາມາດໃຫ້ແກ່ພະນັກງານໃນສູນກາງຊາວໜຸ່ມ, ບວກກັບການປ່ຽນແປງຂອງພະນັກງານໃນທຸກອົງການຈັດຕັ້ງຕ່າງໆທີ່ມີສ່ວນຮ່ວມໃນການວິໄຈ: ດ້ວຍເຫດນີ້ກຳນົດຈະກຳຕ່າງໆຈຶ່ງໃຊ້ເວລາເກີນທີ່ໄດ້ກຳນົດໄວ້.
- ຄວາມຈຳເປັນທີ່ໃຫ້ມີການແປພາສາຢ່າງປົກກະຕິລະຫວ່າງ ພາສາໃນການເຮັດວຽກ ສຳລັບການວິໄຈ (ພາສາລາວ ແລະ ພາສາອັງກິດ) ແລະ ການຄົ້ນພົບຄວາມດຸນດ່ຽງລະຫວ່າງສິ່ງທີ່ຕ້ອງການ ແລະ ສິ່ງທີ່ເປັນໄປໄດ້ໃນຕົວຈິງ, ໃນການຄັດເລືອກຜູ້ເຂົ້າຮ່ວມໃນການສົນທະນາກຸ່ມ ແລະ ການສຳພາດຜູ້ໃຫ້ຂໍ້ມູນຫຼັກ, ຊຶ່ງອາດກໍ່ໃຫ້ເກີດຄວາມລຳອຽງ ແລະ ຄວາມບໍ່ຊັດເຈນ. ການສົນທະນາກຸ່ມໄດ້ດຳເນີນໄປດ້ວຍການອັດສຽງເປັນພາສາລາວ, ແລະ ການວິໄຈເບື້ອງຕົ້ນເປັນພາສາລາວ. ຈາກນັ້ນ ມີການແປເປັນພາສາອັງກິດ ແລະ ດຳເນີນການວິໄຈ ແລະ ຂຽນບົດລາຍງານເພີ່ມເຕີມ, ເຊິ່ງຂັ້ນຕົນດັ່ງກ່າວນີ້ອາດເຮັດໃຫ້ມີການ ຕົກເຮ່ຍກ່ຽວກັບລາຍລະອຽດ, ຄວາມກະຈ່າງແຈ້ງ ແລະ ຄວາມຖືກຕ້ອງໃນບາງລາຍລະອຽດຂອງບົດລາຍງານສະບັບສຸດທ້າຍ.
- ສຳລັບຂະບວນການວິໄຈຂໍ້ມູນມືສອງ, ມີຊັກຊ້າໃນການເກັບກຳຂໍ້ມູນ, ແລະ ເຖິງແມ່ນວ່າຂັ້ນຕອນສຳເລັດແລ້ວ ແຕ່ຍັງມີຄວາມຫຍຸ້ງຍາກທີ່ຈະຮູ້ວ່າຂໍ້ມູນທີ່ເກັບກຳມານີ້ທີ່ຄົບຊຸດແລ້ວບໍ່.[28] ນອກຈາກນັ້ນ, ບາງບົດລາຍງານທີ່ໄດ້ຮັບ ບໍ່ໄດ້ຖືກວິໄຈໃນຕາຕະລາງສົມທຽບ ເນື່ອງຈາກວ່າບໍ່ມີການແຍກຂໍ້ມູນຕາມອາຍຸທີ່ເໝາະສົມ (ເຖິງແມ່ນວ່າ ກຸ່ມອາຍຸ 10-24 ປີ ແມ່ນສ່ວນໜຶ່ງ ຂອງປະຊາກອນລວມ).

### ຂໍ້ຈຳກັດ

- ມີຂໍ້ຈຳກັດຫຼາຍຢ່າງຕໍ່ກັບການເກັບກຳຂໍ້ມູນມືໜຶ່ງ ແລະ ການວິໄຈຂໍ້ມູນ, ເຊິ່ງສັງລວມໃນເອກະສານ ຊ້ອນທ້າຍ 9. ເຖິງແມ່ນໄດ້ກຳນົດບັນທັດຖານຕ່າງໆ ໃນການຄັດເລືອກຜູ້ເຂົ້າຮ່ວມໃນການສົນທະນາກຸ່ມ ແລະ ການສຳພາດຜູ້ໃຫ້ຂໍ້ມູນຫຼັກ, ແຕ່ບາງຄັ້ງການຄັດເລືອກຜູ້ເຂົ້າຮ່ວມ ແມ່ນອີງໃສ່ຄົນທີ່ມີໜ້າຢູ່ໃນເວລານັ້ນ. ນອກນັ້ນ, ຈຳນວນຂໍ້ມູນທັງໝົດທີ່ໄດ້ເກັບກຳ, ຄຳຄິດເຫັນຂອງນັກວິໄຈຫຼາຍຄົນທີ່ ແຕກຕ່າງກັນ, ເຊິ່ງອາດຈະເກີດໃຫ້ມີຄວາມລຳອຽງຕໍ່ກັບການຕີຄວາມໝາຍສິ່ງທີ່ຄົ້ນພົບ.
- ໂດຍລວມແລ້ວ, ຂະບວນການວິເຄາະຂໍ້ມູນມືສອງໄດ້ຄົ້ນພົບຫຼາຍຂໍ້ມູນທີ່ພົວພັນກັບຄົນໜຸ່ມ ຢູ່ ສປປ ລາວ. ໂດຍສະເພາະ, ໄດ້ພົບເຫັນຂໍ້ມູນຢ່າງຫຼວງຫຼາຍກ່ຽວກັບ: ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ; ການສຶກສາ; ການມີວຽກເຮັດງານທຳ; ແລະ ການເຄື່ອນຍ້າຍພາຍໃນປະເທດ. ເຖິງຢ່າງໃດກໍ່ຕາມ, ອີງຕາມທີ່ຕັ້ງພູມສັນຖານ, ຂໍ້ມູນທີ່ມີຢູ່ຈຳນວນຫຼາຍ ແມ່ນສຸມຢູ່ແຕ່ນະຄອນຫຼວງວຽງຈັນ. ໃນທາງກົງກັນຂ້າມ, ສຳລັບຫົວຂໍ້ຕ່າງໆ ເປັນຕົ້ນການມີສ່ວນຮ່ວມ ມີຂໍ້ມູນພຽງເລັກນ້ອຍເທົ່ານັ້ນ, ສະນັ້ນ ຈຶ່ງມີຄວາມຫຍຸ້ງຍາກໃນການຂະຫຍາຍຂອບເຂດການວິໄຈສຳລັບຫົວຂໍ້ນີ້. ບັນຫາຕ່າງໆທີ່ປະກົດເຫັນວ່າບໍ່ໄດ້ມີການເວົ້າເຖິງຫຼາຍໃນບັນດາຂໍ້ມູນຕ່າງໆທີ່ຄົ້ນພົບແມ່ນ: ບັນຫາດ້ານສຸຂະພາບດ້ານອື່ນໆທີ່ໜ້າເປັນຫ່ວງສຳລັບຄົນໜຸ່ມ, ເປັນຕົ້ນ ອຸບັດເຫດ, ການນຳໃຊ້ສານເສບຕິດ ແລະ ສຸຂະພາບຈິດ; ການປົກປ້ອງ ແລະ ຄວາມສ່ຽງ, ເຊັ່ນວ່າ ການໃຊ້ຄວາມຮຸນແຮງດ້ານບົດບາດຍິງ-ຊາຍ ແລະ ການ ປົກປ້ອງເດັກ; ແລະ ການມີສ່ວນຮ່ວມຂອງຊາວໜຸ່ມ. ພ້ອມກັນນັ້ນ ກໍຍັງສັງເກດເຫັນວ່າຂໍ້ມູນຕ່າງໆທີ່ຄົ້ນພົບ ສ່ວນຫຼາຍແມ່ນກ່ຽວກັບບັນຫາຕ່າງໆທີ່ຊາວໜຸ່ມປະເຊີນ, ແທນທີ່ຈະແມ່ນກ່ຽວກັບຄຸນຄ່າ ແລະ ຄວາມສາມາດທີ່ເຂົາເຈົ້າມີ ທີ່ສາມາດປະກອບສ່ວນໃຫ້ແກ່ຄອບຄົວ ແລະ ຊຸມຊົນຂອງພວກເຂົາ.
- ໂດຍລວມແລ້ວ, ການສຶກສາທີ່ມີຢູ່ ບໍ່ມີມາດຕະຖານດຽວກັນ ລວມທັງ ການແຍກກຸ່ມອາຍຸ, ຂອບເຂດ ພູມສັນຖານ, ປີການຈັດພິມ ແລະ ວິທີການວິໄຈ. ສະນັ້ນ, ຂໍ້ມູນທີ່ໄດ້ສັງລວມຢູ່ ໃນການວິເຄາະຂໍ້ມູນ ມືສອງ ດັ່ງກ່າວກໍ່ບໍ່ງ່າຍສະເໝີໄປທີ່ຈະສົມທຽບ ຫຼື ສະຫຼຸບໄດ້. ເຖິງຢ່າງໃດກໍ່ຕາມ, ເທົ່າທີ່ສາມາດດຳເນີນໄດ້, ພາກນີ້ຂອງການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ສະແດງໃຫ້ ເຫັນພາບລວມ ແລະ ການສັງລວມເອົາຂໍ້ມູນມືສອງທີ່ມີຢູ່ທີ່ກ່ຽວກັບ ຊາວໜຸ່ມແລະເຍົາວະຊົນ ໃນ ສປປ ລາວ.

[28] ເນື່ອງຈາກວ່າ ຫຼາຍບົດລາຍງານທີ່ກ່ຽວຂ້ອງ ໃນ ສປປ ລາວ ບໍ່ໄດ້ຮັບການຈັດພິມ, ຫຼື ບໍ່ສາມາດເຂົ້າເຖິງໄດ້ງ່າຍດາຍ, ການວິໄຈຂໍ້ມູນມືສອງ ຕ້ອງອີງໃສ່ສະມາຊິກຂອງຄະນະຊີ້ນຳ ແລະ ຄະນະວິຊາການ ເພື່ອຊ່ວຍໃນການກຳນົດ ແລະ ສະໜອງບົດລາຍງານໃຫ້.

# II ກອບວຽກໃນລະດັບຊາດ ທີ່ສະໜັບສະໜູນຄົນຮຸ້ນໜຸ່ມ



## 2.1 ກອບນິຕິກຳແຫ່ງຊາດທີ່ສະໜັບສະໜູນຊາວໜຸ່ມ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP), 2011-2015, ໄດ້ວາງບັນດາມາດຕະການ ເພື່ອບັນລຸເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ ພາຍໃນປີ 2015, ເຊິ່ງການພັດທະນາຊັບພະຍາກອນມະນຸດ ແມ່ນໜຶ່ງໃນບູລິມະສິດຫຼັກ.

ເຖິງແມ່ນວ່າ ສູນກາງຊາວໜຸ່ມ ໄດ້ຖືກໝອບໝາຍໃຫ້ຮັບຜິດຊອບໃນການສ້າງນະໂຍບາຍ/ຍຸດທະສາດ ກ່ຽວກັບ ຄົນຮຸ້ນໜຸ່ມ, ແຕ່ວ່າ ສປປ ລາວ ຍັງບໍ່ມີນະໂຍບາຍ ຫຼື ຍຸດທະສາດແຫ່ງຊາດສະເພາະສຳລັບຄົນຮຸ້ນໜຸ່ມ. ການທົບທວນບັນດານະໂຍບາຍ ແລະ ນິຕິກຳທີ່ມີຢູ່ ໄດ້ປະເມີນບັນດາກົດໝາຍ ຂອງ ສປປ ລາວ ສະບັບປັບປຸງ ແລະ ສະບັບທີ່ໄດ້ປະກາດໃຊ້ ເພື່ອກຳນົດວ່າພາກໃດຂອງກົດໝາຍເຫຼົ່ານັ້ນ ມີຄວາມກ່ຽວຂ້ອງກັບຜົນປະໂຫຍດຂອງຄົນຮຸ້ນໜຸ່ມ ອາຍຸລະຫວ່າງ 10-24 ປີ. ມີຫຼາຍນະໂຍບາຍ, ຍຸດທະສາດ ແລະ ແຜນການແຫ່ງຊາດ ເຊິ່ງມີຄວາມກ່ຽວຂ້ອງ ຫຼື ເນັ້ນໃສ່ບາງຈຸດ ແລະ ໃຫ້ທິດທາງສຳລັບການພັດທະນາຄົນຮຸ້ນໜຸ່ມ, ເຖິງແມ່ນວ່າ ບໍ່ໄດ້ກຳນົດຢ່າງສະເພາະເຈາະຈົງຕໍ່ກັບຄວາມຕ້ອງການ ແລະ ມີປະເດັນສະເພາະຕໍ່ຄົນຮຸ້ນໜຸ່ມກໍຕາມ, ເປັນຕົ້ນແຜນຍຸດທະສາດດ້ານໄພພິບັດ, ນະໂຍບາຍແຫ່ງຊາດດ້ານໂພສະນາການ ແລະ ຍຸດທະສາດສຳລັບການພັດທະນາທັກສະ ແລະ ການຈ້າງງານ ໃນ ສປປ ລາວ.

ເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບແນວທາງນະໂຍບາຍຂອງພັກປະຊາຊົນປະຕິວັດລາວ ແລະ ແຜນງານຂອງບັນດາກະຊວງ, ມີຄວາມສຳຄັນທີ່ຕ້ອງເຂົ້າໃຈ 2 ອົງປະກອບຫຼັກໃນ ສປປ ລາວ ຄື: ມະຕິຕົກລົງ *ສີ່ບຸກທະລຸ* ຂອງ ກອງປະຊຸມໃຫຍ່ຄັ້ງທີ່ 9 ຂອງ ພັກທີ່ເບື່ອງທາງການພັດທະນາ ຂອງ ສປປ ລາວ, ເຊິ່ງໄດ້ຜັນຂະຫຍາຍ ໂດຍໄດ້ຮັບການສະໜັບສະໜູນຈາກການຈັດຕັ້ງປະຕິບັດນະໂຍບາຍ *ສາມສ້າງ*.

ເພື່ອບັນລຸເປົ້າໝາຍແຫ່ງຊາດທີ່ໄດ້ກຳນົດໄວ້, ລັດຖະບານໄດ້ພັດທະນາ ສີ່ເປົ້າໝາຍເພື່ອໃຫ້ບຸກທະລຸ ດັ່ງລຸ່ມນີ້[29]

1. ບຸກທະລຸແນວຄວາມຄິດ ໂດຍການປົດປ່ອຍ ແລະ ແກ້ໄຂແນວຄິດອະນຸລັກທີ່ບໍ່ມີການປ່ຽນແປງ, ຄວາມບໍ່ລະມັດລະວັງ ແລະ ຄວາມບໍ່ເປັນທຳ;
2. ບຸກທະລຸດ້ານການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະ ການພັດທະນາ ແລະ ສ້າງຂີດຄວາມສາມາດຂອງພະນັກງານລັດຖະກອນໃນຫຼາຍຂົງເຂດ ອີງຕາມສະພາບຄວາມເປັນຈິງ;
3. ບຸກທະລຸດ້ານການແກ້ໄຂລະບົບການຄຸ້ມຄອງບໍລິຫານທີ່ເປັນຕົວຢັບຢັ້ງການຜະລິດເປັນສິນຄ້າ (ຜົນຜະລິດທີ່ສ້າງຂຶ້ນເພື່ອຈຸດປະສົງທາງການຄ້າ) ແລະ ການສະໜອງການບໍລິການ;
4. ບຸກທະລຸດ້ານການລົບລ້າງຄວາມທຸກຍາກຂອງປະຊາຊົນ, ໂດຍການຊອກຫາແຫຼ່ງທຶນ ແລະ ນະໂຍບາຍສິ່ງເສີມພິເສດ, ສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມ ໂດຍການກຳນົດສິ່ງດັ່ງກ່າວເປັນບຸລິມະສິດ ໃນການພັດທະນາເພື່ອໃຫ້ເປັນຕ່ອງໂສ້ໃນຂົງເຂດການພັດທະນາອື່ນ.

ເປົ້າໝາຍ ສີ່ບຸກທະລຸເຫຼົ່ານີ້ ຈຳເປັນຕ້ອງໄດ້ເຊື່ອມສານເຂົ້າກັນ ແລະ ເພື່ອບັນລຸເປົ້າໝາຍດັ່ງກ່າວນີ້, ລັດຖະບານໄດ້ກຳນົດທິດທາງດ້ານນະໂຍບາຍ, ໜຶ່ງໃນນັ້ນ ກໍ່ແມ່ນວຽກງານ ສາມສ້າງ:

1. ສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ;
2. ສ້າງເມືອງໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ;
3. ສ້າງບ້ານໃຫ້ເປັນຫົວໜ່ວຍພັດທະນາ.

ເຖິງແມ່ນວ່າ ບໍ່ໄດ້ກ່າວສະເພາະເຈາະຈົງເຖິງຊາວໜຸ່ມ ແລະ ເຍົາວະຊົນ, ແຕ່ກໍ່ເປັນທິດແນະນຳທີ່ສຳຄັນຕໍ່ກັບວຽກງານການພັດທະນາຊາວໜຸ່ມ ແລະ ເຍົາວະຊົນ. ຕົວຢ່າງ, ເພື່ອບັນລຸໄດ້ການລົບລ້າງຄວາມທຸກຍາກ ຈະຕ້ອງອາໃສກຳລັງແຮງງານເປັນຫຼັກ, ເຊິ່ງຢູ່ ສປປ ລາວ ປະຊາກອນສ່ວນໃຫຍ່ແມ່ນຊາວໜຸ່ມ.

ມີບາງກົດໝາຍທີ່ຮັບຮອງໄດ້ ໄດ້ກ່າວເຖິງການຕອບສະໜອງຄວາມຕ້ອງການຂອງຄົນຮຸ້ນໜຸ່ມໂດຍກົງ, ຕົວຢ່າງ ກົດໝາຍວ່າດ້ວຍການປົກປ້ອງສິດທິຂອງເດັກນ້ອຍ (2008), ຊຶ່ງຄຳວ່າ ເດັກ ໄດ້ໃຫ້ນິຍາມຈົນເຖິງອາຍຸ 18 ປີ. ນອກຈາກນັ້ນ ຍັງມີກົດໝາຍວ່າດ້ວຍການສຶກສາ (2007) ເຊິ່ງເປົ້າໝາຍສ່ວນໃຫຍ່ ແມ່ນໄດ້ເລັ່ງໃສ່ຄົນຮຸ້ນໜຸ່ມ.

[29] ສີ່ບຸກທະລຸ ແມ່ນແປຈາກພາສາລາວເປັນອັງກິດ ສຳລັບການວິໄຈນີ້ ແລ້ວແປກັບມາເປັນພາສາລາວອີກຄັ້ງ.

ຢູ່ໃນກົດໝາຍອື່ນໆ, ຕົວຢ່າງ ກົດໝາຍ ຢາສູບ (2009), ຈຸດປະສົງຕົ້ນຕໍແມ່ນປະຊາກອນທົ່ວໄປ ເຖິງແມ່ນມີບາງລັກສະນະພິເສດຂອງກົດໝາຍໄດ້ແນໃສ່ຄົນຮຸ່ນໜຸ່ມ ແລະ ຍັງມີບົດບັນຍັດຫຼາຍສະບັບທີ່ເວົ້າເຖິງຜົນກະທົບຕໍ່ຄົນຮຸ່ນໜຸ່ມໂດຍທາງອ້ອມ, ຕົວຢ່າງ ເຂດທີ່ອະນຸຍາດໃຫ້ສູບຢາໄດ້.

ໃນກົດໝາຍຈຳນວນກວ່າ 93 ສະບັບ ໃນ ສປປ ລາວ, ບໍ່ມີສະບັບໃດທີ່ກ່າວໂດຍກົງຕໍ່ກັບຄວາມຕ້ອງການຂອງຊາວໜຸ່ມ. ໃນກົດໝາຍ 17 ສະບັບທີ່ມີເນື້ອໃນທີ່ພົວພັນກັບຊາວໜຸ່ມ ແລະ ເດັກນ້ອຍ (ເບິ່ງຕາຕະລາງ 1) ມີຈຸດປະສົງເພື່ອປົກປ້ອງພວກເຂົາ ແຕ່ໃນຕົວຈິງ ກົດໝາຍເຫລົ່ານີ້ ມີຜົນໃນຂອບເຂດຈຳກັດ ຍ້ອນຂາດການຈັດຕັ້ງປະຕິບັດທີ່ມີປະສິດຕິຜົນ ແລະ ປະຊາຊົນທົ່ວໄປຍັງບໍ່ທັນຮັບຮູ້ວ່າມີກົດໝາຍດັ່ງກ່າວ.

**ຕາຕະລາງ 1: ບັນດາກົດໝາຍທີ່ມີຈຸດສຸມ ກ່ຽວກັບ ໄວໜຸ່ມ**

| | |
|---|---|
| ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ) | 2012 |
| ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ | 2004 |
| ກົດໝາຍວ່າດ້ວຍຢາ [ລວມທັງ ກົດໝາຍວ່າດ້ວຍຢາເສບຕິດ] | 2007 |
| ກົດໝາຍວ່າດ້ວຍການສຶກສາ | 2007 |
| ກົດໝາຍວ່າດ້ວຍການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ | 2010 |
| ກົດໝາຍຄອບຄົວ | 2008 |
| ກົດໝາຍວ່າດ້ວຍການຮັກສາສຸຂະພາບ | 2005 |
| ກົດໝາຍວ່າດ້ວຍການປ້ອງກັນ HIV/AIDS | 2011 |
| ກົດໝາຍແຮງງານ (ສະບັບປັບປຸງ) | 2007 |
| ກົດໝາຍວ່າດ້ວຍຄະນະຊາວໜຸ່ມ ປປລ | 2009 |
| ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ | 2004 |
| ກົດໝາຍວ່າດ້ວຍການສົນຈອນທາງຖະໜົນ | 2000 |
| ກົດໝາຍວ່າດ້ວຍປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ | 1995 |
| ກົດໝາຍວ່າດ້ວຍການປົກປ້ອງ ສິດທິເດັກ | 2007 |
| ກົດໝາຍວ່າດ້ວຍສັນຊາດ | 2004 |
| ກົດໝາຍອາຍາ (ສະບັບປັບປຸງ) | 2005 |
| ກົດໝາຍວ່າດ້ວຍ ຢາສູບ | 2009 |

ເຊັ່ນດຽວກັນ ນະໂຍບາຍ ແລະ ແຜນການ ບໍ່ໄດ້ກຳນົດສະເພາະ ແລະ ຈະແຈ້ງ ກ່ຽວກັບ ຄົນຮຸ້ນໜຸ່ມ ແຕ່ລວມພວກເຂົາເຂົ້າໃນກຸ່ມປະຊາກອນທົ່ວໄປ, ເຊິ່ງຄວາມຕ້ອງການທີ່ສະເພາະ ແລະ ທັດສະນະ ຂອງເຂົາເຈົ້າບໍ່ຄ່ອຍໄດ້ຖືກຄຳນຶ່ງເຖິງວ່າມີຄວາມແຕກຕ່າງຈາກກຸ່ມອາຍຸອື່ນໆ. ສິ່ງດັ່ງກ່າວມີຜົນສະທ້ອນຫຼາຍຢ່າງຕໍ່ກັບສຸຂະພາບ, ການພັດທະນາ ແລະ ການປົກປ້ອງຂອງເຂົາເຈົ້າ ແລະ ການຂາດຍຸດທະສາດສະເພາະ ສຳລັບຊາວໜຸ່ມ ກ່ຽວກັບການຈ້າງງານ ອາດມີຜົນກະທົບໃນທາງລົບຕໍ່ຄວາມສາມາດຂອງ ສປປ ລາວ ໃນການແຂ່ງຂັນກັບບັນດາປະເທດໃກ້ຄຽງ.

ກະຊວງ ສຶກສາ ແລະ ກິລາ ເຊິ່ງເປັນຫຼັກໃນການບັນລຸພັນທະຂອງລັດຖະບານ ຈັດຕັ້ງປະຕິບັດ *ແຜນດຳເນີນງານ ແຫ່ງຊາດສຳລັບແຜນງານການສຶກສາສຳລັບໝົດທຸກຄົນ (2003-2015)* ໂດຍເນັ້ນໃສ່ສາມໜ້າວຽກຕົ້ນຕໍ ປະກອບດ້ວຍການເຂົ້າເຖິງການສຶກສາທີ່ເທົ່າທຽມກັນ, ປັບປຸງຄຸນະພາບ ແລະ ຄວາມກ່ຽວຂ້ອງ ແລະ ການຄຸ້ມຄອງການສຶກສາ. ເພື່ອບັນລຸເປົ້າໝາຍໃນການເພີ່ມຄວາມເທົ່າທຽມກັນ ໃນການເຂົ້າເຖິງການສຶກສາຊັ້ນມັດທະຍົມຕອນຕົ້ນ, ມີຄວາມຈຳເປັນທີ່ຕ້ອງສຸມໃສ່ ການເພີ່ມການເຂົ້າຮຽນຂອງເດັກຍິງໃນທຸກລະດັບຂອງຊັ້ນຮຽນ.

ນອກນັ້ນ, ໃນລະດັບສາກົນ ສປປ ລາວ ໄດ້ຮັບຮອງ ແລະ ຈັດຕັ້ງປະຕິບັດສົນທິສັນຍາ, ຂໍ້ຕົກລົງສາກົນ ແລະ ຂໍ້ຕົກລົງສອງຝ່າຍ ແລະ ບົດບັນທຶກຄວາມເຂົ້າໃຈ ທີ່ກ່ຽວກັບບັນຫາສະເພາະໃດໜຶ່ງທີ່ມີຜົນຕໍ່ກັບຊາວໜຸ່ມ, ເຊິ່ງປະກອບໄປດ້ວຍແຜນດຳເນີນງານ ຂອງກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ (ICPD PoA), ສົນທິສັນຍາວ່າດ້ວຍສິດທິເດັກ (CRC), ສົນທິສັນຍາສາກົນ ວ່າດ້ວຍການລຶບລ້າງທຸກຮູບແບບຂອງການຈຳແນກຕໍ່ແມ່ຍິງ (CEDAW), ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ ແລະ ບັນດາຂໍ້ຕົກລົງພື້ນຖານຂອງ ອົງການແຮງງານສາກົນ, ແລະ ບົດບັນທຶກຄວາມຊົງຈຳ (MoU) ທີ່ກ່ຽວຂ້ອງກັບການຕ້ານການຄ້າມະນຸດ ແລະ ການຄວບຄຸມຢາເສບຕິດກັບປະເທດໃກ້ຄຽງ. ຂໍ້ຕົກລົງ ແລະ ສົນທິສັນຍາເຫຼົ່ານີ້ ໄດ້ຮັບການຜັນຂະຫຍາຍມາເປັນບັນດານະໂຍບາຍ ລວມທັງ ນະໂຍບາຍ ສຸຂະພາບຈະເລີນພັນ (2005), ນະໂຍບາຍແຫ່ງຊາດກ່ຽວກັບ ປະຊາກອນ ແລະ ການພັດທະນາ (2006), ຍຸດທະສາດແຫ່ງຊາດວ່າດ້ວຍຄວາມກ້າວໜ້າຂອງແມ່ຍິງ (2011-2015), ແລະ ນະໂຍບາຍ, ຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ (2011-2015), ນະໂຍບາຍແຫ່ງຊາດ ແລະ ແຜນດຳເນີນງານກ່ຽວກັບການຄວບຄຸມ ແລະ ປ້ອງກັນ HIV/AIDS/STI ແລະ ອື່ນໆ.

## 2.2 ແຜນງານທີ່ສະໜັບສະໜູນໂດຍຜູ້ໃຫ້ທຶນ ແລະ ລັດຖະບານ ສຳລັບຊາວໜຸ່ມ

ການສັງລວມແຜນງານແຫ່ງຊາດທີ່ມີຢູ່ ກ່ຽວກັບກິດຈະກຳສົ່ງເສີມ ແລະ ປົກປ້ອງຊາວໜຸ່ມ ມີຄວາມສຳຄັນຢ່າງຍິ່ງ ສຳລັບການວາງແຜນນະໂຍບາຍ ແລະ ການຈັດຕັ້ງປະຕິບັດ.

ໃນການວິໄຈນີ້, ໄດ້ກຳນົດທັງໝົດ 48 ແຜນງານ, ໃນນັ້ນ ເຫັນວ່າ 33 ແຜນງານຖືກເງື່ອນໄຂທີ່ວາງອອກ ແລະ ສາມາດນຳໃຊ້ເຂົ້າໃນການວິໄຈ. ສ່ວນ 15 ແຜນງານທີ່ເຫຼືອທີ່ໄດ້ຮັບຈາກອົງການຈັດຕັ້ງຕ່າງໆ ຫຼື ຄົ້ນພົບທາງ online ແຕ່ບໍ່ໄດ້ນຳໃຊ້ໃນການວິໄຈ ເນື່ອງຈາກ: ຈັດຕັ້ງປະຕິບັດໃນຂອບເຂດຈາກັດ (ຈຳນວນ 1 ແຜນງານ), ຈຳນວນຜູ້ໄດ້ຮັບຜົນປະໂຫຍດທີ່ຈຳກັດ (ຈຳນວນ 3 ແຜນງານ), ບໍ່ໄດ້ເນັ້ນໃສ່ຄົນໜຸ່ມ ໃນກຸ່ມອາຍຸ 10-24 ປີ (ຈຳນວນ 6 ແຜນງານ), ຂໍ້ມູນທີ່ມີຢູ່ບໍ່ພຽງພໍ (ຈຳນວນ 3 ແຜນງານ), ຫຼື ບໍ່ແມ່ນແຜນງານ (ແມ່ນການຄົ້ນຄ້ວາ ຫຼື ນະໂຍບາຍພື້ນຖານ) (ຈຳນວນ 2 ແຜນງານ) (ເບິ່ງເອກະສານຊ້ອນທ້າຍ 4, ຕາຕະລາງ 1 ແລະ 2  ສຳລັບລາຍລະອຽດ).

ອົງການຈັດຕັ້ງ 31 ແຫ່ງ ໄດ້ມີສ່ວນຮ່ວມກັບແຜນງານທີ່ມີເງື່ອນໄຂທີ່ໄດ້ກຳນົດໄວ້, ໃນນັ້ນຫຼາຍກວ່າ 1 ອົງການໄດ້ປະກອບສ່ວນຫຼາຍກວ່າໜຶ່ງແຜນງານ (ຕາຕະລາງ 2). ແຜນງານທີ່ມີເງື່ອນໄຂສ່ວນໃຫຍ່ (88%) ເປັນແຜນງານກຳລັງຈັດຕັ້ງປະຕິບັດໃນປັດຈຸບັນ, ໃນຂະນະທີ່ 4 ແຜນງານ (13%) ໄດ້ຈັດຕັ້ງປະຕິບັດສຳເລັດໄປແລ້ວໃນໄລຍະ 5 ປີຜ່ານມາ. ບໍ່ໄດ້ກຳນົດກ່ຽວກັບ ແຜນງານໃນອະນາຄົດ. ທັງໝົດ 7 ແຜນງານ (21%) ແມ່ນຈັດຕັ້ງປະຕິບັດໃນລະດັບຊາດ. ແຜນງານທີ່ເຫຼືອກວມເອົາ ສີ່ແຂວງ ໃນຈຳນວນ 17 ແຂວງທັງໝົດ. ແຂວງທີ່ມີແຜນງານຈັດຕັ້ງປະຕິບັດຫຼາຍທີ່ສຸດແມ່ນ ນະຄອນຫຼວງວຽງຈັນ 13 ແຜນງານ (39%);  10 ແຜນງານ (30%) ຢູ່ແຂວງ ຫຼວງພະບາງ, 9 ແຜນງານ (27%) ຢູ່ແຂວງ ສະຫວັນນະເຂດ, 8 ແຜນງານ (24%) ຢູ່ແຂວງຈຳປາສັກ ແລະ 7 ແຜນງານ (21%) ມີຢູ່ແຂວງ ວຽງຈັນ ແລະ ແຂວງ ສາລະວັນ (ເບິ່ງຮູບພາບທີ 1, ເອກະສານຊ້ອນທ້າຍ 4). ແຂວງທີ່ມີແຜນງານໜ້ອຍສຸດແມ່ນ ຢູ່ແຂວງ ຜົ້ງສາລີ, ຫຼວງນ້ຳທາ, ຊຽງຂວາງ ແລະ ເຊກອງ. ເຖິງຢ່າງໃດກໍ່ຕາມ, ບາງແຂວງທີ່ຍັງຖືວ່າເປັນແຂວງຫ່າງໄກຊອກຫຼີກ ແລະ ມີອັດຕາຄວາມທຸກຍາກສູງ, ມີຈຳນວນແຜນງານກ່ຽວກັບ ຊາວໜຸ່ມຂ້ອນຂ້າງດີພໍສົມຄວນ, ເຊັ່ນ ແຂວງ ອັດຕະປື, ອຸດົມໄຊ ແລະ ສາລະວັນ ເຊິ່ງແຕ່ລະແຂວງ ມີ 4 ແຜນງານ.

ຫຼາຍແຜນງານທີ່ໄດ້ເກັບກຳ ແມ່ນໄດ້ຮັບການຈັດຕັ້ງປະຕິບັດຢູ່ໃນຂອບເຂດຈຳກັດ ລວມທັງຂອບເຂດພູມສັນຖານ ຫຼື ຈຳນວນຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ຂ້ອນຂ້າງຈຳກັດ. ບັນຫາອື່ນອີກທີ່ພົບເຫັນແມ່ນ ແຜນງານຕ່າງໆບໍ່ໄດ້ຮັບການປະເມີນຜົນຢ່າງເໝາະສົມ. ດັ່ງນັ້ນ, ຖ້າບໍ່ມີການປະເມີນທີ່ສະແດງໃຫ້ເຫັນວ່າ ແຜນງານມີປະສິດທິຜົນ ຫຼືບໍ່ ມັນມີຄວາມຫຍຸ້ງຍາກທີ່ຈະໄດ້ຮັບການພິຈາລະນາວ່າແຜນງານເຫຼົ່ານີ້ຄວນໄດ້ຮັບການຜັນຂະຫຍາຍໃນວົງກວ້າງຕື່ມອີກຫຼືບໍ່.

**ຕາຕະລາງ 2: ອົງການຈັດຕັ້ງຕ່າງໆ ແລະ ກະຊວງ (n=30) ທີ່ໄດ້ດຳເນີນແຜນງານທີ່ພົວພັນກັບຊາວໜຸ່ມ ຢູ່ ສປປ ລາວ, ແລະ ປະເພດຂອງແຜນງານທີ່ໄດ້ສະໜອງ**

| | | ອົງການຈັດຕັ້ງ | ສາທາ | SRH/HIV | ສຶກສາ | ການພັດທະນາທັກສະ | ການຈ້າງງານ | ການນຳໃຊ້ຢາເສບຕິ | ຄວາມພິການ | ການມີສ່ວນຮ່ວມ | ການປົກປ້ອງ | ການຫຼຸດຜ່ອນຄວາມສ່ຽງ |
|---|---|---|---|---|---|---|---|---|---|---|---|---|
| ອົງການ ສປຊ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ[30] | 1 | ອົງການ UNESCO | | | ✓ | | | | | | | |
| | 2 | ອົງການ WHO | ✓ | | | | | | | | | |
| | 3 | ອົງການ UNICEF | ✓ | | | ✓ | | | | ✓ | | |
| | 4 | ອົງການ UNFPA | | ✓ | ✓ | | | | | ✓ | ✓ | |
| | 5 | ອົງການອາຫານໂລກ | ✓ | | ✓ | | | | | | | |
| | 6 | ອົງການ ທະນາຄານໂລກ | | | | | ✓ | | | | | |
| iNGOs | 7 | ອົງການ Plan ສາກົນ | | | | ✓ | | ✓ | | | ✓ | |
| | 8 | ອົງການຊ່ວຍເຫຼືອເດັກ | | | ✓ | | | | | ✓ | ✓ | |
| | 9 | ອົງການ CARE ສາກົນ  ປະຈຳ ສປປ ລາວ | | | | ✓ | | | | | ✓ | |
| | 10 | ອົງການ Power International | | | ✓ | | | | ✓ | | | |
| | 11 | ອົງການ Handicap International | | | ✓ | | | | | | | ✓ |
| | 12 | ອົງການ World Education ປະຈຳ ສປປ ລາວ | | | ✓ | | | | | | | ✓ |

30 ໄດ້ມີການຕິດຕໍ່ LCDC ເຊິ່ງປະຕິເສດທີ່ຈະເຂົ້າຮ່ວມ ໃນການວິໄຈນີ້

| | | |
|---|---|---|
| iNGOs | 13 | ອົງການ ຄຼິດສະຕຽນ ຂອງປະເທດ ນໍເວປະຈຳ ສປປ ລາວ |
| | 14 | ອົງການ AFESIP |
| | 15 | ອົງການຮຽນຮູ້ຊຸມຊົນສາກົນ (Community Learning International) |
| | 16 | ອົງການ ADRA |
| | 17 | ອົງການບ້ານຈຸດສຸມສາກົນ |
| | 18 | ສະມາຄົມອາສາສະໝັກສັນຕິ |
| | 19 | ອົງການ Friends International |
| | 20 | ອົງການ Action With Lao Children |
| ລັດຖະບານລາວ | 21 | ກະຊວງ ສາທາ |
| | 22 | ກະຊວງ ສຶກສາ ແລະ ກິລາ |
| | 23 | ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ |
| | 24 | ສູນຕ້ານ HIV/AIDS/STIs |
| ອົງການຈັດຕັ້ງ ມະຫາຊົນລາວ ແລະ ສະມາຄົມບໍ່ຫວັງຜົນກຳໄລ[30] | 25 | ວິທະຍຸຊາວໜຸ່ມ ລາວ |
| | 26 | ອົງການຊາວໜຸ່ມ |
| | 27 | ສະຫາພັນແມ່ຍິງ |
| | 28 | ສະມາຄົມສົ່ງເສີມສຸຂະພາບຄອບຄົວລາວ |
| | 29 | ສະມາຄົມທັກສະຊີວິດລາວ |
| | 30 | ອົງການ ກາແດງລາວ |
| | 31 | ສະມາຄົມນັກທຸລະກິດໜຸ່ມ ຂອງ ປະເທດລາວ |

ຂົງເຂດທີ່ແຜນງານຕ່າງໆໄດ້ສຸມໃສ່ຫຼາຍກວ່າໝູ່ແມ່ນ ການສຶກສາ (39%), ການພັດທະນາທັກສະ (36%), ການປົກປ້ອງ (27%), SRH/HIV (21%) ແລະ ສາທາ/ສຸຂະ ພາບທົ່ວໄປ (15%). ປະເພດແຜນງານອື່ນໆໄດ້ກຳນົດໄວ້ໃນຮູບທີ 2 ເອກະສານຊ້ອນທ້າຍ 4. ແຕ່ລະແຜນງານອາດກວມເອົາຫຼາຍກວ່າ 1 ປະເພດ, ສະນັ້ນ ຕົວເລກລວມບອກເຂົ້າກັນຈຶ່ງຫຼາຍກວ່າ 33 ແຜນງານ.

ມີຫຼາຍແຜນງານບໍ່ໄດ້ກຳນົດເປົ້າໝາຍສະເພາະເຈາະຈົງຕໍ່ກັບຄົນຮຸ່ນໜຸ່ມ, ເຖິງແມ່ນຜູ້ໄດ້ຮັບປະໂຫຍດຈາກແຜນງານນັ້ນສ່ວນຫຼາຍ ແມ່ນຄົນຮຸ່ນໜຸ່ມກໍ່ຕາມ. ໃນຂະນະທີ່ທຸກແຜນງານຢ່າງໜ້ອຍໄດ້ລວມເອົາບາງຈຸດສຸມ ກ່ຽວກັບຄົນຮຸ່ນໜຸ່ມທີ່ມີອາຍຸແຕ່ 10-24 ປີ, ປະຊາກອນເປົ້າໝາຍສະເພາະແມ່ນແຕກຕ່າງກັນ. ບາງແຜນງານມີຫຼາຍກວ່າໜຶ່ງກຸ່ມປະຊາກອນເປົ້າໝາຍ. ກຸ່ມເປົ້າໝາຍສ່ວນຫຼາຍ ແມ່ນເດັກນ້ອຍຊັ້ນມັດທະຍົມ (30%), ຊາວໜຸ່ມໂດຍທົ່ວໄປ (27%), ເດັກນ້ອຍຊັ້ນປະຖົມ (24%), ຊາວໜຸ່ມທີ່ບໍ່ໄດ້ເຂົ້າໂຮງຮຽນ (18%), ຊາວໜຸ່ມທີ່ດ້ອຍໂອກາດ ຫຼື ມີຄວາມສ່ຽງ (18%). ກຸ່ມປະຊາກອນເປົ້າໝາຍອື່ນໆທີ່ແບ່ງຕາມແຜນງານ ແມ່ນໄດ້ສະແດງໃນ ຮູບທີ 1 ໂຄງການເຫຼົ່ານີ້ ບໍ່ໄດ້ແຍກຄວາມແຕກຕ່າງລະຫວ່າງກຸ່ມຊາວໜຸ່ມ ເຊັ່ນເພດ ແລະ ເຜົ່າຊົນ ແລະ ຊາວໜຸ່ມ ແມ່ນຖືກຈັດໃຫ້ເປັນຜູ້ໄດ້ຮັບຜົນປະໂຫຍດຫຼາຍກວ່າ ຜູ້ມີສ່ວນຮ່ວມໃນການຕັດສິນໃຈ.

## ການຕິດຕາມ ແລະ ປະເມີນຜົນ

ແຜນງານສ່ວນໃຫຍ່ (97%) ທີ່ເກັບກຳໄດ້ ມີລະບົບການຕິດຕາມ ແລະ ປະເມີນຜົນຢູ່ແລ້ວ. ໃນນັ້ນ, 13 ແຜນງານ (41%) ໄດ້ສຳເລັດການປະເມີນຜົນໄລຍະກາງ ຫລື ການປະເມີນຜົນສຸດທ້າຍ ສຳລັບໂຄງການໃນໄລຍະປັດຈຸບັນ ຫຼື ໃນໄລຍະຜ່ານມາ, 19 ແຜນງານ (59%) ໄດ້ສະໜອງຂໍ້ມູນໃນການຕິດຕາມ ຫຼື ຜົນໄດ້ຮັບຂອງການປະເມີນຜົນ ແລະ 12 ແຜນງານ (38%) ໄດ້ກຳນົດເວລາໃນການປະເມີນຜົນໃນອະນາຄົດ.

ຂໍ້ຈຳກັດສຳຄັນຂອງຫຼາຍແຜນງານທີ່ເນັ້ນໃສ່ຄົນຮຸ່ນໜຸ່ມ ໃນ ສປປ ລາວ ແມ່ນຂາດການຕິດຕາມ ແລະ ປະເມີນຜົນຢ່າງຮອບດ້ານ. ໃນຂະນະທີ່ແຜນງານສ່ວນຫຼາຍໄດ້ກຳນົດວ່າຕົນເອງມີລະບົບການຕິດຕາມ ແລະ ປະເມີນຜົນ, ແຕ່ຍັງຈຳກັດ ໃນການປະເມີນຊັບພະຍາກອນທີ່ລົງທຶນໃສ່ເພື່ອປະຕິບັດແຜນງານ, ຂັ້ນຕອນປະຕິບັດ ແລະ ຜົນໄດ້ຮັບ, ເປັນຕົ້ນ ຈຳນວນອາສາສະໝັກເພື່ອນສອນເພື່ອນທີ່ໄດ້ຮັບການຝຶກອົບຮົມ, ຈຳນວນສູນດຳເນີນງານທີ່ໄດ້ສ້າງຕັ້ງຂຶ້ນ, ຫຼື ຈຳນວນຄົນຮຸ່ນໜຸ່ມທີ່ເຂົ້າເຖິງແຜນງານ ຫຼື ການບໍລິການ. ໃນຂະນະທີ່ຂໍ້ມູນດັ່ງກ່າວມີຄວາມສຳຄັນ, ການປະເມີນໝາກຜົນທີ່ໄດ້ຮັບ ແລະ ຜົນໄດ້ຮັບສູງສຸດແມ່ນມີຄວາມຈຳເປັນເພື່ອປະເມີນຄວາມມີປະສິດທິຜົນຂອງແຜນງານ, ຮັບປະກັນການປະຕິບັດທີ່ມີຫຼັກຖານ ແລະ ສະໜັບສະໜູນການຈັດສັນຊັບພະຍາກອນທີ່ເໝາະສົມ. ນອກຈາກນັ້ນ, ມັນຍັງເປັນປະໂຫຍດຖ້າຫາກແຜນງານຕ່າງໆ ສາມາດປະເມີນຂອບເຂດຂອງແຜນງານ ແລະ ລະດັບຂອງການຮັບຮູ້ ແລະ ນອກຈາກນັ້ນ ຍັງປະເມີນການສະໜັບສະໜູນການຈັດຕັ້ງປະຕິບັດກັບກຸ່ມປະຊາກອນເປົ້າໝາຍ.

ມີພຽງແຕ່ແຜນງານຈຳນວນໜຶ່ງເທົ່ານັ້ນ ປະກອບມີຕົວຊີ້ບອກດ້ານໝາກຜົນ ແລະ ຜົນໄດ້ຮັບທີ່ສູງສຸດ, ຕົວຢ່າງ ອົງການອົງການອານາໄມໂລກ (WHO) ໄດ້ດຳເນີນການສຳຫຼວດແມ່ກາຝາກເພື່ອປະເມີນຜົນກະທົບຂອງການຂ້າແມ່ທ້ອງ; ອົງການ ຄົນພິການສາກົນ (Handicap International) ໄດ້

ວາງແຜນເກັບກຳຂໍ້ມູນພື້ນຖານ ແລະ ຕິດຕາມ ການສຳຫຼວດດ້ານຄວາມຮູ້, ທັດສະນະ ແລະ ການປະຕິບັດ (KAP) ເພື່ອປະເມີນການປ່ຽນແປງທີ່ກ່ຽວຂ້ອງກັບຄວາມປອດໄພທາງຖະໜົນ ແລະ ພຶດຕິກຳສ່ຽງ; ແລະ ອົງການ UNICEF ແລະ ກະຊວງ ສຶກສາ ແລະ ກິລາ ໄດ້ສົມທຽບຄວາມຮູ້ ແລະ ພຶດຕິກຳ ລະຫວ່າງນັກຮຽນທີ່ໄດ້ເຂົ້າໂຮງຮຽນ ທີ່ມີຫຼັກສູດ ແລະ ບໍ່ມີຫຼັກສູດການສຶກສາທີ່ເນັ້ນທັກສະຊີວິດ. ບາງແຜນງານໄດ້ລາຍງານການປະເມີນດ້ານຄຸນະພາບ ກ່ຽວກັບບຸກຄະລາກອນ ແລະ/ຫຼື ຜູ້ທີ່ໄດ້ຮັບຜົນປະໂຫຍດ.

ຂໍ້ມູນ ແລະ ບົດລາຍງານຂອງແຜນງານສ່ວນຫຼາຍແມ່ນບໍ່ມີການເປີດກວ້າງສູ່ສາທາລະນະຊົນ - ເຖິງແມ່ນວ່າແຜນງານຕ່າງໆໄດ້ດຳເນີນການປະເມີນຜົນກາງສະໄໝ ຫຼື ການປະເມີນຜົນສຸດທ້າຍ, ການເຂົ້າເຖິງຜົນຂອງການປະເມີນມີຄວາມຈຳກັດ, ຫຼື ມີບາງການປະເມີນຜົນກຳລັງດຳເນີນຢູ່ໃນຂັ້ນຕອນສຸດທ້າຍ ໃນເວລາການເກັບກຳຂໍ້ມູນຂອງການວິໄຈນີ້. ດ້ວຍເຫດນັ້ນ, ຈຶ່ງມີຄວາມຫຍຸ້ງຍາກທີ່ຈະປະເມີນການຂອບເຂດ ແລະ ຄວາມມີປະສິດທິຜົນຂອງແຜນງານຕ່າງໆ. ນອກຈາກນັ້ນ, ບໍ່ມີລະບົບການຕິດຕາມ ແລະ ປະເມີນຜົນໃດທີ່ໄດ້ສະແດງໃຫ້ເຫັນວ່າມີການເກັບກຳຂໍ້ມູນແຍກຕາມອາຍຸ.

ຮູບແບບການນຳໃຊ້ອາສາສະໝັກເພື່ອນສອນເພື່ອນ ແມ່ນເປັນຍຸດທະສາດທີ່ນິຍົມໃນການຈັດຕັ້ງປະຕິບັດແຜນງານ, ໂດຍສະເພາະຢູ່ໃນແຜນງານທີ່ກ່ຽວຂ້ອງດ້ານສຸຂະພາບ. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນການຕິດຕາມ ແລະ ປະເມີນຜົນ ສຳລັບແຜນງານການສຶກສາເພື່ອນສອນເພື່ອນ ແມ່ນມີແຕ່ເກັບກຳຈຳນວນອາສາສະໝັກເພື່ອນສອນເພື່ອນທີ່ໄດ້ຮັບການຝຶກອົບຮົມເທົ່ານັ້ນ ແລະ ຈຳນວນປະຊາກອນທີ່ສາມາດເຂົ້າເຖິງໂດຍຜ່ານເຄືອຂ່າຍຂອງອາສາສະໝັກເພື່ອນສອນເພື່ອນ

**ຮູບທີ 1: ກຸ່ມເປົ້າໝາຍຂອງແຜນງານສຳລັບເຍົາວະຊົນ ແລະ ຊາວໜຸ່ມ (n=33)**




27 ແຜນງານ (82%) ແມ່ນໄດ້ຮັບທຶນຈາກພາຍນອກໂດຍຜ່ານຜູ້ໃຫ້ທຶນຈາກລັດຖະບານຕ່າງປະເທດ, ເປັນຕົ້ນ ຜ່ານອົງການ AusAID, USAID, ລັດຖະບານປະເທດ ລຸກຊຳບວກ, ແລະ ສະຫະພາບເອີຣົບ (EU), ແລະ ອົງການໃນເຄືອຂ່າຍ ສປຊ ແລະ NGOs, ເປັນຕົ້ນ ອົງການອະນາໄມໂລກ (WHO), UNICEF, ອົງການສາກົນບໍລິການປະຊາຊົນ (PSI), ແລະ ກອງທຶນໂລກ ເພື່ອຕ້ານພະຍາດ AIDS, ວັນນະໂລກ ແລະ ໄຂ້ມາເລເຣັຍ (GFATM). ມີພຽງສອງແຜນງານທີ່ໄດ້ກຳນົດວ່າເປັນການໃຫ້ທຶນຂອງລັດຖະບານລາວ ແລະ ອີກສີ່ໂຄງການທີ່ບໍ່ໄດ້ກຳນົດແຫຼ່ງທຶນ. ຂົງເຂດທີ່ໄດ້ຄວາມສົນໃຈຈາກຜູ້ໃຫ້ທຶນພາຍນອກສ່ວນຫຼາຍ ແມ່ນດ້ານການສຶກສາ, ສຸຂະພາບ ແລະ ການສ້າງວຽກເຮັດງານທຳ.

ມີສອງແຜນງານ ທີ່ໄດ້ແຈ້ງໃຫ້ຮູ້ວ່າ ໄດ້ມີການຢຸດສະງັກ ຫຼື ບໍ່ສາມາດສືບຕໍ່ໄດ້ເພາະຂາດທຶນສະໜັບສະໜູນ. ສ່ວນແຜນງານອື່ນໆ ຍອມຮັບວ່າແຜນງານຂອງຕົນເອງແມ່ນອາໄສແຫຼ່ງທຶນພາຍນອກເປັນຫຼັກ ແລະ ອາດບໍ່ສາມາດສືບຕໍ່ໄດ້ຖ້າຫາກມີການຖອນທຶນ.

22 ແຜນງານ (67%) ໄດ້ຮັບການຈັດຕັ້ງປະຕິບັດກັບ ຫຼື ຈັດຕັ້ງໂດຍກົງໂດຍ ກະຊວງ ຫຼື ກົມ ຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ, ເປັນຕົ້ນ ກະຊວງສຶກສາ ແລະ ກິລາ, ກະຊວງ ສາທາ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ສູນຕ້ານເອດ ແລະ ພຕພ (CHAS), ແລະ ກະຊວງ ໂຍທາທິການ ແລະ ຂົນສົ່ງ. ນອກຈາກນັ້ນ 12 ແຜນງານ (36%) ໄດ້ເປັນຄູ່ຮ່ວມງານ ຫຼື ໄດ້ຈັດ

ຕັ້ງປະຕິບັດໂດຍ ສະມາຄົມບໍ່ຫວັງຜົນກຳໄລພາຍໃນ, ອົງການຈັດຕັ້ງມະຫາຊົນ ຫຼື ສະມາຄົມທຸລະກິດພາຍໃນ ເປັນຕົ້ນ ສູນກາງຊາວໜຸ່ມ (LYU), ສະມາຄົມສຸຂະພາບ ລາວ (LaoPHA), ສະຫະພັນແມ່ຍິງ (LWU), ອົງການກາແດງລາວ ແລະ ສະມາຄົມນັກທຸລະກິດໜຸ່ມຂອງລາວ (YEAL). ທັງໝົດ, 30 ແຜນງານ (91%) ໄດ້ກຳນົດວ່າເຂົາເຈົ້າໄດ້ປະຕິບັດວຽກງານໂດຍຜ່ານການເປັນຄູ່ຮ່ວມງານກັບລັດຖະບານ ຫຼື ອົງການຈັດຕັ້ງໃນທ້ອງຖິ່ນ.

ການເປັນຄູ່ຮ່ວມງານລະຫວ່າງລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມຢູ່ໃນແຜນງານຕ່າງໆແມ່ນມີຄວາມສຳຄັນສຳລັບຄວາມຍືນຍົງ ແລະ ຄວນກວມເອົາໄລຍະການສ້າງຂີດຄວາມອາດສາມາດທີ່ເໝາະສົມ ແລະ ໄລຍະເວລາການມອບຮັບ. ໃນແຜນງານທີ່ຮົບໂຮມໄດ້ກຳນົດການເປັນຄູ່ຮ່ວມງານໃນລະດັບສູງກັບລັດຖະບານ ແລະ ອົງການຈັດຕັ້ງມະຫາຊົນ ແລະ ສະມາຄົມທີ່ບໍ່ຫວັງຜົນກາໄລໃນທ້ອງຖິ່ນ, ຕາມການຮຽກຮ້ອງຂອງຖະແຫຼງການວຽງຈັນ ປີ 2006.[31] ມີພຽງ 10 ແຜນງານທີ່ໄດ້ເວົ້າສະເພາະເຖິງການສ້າງຂີດຄວາມອາດສາມາດກັບຄູ່ຮ່ວມງານໃນທ້ອງຖິ່ນ. ເຖິງແມ່ນວ່າ ການສ້າງຄວາມຂີດສາມາດອາດກວມລວມໃນແຜນງານອື່ນໆເຊັ່ນກັນ, ຍັງບໍ່ມີຄວາມຈະແຈ້ງວ່າ ການຮ່ວມມືແມ່ນດຳເນີນແນວໃດ ແລະ ມີຄວາມພະຍາຍາມທີ່ພຽງພໍບໍ່ ໃນການພັດທະນາຂີດຄວາມສາມາດຂອງ ອຳນາດການປົກຄອງ ແລະ ອົງການຈັດຕັ້ງຕ່າງໆ ໃນຂັ້ນທ້ອງຖິ່ນ ເພື່ອສືບຕໍ່ຈັດຕັ້ງປະຕິບັດແຜນງານຕ່າງໆໃນໄລຍະຍາວ.

## 2.3 ຂໍ້ແນະນຳຕໍ່ນະໂຍບາຍ ແລະ ແຜນງານ

- ກຸ່ມເປົ້າໝາຍຂອງຫຼາຍແຜນງານສ່ວນຫຼາຍ ບໍ່ແມ່ນຄົນຮຸ້ນໜຸ່ມ ແລະ ຖືກຈັດເຂົ້າໃນກຸ່ມປະຊາກອນລວມ ທີ່ຄາດວ່າຈະໄດ້ຮັບຜົນປະໂຫຍດຈາກແຜນງານຕ່າງໆເຫຼົ່ານີ້.
- ໃນຫຼາຍກໍລະນີ, ແຜນງານຕ່າງໆທີ່ໄດ້ແນ່ໃສ່ຄົນຮຸ້ນໜຸ່ມສ່ວນຫຼາຍ ມັກຈະຖືວ່າພວກເຂົາ ແມ່ນເປັນຄົນກຸ່ມດຽວກັນທີ່ມີຄວາມຄືກັນໝົດ ແລະ ເປັນຜູ້ຮັບຜົນປະໂຫຍດເທົ່ານັ້ນ.
- ການສ້າງ ຫຼື ທົບທວນ ແຜນການ, ນະໂຍບາຍ ແລະ ກົດໝາຍ ຈຳເປັນຕ້ອງໄດ້ຮັບການທົບທວນໂດຍ ຜ່ານທັດສະນະມູມມອງຂອງຄົນຮຸ້ນໜຸ່ມ.
- ບັນດານະໂຍບາຍທີ່ເນັ້ນໃສ່ບົດບາດຍິງ-ຊາຍ ແລະ ພົວພັນກັບຊາວໜຸ່ມ ບໍ່ຄ່ອຍໄດ້ຮັບການເອົາໃຈໃສ່ຢ່າງທີ່ຄວນ. ຄວາມສະເໝີພາບລະຫວ່າງຍິງ-ຊາຍ ໄດ້ມີຄວາມຄືບໜ້າຢ່າງຈະແຈ້ງໃນຂະແໜງການສຶກສາ. ເຖິງຢ່າງໃດກໍ່ຕາມ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ຄວນໄດ້ຮັບການປັບປຸງ ໃນທຸກຂະແໜງການ.
- ຂາດນະໂຍບາຍສະເພາະກ່ຽວກັບຊາວໜຸ່ມ ແລະ ອົງກອນຂອງລັດຖະບານທີ່ເຮັດວຽກເປັນຜູ້ປະສານງານຫຼັກວຽກງານຊາວໜຸ່ມ ເຊິ່ງສະແດງໃຫ້ເຫັນຊ່ອງຫວ່າງ ໃນດ້ານນະໂຍບາຍ, ແຜນງານ ແລະ ການຕິດຕາມ.
- ຖ້າຫາກຊາວໜຸ່ມຈະກາຍເປັນກົນຈັກຂັບເຄື່ອນການເຕີບໂຕຂອງປະເທດ, ມີຄວາມຈຳເປັນທີ່ຕ້ອງມີການປະຕິບັດຫຼາຍສິ່ງຢ່າງ ເພື່ອຮັບປະກັນ ແລະ ເພີ່ມການມີສ່ວນຮ່ວມຂອງຊາວໜຸ່ມ ໃນການວາງແຜນແຕ່ລະຂັ້ນມີຄວາມຈຳເປັນທີ່ຕ້ອງສ້າງກົນໄກ/ລະບຽບການ/ເວທີ ໃຫ້ແກ່ຄົນຮຸ້ນໜຸ່ມ ເພື່ອຮັບປະກັນວ່າ ກະບອກສຽງຂອງຊາວໜຸ່ມໄດ້ຖືກຮັບຟັງ ແລະ ເພື່ອຮັບປະກັນການມີສ່ວນຮ່ວມຂອງຊາວໜຸ່ມ ໃນການຕັດສິນໃຈ ແລະ ການວາງແຜນການພັດທະນາ ໃນລະດັບທ້ອງຖິ່ນ ແລະ ລະດັບຊາດ, ລວມທັງການສ້າງແຜນການແຫ່ງຊາດ.

[31] Vientiane Declaration on Aid Effectiveness (2006): http://www.undp.org/content/lao_pdr/en/home/library/poverty/Vientiane_Declaration_Aid_Effectiveness/.



Chien Chi/UNFPA, Lao PDR

# 3

# III ສຸຂະພາບ

## 3.1 ນະໂຍບາຍ ແລະ ແຜນງານທາງດ້ານສຸຂະພາບ ຕໍ່ກັບຊາວໜຸ່ມ ແລະ ເຍົາວະຊົນ

ມີຫຼາຍກົດໝາຍທີ່ພົວພັນເຖິງສຸຂະພາບ ເຊິ່ງກົດໝາຍເຫຼົ່ານັ້ນປົກປ້ອງສິດທິຂອງຊາວໜຸ່ມ ແລະ ເຍົາວະຊົນ ໃນການເຂົ້າເຖິງການດູແລສຸຂະພາບ ແລະ ປົກປ້ອງເຂົາເຈົ້າ ຈາກຄວາມອັນຕະລາຍທາງດ້ານສຸຂະພາບທີ່ອາດເກີດຂຶ້ນ.

ມາດຕາ 4 ຂອງ ກົດໝາຍວ່າດ້ວຍສາທາລະນະສຸກ (2005) ກໍານົດວ່າທຸກຄົນ ຢູ່ ສປປ ລາວ, ລວມທັງຄົນຮຸ້ນໜຸ່ມ, ໂດຍບໍ່ໄດ້ຄໍານຶງເຖິງເພດ, ອາຍຸ ແລະ ເຜົ່າພັນ, ຊາດກໍາເນີດ, ສາດສະໜາ ແລະ ສະພາບເສດຖະກິດ-ສັງຄົມ ມີສິດໄດ້ຮັບການດູແລສຸຂະພາບ. ໃນແງ່ຂອງນະໂຍບາຍ ແລະ ຍຸດທະສາດຂອງຂະແໜງການສາທາໂດຍລວມ, ກະຊວງ ສາທາລະນະສຸກ ມີໜ້າທີ່ຮັບປະກັນວ່າ ທຸກຄົນ (ລວມທັງຄົນຮຸ້ນໜຸ່ມ) ສາມາດເຂົ້າເຖິງການດູແລສຸຂະພາບທົ່ວໄປ ແລະ ການດູແລສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ. ສິດທິເຫຼົ່ານີ້ໄດ້ຮັບການປົກປ້ອງຈາກທັງກົດໝາຍວ່າດ້ວຍສາທາລະນະສຸກ (2005) ແລະ ນະໂຍບາຍສຸຂະພາບຈະເລີນພັນແຫ່ງຊາດ (2005). ເຖິງແມ່ນວ່າ ບໍ່ມີບົດບັນຍັດ ສໍາລັບຊາວໜຸ່ມ ລວມທັງຊາວໜຸ່ມທີ່ບໍ່ທັນໄດ້ແຕ່ງງານຢ່າງຊັດເຈນ ກ່ຽວກັບການສະໜອງຖົງຢາງອະນາໄມ, ການໃຊ້ການຄຸມກໍາເນີດສຸກເສີນ, ການວາງແຜນຄອບຄົວ ຫຼື ການບໍລິການສຸຂະພາບຂອງແມ່, ແຕ່ວ່າ ກໍ່ບໍ່ມີນິຕິກໍາໃດໃນປັດຈຸບັນ ທີ່ຈໍາກັດການເຂົ້າເຖິງການບໍລິການດັ່ງກ່າວສໍາລັບພວກເຂົາ. ການເອົາລູກອອກ ແມ່ນໄດ້ກ່າວຢູ່ໃນປະມວນ ກົດໝາຍອາຍາ (1990) ແລະ ໃນກົດໝາຍສຸຂະພາບ. ການເອົາລູກອອກ ສາມາດເປັນໄປໄດ້ທັງທາງຜິດ ແລະ ຖືກກົດໝາຍ ຂຶ້ນກັບສະຖານທີການບໍລິການ (ສາມາດດໍາເນີນໄດ້ ໃນໂຮງໝໍລັດ ແລະ ຄຼີນິກ ເທົ່ານັ້ນ), ປະເພດຂອງການບໍລິການ (ການໃຊ້ປັ້ງ/ເຄື່ອງດູດອອກ ໂດຍບໍ່ໄດ້ໃຊ້ຢາ)[32] ແລະ ກໍ່ຂຶ້ນກັບສະຖານະສົມລົດ ແລະ ເສດຖະກິດຂອງແມ່. ສໍາລັບແມ່ທີ່ຍັງໜຸ່ມ, ໂດຍສະເພາະແມ່ນຜູ້ທີ່ບໍ່ທັນໄດ້ແຕ່ງງານ, ການເອົາລູກອອກແບບຖືກກົດໝາຍ ແມ່ນຈະບໍ່ໄດ້ຮັບການອະນຸຍາດ, ດັ່ງນັ້ນ ຈຶ່ງອາດນໍາໄປສູ່ການລັກເອົາລູກອອກແບບຜິດກົດໝາຍ ລວມທັງການນໍາໃຊ້ຢາເມັດ ແລະ ການຜ່າຕັດເອົາລູກອອກ ໃນບັນດາຄຼີນິກເອກະຊົນທີ່ບໍ່ໄດ້ຮັບການອະນຸຍາດ ແລະ ຂ້າມໄປເອົາລູກອອກຢູ່ປະເທດໃກ້ຄຽງ.[33] ການໃສ່ໂທດ ຕໍ່ກັບການເອົາລູກອອກ ແມ່ນມີຄວາມເຄັ່ງຄັດ ແມ່ຍິງທີ່ເອົາລູກອອກດ້ວຍຕົນເອງ ຫຼື ໃຫ້ຄົນອື່ນເປັນຄົນເອົາອອກ ຖືວ່າຜິດກົດໝາຍຈະຖືກຕັດອິດສະລະພາບ 3 ເດືອນຫາ 1 ປີ ແລະ ເສຍຄ່າປັບໄໝ ຈໍານວນ 100,000 ກີບ ເຖິງ 500,000ກີບ.[34]

ກົດໝາຍ ກ່ຽວກັບ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍ (2007), ໄດ້ກໍານົດໃນ ມາດຕາ 8 ເຖິງ ມາດຕາ 10 ກ່ຽວກັບຄວາມຮັບຜິດຊອບຂອງລັດ, ສັງຄົມ, ພໍ່ແມ່ ແລະ ຜູ້ປົກຄອງ "ໃນການເບິ່ງແຍງ ແລະ ລ້ຽງດູ ເດັກນ້ອຍ" [..] "ເພື່ອປົກປ້ອງພວກເຂົາຈາກອັນຕະລາຍ, ແລະ ພ້ອມນັ້ນ ກໍ່ຮັບປະກັນການເບິ່ງແຍງສຸຂະພາບຂັ້ນພື້ນຖານ ສໍາລັບເດັກນ້ອຍ [ຂອງພວກເຂົາ]". ໃນມາດຕາທີ 15 ເດັກນ້ອຍມີສິດໃນການໄດ້ຮັບຂໍ້ມູນຂ່າວສານດ້ານສຸຂະພາບ (ບໍ່ວ່າຈະເປັນຂໍ້ມູນຫຍັງ) ໃນນັ້ນກວມລວມໄປເຖິງເດັກນ້ອຍທີຍັງຢູ່ໃນທ້ອງ ໂດຍຮັບປະກັນວ່າ ແມ່ຜູ້ຖືພາໄດ້ເຂົ້າເຖິງການດູແລສຸຂະພາບກ່ອນ ແລະ ຫຼັງເກີດ ແລະ ໄດ້ຮັບຂໍ້ມູນກ່ຽວກັບສຸຂະພາບ. ນອກຈາກນັ້ນ ກົດໝາຍຍັງກ່າວເຖິງ ການໄດ້ຮັບການສັກຢາປ້ອງກັນພະຍາດ, ການດູແລສຸຂະພາບ, ອາຫານທີ່ພຽງພໍ ແລະ ການເຂົ້າເຖິງນໍ້າສະອາດ.

ໃນ ມາດຕາ 16 ຂອງກົດໝາຍທີ່ກ່າວມາຂ້າງເຖິງ, ການຕິດຕາມ ແລະ ການໃຫ້ການດູແລສຸຂະພາບສໍາລັບເດັກນ້ອຍ ໄດ້ກໍານົດວ່າເດັກນ້ອຍ ແຕ່ອາຍຸ 15 ເຖິງ 18 ປີ ມີສິດທີ່ຈະຕັດສິນໃຈຕໍ່ກັບວິທີການປິ່ນປົວ ແລະ ສະຖານທີ່ທາງການແພດທີ່ເໝາະສົມ ໂດຍບໍ່ຈໍາເປັນຕ້ອງໄດ້ຮັບການຍິນຍອມຂອງພໍ່ແມ່, ເວັ້ນແຕ່ພວກເຂົາເຈົ້າ ຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ ຫຼື ມີຄວາມພິການທາງສະໝອງ. ມາດຕາດຽວກັນນີ້ ໄດ້ລະບຸການໃຫ້ການບໍລິການສຸຂະພາບແບບບໍ່ເສຍຄ່າ ສໍາລັບເດັກນ້ອຍທີ່ມີຄວາມພິການ, ເດັກທີ່ຖືກປະລະ ຫຼື ເດັກນ້ອຍທີ່ທຸກຍາກ (ຈ່າຍໂດຍງົບປະມານສະຫວັດດີການຂອງລັດ). ມາດຕາ 17 ແມ່ນກ່ຽວກັບການສະໜອງການຮັກສາ ສໍາລັບເດັກນ້ອຍທີ່ໄດ້ຮັບຜົນກະທົບຈາກເຮສໄອວີ/ພະຍາດເອດ. ມາດຕາ 18 ຂອງກົດໝາຍວ່າດ້ວຍການປ້ອງກັນ HIV (2011) ໄດ້ກ່າວວ່າ ຖ້າຫາກຈະເອົາເລືອດຈາກເດັກນ້ອຍຕໍ່າກວ່າ 14 ປີ ເພື່ອໄປກວດຫາເຊື້ອ, ແມ່ນມີຄວາມຈໍາເປັນທີ່ຈະຕ້ອງໄດ້ຮັບການອະນຸຍາດຈາກພໍ່ແມ່ ຫຼື ຜູ້ປົກຄອງ.

ກົດໝາຍຢາສູບ ປີ 2009, ມາດຕາ 50, ຫ້າມບຸກຄົນທີ່ມີອາຍຸຕໍ່າກວ່າ 18 ປີ ສູບ, ຊື້ ຫຼື ຂາຍຢາສູບ. ມີຫຼາຍລະບຽບການຄຸ້ມຄອງການປ້ອງກັນ ແລະ ປິ່ນປົວການໃຊ້ສານທີ່ມີລິດຕໍ່ລະບົບປະສາດສະໝອງ. ມາດຕາ 55 ຂອງ ກົດໝາຍວ່າດ້ວຍຢາເສບຕິດ ປີ 2007 (ເຊິ່ງແມ່ນສ່ວນໜຶ່ງຂອງກົດໝາຍຢາເສບຕິດ) ກໍານົດໜ້າທີ່ ແລະ ຄວາມຮັບຜິດຊອບຂອງບຸກຄົນ ໂດຍສະເພາະຄົນຮຸ້ນໜຸ່ມ ເພື່ອປ້ອງກັນການນໍາໃຊ້ຢາເສບຕິດ (ເຊັ່ນວ່າ ຄົນຮຸ້ນໜຸ່ມເອງມີຄວາມຮັບຜິດຊອບທີ່ຈະບໍ່ໃຊ້ຢາເສບຕິດ) ແລະ ຊອກຫາການປິ່ນປົວຫາກຕ້ອງການ.

ພາກທີ 4, ມາດຕາ 47, ຂອງກົດໝາຍວ່າດ້ວຍການປົກປ້ອງສິດທິ ແລະ ຜົນປະໂຫຍດຂອງເດັກນ້ອຍ (2007) ກໍານົດການປ້ອງກັນ ແລະ ການຟື້ນຟູການຕິດຢາເສບຕິດໃນຊາວໜຸ່ມ ແລະ ສະໜອງເງື່ອນໄຂ ແລະ ສິ່ງອໍານວຍຄວາມສະດວກໃຫ້ແກ່ເຂົາເຈົ້າ ກ່ຽວກັບການປິ່ນປົວ, ຟື້ນຟູ, ບໍາບັດ ແລະ ໃຫ້ການສຶກສາສໍາລັບຜູ້ຕິດສິ່ງເສບຕິດ ພ້ອມທັງການຝຶກອົບຮົມວິຊາຊີບ ເພື່ອຊຸກຍູ້ໃຫ້ມີການມີສ່ວນຮ່ວມທາງສັງຄົມຫຼາຍຂຶ້ນ. ການປິ່ນປົວ

---

32 ໃນເວລາຂອງການຂຽນບົດລາຍງານສະບັບນີ້, ແຜນງານທົດລອງເພື່ອປະເມີນການນໍາໃຊ້ນຢາ misoprostol ໃນການເບິ່ງແຍງພາຍຫຼັງການເອົາລູກເອົາ, ແລະ ໃນການເອົາລູກອອກທີ່ມີຜູ້ຊື້ນາ ໃນສະຖານທີ່ບໍລິການສາທາລະນະສຸກຂອງລັດຖະບານ ແມ່ນກໍາລັງດໍາເນີນຢູ່.

33 ປະເທດໄທ ໄດ້ຮັບການຍົກຂຶ້ນ ໃນກຸ່ມສົນທະນາ.

34 ກົດໝາຍອາຍາ (1990): ມາດຕາ 92.

Health

ຫຼື ບຳບັດຢູ່ສະຖານທີ່ໃຫ້ບໍລິການສຸຂະພາບ ຖືວ່າເປັນວິທີທາງອອກສຸດທ້າຍ. ການຮັບເອົາຊາວໜຸ່ມເຂົ້າສູນບຳບັດ, ຖ້າຈຳເປັນ ແລະ ເໝາະສົມ, ຕ້ອງຖືກຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບກົດລະບຽບ ແລະ ໄດ້ຮັບອະນຸຍາດຈາກຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ. ລັດຖະບານໃຫ້ຄຳໝັ້ນສັນຍາທີ່ຈະເພີ່ມຄວາມຮັບຮູ້ຂອງພົນລະເຮືອນຕໍ່ກັບໄພຂົ່ມຂູ່ຂອງການນຳໃຊ້ຢາເສບຕິດ, ໃນນັ້ນກວມເອົາທັງຄົນຮຸ່ນໜຸ່ມ ໂດຍຜ່ານການສຶກສາ ແລະ ການໂຄສະນາຂົນຂວາຍ. ພາຍໃນຂະແໜງການບຳບັດຢາເສບຕິດ, ໄດ້ມີແຜນງານບຳບັດຢາເສບຕິດປະຈຳຢູ່ບ່ອນທີ່ຢູ່ອາໃສ ແລະ ໃນຊຸມຊົນສຳລັບຊາວໜຸ່ມ ຜູ້ທີ່ມີຄວາມສາມາດໃຊ້ຈ່າຍເງິນເພື່ອຮັບບໍລິການໄດ້.

ມາດຕາ 13 ຂອງກົດໝາຍວ່າດ້ວຍການຂົນສົ່ງທາງບົກ (2000) ກຳນົດວ່າ "ຄົນທີ່ຂີ່ລົດຈັກຕ້ອງໃສ່ໝວກກັນກະທົບທີ່ມີມາດຕະຖານ". ໃນມາດຕາ 10, ອາຍຸໃນການຂັບຂີ່ລົດທີ່ຖືກຕ້ອງຕາມກົດໝາຍໄດ້ກຳນົດໄວ້ ແມ່ນ 15 ປີ ຫຼື ອາຍຸສູງກວ່ານັ້ນ, ເຊິ່ງຜູ້ທີ່ມີອາຍຸ 15-18 ປີ ແມ່ນສາມາດຂັບຂີ່ລົດຈັກທີ່ມີແຮງຈັກຕ່ຳກວ່າ 110cc ເທົ່ານັ້ນ. ຢູ່ໃນມາດຕາດຽວກັນນັ້ນ, ກົດໝາຍຈຳກັດການນຳໃຊ້ລົດຖີບສຳລັບຊາວໜຸ່ມອາຍຸ 12 ປີ ຫຼື ອາຍຸສູງກວ່ານັ້ນຂຶ້ນໄປ. ແຕ່ໃນຕົວຈິງ ກົດໝາຍບໍ່ໄດ້ຮັບການບັງຄັບໃຊ້ໄດ້ດີເທົ່າທີ່ຄວນ.

ທັງໝົດ 12 ແຜນງານທີ່ຈັດຕັ້ງປະຕິບັດຢູ່ໃນຂົງເຂດ ສາທາລະນະສຸກສ່ວນໃຫຍ່ແມ່ນຈັດຕັ້ງປະຕິບັດໃນຂົງເຂດສຸຂະພາບທາງເພດ ແລະ ຈະເລີນພັນ ແລະ/ຫຼື ເຮສໄອວີ, ເຊິ່ງສອດຄ່ອງກັບຄວາມຕ້ອງການດ້ານສຸຂະພາບຂອງຊາວໜຸ່ມ ຢູ່ ສປປ ລາວ ທີ່ໄດ້ກ່າວເຖິງຫຼາຍທີ່ສຸດຈາກການວິເຄາະຂໍ້ມູນມືສອງ. ເຖິງຢ່າງໃດກໍ່ຕາມ, ຂອບເຂດຂອງແຜນງານເຫຼົ່ານີ້ ຍັງມີຈຳກັດຍົກເວັ້ນວຽກງານຫຼັກສູດທີ່ເນັ້ນໃສ່ທັກສະຊີວິດ ແລະ ການໃຫ້ຄຳປຶກສາຜ່ານໂທລະສັບສາຍດ່ວນ ແລະ ການກະຈາຍສຽງທາງວິທະຍຸຂອງສູນສຸຂະພາບ ແລະ ພັດທະນາຊາວໜຸ່ມ ຂອງນະຄອນຫຼວງວຽງຈັນ. ບໍ່ມີແຜນງານໃດທີ່ເກັບກຳໄດ້ຈາກການວິໄຈນີ້ ທີ່ສຸມໃສ່ບັນຫາສຸຂະພາບທາງຈິດຂອງຊາວໜຸ່ມ.

ສູນແມ່ ແລະ ເດັກ ທີ່ດຳເນີນແຜນງານພາຍໃຕ້ແຜນງານແຫ່ງຊາດຂອງຂະແໜງການສາທາລະນະສຸກ, ໄດ້ແນ່ໃສ່ສະເພາະເພື່ອຫຼຸດຜ່ອນຄວາມສ່ຽງຂອງການມີລູກກ່ອນໄວອັນຄວນ ແລະ ບັນຫາຕ່າງໆທີ່ພົວພັນກັບການມີເພດສຳພັນແຕ່ຍັງນ້ອຍສຳລັບຊາວໜຸ່ມ; ເຖິງຢ່າງໃດກໍ່ຕາມ, ບໍ່ມີແຜນງານໃດໆທີ່ໄດ້ອອກແບບເພື່ອເລັ່ງໃສ່ຊາວໜຸ່ມ ສະເພາະ ຫຼື ເພື່ອປ່ຽນແປງທັດສະນະຕໍ່ກັບການແຕ່ງງານແຕ່ອາຍຸຍັງນ້ອຍ ຫຼື ການມີເພດສຳພັນແຕ່ອາຍຸຍັງນ້ອຍ. ພາຍໃນແຜນງານຂອງຂະແໜງສາທາລະນະສຸກ, ໂຄງການທີ່ກ່ຽວຂ້ອງກັບຊາວໜຸ່ມສະເພາະກໍ່ຄື ໂຄງການ HIV/AIDS ທີ່ໄດ້ມອບໝາຍໃຫ້ ສູນກາງຊາວໜຸ່ມ ຈັດຕັ້ງປະຕິບັດ. ໂຄງການດັ່ງກ່າວ ປະກອບດ້ວຍການຝຶກອົບຮົມ ແລະ ການເຜີຍແຜ່ຄວາມຮູ້, ແຕ່ຂາດລະບົບການຕິດຕາມ ແລະ ປະເມີນຜົນ.

ນອກຈາກແຜນງານທີ່ໄດ້ເຈາະຈົງບັນຫາສຸຂະພາບຢ່າງຈະແຈ້ງແລ້ວ, ຍັງມີ 2 ແຜນງານທີ່ກ່ຽວຂ້ອງກັບຄວາມປອດໄພທາງຖະໜົນ ແລະ 3 ແຜນງານກ່ຽວກັບການສຶກສາທີ່ພົວພັນເຖິງຢາເສບຕິດ, ການສ້າງຈິດສຳນຶກ ແລະ ການສົ່ງເສີມສຸຂະພາບ.

ໃນຂະນະທີ່ການນຳໃຊ້ຢາບ້າ (methamphetamine) ມີການແຜ່ຫຼາຍໃນກຸ່ມຊາວໜຸ່ມ ຢູ່ ສປປ ລາວ, ໂດຍທົ່ວໄປ ແຜນງານໃນປັດຈຸບັນກໍ່ບໍ່ໄດ້ມີຈຸດສຸມໃສ່ກຸ່ມເປົ້າໝາຍຊາວໜຸ່ມສະເພາະ, ເຖິງແມ່ນວ່າ ລັດຖະບານໄດ້ດຳເນີນຂະບວນການໂຄສະນາປູກຈິດສຳນຶກ ໃນລະຫວ່າງ ປີ 2010-2012 ຢູ່ນະຄອນຫຼວງວຽງຈັນ ໂດຍການປະກອບສ່ວນທຶນຮອນຈາກ ບໍລິສັດ ເບຍລາວ, ບໍລິສັດບໍ່ແຮ່ພູເບ້ຍ ແລະ ທຸລະກິດອື່ນໆ ແລະ ໄດ້ຮັບການສະໜັບສະໜູນໂດຍນັກສິລະປິນທີ່ມີຊື່ສຽງຂອງ ສປປ ລາວ. ແຜນງານກ່ຽວກັບຢາເສບຕິດ ໂດຍພື້ນຖານແລ້ວເນັ້ນໃສ່ການພັດທະນາຊົນນະບົດ ໃຫ້ແກ່ຊາວກະສິກອນທີ່ເຄີຍປູກຝິ່ນ. ອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະ ອາສະຍາກຳ (UNODC) ມີຄວາມເປັນຫ່ວງເປັນໃຍເພີ່ມຂຶ້ນຕໍ່ກັບບັນຫາຢາເສບຕິດ ເນື່ອງຈາກຮູບແບບຂອງການເຄື່ອນຍ້າຍໃນປະຈຸບັນ ອາດສົ່ງຜົນໃຫ້ການນຳໃຊ້ຢາເສບຕິດດ້ວຍວິທີການສີດເຂັມເພີ່ມຂຶ້ນ, ເຊິ່ງວິທີການນີ້ແມ່ນພົບເຫັນຫຼາຍຢູ່ໃນບັນດາປະເທດໃກ້ຄຽງ, ແລະ ນອກຈາກນັ້ນ ອາຍຸສະເລ່ຍຂອງຜູ້ທີ່ນຳໃຊ້ຢາເສບຕິດປະເພດສີດເຂັມກໍ່ອາດຈະຫຼຸດລົງ. ອົງການ UNODC ປະຕິບັດວຽກງານຮ່ວມກັບອົງການຈັດຕັ້ງຕ່າງໆ ເຊັ່ນ ກຳມາທິການແຫ່ງຊາດລາວເພື່ອຄວບຄຸມ ແລະ ຄຸ້ມຄອງຢາເສບຕິດ (LCDC) ເພື່ອຈັດຕັ້ງປະຕິບັດແຜນງານທີ່ກ່ຽວກັບຢາເສບຕິດ ໂດຍເລັ່ງໃສ່ປັບປຸງຄວາມສາມາດຂອງການບໍລິການດ້ານບໍລິຫານທີ່ອາດເປັນປະໂຫຍດແກ່ຊາວໜຸ່ມໂດຍລວມ, ແຕ່ບໍ່ໄດ້ເລັ່ງໃສ່ຊາວໜຸ່ມໂດຍກົງ. ມາຮອດປັດຈຸບັນ, ວຽກງານດັ່ງກ່າວຍັງບໍ່ໄດ້ເຊື່ອມສານກັບສູນກາງຊາວໜຸ່ມ.

ໃນບັນດາຂໍ້ມູນທີ່ເກັບກຳມາໄດ້ ຍັງບໍ່ມີແຜນງານໃດທີ່ເນັ້ນໃສ່ຊາວໜຸ່ມເພື່ອການຫຼຸດຜ່ອນໄພອັນຕະລາຍ, ແລະການບໍລິການທີ່ໃຫ້ການຊ່ວຍເຫຼືອກ່ຽວກັບ ເຫຼົ້າ ແລະ ຢາເສບຕິດ. ເຖິງຢ່າງໃດກໍ່ຕາມ, ມີຫຼາຍສູນຟື້ນຟູ ແລະ ປິ່ນປົວຜູ້ຕິດຢາເສບຕິດທີ່ໄດ້ເຄື່ອນໄຫວ ຢູ່ ສປປ ລາວ, ທີ່ຊາວໜຸ່ມໄດ້ເຂົ້ານຳໃຊ້, ລວມມີ ສູນຟື້ນຟູ ແລະ ປິ່ນປົວຜູ້ຕິດຢາເສບຢູ່ສູນຕິດສົມສະຫງ່າ ທີ່ນະຄອນຫຼວງວຽງຈັນ ແລະ ບັນດາສູນຢູ່ ແຂວງ ບໍ່ແກ້ວ, ຈຳປາສັກ, ຫຼວງພະບາງ, ອຸດົມໄຊ ແລະ ສະຫວັນນະເຂດ.[35] ສູນຕ່າງໆໄດ້ດຳເນີນແຜນງານການຊ່ວຍເຫຼືອໃຫ້ຊາວໜຸ່ມ ຢຸດເຊົາການໃຊ້ຢາເສບຕິດ, ເພື່ອຊ່ວຍໃນການຟື້ນຟູ ແລະ ການບໍລິການຝຶກອົບຮົມວິຊາຊີບ.

## 3.2 ສະພາບດ້ານສຸຂະພາບ

ທຸກກຸ່ມອາຍຸທີ່ໄດ້ມີສ່ວນຮ່ວມໃນການສົນທະນາກຸ່ມ (10-24 ປີ) ຕ່າງກໍ່ໄດ້ເນັ້ນໜັກເຖິງບັນຫາດ້ານສຸຂະພາບ. 3 ບັນຫາສຸຂພາບອັນຕົ້ນຕໍປະກອບມີ ການນຳໃຊ້ຢາເສບຕິດ ແລະ ສິ່ງມຶນເມົາ, ການຖືພາທີ່ບໍ່ຕ້ອງການ ແລະ ອຸບັດເຫດທາງຖະໜົນ ເຊິ່ງທັງໝົດຕ່າງກໍ່ສາມາດປ້ອງກັນໄດ້, ນອກຈາກນັ້ນ ບັນຫາສຸຂະພາບອື່ນໆ ທີ່ຊາວໜຸ່ມກ່າວເຖິງ ລວມມີ ໄຂ້ມາເລເລັຍ ແລະ ໄຂ້ເລືອດອອກ ແລະ ການເຈັບເປັນທີ່ເກີດຈາກນ້ຳ ແລະ ອາຫານທີ່ບໍ່ສະອາດປອດໄພ.

[35] ສະຫະພັນແມ່ຍິງລາວ (2012/13). ບັນຊີການບໍລິການທີ່ຈຳເປັນແຫ່ງຊາດສຳລັບເດັກ ແລະ ຊາວໜຸ່ມ ຢູ່ ສປປ ລາວ. ວຽງຈັນ, ສປປ ລາວ.

## 3.2.1 ການດື່ມເຫຼົ້າ, ສູບຢາ ແລະ ໃຊ້ສານເສບຕິດ

ເປັນທີ່ຮັບຮູ້ວ່າ ສປປ ລາວ ມີຄວາມແຕກຕ່າງກັບບັນດາປະເທດເພື່ອນບ້ານ ກ່ຽວກັບການດື່ມເຫຼົ້າເບຍທີ່ຢູ່ໃນລະດັບຂ້ອນຂ້າງສູງ ທັງໃນກຸ່ມເພດຊາຍ ແລະ ຍິງ. ເຖິງແມ່ນວ່າ ພຶດຕິກຳໃນການດື່ມເຫຼົ້າເບຍ ຈະຖືວ່າເປັນບັນຫາຂອງເພດຊາຍສ່ວນຫຼາຍ, ໂດຍສະເພາະໃນຊ່ວງເທດສະການຕ່າງໆ, ແຕ່ວ່າເພດຍິງເອງກໍ່ດື່ມເຊັ່ນດຽວກັນ.[36] ຕົວຢ່າງ, ການດື່ມເຫຼົ້າ ແມ່ນຕິດພັນກັບໂອກາດການສັງສັນ ແລະ ບຸນປະເພນີຕ່າງໆ ເຊິ່ງຊາວໜຸ່ມຍິງຈຳຕ້ອງໄດ້ດື່ມເຫຼົ້າຮ່ວມກັບແຂກ.

ຈາກຜົນຂອງການປະເມີນຫຼັກສູດທັກສະຊີວິດ ໄດ້ພົບເຫັນວ່າ 90% ຂອງນັກຮຽນຊັ້ນມັດທະຍົມຕອນປາຍ ປີທີ່ 5 ເຄີຍ**ດື່ມເຫຼົ້າ**, ໃນນັ້ນ ຜູ້ຊາຍ 53% ແລະ ຜູ້ຍິງ 16% ໄດ້ລາຍງານວ່າ ເຄີຍເມົາເຫຼົ້າຢ່າງໜ້ອຍໜຶ່ງຄັ້ງ ໃນໄລຍະ 6 ເດືອນຜ່ານມາ.[37] ອາຍຸສະເລ່ຍ ເຊິ່ງຊາວໜຸ່ມເລີ່ມດື່ມເຫຼົ້າ ແມ່ນ ກາຍ 13 ປີ ເລັກໜ້ອຍ ແລະ ບໍ່ມີຄວາມແຕກຕ່າງກັນຫຼາຍ ລະຫວ່າງອາຍຸຂອງແມ່ຍິງ ແລະ ຜູ້ຊາຍ. ນອກຈາກນັ້ນ, ຢູ່ຫຼວງນໍ້າທາ 50% ຂອງ ກຸ່ມອາຍຸ 16 - 19 ປີ ແລະ 28% ຂອງກຸ່ມອາຍຸ 14-15 ປີ ໄດ້ລາຍງານວ່າ ໄດ້ດື່ມເຫຼົ້າໃນເດືອນຜ່ານມາ.[38] ໃນການສຶກສານີ້ ຍັງພົບພຶດຕິກຳສ່ຽງຫຼາຍຢ່າງທີ່ກ່ຽວພັນກັນ (ການດື່ມເຫຼົ້າ, ການສູບຢາ, ແລະ ການມີເພດສຳພັນທີ່ບໍ່ປ້ອງກັນ) ເຊິ່ງປະກົດເຫັນໃນກຸ່ມຊາວໜຸ່ມຊາຍຫຼາຍກວ່າໃນກຸ່ມແມ່ຍິງທີ່ຖືກສຳພາດ.[39] ສ່ວນຫຼາຍສາວບໍລິການທີ່ຖືກສຳພາດ ໃນບົດສຶກສາການເຊື່ອມສານພຶດຕິກຳ ແລະ ການເຝົ້າລະວັງຊີວະວິທະຍາ (IBBS) ກ່າວວ່າເຂົາເຈົ້າດື່ມເຫຼົ້າທຸກໆມື້.[40]

ການດື່ມເຫຼົ້າເບຍ ເປັນບັນຫາທີ່ໄດ້ກ່າວເຖິງຫຼາຍທີ່ສຸດຈາກການສົນທະນາກຸ່ມ ເຊັ່ນດຽວ ກັນກັບຂໍ້ມູນທີ່ໄດ້ມາຈາກຂໍ້ມູນມືສອງ: ເຊິ່ງເຫັນໄດ້ວ່າການດື່ມສິ່ງມຶນເມົາ ແມ່ນຢູ່ໃນວົງກວ້າງ ແລະ ອາດເປັນສາເຫດທີ່ສຳຄັນຂອງການເກີດບັນຫາທາງສຸຂະພາບອື່ນໆ ເຊັ່ນ ອຸບັດຕິເຫດທາງຖະໜົນ, ການຕີກັນລະຫວ່າງຊາວໜຸ່ມ ແລະ ການມີເພດສຳພັນໂດຍບໍ່ປ້ອງກັນ ເຊິ່ງນຳໄປສູ່ການຖືພາ.

ມີຄວາມແຕກຕ່າງກັນກ່ຽວກັບ ທັດສະນະຄະຕິໃນການດື່ມເຫຼົ້າເບຍ ແລະ ຄວາມເຂົ້າໃຈບັນຫາທີ່ເກີດຂຶ້ນຈາກການດື່ມເຫຼົ້າ ໃນແຕ່ລະຂົງເຂດພູມສັນຖານ ໃນ ສປປ ລາວ: ກຸ່ມຄົນໃນຕົວເມືອງ, ບໍ່ຄ່ອຍຄິດວ່າການດື່ມເຫຼົ້າເປັນບັນຫາ, ເນື່ອງຈາກວ່າ ບັນຫາທີ່ພວກເຂົາມີຄວາມກັງວົນໃຈກວ່າ ແມ່ນການນຳໃຊ້ຢາເສບຕິດ. ນອກນັ້ນ ຍັງມີຄວາມແຕກຕ່າງທາງທັດສະນະຄະຕິລະຫວ່າງການດື່ມເຫຼົ້າເບຍເປັນປະຈຳຂອງຊາວໜຸ່ມ ແລະ ການດື່ມໃນໄລຍະເທດສະການ ຫຼື ໃນເຮືອນດີເທົ່ານັ້ນ.

> *ຊາວໜຸ່ມໃນບ້ານພວກເຮົາດື່ມເຫຼົ້າບາງຄັ້ງຄາວສະເພາະແຕ່ເວລາມີບຸນ*
>
> ຜູ້ຊາຍ, ອາຍຸ 15-19 ປີ, ໃນເຂດຊົນນະບົດ

> *ດື່ມເຫຼົ້າ ແລ້ວເຮັດໃຫ້ພວກເຂົາມ່ວນຊື່ນ*
>
> ແມ່ຍິງ, 15-19 ປີ, ໃນເຂດຊົນນະບົດ

ຢູ່ ສປປ ລາວ ບໍ່ມີຂໍ້ຫ້າມກ່ຽວກັບອາຍຸໃນການດື່ມເຫຼົ້າເບຍ ສະນັ້ນທຸກຄົນສາມາດດື່ມໄດ້. ຄວາມເຂົ້າໃຈວ່າການດື່ມເຫຼົ້າແມ່ນເປັນບັນຫາ ແມ່ນພົວພັນສະເພາະກັບການໃຊ້ຄວາມຮຸນແຮງໃນຄອບຄົວ, ຊຶ່ງຜູ້ທີ່ເປັນຜົວເມົາ ແລະ ຕີເມຍ ຫຼື ລູກ, ແລະ ພົວພັນກັບພຶດຕິກຳສ່ຽງໃນກຸ່ມຊາວໜຸ່ມທີ່ອາຍຸໃຫຍ່ແລ້ວ ຕົວຢ່າງ ຂັບລົດເວລາມຶນເມົາ ແລະ ການມີເພດສຳພັນ.

ໄດ້ມີການກ່າວເຖິງເລື້ອຍໆ ໃນກຸ່ມສົນທະນາ ກ່ຽວກັບປະເດັນສຳຄັນຂອງການໄດ້ຮັບອິດທິພົນ ແລະ ຄວາມກົດດັນຈາກໝູ່ເພື່ອນໃນການດື່ມເຫຼົ້າ, ແລະ ເຫັນໄດ້ຢ່າງຊັດເຈນ ກ່ຽວກັບສາຍພົວພັນລະຫວ່າງການດື່ມເຫຼົ້າເບຍເກີນຄວນ ແລະ ການເກີດອຸບັດຕິເຫດທາງທ້ອງຖະໜົນ. ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ, ການເມົາເຫຼົ້າ ອາດຈະເຮັດໃຫ້ນອນຫຼັບໂດຍບໍ່ໄດ້ກາງມຸ້ງ ເຊິ່ງອາດເປັນປັດໃຈປະກອບສ່ວນເຮັດໃຫ້ເປັນພະຍາດໄຂ້ເລືອດອອກ.

> *ເວລາທີ່ເຂົາເຈົ້າເມົາ ເຂົາມັກຕີກັນ*
>
> ຜູ້ຊາຍ, ອາຍຸ 15-19 ປີ, ໃນເຂດຕົວເມືອງ

> *ເກີດອຸບັດຕິເຫດທາງທ້ອງຖະໜົນ ຫຼັງຈາກທີ່ພວກເຂົາເມົາເຫຼົ້າ, ແຂນຫັກຂາຫັກ.*
>
> ຜູ້ຊາຍ, ອາຍຸ15-19 ປີ, ໃນເຂດຕົວເມືອງ

ເຈົ້າຂອງສະຖານທີ່ບັນເທີງ ເວົ້າວ່າຢາເສບຕິດ ແລະ ຂອງມຶນເມົາແມ່ນບັນຫາ ແລະ ຈຳເປັນຕ້ອງໂທຫາເຈົ້າໜ້າທີ່ ເພື່ອມາຈັບຕົວຊາວໜຸ່ມທີ່ໃຊ້ຄວາມຮຸນແຮງຢູ່ໃນສະຖານທີ່ບັນເທີງຂອງເຂົາເຈົ້າ. ການຂາດການຄວບຄຸມກ່ຽວກັບສະຖານທີ່ຕັ້ງຂອງສະຖານທີ່ບັນເທີງ (ເຊິ່ງຈະໄດ້ຮັບການແກ້ໄຂໃນມໍ່ໆນີ້ ໂດຍກົດໝາຍວ່າດ້ວຍເຫຼົ້າທີ່ໄດ້ຮັບການສະເໜີ) ສ້າງສະພາບແວດລ້ອມດ້ານລົບໃຫ້ຊາວໜຸ່ມ ເຮັດໃຫ້ພວກເຂົາສາມາດເຂົ້າເຖິງສິ່ງມຶນເມົາ ແລະ ຢາເສບຕິດໄດ້ງ່າຍຂຶ້ນ. ເຖິງແມ່ນວ່າເຈົ້າຂອງສະຖານທີ່ບັນເທີງຈະກ່າວວ່າຊາວໜຸ່ມອາຍຸຕໍ່າກວ່າ 14 ປີ ບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າ ສະຖານທີ່ດັ່ງກ່າວ, ແຕ່ໃນປັດຈຸບັນຍັງຂາດກອບດ້ານນິຕິກຳທີ່ກຳນົດເກນອາຍຸທີ່ບໍ່ສາມາດເຂົ້າເຖິງສະຖານທີ່ບັນເທີງ.[41] ສະຖານທີ່ບັນເທີງຍັງສະໜອງໂອກາດໃນການມີວຽກເຮັດ ແລະ ການບໍລິການຕ່າງໆ, ລວມທັງການຂາຍບໍລິການທາງເພດ, ເຊິ່ງສ້າງຄວາມສ່ຽງທີ່ຊາວໜຸ່ມຈະເຂົ້າໄປພົວພັນ.

---

36 WHO (2012). *Baseline Survey of Alcohol Consumption: Availability and Effects on Individual Consumption,* (report presented October 2013, Vientiane).

37 UNICEF and MoE (2009). *Assessment Life-Skills Based Curriculum Project in Lao PDR. Scaling up the response for Children?*

38 Sychareun V, Thomsen S, Faxelid E. (2011). *Concurrent multiple health risk behaviors among adolescents in Luangnamtha province,* Lao PDR. BMC Public Health: p.36.

39 *Ibid*

40 CHAS/MoH, USAID, FHI, Global Fund, ADB and UNAIDS (2008). *Integrated Behavioral Biological Surveillance (IBBS).*

41 ກຸ່ມສົນທະນາ.

ການ**ສູບຢາ**, ໂດຍສະເພາະໃນກຸ່ມຊາວໜຸ່ມເພດຊາຍ ໃນເຂດຊົນນະບົດ, ຖືວ່າເປັນເລື່ອງປົກກະຕິ ແລະ ໄດ້ມີການກ່າວເຖິງຫຼາຍໃນການສົນທະນາກຸ່ມ (FGDs). ຢາສູບ ຖືກຈັດເປັນທັງສິ່ງເສບຕິດ ແລະ ຍັງເປັນອັນຕະລາຍຕໍ່ສຸຂະພາບ. ການຊັກຊວນຈາກໝູ່ເພື່ອນໃຫ້ສູບຢາ, ຄຽງຄູ່ກັບຄວາມຕ້ອງການຢາກນຳໃຊ້ຢາສູບເພື່ອປ້ອງກັນຍຸງໃນກຸ່ມຊາວໜຸ່ມທີ່ລ້ຽງຄວາຍ, ເລີຍເປັນການສະໜັບສະໜູນໃຫ້ມີການນຳໃຊ້ຢາສູບຢ່າງຕໍ່ເນື່ອງໃນເຂດຊົນນະບົດ. ນອກຈາກນັ້ນ ການສູບຢາ ຍັງໄດ້ຖືກຍົກຂຶ້ນໃນກຸ່ມຊາວໜຸ່ມຢູ່ໃນເຂດຕົວເມືອງ, ແຕ່ວ່າຄວາມສ່ຽງທີ່ຕິດພັນກັບການໃຊ້ຢາສູບ ແມ່ນຍັງຖືວ່າເບົາ ຖ້າທຽບໃສ່ບັນຫາສຸຂະພາບອື່ນໆທີ່ພວກເຂົາມີຄວາມກັງວົນ.

> *ສູບຢາເພື່ອໄລ່ຍຸງ.*
> ແມ່ຍິງ, ອາຍຸ 15-19 ປີ, ໃນເຂດຊົນນະບົດ

ການປະເມີນຫຼັກສູດໂດຍເນັ້ນທັກສະຊີວິດ ໄດ້ສະແດງໃຫ້ເຫັນວ່ານັກຮຽນໃນລະດັບ ມ 5 (Grade 11) ເກືອບໝົດທຸກຄົນຮູ້ຊື່ຂອງຢາເສບຕິດ ແລະ ນັກຮຽນໜ້ອຍກວ່າເຄິ່ງໜຶ່ງ ເວົ້າວ່າເຂົາເຈົ້າຮູ້ຈັກຢ່າງໜ້ອຍໜຶ່ງຄົນ ໃນຊຸມຊົນຂອງພວກເຂົາທີ່ນຳໃຊ້ຢາເສບຕິດ.[42] ໃນຂະນະທີ່ເດັກຊາຍບາງຄົນ (4% ຂອງເດັກຊາຍ ທີ່ເຂົ້າຮຽນໃນໂຮງຮຽນທີ່ສິດສອນຫຼັກສູດທີ່ເນັ້ນໃສ່ທັກສະຊີວິດ ແລະ 7% ຂອງນັກຮຽນຊາຍທີ່ເຂົ້າໂຮງຮຽນທີ່ບໍ່ໄດ້ສອນຫຼັກສູດດັ່ງກ່າວ) ໄດ້ຍອມຮັບວ່າເຄີຍໄດ້ນຳໃຊ້ຢາເສບຕິດ, ແຕ່ວ່າ ບໍ່ມີເດັກຍິງໃນໂຮງຮຽນດັ່ງກ່າວລາຍງານວ່າເຄີຍນຳໃຊ້ຢາເສບຕິດ.[43]

ຜູ້ໃຫ້ຂໍ້ມູນໃນທຸກພາກຂອງປະເທດ ແລະ ທຸກກຸ່ມອາຍຸ ໄດ້ກ່າວວ່າການ**ໃຊ້ຢາບ້າ** (methamphetamine) ແມ່ນເປັນບັນຫາສຳຄັນ. ເຖິງແມ່ນວ່າບໍ່ມີຂໍ້ມູນຈະແຈ້ງກ່ຽວກັບອັດຕາການນຳໃຊ້ຢາບ້າໃນ ສປປ ລາວ ກໍ່ຕາມ,  ແຕ່ບັນຫາດັ່ງກ່າວ ໄດ້ເພີ່ມຄວາມກັງວົນໃຈ ໃຫ້ແກ່ບັນດາກະຊວງ ແລະ ຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງ.

ຢາບ້າ ແມ່ນເປັນບັນຫາທີ່ກ່າວເຖິງເປັນສ່ວນຫຼາຍ ຮອງຈາກເຫຼົ້າເບຍ ແລະ ຢາສູບ. ສ່ວນສານເສບຕິດອື່ນໆທີ່ໄດ້ກ່າວເຖິງໃນການສຳພາດ ລວມມີສານລະເຫີຍ (ການດົມກາວ) ແລະ ກິນຫຼືສູບຝິ່ນ, ເຖິງຢ່າງໃດກໍ່ຕາມ ສິ່ງເຫຼົ່ານີ້ ຍັງຖືກກ່າວເຖິງໜ້ອຍກວ່າບັນຫາຢາບ້າ. ການສຶກສາກ່ຽວກັບຜູ້ໃຊ້ຢາເສບຕິດໃນກຸ່ມຊາວໜຸ່ມ ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ ພົບວ່າຜູ້ໃຫ້ຂໍ້ມູນສ່ວນໃຫ່ຍເລີ່ມໃຊ້ຢາເສບຕິດຕອນອາຍຸລະຫວ່າງ 15-19 ປີ.[44]

> *ພວກເຂົາທັງກິນ ແລະ ຂາຍ (ຢາ).*
> ຜູ້ຊາຍ, 20-24 ປີ,
> ໃນເຂດຕົວເມືອງ

ການເສບຢາບ້າສ່ວນໃຫຍ່ ແມ່ນໃນກຸ່ມເພດຊາຍ, ເຖິງແມ່ນວ່າໃນບາງກໍລະນີ, ຜູ້ປົກຄອງ ແລະ ນາຍບ້ານໄດ້ກ່າວວ່າ ຊາວໜຸ່ມຍິງບາງຄົນອາດໃຊ້ ການຂາຍບໍລິການທາງເພດ ເປັນບ່ອນຫາເງິນເພື່ອຊື້ຢາບ້າເພື່ອເສບຕິດ, ນີ້ສະແດງໃຫ້ເຫັນວ່າ ມີການນຳໃຊ້ຢາບ້າໃນກຸ່ມຊາວໜຸ່ມຍິງ ເຊັ່ນກັນ, ເຖິງແມ່ນວ່າຈະຢູ່ໃນວົງຈຳກັດ. ການຕິດຢາບ້າເປັນບັນຫາທີ່ພົ້ນເດັ່ນທີ່ສຸດ ໃນເຂດຕົວເມືອງ ແລະ ຊົນນະບົດ, ຫຼາຍກວ່າຊົນນະບົດເຂດທີ່ມີຫົນທາງເຂົ້າເຖິງຍາກ.

ທຸກໆແຂວງທີ່ໄດ້ລົງເກັບກຳຂໍ້ມູນໃນການວິໄຈນີ້ ໄດ້ຍົກບັນຫາກ່ຽວກັບ ຢາບ້າ, ແລະ ສາຍພົວພັນກັບອາດຊະຍາກຳ ແລະ ຄວາມຮຸນແຮງ. ຄວາມຮຸນແຮງທີ່ກ່ຽວພັນກັບຢາບ້າ ແມ່ນເຫັນໄດ້ຢ່າງຈະແຈ້ງໃນທຸກແຂວງ ແລະ ໄດ້ຍົກຂຶ້ນໃນກຸ່ມສົນທະນາກັບຊາວໜຸ່ມ, ພໍ່ແມ່ ແລະ ອຳນາດການປົກຄອງບ້ານ ເຊັ່ນ ຄວາມຮຸນແຮງຈາກຄວາມຫິວຢາ, ຫຼື ຄວາມຮຸນແຮງ/ການນາບຂູ່ຈາກກຸ່ມອັນຕະພານ, ນັກຄ້າຢາ ແລະ ຜູ້ອື່ນໆ ທີ່ພົວພັນກັບການຄ້າຢາບ້າ. ຄວາມຢ້ານກົວຕໍ່ກັບຄວາມຮຸນແຮງຈາກຜູ້ທີ່ມີສ່ວນຮ່ວມໃນການຄ້າຢາ ເຮັດໃຫ້ປະຊາຊົນບໍ່ກ້າລາຍງານກ່ຽວກັບຜູ້ຄ້າຢາ (ເຖິງວ່າຈະ ແມ່ນກຸ່ມອາຍຸນ້ອຍ) ເຊິ່ງຊັກຈູງຊາວໜຸ່ມໃຫ້ໃຊ້ ແລະ ຂາຍຢາບ້າ. ຫຼັງຈາກຕິດຢາ, ຊາວໜຸ່ມອາດຕ້ອງລັກເຄື່ອງຈາກຄອບຄົວຂອງຕົນເອງ, ເພື່ອນບ້ານ ແລະ ໝູ່ເພື່ອນ ເພື່ອຕອບສະໜອງຄວາມຕ້ອງການຢາຂອງຕົນເອງ.

> *ບໍ່ມີຜູ້ໃດກ້າລາຍງານຕໍ່ອຳນາດການປົກຄອງ ເພາະພວກເຂົາຢ້ານວ່າຜູ້ທີ່ຕິດຢາ ຈະສ້າງບັນຫາໃຫ້ກັບພວກເຂົາ.*
> ອຳນາດການປົກຄອງເມືອງ, ໃນເຂດຊົນນະບົດ

ມີເຫດຜົນຫຼາຍຢ່າງທີ່ໄດ້ຍົກຂຶ້ນຕໍ່ກັບການໃຊ້ຢາບ້າ. ອີງຕາມການສຶກສາ ກ່ຽວກັບ ຊາວໜຸ່ມທີ່ຕິດຢາບ້າໃນນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນໄດ້ເຮັດໃຫ້ຮູ້ວ່າ ຈຸດເລີ່ມຕົ້ນທຳອິດຂອງການນາໃຊ້ຢາແມ່ນມາຈາກ ການຊັກຊວນຂອງໝູ່ເພື່ອນ, ເຊິ່ງ 92.5% ຂອງຜູ້ເຂົ້າຮ່ວມການສຶກສາໄດ້ລາຍງານໃຫ້ຮູ້ວ່າ ພວກເຂົາເລີ້ມຕົ້ນທົດລອງຢາຄັ້ງທຳອິດແມ່ນຮ່ວມກັບກຸ່ມໝູ່ເພື່ອນຂອງພວກເຂົາເອງ. ການສຶກສານີ້ ຍັງໄດ້ມີຂໍ້ແນະນຳໃຫ້ມີການພັດທະນາແຜນງານ ເພື່ອນສອນເພື່ອນ ເພື່ອສອນໃຫ້ຊາວໜຸ່ມ ຮູ້ຜົນຮ້າຍຂອງການໃຊ້ຢາບ້າ, ແລະ ຄວນມີມາດຕະການທີ່ມີການປະກອບສ່ວນ ແລະ ປະສານກົມກຽວກັນ ຂອງຫຼາຍພາກສ່ວນໃນສັງຄົມ ເພື່ອຫຼຸດຜ່ອນຂະບວນການຜະລິດຢາ, ຄວາມຕ້ອງ ແລະ ຄວາມອັນຕະລາຍ.[45]

> *ຜູ້ຊາຍເຮັດວຽກໜັກ, ພວກເຂົາເມື່ອຍ ແລະ ຈຶ່ງໃຊ້ຢາບ້າ.*
> ແມ່ຍິງ, 15-19 ປີ, ໃນເຂດຊົນນະບົດ

ການໃຊ້ຢາບ້າຂອງຊາວໜຸ່ມຈຳນວນໜຶ່ງ ແມ່ນອາດເລີ້ມຈາກໃຊ້ເພື່ອເປັນຢາຊູກຳລັງບໍ່ໃຫ້ອິດເມື່ອຍ, ເຊັ່ນ ໃນກຸ່ມຄົນຂັບລົດ, ພະນັກງານຮັກສາຄວາມປອດໄພ ແລະ ຜູ້ທີ່ຢູ່ຕາມຊົນນະບົດ ທີ່ເຮັດວຽກຕາມໄຮ່ນາ ແລະ ໃນປ່າ ເພື່ອເຮັດໃຫ້ພວກເຂົາຮູ້ສຶກບໍ່ເຫງົານອນ, ສົດຊື່ນຢູ່ຕະຫຼອດ, ແລະ ເພີ່ມກຳລັງໃຫ້ພວກເຂົາ. ສ່ວນຊາວໜຸ່ມອື່ນໆ ສ່ວນໃຫຍ່ຢູ່ໃນເຂດຕົວເມືອງ ການໃຊ້ຢາບ້າແມ່ນອາດຍ້ອນຢາກລອງສິ່ງໃໝ່ໆ ແລະ ເຮັດຕາມໝູ່ເພື່ອນ, ເຊິ່ງອາດກ້າວໄປເຖິງເຮັດໃຫ້ພວກ

---

42 UNICEF and MoE (2009). *Assessment Life-Skills Curriculum Project in Lao PDR. Scaling up the response for Children*

43 *Ibid.*

44 Burnet Institute, CHAS and UHS (2009). *Amphetamine Type Stimulant Use and Sexually Transmitted Infection Risk among Young People in Vientiane Capital and Vientiane Province, Lao PDR.*

45 *Ibid.*

ເຂົາເປັນຜູ້ຂາຍຢາໃຫ້ຄົນອື່ນເພື່ອຈະໄດ້ມີເງິນມາຊື້ຢາກິນ. ໃນທາງກົງກັນຂ້າມ ຊາວໜຸ່ມບາງຄົນອາດເລີ້ມຕົ້ນດ້ວຍການຂາຍຢາບ້າເພື່ອສ້າງລາຍຮັບ ແຕ່ສຸດທ້າຍກໍ່ກາຍເປັນຜູ້ເສບເອງ.

### 3.2.2 ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ

ຊາວໜຸ່ມບາງຈຳນວນ ໃນ ສປປ ລາວ, ທັງຜູ້ທີ່ແຕ່ງງານແລ້ວ ແລະ ຍັງບໍ່ທັນແຕ່ງງານ, ມີເພດສຳພັນ. ບົດລາຍງານການສຳຫຼວດດັດຊະນີໝາຍທາງສັງຄົມລາວ *LSIS* ລາຍ ງານວ່າ 26.8% ຂອງເພດຍິງ ແລະ 20.8% ຂອງເພດຊາຍ ອາຍຸ 15-19 ປີ ມີ ເພດສຳພັນໃນຊ່ວງ 12 ເດືອນກ່ອນການສຳຫຼວດ. ຕົວເລກ ດັ່ງກ່າວເພີ່ມ ຂຶ້ນເປັນ 70% ສຳລັບ ທັງເພດຍິງ ແລະ ເພດຊາຍໃນກຸ່ມອາຍຸ 20-24 ປີ. ການສຶກສາກ່ຽວກັບນັກຮຽນມັດທະຍົມຕອນປາຍເພດຊາຍ ພົບວ່າ 31% ຂອງເພດຊາຍ ອາຍຸ 16-19 ປີ ເຄີຍມີເພດສຳພັນ, ໂດຍອາຍຸສະເລ່ຍ ຂອງການມີເພດສຳພັນຄັ້ງທຳອິດແມ່ນ 16.8 ປີ.[46] ການສຶກສາດ້ານຄຸນະພາບກ່ຽວກັບພຶດຕິກຳທາງເພດຂອງຊາວໜຸ່ມຍິງ ເຫັນວ່າ ຊາວໜຸ່ມຍິງຈຳນວນຫຼາຍຢູ່ນະຄອນຫຼວງວຽງຈັນມີເພດສຳພັນກ່ອນການແຕ່ງງານ. ຢູ່ໃນການສຶກສາກ່ຽວກັບພຶດຕິກຳທາງເພດຂອງຊາວໜຸ່ມຍິງ, ຊຶ່ງແມ່ນການສຳຫຼວດດ້ານປະລິມານ ກວມເອົາຊາວໜຸ່ມຍິງຈຳນວນ 832 ຄົນ ອາຍຸ 15-24 ປີ ທີ່ເປັນນັກຮຽນ (ຈາກໂຮງຮຽນ, ວິທະຍາໄລ ແລະ ມະຫາວິທະຍາໄລ), ລູກຄ້າຮ້ານເບຍ, ກຳມະກອນໂຮງງານຕັດຫຍິບ, ແມ່ຍິງທີ່ພົບໃນສະຖານທີ່ສາທາລະນະຕ່າງໆ (ເຊັ່ນ ຮ້ານຊັບພະສິນຄ້າ ແລະ ສະຖານທີ່ພັກຜ່ອນ), ແລະ ພະນັກງານຂອງສະຖານທີ່ບັນເທີງ/ໂຮງແຮມ; ໄດ້ພົບວ່າ 19.1% ຂອງຊາວໜຸ່ມແມ່ຍິງທີ່ຍັງບໍ່ທັນແຕ່ງງານ ເຄີຍມີເພດສຳພັນ.[47]

ການສຶກສາຄົ້ນຄວ້າຈາກການສົນທະນາກຸ່ມຂອງການວິໄຈນີ້ ກໍ່ຍັງຢັ້ງຢືນວ່າຊາວໜຸ່ມ ຢູ່ ສປປ ລາວ ແມ່ນມີ ການພົວພັນທາງເພດສຳພັນ ທັງໃນຕົວເມືອງ ແລະ ຊົນນະບົດ. ຢູ່ໃນຕົວເມືອງ ສິ່ງທີ່ສະທ້ອນໃຫ້ເຫັນຈາກແນວຄວາມຄິດທາງດ້ານສິນລະທຳກ່ຽວກັບເພດສຳພັນທີ່ມີການປ່ຽນແປງໃນກຸ່ມຊາວໜຸ່ມອາຍຸ 15-19 ປີ. ຢູ່ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ເສັ້ນທາງເຂົ້າເຖິງຍາກ, ການມີເພດສຳພັນອາດເກີດຂຶ້ນ ໃນກຸ່ມອາຍຸທີ່ນ້ອຍກວ່າກຸ່ມໃນຕົວເມືອງ, ແຕ່ສ່ວນຫຼາຍຈະນຳໄປສູ່ການອອກໂຮງຮຽນ ແລະ ການແຕ່ງງານແຕ່ອາຍຸຍັງນ້ອຍ. ທັງຊາວໜຸ່ມຍິງ ແລະ ຊາວໜຸ່ມຊາຍ ໃນທຸກກຸ່ມອາຍຸຕ່າງກໍ່ເວົ້າເຖິງການຫຼີ້ນທີ່ພົວພັນໄປເຖິງການມີເພດສຳພັນ, ຜົນກະທົບຂອງມັນ ເຊັ່ນ ການຖືພາແບບບໍ່ຕ້ອງການ ແລະ ພຕພ.

**ບັນດາພຶດຕິກຳທາງເພດທີ່ມີຄວາມສ່ຽງ**, ລວມທັງການນຳໃຊ້ຖົງຢາງອານາໄມໃນອັດຕາຕ່ຳ ແລະ ການມີຄູ່ຮ່ວມເພດຫຼາຍຄົນ ແມ່ນກໍ່ເຫັນໄດ້ຢ່າງຊັດເຈນວ່າເກີດຂຶ້ນໃນກຸ່ມຊາວໜຸ່ມເຊັ່ນກັນ ໂດຍສະເພາະໃນບາງກຸ່ມຊົນເຜົ່າ, ເຊັ່ນ ຊາວໜຸ່ມຊົນເຜົ່າ ອາຄາ. ອີງຕາມການສຶກສາວິໄຈ ກ່ຽວກັບຊາວໜຸ່ມ ອາຍຸ 14-19 ປີ ຢູ່ແຂວງຫຼວງນ້ຳທາ ພຶດຕິກຳສ່ຽງທີ່ກ່ຽວພັນເຖິງເພດສຳພັນ, ການກິນເຫຼົ້າ ແລະ ເສບຢາ ແມ່ນພົບເຫັນໃນອັດຕາສ່ວນທີ່ສູງທີ່ສຸດ ໃນກຸ່ມຊາວໜຸ່ມອາຄາ ແລະ ຕ່ຳທີ່ສຸດໃນກຸ່ມຊາວໜຸ່ມຊົນເຜົ່າມົ້ງ ແລະ ຢ້າວ.[48] ຄວາມແຕກຕ່າງດັ່ງກ່າວນີ້ ອາດກ່ຽວພັນກັບຄວາມເຊື່ອຖືຮີດຄອງປະເພນີດັ້ງເດີມ (ເບິ່ງຫ້ອງທາງຂ້າງກ່ຽວກັບຊົນເຜົ່າອາຄາ ໃນພາກເໜືອຂອງ ສປປ ລາວ).

ດັ່ງທີ່ໄດ້ກ່າວຜ່ານມາແລ້ວ, ການບໍລິໂພກຂອງມຶນເມົາ ສ່ວນຫຼາຍເປັນປັດໃຈກະຕຸ້ນໃຫ້ເກີດມີພຶດຕິກຳສ່ຽງ ທາງເພດສຳພັນຂອງຊາວໜຸ່ມຍິງ ແລະຊາຍ.[49] ໃນການສຶກສາວິໄຈກ່ຽວກັບ ນັກຮຽນເພດຊາຍໃນຊັ້ນມັດທະຍົມຕອນປາຍ, ມີພຽງແຕ່ 43% ຂອງ ຊາວໜຸ່ມຊາຍ ໄດ້ນຳໃຊ້ຖົງຢາງອານາໄມທຸກຄັ້ງກັບຄູ່ຮ່ວມເພດຊົ່ວຄາວ ແລະ ປະມານເຄິ່ງໜຶ່ງ ລາຍງານວ່າໄດ້ນຳໃຊ້ຖົງຢາງອານາໄມໃນເວລາມີເພດສຳພັນຄັ້ງຫຼ້າສຸດ.[50] ໃນການສຶກສາວິໄຈຫຼາຍຂະແໜງການ ຊຶ່ງມີການສຸ່ມຕົວແທນຈຳນວນ 913 ຄົນ, ອາຍຸ 16-19 ປີ ຢູ່ແຂວງ ຫຼວງນ້ຳທາ, ເຫັນວ່າ 55.7% ຂອງ ຊາວໜຸ່ມໄດ້ມີເພດສຳພັນໃນໄລຍະ 6 ເດືອນຜ່ານມາ, 44.1% ມີຄູ່ຮ່ວມເພດຫຼາຍຄົນໃນໄລຍະ 6 ເດືອນຜ່ານມາ ແລະ 51.7 % ບໍ່ໄດ້ນຳໃຊ້ຖົງຢາງອານາໄມເມື່ອມີເພດສຳພັນຄັ້ງຫຼ້າສຸດ.[51]

ໃນການສຶກສາປີ 2010 ກ່ຽວກັບກຸ່ມຜູ້ປ່ຽນເພດຈາກເພດຊາຍມາເປັນເພດຍິງ (MtF)[52] ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງ ສະຫວັນນະເຂດ (84% ຂອງຜູ້ເຂົ້າຮ່ວມການສຶກສານີ້ ອາຍຸລະ ຫວ່າງ 15-24 ປີ), 47% ລາຍງານວ່າມີຄູ່ຮ່ວມເພດຫຼາຍກວ່າໜຶ່ງຄົນໃນໄລຍະ 12 ເດືອນຜ່ານມາ ແລະ ໄດ້ນຳໃຊ້ຖົງຢາງຢ່າງຕໍ່ເນື່ອງ (CCU) ໃນລະຫວ່າງການມີເພດສຳພັນທາງຮູທະວານແມ່ນ 55% ກັບຄູ່ຮ່ວມເພດປົກກະຕິ, 75% ກັບຄູ່ຮ່ວມເພດຊົ່ວຄາວ ແລະ 87% ກັບຄູ່ນອນທີ່ມີການແລກປ່ຽນ.[53] ໃນອີກການສຶກສາຄົ້ນຄວ້າໜຶ່ງໃນປີ 2010 ກ່ຽວກັບ ພຶດຕິກຳຂອງຜູ້ຊາຍທີ່ສາມາດມີ

---

[46] Thanavanh B, Harun-Or-Rashid M, Kasuya H, Sakamoto J. (2013). *Knowledge, attitudes and practices regarding HIV/AIDS among male high school students in Lao Peoples Democratic Republic.* J Int AIDS Soc. 2013;16:17387.

[47] Department of Health of Vientiane Capital, Burnet Institute and United Nations Population Fund (2008). *Young Womens Sexual Behavior Study, Vientiane Capital, the Lao Peoples Democratic Republic.*

[48] Sychareun V, Thomsen S, Faxelid E. (2011). *Concurrent multiple health risk behaviors among adolescents in Luangnamtha province, Lao PDR.* BMC Public Health: p.36.

[49] The content of all upcoming text boxes are either translations of Lao language quotes or represent paraphrases extracted from the conducted interviews.

[50] Thanavanh B, Harun-Or-Rashid M, Kasuya H, Sakamoto J. (2013). *Knowledge, attitudes and practices regarding HIV/AIDS among male high school students in Lao Peoples Democratic Republic.* J Int AIDS Soc. 2013;16:17387.

[51] Sychareun V, Thomsen S, Faxelid E. (2011). *Concurrent multiple health risk behaviors among adolescents in Luangnamtha province, Lao PDR.* BMC Public Health: p.36.

[52] Transgender youth were not included in any of the focus groups and as such are not identified specifically in future gender-based analysis

[53] Phimphachan C, Phanalasy S, Phommanivong V, Scott A, Gray R, Mundy G. (2010). *First Round HIV/STI Prevalence and Behavioral*

ເຜົ່າ ອາຄາ ໃນພາກເໜືອ ຂອງ ສປປ ລາວ

ຊົນເຜົ່າອາຄາມີຄວາມເຊື່ອວ່າ ຮີດຄອງປະເພນີການເລີ້ມຕົ້ນເປັນຊາວໜຸ່ມ ແມ່ນມີຄວາມສໍາຄັນໃນການພັດທະນາທາງດ້ານຮ່າງກາຍ ແລະ ສັງຄົມ. ສໍາລັບເດັກຍິງ, ປະເພນີ ແມ່ນລວມທັງການ "ເສຍຄວາມບໍລິສຸດ" (ອາທ່ອງທ່ອງ) ຊຶ່ງຜູ້ຊາຍທີ່ມີອາຍຸ ແລະ ມີປະສົບການ ຈະມີເພດສໍາພັນກັບເດັກຍິງ 11 ຫາ 15 ປີ ກ່ອນທີ່ພວກເຂົາຈະມີປະຈໍາເດືອນ. ຫຼັງຈາກນັ້ນ ເດັກຍິງຈະຮ່ວມລັບນອນກັບຫຼາຍຄົນ ຈົນກວ່າພວກເຂົາຈະຖືພາລູກຜູ້ທໍາອິດ.

ສໍາລັບເດັກຊາຍ, ປະເພນີ "ການເປີດໜັງຫຸ້ມ ອາໄວຍະວະເພດ" (ຢາຫາຫົ) ເດັກຊາຍ ອາຍຸລະຫວ່າງ 12-15 ປີ ຕ້ອງໄດ້ຊອກຫາຜູ້ຍິງທີ່ມີອາຍຸ ແລະ ມີປະສົບການ ເພື່ອການມີເພດສໍາເພດຄັ້ງທໍາອິດ.

ອີກປະເພນີໜຶ່ງ ແມ່ນ "ການຮັບຕ້ອນແຂກ" (ອາທໍທາຢັ້ງ) ເຊິ່ງມີຄວາມຄາດຫວັງວ່າຍິງສາວພາຍຫລັງເສຍຄວາມບໍລິສຸດ ຕ້ອງໄດ້ຮັບແຂກການປະຕິບັດເຫຼົ່ານີ້, ລວມທັງການມີເພດສໍາພັນນໍາກັນກັບຄູ່ຮ່ວມເພດຫຼາຍຄົນໃນເວລາດຽວກັນອາດເພີ່ມຄວາມສ່ຽງຂອງການຕິດ ແລະ ສິ່ງຕໍ່ພະຍາດຕິດຕໍ່ທາງເພດສໍາພັນ ແລະ ເຊື້ອເຮສໄອວີ. ຊາວໜຸ່ມ ແລະ ກຸ່ມຕົວແທນຂອງຊາວໜຸ່ມ ຄວນໄດ້ເຂົ້າຮ່ວມໃນການວາງແຜນສຸຂະພາບ ເພື່ອພັດທະນາມາດຕະການປ້ອງກັນພະຍາດ ແລະ ຫຼຸດຜ່ອນຄວາມສ່ຽງ ທີ່ແທດເໝາະກັບສັງຄົມຂອງເຜົ່າອາຄາ ແລະ ຖືກຍອມຮັບ ໃນກອບວັດທະນະທໍາຂອງພວກເຂົາ.

ເອກະສານອ້າງອີງ: Sychareun V, Faxelid E, Thomsen S, Somphet V, Popenoe R. Customary adolescent sexual practices among the Akha of northern Lao PDR: considerations for public health. Cult Health Sex. 2011 Dec;13 Suppl 2:S249-62.

ເພດສໍາພັນກັບທັງເພດຍິງ ແລະ ຊາຍ ແລະ ຂອງຄູ່ຮ່ວມເພດຂອງເຂົາເຈົ້າ ຢູ່ນະຄອນຫຼວງວຽງຈັນ (ອາຍຸສະເລັ່ຍ 22 ປີ), ຜູ້ຊາຍທີ່ສາມາດມີເພດສໍາພັນກັບທັງຍິງ ແລະ ຊາຍ ໄດ້ລາຍງານວ່າໃນປີຜ່ານມາພວກເຂົາມີຄູ່ຮ່ວມເພດສະເລ່ຍ 8 ຄົນ ແລະ 14% ລາຍງານວ່າມີການນໍາໃຊ້ຖົງຢາງອານາໄມຢ່າງຕໍ່ເນື່ອງກັບຄູ່ນອນທຸກຄົນ.[54] ບົດລາຍງານການຕິດຕາມຜົນຢ່າງຕໍ່ເນື່ອງ (TRaC) ແນະນໍາໃຫ້ມີການສົ່ງເສີມການປັບປຸງການກວດ ພຕພ ແລະ ເຮສໄອວີ (HIV) ແລະ ຂໍ້ຄວາມການສື່ສານເພື່ອປ່ຽນແປງພຶດຕິກໍາທີ່ພົວພັນກັບການນໍາໃຊ້ຖົງຢາງອານາໄມ ແລະ ນໍ້າຢາຫຼໍ່ລື້ນ.[55]

ຈາກ**ການປະເມີນຜົນຂອງແຜນງານສົ່ງເສີມການໃຊ້ຖົງຢາງອານາໄມ** ປີ 2008 ພົບວ່າຊາວໜຸ່ມ ໄດ້ຮັບຂໍ້ມູນຂ່າວສານກ່ຽວກັບຖົງຢາງອານາໄມມາຈາກໂຮງຮຽນ, ໂທລະພາບ, ໂປສເຕີ ແລະ ປ້າຍໂຄສະນາ; ໃນການສຶກສາກ່ຽວກັບນັກຮຽນຊາຍໃນຊັ້ນມັດທະຍົມ ຕອນປາຍ, 62% ຂອງນັກຮຽນຊາຍ ເວົ້າວ່າແຫຼ່ງຂໍ້ມູນຫຼັກ ແມ່ນມາຈາກໂທລະພາບ ແລະ ຮອງລົງມາແມ່ນຈາກວິທະຍຸ.[56] ການປະເມີນຫຼັກສູດທັກສະຊີວິດ ເຊິ່ງໄດ້ຈັດຕັ້ງປະຕິບັດໃນບາງໂຮງຮຽນ ຢູ່ໃນ ສປປ ລາວ ພົບວ່ານັກຮຽນໃນໂຮງຮຽນທີ່ໄດ້ສອນຫຼັກສູດທັກສະຊີວິດ ມີຄວາມເຂົ້າໃຈຜິດໜ້ອຍກວ່າກ່ຽວກັບ ເຊື້ອ HIV ແລະ ມີຄວາມຮູ້ດີກວ່າກ່ຽວກັບຖົງຢາງອະນາໄມ. ດັ່ງນັ້ນ ການປະເມີນດັ່ງກ່າວ ຈຶ່ງມີຂໍ້ສະເໜີແນະໃຫ້ເອົາວິຊາທັກສະຊີວິດເຂົ້າໃນຫຼັກສູດຫຼັກຂອງການຮຽນໃນທົ່ວປະເທດ, ແລະ ຮັບປະກັນວ່າ ຄູອາຈານ ແລະ ໂຮງຮຽນ ຄວາມສາມາດໃນການສອນ ແລະ ການຕິດຕາມກວດກາໃນທຸກລະດັບໄດ້ຮັບການປັບປຸງ.[57] ກຸ່ມສົນທະນາຍັງໄດ້ເວົ້າວ່າ ມີພະນັກງານເຂົ້າມາໃນບ້ານເພື່ອໂອລົມ ກ່ຽວກັບຖົງຢາງອະນາໄມ.

*ມີການໃຫ້ສຸຂະສຶກສາຜ່ານລາຍການວິທະຍຸ ແລະ ໂທລະພາບ ແຕ່ຊາວໜຸ່ມບໍ່ສົນໃຈ*
ອໍານາດການປົກຄອງບ້ານ, ໃນເຂດເມືອງຕົວເມືອງ

ການປະເມີນແຜນງານສົ່ງເສີມການໃຊ້ຖົງຢາງອານາໄມ ປີ 2008 ສະ ແດງໃຫ້ຮູ້ວ່າ ຊາວໜຸ່ມບາງຄົນມີຄວາມຕ້ອງການຢາກໃຊ້ຖົງຢາງອານາໄມ ແຕ່ບໍ່ສາມາດຊື້ໄດ້, ເຊິ່ງເປັນບັນຫາສໍາລັບຊາວໜຸ່ມໃນກຸ່ມສ່ຽງເຊັ່ນດຽວກັນ (ຊາວໜຸ່ມ ໃນກຸ່ມປະຊາກອນສະເພາະ).[58] ນອກຈາກນັ້ນ, ສໍາລັບ ຍິງສາວແລ້ວ ສັງຄົມຖືວ່າເປັນເລື່ອງຜິດສິນທໍາ ຖ້າວ່າພວກເຂົາຫາກມີຖົງຢາງອານາໄມໃນຄອບຄອງ ຫລືວ່າ ຊື້ຖົງຢາງອານາໄມ.[59] ການປະເມີນນີ້ ໄດ້ໃຫ້ຄໍາແນະນໍາກ່ຽວກັບ ການສືບຕໍ່ພັດທະນາໂຄງການສະໜັບສະໜູນ ແລະ ສົ່ງເສີມການຈັດຊື້ ແລະ ແຈກຢາຍ ຖົງຢາງອານາໄມທີ່ມີຄຸນນະພາບ ກໍ່ຄືການປັບປຸງລະບົບພາລາທິການ/ການຂົນສົ່ງ ຂອງຖົງຢາງອານາໄມ (condom logistics system).[60] ອຸປະສັກອື່ນໆຕໍ່ກັບການນໍາໃຊ້ຖົງຢາງອານາໄມ ອາດລວມມີຄວາມພໍໃຈ/ຄວາມບໍ່ສະດວກສະບາຍ, ສິ່ງຈູງໃຈດ້ານການເງິນທີ່ເຮັດໃຫ້ບໍ່ຕ້ອງການໃຊ້ຖົງຢາງອານາ

*Tracking Survey among Male-to-Female Transgenders in Vientiane Capital and Savannakhet, Lao PDR.* Vientiane, Lao PDR: Population Services International

54 Van Gemert C, Vongsaiya K, Hughes C, Jenkinson R, Bowring AL, Sihavong A, et al. (2013). *Characteristics of a Sexual Network of Behaviorally Bisexual Men in Vientiane, Lao PDR, 2010:* AIDS Educ Prev.; 25:p.232-43.

55 PSI and CHAS (2010). TRaC: *Tracking Results Continuously.*

56 Thanavanh B, Harun-Or-Rashid M, Kasuya H, Sakamoto J. (2013). *Knowledge, attitudes and practices regarding HIV/AIDS among male high school students in Lao Peoples Democratic Republic.* J Int AIDS Soc. 2013;16:17387.

57 UNICEF and MoE (2009). *Assessment Life-Skills Curriculum Project in Lao PDR. Scaling up the response for Children*

58 UNICEF Lao PDR and Ministry of Health (2011). *A Rapid Assessment: Most-At-Risk Adolescents and Young People to HIV in Lao PDR.* Bangkok.

59 MoH and UNFPA (2008). *Assessment of Condom Programming in Lao PDR.*

60 UNICEF and MoE (2009). *Assessment Life-Skills Curriculum Project in Lao PDR. Scaling up the response for Children*

ໄມ ແລະ ຄວາມໃກ້ຊິດສະໜິດສະໜົມເຮັດໃຫ້ເກີດຄວາມໄວ້ວາງໃຈ.[61] ວຽກງານການຕະຫຼາດຄອນມິການຕິດພັນກັບຍຸດທະສາດຕ່າງໆເພື່ອເຮັດໃຫ້ການນຳໃຊ້ຖົງຢາງອານາໄມເປັນເລື່ອງທຳມະດາ ແລະ ກ່ຽວພັນກັບຄວາມຮັກ ແລະ ຄວາມໃກ້ຊິດສະໜິດສະໜົມ.[62]

*ໄປກັບຜູ້ຍິງຄົນໜຶ່ງ ແຕ່ລືມຖົງຢາງອະນາໄມ ຜູ້ຊາຍ,15-19 ປີ, ໃນເຂດຕົວເມືອງ*

ສຳລັບບັນຫາສຸຂະພາບທາງເພດໂດຍລວມ, ຜົນຂອງການສຶກສາຄົ້ນຄວ້າ ກ່ຽວກັບພຶດຕິກຳທາງເພດຂອງແມ່ຍິງ ໄດ້ເນັ້ນໃສ່ຄວາມເປັນຂອງການສະໜອງ ແລະ ການເຂົ້າເຖິງການບໍລິການສຸຂະພາບຈະເລີນພັນທີ່ເປັນມິດສຳລັບຊາວໜຸ່ມ ກໍ່ຄື ການໃຫ້ຄຳປຶກສາກ່ຽວກັບເລື່ອງເພດ, ການຖືພາ, ການເອົາລູກອອກ ແລະ ການວາງແຜນຄອບຄົວ. ນອກຈາກນັ້ນ ຍັງແນະນຳການມີສ່ວນຮ່ວມຂອງຜູ້ປົກຄອງ ເພື່ອໃຫ້ພວກເຂົາສາມາດຜ່ານຜ່າບັນຫາການສື່ສານ ແລະ ການໃຫ້ຄຳປຶກສາແກ່ລູກໆທີ່ກຳລັງຢູ່ໃນຊ່ວງຊາວໜຸ່ມ.[63]

ບັນຫາຂອງການມີເພດສຳພັນແບບຖືກບີບບັງຄັບ ແມ່ນປະເດັນໜຶ່ງທີ່ສຳຄັນທີ່ຖືກຍົກຂຶ້ນໃຫ້ເຫັນໃນການສຶກສາຄົ້ນຄວ້ານີ້ ເຊິ່ງ 22.4% ຂອງຊາວໜຸ່ມຍິງ ໃນນະຄອນຫຼວງວຽງຈັນກ່າວວ່າ ພວກເຂົາເຈົ້າເຄີຍຖືກບີບບັງຄັບໃຫ້ມີເພດສຳພັນໂດຍຄູ່ຮັກ. ກໍລະນີນີ້ ແມ່ນພົບເຫັນໂດຍສະເພາະກັບຜູ້ທີ່ເລີ່ມມີເພດສຳພັນ ແຕ່ອາຍຸຍັງນ້ອຍ: 52% ຂອງຜູ້ທີ່ມີເພດສຳພັນຄັ້ງທຳອິດ ຕອນອາຍຸ 16 ປີ ຫຼື ຕໍ່າກວ່າ ເຄີຍຖືກບີບບັງຄັບໃຫ້ມີເພດສຳພັນ ທຽບກັບ 18.5% ຂອງຜູ້ທີ່ມີເພດສຳພັນຄັ້ງທຳອິດຕອນອາຍຸຫລາຍກວ່າ 16 ປີ.[64] ນອກຈາກນັ້ນ, ການສຶກສາ IBBS ໃນປີ 2008 ກ່ຽວກັບຜູ້ຂາຍບໍລິການທາງເພດຢູ່ ສີ່ແຂວງ ພົບວ່າ 22% ຖືກບັງຄັບໃຫ້ຂາຍບໍລິການທາງເພດ.[65] ບົດລາຍງານທີ່ມີຊື່ວ່າ ການຫຍິບເສັ້ນສາຍ ຫຼື Sewing the Line ແນະນຳໃຫ້ມີການພັດທະນາການຂະບວນການໂຄສະນາການປູກຈິດສຳນຶກມວນຊົນ ດ້ວຍເປົ້າໝາຍເພື່ອປ່ຽນແປງທັດສະນະທາງດ້ານບົດບາດຍິງ-ຊາຍ ກ່ຽວກັບການຂົ່ມຂືນ ແລະ ການບັງຄັບໃຫ້ມີເພດສຳພັນ.[66]

ໃນຂະນະທີ່**ອັດຕາການຕິດເຊື້ອໂລກເອດ** ໃນກຸ່ມປະຊາກອນທົ່ວໄປແມ່ນຍັງຕໍ່າ, ທີ່ມີອັດຕາຄາດຄະເນໄວ້ປະມານ 0.2%,[67] ແຕ່ພຶດຕິກຳທີ່ມີຄວາມສ່ຽງສູງຕໍ່ການຕິດເຊື້ອເຮສໄອວີ ແມ່ນຍັງຖືເປັນເລື່ອງທຳມະດາ ແລະ ການຂະຫຍາຍໂຕທາງດ້ານເສດຖະກິດທີ່ໄວວາ, ການປ່ຽນແປງທາງສັງຄົມ ແລະ ທີ່ຕັ້ງທາງພູມສັນຖານ ອາດເຮັດໃຫ້ການຕິດເຊື້ອເຮສໄອວີ ເພີ່ມຂຶ້ນໄວ. ສູນຕ້ານເອດ ແລະ ພະຍາຍາດຕິດຕໍ່ທາງເພດ (CHAS) ໄດ້ເກັບກຳຂໍ້ມູນແຍກຕາມອາຍຸ ກ່ຽວກັບກໍລະນີເຊື້ອເຮສໄອວີ. ສຳລັບ ປີ 2010, 2011 ແລະ 2012, ຈຳນວນກໍລະນີໃໝ່ ທີ່ຕິດເຊື້ອເຮສໄອວີ ຂອງຜູ້ມີອາຍຸ 15 ຫາ 24 ປີ ແມ່ນ 98, 126 ແລະ 102 ຕາມລຳດັບ, ກວມເອົາປະມານ 16.7%, 18.8% ແລະ 15.9% ຂອງກໍລະນີໃໝ່ທັງໝົດໃນແຕ່ລະປີ. ຈຳນວນກໍລະນີໃໝ່ໃນກຸ່ມອາຍຸ 10-14 ແມ່ນຍັງຕໍ່າ, ຊຶ່ງແຕ່ລະປີມີ 1 ຫາ 2 ກໍລະນີ.[68] ເຖິງຢ່າງໃດກໍ່ຕາມ, ເຊື້ອເຮສໄອວີ ມີຜົນກະທົບຕໍ່ກັບປະຊາກອນກຸ່ມໃດໜຶ່ງ. ເຖິງແມ່ນວ່າ 48% ຂອງຜູ້ຕິດເຊື້ອ ແມ່ນແມ່ຍິງ[69], ຊາວໜຸ່ມທີ່ມີຄວາມສ່ຽງເພີ່ມຂຶ້ນຕໍ່ການຕິດເຊື້ອເຮສໄອວີ ລວມມີຊາວໜຸ່ມຊາຍ ທີ່ມີເພດສຳພັນກັບຊາຍ (MSM) ແລະ ຊາວໜຸ່ມທີ່ມີການປ່ຽນເພດ, ຊາວໜຸ່ມຍິງທີ່ຂາຍບໍລິການທາງເພດ ແລະ ຊາວໜຸ່ມທີ່ນຳໃຊ້ຢາເສບຕິດແບບສັກເຂົ້າເສັ້ນເລືອດ.[70]

ການມີເພດສຳພັນລະຫວ່າງຊາຍກັບຊາຍ ແມ່ນມີການລາຍງານວ່າໄດ້ເກີດຂຶ້ນໂດຍທົ່ວໄປໃນກຸ່ມຊາວໜຸ່ມ ຢູ່ ສປປ ລາວ. ໃນການສຶກສາວິໄຈໃນກຸ່ມນັກຮຽນມັດທະຍົມຕອນປາຍເພດຊາຍ, 15% ລາຍງານວ່າເຄີຍມີເພດສຳພັນທາງຮູທະວານ ຫຼື ທາງປາກ ກັບຜູ້ຊາຍ,[71] ໃນຂະນະທີ່ການສຶກສາວິໄຈກ່ອນໜ້າ (2004) ໃນກຸ່ມຊາວໜຸ່ມຊາຍອາຍຸ 18-30 ປີ, 18.5% ລາຍງານວ່າມີເພດສຳພັນທາງຮູທະວານ ຫລື ທາງປາກກັບຜູ້ຊາຍ, ໃນນັ້ນ 55% ລາຍງານວ່າມີເພດສຳພັນທາງຮູທະວານ.[72] ຜູ້ຊາຍທີ່ມີເພດສຳພັນກັບຊາຍ ແລະ ຜູ້ຊາຍທີ່ປ່ຽນເພດເປັນຍິງ (MtF) ໄດ້ຮັບຜົນກະທົບຢ່າງຫຼວງຫຼາຍຈາກເຊື້ອເຮສໄອວີ. ໃນຂະນະທີ່ຂໍ້ມູນແຍກກຸ່ມອາຍຸແມ່ນມີຈຳກັດ, ການສຶກສາວິໄຈກ່ຽວກັບຜູ້ຊາຍທີ່ມີເພດສຳພັນກັບຊາຍ ປີ 2007 ຢູ່ນະຄອນຫຼວງວຽງຈັນ, ເຊິ່ງຜູ້ເຂົ້າຮ່ວມມີອາຍຸສະເລ່ຍ ແມ່ນ 21 ປີ ພົບວ່າອັດຕາການຕິດເຊື້ອເຮສໄອວີ ແມ່ນ 5.6%; ແລະ ບໍ່ມີຂໍ້ມູນການຄາດຄະເນຫຼ້າສຸດອື່ນໆ

[61] UNICEF Lao PDR and Ministry of Health (2011). *A Rapid Assessment: Most-At-Risk Adolescents and Young People to HIV in Lao PDR.* Bangkok.

[62] *Ibid.*

[63] Department of Health of Vientiane Capital, Burnet Institute and United Nations Population Fund (2008). *Young Womens Sexual Behavior Study, Vientiane Capital, the Lao Peoples Democratic Republic.*

[64] *Ibid.*

[65] CHAS/MoH, USAID, FHI, Global Fund, ADB and UNAIDS (2008). *Integrated Behavioural Biological Surveillance (IBBS).*

[66] Care, AusAid and the Lao Womens Union (2012). *Sewing the Line; A qualitative baseline analysis of the risks and opportunities posed for young women by migration from rural Laos to Vientiane for the purpose of employment in the garment industry.*

[67] Centre for HIV/AIDS/STI (CHAS) (2012). Global AIDS Response Progress (GARP)- *Country Report, Lao PDR.*

[68] Centre for HIV/AIDS/STI (CHAS) (2012). *Lao PDR HIV/AIDS Case Report 2012.*

[69] UNAIDS (2012). *Report on the Global Aids Epidemics.*

[70] UNICEF Lao PDR and the Ministry of Health (2011). *A Rapid Assessment: Most-At-Risk Adolescents and Young People to HIV in Lao PDR.* Bangkok.

[71] Thanavanh B, Harun-Or-Rashid M, Kasuya H, Sakamoto J. (2013). *Knowledge, attitudes and practices regarding HIV/AIDS among male high school students in Lao Peoples Democratic Republic.* J Int AIDS Soc.;16:p.17387.

[72] Toole M, Coghlan B, Xeuatvongsa A, Holmes W, Pheualavong S, Chanlivong N. (2006). *Understanding male sexual behaviour in planning HIV prevention programmes: lessons from Laos, a low prevalence country. Sex Transm Infect. 82:p.135-8.*

ທີ່ມີຢູ່ໃນປະຈຸບັນ.[73] ໃນການສຶກສາກ່ຽວກັບຊາວໜຸ່ມທີ່ມີການປ່ຽນເພດຈາກຊາຍເປັນຍິງໃນປີ 2010, 4.2% ໄດ້ກວດພົບວ່າຕິດເຊື້ອເຮສໄອວີ, 12% ເປັນໜອງໃນແທ້, 32% ເປັນໜອງໃນທຽມ ແລະ 6.5% ມີການຕິດເຊື້ອ ພຕພ ຫຼາຍຢ່າງໃນເວລາດຽວກັນ.[74] ໃນວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນນີ້, ບໍ່ມີກຸ່ມສົນທະນາກຸ່ມໃດ ຍົກບັນຫາການມີເພດສຳພັນລະຫວ່າງຊາຍກັບຊາຍ ຫຼື ຍິງກັບຍິງ ຂຶ້ນເພື່ອສົນທະນາ.

ໃນປີ 2010, ອົງການ UNICEF ໄດ້ດຳເນີນການປະເມີນແບບໄວວາ ທີ່ກວມເອົາການສຳພາດ ແລະ ກຸ່ມສົນທະນາກັບຊາວໜຸ່ມຈຳນວນ 72 ຄົນ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອເອດ, ໃນນັ້ນປະກອບດ້ວຍຊາວໜຸ່ມທີ່ເປັນຜູ້ນຳໃຊ້ຢາເສບຕິດ, ຜູ້ຂາຍບໍລິການທາງເພດ, ແລະ ກຸ່ມ LGBT. ກ່ຽວກັບການສະໜອງການບໍລິການສຸຂະພາບ, ຊາວໜຸ່ມໃນກຸ່ມປະຊາກອນສະເພາະນີ້ ໄດ້ສະແດງຄວາມຕ້ອງການຢາກໃຫ້ມີ ຄລີນິກທີ່ເປັນທີ່ແຍກສະເພາະເຈາະຈົງ, ມີແຜນງານທີ່ເຊື່ອມເຂົ້າກັບໂຮງໝໍ ແລະ ຄລີນິກທົ່ວໄປ, ແລະ ສູນຂອງຊາວໜຸ່ມທີ່ສາມາດນຳໃຊ້ສຳລັບຫຼາຍຈຸດປະສົງ. ລັກສະນະທີ່ສຳຄັນຂອງການບໍລິການທີ່ພວກເຂົາຕ້ອງການປະກອບດ້ວຍ: ການຮັກສາຄວາມລັບ, ພະນັກງານແພດທີ່ບໍ່ມີອັກຄະຕິ, ຄວາມຊຳນານດ້ານການແພດ ແລະ ສິ່ງແວດລ້ອມທີ່ເປັນມິດ. ສຳລັບອຸປະສັກຂອງການເຂົ້າເຖິງການບໍລິການທີ່ໄດ້ຍົກຂຶ້ນ ລວມມີ ການກີດກັ້ນຕົນເອງ, ຄ່າໃຊ້ຈ່າຍ, ການຮັກສາຄວາມລັບ, ທີ່ຕັ້ງ, ຊົ່ວໂມງການບໍລິການ ແລະ ຢ້ານກົວຕໍ່ບັນດາຂັ້ນຕອນທີ່ລ້ວງລໍ້າຄວາມເປັນສ່ວນຕົວ[75], ຊຶ່ງຜູ້ຂາຍບໍລິການທາງເພດທີ່ເປັນເພດຍິງກໍ່ພົບພໍ້ອຸປະສັກດຽວກັນນີ້.[76] ບັນຫາການຂາດການຮັກສາຄວາມລັບ ຍັງຖືກຢືນຢັນຈາກກຸ່ມສົນທະນາວ່າແມ່ນອຸປະສັກ ໃນການເຂົ້າເຖິງສະຖານທີ່ບໍລິການ. ດັ່ງນັ້ນ, ຂໍ້ສະເໜີແນະເພື່ອພິຈາລະນາເພື່ອແກ້ໄຂບັນຫາອຸປະສັກດັ່ງກ່າວ ປະກອບດ້ວຍ: ຄລີນິກເຄື່ອນທີ່ ຫຼື ຄລີນິກຫຼັງໂມງການ; ແຜນງານຕ່າງໆເພື່ອຫຼຸດຜ່ອນການຈຳແນກ ແລະ ເພີ່ມຄວາມເອົາໃຈໃສ່ຕໍ່ຄວາມຕ້ອງການຂອງຊາວໜຸ່ມທີ່ມີຄວາມສ່ຽງສູງ; ການເຂົ້າເຖິງໂຮງໝໍຂອງລັດຖະບານ ແລະ ຄລີນິກ, ລວມທັງ ສ້າງສາຍພົວພັນລະຫວ່າງອົງການຈັດຕັ້ງທາງສັງຄົມ ແລະ ການບໍລິການຂອງລັດຖະບານ; ການລະດົມ ແລະ ການຝຶກອົບຮົມໃຫ້ແກ່ຊາວໜຸ່ມທີ່ມີຄວາມສ່ຽງສູງ (ໃນກຸ່ມປະຊາກອນສະເພາະ) ໃຫ້ເປັນອາສາສະໝັກ ຫຼື ພະນັກງານ ເພື່ອຮັບຄົນໄຂ້ ແລະ ປະເມີນໃນການບໍລິການຂອງລັດຖະບານ ແລະ ເອກະຊົນ.[77]

> *ໂດຍສະເພາະ ແມ່ນສຳລັບຜູ້ຊາຍທີ່ມີເມຍນ້ອຍ*
>
> ແມ່ຍິງ, 20-24 ປີ, ໃນເຂດຕົວເມືອງ

ໃນການສົນທະນາກຸ່ມຂອງການວິໄຈນີ້ ບັນຫາເຊື້ອໂລກເອດບໍ່ຄ່ອຍໄດ້ຖືກຍົກຂຶ້ນ ແລະ ປາກົດວ່າບໍ່ເປັນບັນຫາໃຫຍ່ໃນຊຸມຊົນທ້ອງຖິ່ນ; ແລະ ຖ້າຖືກຍົກຂຶ້ນ ສ່ວນຫຼາຍແມ່ນກ່ຽວກັບການຂາຍບໍລິການທາງເພດໃນປະເທດອື່ນ. ເຖິງແມ່ນວ່າ ອັດຕາການຕິດເຊື້ອຢູ່ໃນລະດັບຕໍ່າ ໃນ ສປປ ລາວ, ຊາວໜຸ່ມສ່ວນຫຼາຍ (80% ຂອງ ຊາວໜຸ່ມອາຍຸ 15-19 ປີ) ລາຍງານວ່າ ພວກເຂົາເຄີຍໄດ້ຍິນກ່ຽວກັບເຮສໄອວີ/ພະຍາດເອດ ເຖິງວ່າລະດັບຄວາມຮູ້ຮອບດ້ານແມ່ນຍັງຕໍ່າ, ອີງຕາມບົດຄົ້ນຄວ້າ 2 ບົດໄດ້ສະແດງໃຫ້ເຫັນວ່າ ມີແຕ່ 1 ໃນ 4 ຂອງຊາວໜຸ່ມ ອາຍຸ 15-19 ປີ ມີຄວາມຮູ້ຮອບດ້ານດ້ານກ່ຽວກັບເຮສໄອວີ/ພະຍາດເອດ.[78,79]

ໃນການສຶກສາພຶດຕິກຳທາງເພດຂອງຍິງໜຸ່ມສຳລັບຊາວໜຸ່ມຍິງທີ່ມີອາຍຸ 15-24 ປີ ສະແດງໃຫ້ ເຫັນວ່າ 25.6% ມີເພດສຳພັນ ແລະ 18% ຂອງກຸ່ມດັ່ງກ່າວ ລາຍງານວ່າ ໄດ້ມີເພດສຳພັນທີ່ມີ**ການແລກປ່ຽນທາງການເງິນ ຫຼື ສິ່ງຂອງ**.[80] ຢູ່ໃນບາງກຸ່ມສົນທະນາຍັງໄດ້ ເວົ້າເຖິງການມີເພດສຳພັນທີ່ມີການແລກປ່ຽນທາງການເງິນຫຼືສິ່ງຂອງ, ໂດຍສະເພາະຢູ່ໃນເຂດຕົວເມືອງ ແລະໃນກຸ່ມນັກສຶກສາມະຫາວິທະຍາໄລ, ທີ່ມີຄວາມຈຳເປັນໃນການໃຊ້ຈ່າຍເຄື່ອງນຸ່ງຮົ່ມ ຫຼື ເຕັກໂນໂລຊີໃໝ່ ເປັນຕົ້ນ ໂທລະສັບມືຖື. ເຖິງແມ່ນວ່າ ມີການລາຍງານອັດຕາການຕິດເຊື້ອເຮສໄອວີ ທີ່ຕໍ່າໃນແມ່ຍິງທີ່ຂາຍບໍລິການທາງເພດຢູ່ ສປປ ລາວ (<1%), ແຕ່ວ່າ ອັດຕາການການຕິດພະຍາດ ພຕພ ຂ້ອນຂ້າງສູງ ຊຶ່ງໜອງໃນທຽມ ແມ່ນ 18% ແລະ 7% ແມ່ນໜອງໃນແທ້.[81] ໃນການສຶກສາຂອງຜູ້ຂາຍບໍລິການທາງເພດ ທີ່ເປັນເພດຍິງຈຳນວນ 407 ຄົນ (49% ຂອງກຸ່ມ ດັ່ງກ່າວມີອາຍຸ 19 ປີ ຫຼື ໜຸ່ມກວ່ານັ້ນ), 86% ໄດ້ລາຍງານດ້ວຍຕົນເອງວ່າ ພວກເຂົາມີອາການອັກເສບຂອງອະໄວຍະວະສືບພັນ ຫຼື ອາການຂອງ ພຕພ ໃນໄລຍະສາມເດືອນຜ່ານມາ.[82] ນອກຈາກ ການເຈັບເປັນທີ່ພົວພັນ ໂດຍກົງກັບການຕິດເຊື້ອເຫຼົ່ານີ້, ພຕພ ອາດເພີ່ມຄວາມສ່ຽງໃນການຕິດເຊື້ອ ແລະ ການສົ່ງຕໍ່ເຊື້ອເຮສໄອວີ.

---

73 Sheridan S, Phimphachanh C, Chanlivong N, Manivong S, Khamsyvolsvong S, Lattanavong P, et al. (2009). *HIV prevalence and risk behaviour among men who have sex with men in Vientiane Capital, Lao Peoples Democratic Republic*, 2007; 23:p.409-14.

74 Phimphachan C, Phanalasy S, Phommanivong V, Scott A, Gray R, Mundy G. (2010). *First Round HIV/STI Prevalence and Behavioral Tracking Survey among Male-to-Female Transgenders in Vientiane Capital and Savannakhet, Lao PDR.* Vientiane, Lao PDR: Population Services International.

75 UNICEF. A Rapid Assessment: *Most-At-Risk Adolescents and Young People to HIV in Lao PDR.* Bangkok: UNICEF Lao PDR and the Ministry of Health; 2011.

76 Phrasisombath K, Thomsen S, Sychareun V, Faxelid E. (2012). *Care seeking behaviour and barriers to accessing services for sexually transmitted infections among female sex workers in Laos: a cross-sectional study.* BMC Health Serv Res. 12(1):p.37.

77 UNICEF Lao PDR and the Ministry of Health (2011). *A Rapid Assessment: Most-At-Risk Adolescents and Young People to HIV in Lao PDR.* Bangkok.

78 UNICEF and MoE (2009). *Scaling up the response for Children Life-Skills Based Curriculum Project in Lao PDR.*

79 Thanavanh B, Harun-Or-Rashid M, Kasuya H, Sakamoto J. (2013). *Knowledge, attitudes and practices regarding HIV/AIDS among male high school students in Lao Peoples Democratic Republic.* J Int AIDS Soc.;16:p.17387.

80 Department of Health of Vientiane Capital, Burnet Institute and United Nations Population Fund (2008). *Young Womens Sexual Behavior Study, Vientiane Capital, the Lao Peoples Democratic Republic.*

81 *Ibid.*

82 Phrasisombath K, Thomsen S, Sychareun V, Faxelid E. (2012). *Care seeking behaviour and barriers to accessing services for sexually transmitted infections among female sex workers in Laos: a cross-sectional study.* BMC Health Serv Res. 12(1):p.37.

ໃນພາສາລາວ, ຄຳວ່າ 'ສາວບໍລິການ' ໄດ້ຖືກນຳໃຊ້ເພື່ອອະທິບາຍຜູ້ຂາຍບໍລິການທາງເພດທີ່ເປັນເພດຍິງ, ຜູ້ທີ່ເຮັດວຽກຢູ່ນອກບາ ແລະ ສະຖານທີ່ບັນເທີງອື່ນໆ. ມີເຂົ້າໃຈວ່າແມ່ຍິງບໍລິການສ່ວນຫຼາຍແມ່ນເປັນຊາວໜຸ່ມ: ໃນການສຳຫຼວດ IBBS ປີ 2008, ທີ່ມີສາວບໍລິການ ເຂົ້າຮ່ວມ, 84% ຂອງສາວບໍລິການມີອາຍຸລະຫວ່າງ 15-24 ປີ[83], ຊຶ່ງ 17% ຂອງສາວບໍລິການໄດ້ລາຍງານ ວ່າມີຫຼາຍຄູ່ຮ່ວມເພດແບບຊື້ວຄາວຫຼາຍຄົນ ໃນ 3 ເດືອນຜ່ານມາ, 17% ມີຄູ່ຮ່ວມເພດແບບປະຈຳ ໃນ 3 ເດືອນຜ່ານມາ, ສະເລ່ຍຈຳນວນຄູ່ຮ່ວມເພດ ແມ່ນສອງຄົນໃນໄລຍະໜຶ່ງອາທິດທີ່ຜ່ານມາ.[84]

> *ໄວໜຸ່ມ ອາຍຸ 15-19 ປີ, ພວກເຂົາຫຼີ້ນນຳກັນ ຫຼັງຈາກນັ້ນມີເພດສຳພັນໂດຍບໍ່ມີການປ້ອງກັນ.*
>
> ຜູ້ຊາຍ, 20-24 ປີ, ໃນເຂດຕົວເມືອງ

ຄວາມກັງວົນກ່ຽວກັບ ພຕພ ຕ່າງກໍ່ໄດ້ຍົກຂຶ້ນໃນການສົນທະນາກຸ່ມຂອງທັງເພດຊາຍ ແລະ ເພດຍິງ ໃນເຂດຕົວເມືອງ ແລະ ຊົນນະບົດ. ຢູ່ໃນເຂດຕົວເມືອງມີການເຂົ້າເຖິງຂໍ້ມູນກ່ຽວກັບ ພຕພ ຫຼາຍສົມຄວນ, ແຕ່ຍ້ອນຫຼາຍເຫດຜົນ ຊາວໜຸ່ມບໍ່ປະຕິບັດການມີເພດສຳພັນທີ່ປອດໄພ. ຢູ່ໃນເຂດຊົນນະບົດ, ໂດຍສະເພາະຢູ່ໃນເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ, ການຂາດຄວາມຮູ້ກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ບໍ່ສາມາດເຂົ້າເຖິງຖົງຢາງອານາໄມ ແລະ ວິທີການຄຸມກຳເນີດອື່ນໆ ພາໃຫ້ເກີດມີການຖືພາທີ່ບໍ່ຕ້ອງການ ແລະ ການຕິດ ພຕພ. ຍັງມີການຈຳແນກລັງກຽດຂອງສັງຄົມຕໍ່ກັບການມີເພດສຳພັນກ່ອນການແຕ່ງງານ ສ້າງຄວາມອາຍ ຫຼື ໜ້າອາຍທີ່ຈະເຂົ້າຫາຜູ້ໃຫ້ບໍລິການສຸຂະພາບ, ທີ່ພວກເຂົາບໍ່ໄວ້ໃຈວ່າ ຈະຮັກສາຄວາມລັບຂອງເຂົາເຈົ້າໄດ້.

ການມີເພດສຳພັນກ່ອນການແຕ່ງງານ ໄດ້ກາຍເປັນເລື່ອງທີ່ຍອມຮັບໄດ້ຫຼາຍຂຶ້ນ ສຳລັບໜຸ່ມສາວທັງຍິງ ແລະ ຊາຍ. ຄຽງຄູ່ກັບການຂາດສຸຂະສຶກສາດ້ານສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນຢ່າງພຽງພໍ, ບັນຫາ ນີ້ເຮັດໃຫ້ເກີດມີຄວາມເປັນຫ່ວງເປັນໃຍ ຫຼາຍຂຶ້ນຕໍ່ກັບການແຜ່ລະບາດຂອງ ພຕພ ລວມທັງ ເຊື້ອເຮສໄອວີ, ແລະ ການເກີດກໍລະນີການຖືພາແບບບໍ່ຕ້ອງການ ແລະ ການເອົາລູກອອກແບບຜິດກົດໝາຍ ແລະ ບໍ່ປອດໄພ ຢູ່ໃນປະເທດ ແລະ ຢູ່ປະເທດໃກ້ຄຽງ, ຊຶ່ງມີຜົນສະທ້ອນທາງລົບຈາກການກະທຳດັ່ງກ່າວຕໍ່ກັບສຸຂະພາບ ທາງເພດ ແລະ ສຸຂະພາບຈະເລີນພັນຂອງຍິງໜຸ່ມໃນອະນາຄົດ.

> *ຊາວໜຸ່ມຊາຍ 15-19 ປີ ພຽງຕ້ອງການທົດລອງ (ມີເພດສຳພັນ) ແລະ ພວກເຂົາບໍ່ມີການປ້ອງກັນ ແລະ ສຸດທ້າຍຕິດ ພຕພ*
>
> ຜູ້ຊາຍ, 20-24 ປີ, ໃນເຂດຕົວເມືອງ.

ໂດຍສະເພາະໃນເຂດຕົວເມືອງ, ການມີເພດສຳພັນແຕ່ອາຍຸຍັງນ້ອຍ ແມ່ນເລື່ອງໜ້າເປັນຫ່ວງ ພາໃຫ້ມີການແຕ່ງງານແຕ່ຍັງນ້ອຍ, ການຖືພາທີ່ບໍ່ຕ້ອງການ ແລະ ການເອົາລູກອອກທີ່ຜິດກົດໝາຍ ແລະ/ຫຼື ການເອົາລູກອອກແບບບໍ່ປອດໄພ. ໃນທາງກົງກັນຂ້າມ, ບາງຄັ້ງພໍ່ແມ່ຢູ່ເຂດຊົນນະບົດກໍ່ສະໜັບສະໜູນການແຕ່ງງານແຕ່ຍັງໜຸ່ມນ້ອຍ, ເນື່ອງຈາກມັນເປັນປະເພນີຂອງເຂົາເຈົ້າ.

ພໍ່ແມ່ ແລະ ອຳນາດການປົກຄອງທ້ອງຖິ່ນ ລວມທັງພະສົງ, ກ່າວວ່າ ບັນຫາຂອງຊາວໜຸ່ມ ແມ່ນໄດ້ຮັບອິດທິພົນມາຈາກວັດທະນະທຳອື່ນ, ອິນເຕີເນັດ ແລະ ການກົດດັນຂອງໝູ່ຄູ່ ແລະ ການຂາດຄວາມຮູ້ກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ. ເຖິງແມ່ນວ່າຈະມີລາຍການວິທະຍຸ ແລະ ໂທລະພາບ ກ່ຽວກັບສຸຂະພາບ, ຊາວໜຸ່ມບໍ່ມີຄວາມສົນໃຈ. ຢູ່ໃນບາງເຂດ, ຊົນເຜົ່າຍັງມີຄວາມຈຳກັດໃນການເຂົ້າເຖິງຂໍ້ມູນ ເນື່ອງຈາກອຸປະສັກຕ່າງໆທາງພາສາ.

ບັນດາຄູ່ຮ່ວມງານ ໄດ້ລະບຸວ່າ ຍັງຂາດການບໍລິການສຸຂະພາບທີ່ເນັ້ນໜັກໃສ່ສະເພາະຊາວໜຸ່ມ. ໃນຂະນະທີ່ ມີສະຖານທີ່ສະໜອງບໍລິການ, ແຕ່ສະຖານທີ່ດັ່ງກ່າວ ຍັງບໍ່ສາມາດສະແດງໃຫ້ເຫັນວ່າ ມີການຄຸ້ມຄອງບໍລິຫານຂໍ້ມູນປິດລັບທີ່ມີປະສິດຕິຜົນ ແລະ ປາສະຈາກການຈຳແນກ ຫຼື ລັງກຽດ.

## 3.2.3 ການມີລູກແຕ່ຍັງນ້ອຍ

ໃນ ສປປ ລາວ, ການຈະມີລູກ ແມ່ນເລີ່ມຕັ້ງແຕ່ອາຍຸຍັງນ້ອຍ ເຊິ່ງໃນນັ້ນ 17.8% ຂອງຜູ້ຍິງທີ່ມີ ອາຍຸ 15-19 ປີ ແມ່ນໄດ້ເລີ້ມເກີດລູກ, ແລະ 18.2% ຂອງຜູ້ຍິງ ອາຍຸ 20-24 ປີ ໄດ້ເກີດລູກກ່ອນອາຍຸ 18 ປີ.[85] ການເກີດລູກແຕ່ຍັງນ້ອຍ ແມ່ນເຫັນໄດ້ຢ່າງຈະແຈ້ງ ໃນເຂດຊົນນະບົດ ຊຶ່ງອັດຕາການຈະເລີນພັນຂອງ ຊາວໜຸ່ມ ແມ່ນ 114 ເດັກເກີດ ຕໍ່ ແມ່ຍິງ 1000 ຄົນ ໃນກຸ່ມອາຍຸ 15-19 ປີ (LSIS). ການມີລູກແຕ່ຍັງນ້ອຍ ແລະ ອັດຕາການຈະເລີນພັນທີ່ສູງ ພົວພັນກັບຂົງເຂດຊົນນະບົດ (23.7% ຂອງແມ່ຍິງ ໃນເຂດຊົນນະບົດ ອາຍຸ 20-24 ປີ ມີລູກແຕ່ອາຍຸຍັງນ້ອຍ ທຽບໃສ່ 5.9% ຂອງແມ່ຍິງໃນກຸ່ມອາຍຸດຽວກັນໃນເຂດຕົວເມືອງ). ການມີລູກແຕ່ຍັງນ້ອຍ ແລະ ອັດຕາການຈະເລີນພັນທີ່ສູງ ຍັງກ່ຽວພັນເຖິງ ລະດັບການສຶກສາ, ສະພາບຄອບຄົວທຸກຍາກ ແລະ ກຸ່ມຊົນເຜົ່າ (ຮູບສະແດງ 2). ການມີລູກແຕ່ຍັງນ້ອຍ ແມ່ນມີອັດຕາສ່ວນທີ່ສູງ ໃນໝວດພາສາມົ້ງ-ມຽນ (38.7%).[86]

---

[83] CHAS/MoH, USAID, FHI, Global Fund, ADB and UNAIDS (2008). *Integrated Behavioural Biological Surveillance (IBBS).*

[84] CHAS/MoH, USAID, FHI, Global Fund, ADB and UNAIDS (2008). *Integrated Behavioural Biological Surveillance (IBBS).*

[85] UNICEF (2012). *Multiple Inidcator Cluster Surveys Indicator for early childbearing/MICS4 Indicators: Nymerators and Denominators, version 3,* http://www.childinfo.org/mics4_questionnaire.html.

[86] *Ibid.*

**ຮູບສະແດງ 2: ການມີລູກແຕ່ຍັງນ້ອຍ (ສ່ວນຮ້ອຍຂອງແມ່ຍິງ ອາຍຸ 20-24 ທີ່ເກີດລູກມີຊີວິດໜຶ່ງຄົນ ກ່ອນອາຍຸ 18) ແບ່ງຕາມ ເຂດທີ່ພັກອາໄສ, ລະດັບການສຶກສາ, ດັດຊະນີຄວາມຮັ່ງມີ ແລະ ກຸ່ມພາສາປາກເວົ້າ (LSIS 2011-2012)**




ນອກຈາກຖົງຢາອະນາໄມ, ທີ່ບໍ່ຄ່ອຍໄດ້ນຳໃຊ້, ຊາວໜຸ່ມຍັງມີຂໍ້ຈຳກັດ ຫຼື ບໍ່ສາມາດເຂົ້າເຖິງການຄຸມກຳເນີດ ສຳລັບຜູ້ທີ່ຍັງບໍ່ທັນໄດ້ແຕ່ງງານ ໃນ ສປປ ລາວ. ສະນັ້ນ, ຈຶ່ງສົ່ງຜົນໃຫ້ມີການຖືພາແບບບໍ່ຕັ້ງໃຈ ເນື່ອງຈາກການມີເພດສຳພັນແບບບໍ່ປ້ອງກັນ, ແລະ ການເອົາລູກອອກ.

*ກິນຢາ ເພື່ອເອົາລູກອອກ ຍ້ອນພວກເຂົາບໍ່ຕ້ອງການເດັກ.*
ເພດຊາຍ, 10-14 ປີ, ໃນເຂດຊົນນະບົດ

*ຊາວໜຸ່ມບາງຄົນຈະເອົາລູກອອກແບບຜິດກົດໝາຍ, ບາງຄົນຈະຊື້ຢາມາກິນເຮັດໃຫ້ລຸລູກ; ບາງຄົນຈະໄປຕ່າງປະເທດ ເພື່ອເອົາລູກອອກ; ຖ້າຜູ້ຍິງຄົນນັ້ນຮູ້ວ່າຕົນເອງຖືພາໄດ້ສອງເດືອນ, ລາວຈະກິນຢາເພື່ອເອົາລູກອອກ; ມີຢາທີ່ສາມາດເຮັດໃຫ້ລຸລູກໄດ້ ສະນັ້ນແມ່ຍິງບາງຄົນກິນຢາດັ່ງກ່າວ.*
ນາຍບ້ານ, ໃນຕົວເມືອງ; ອຳນາດການປົກຄອງເມືອງ, ເຂດຊົນນະບົດ

ຕົວຢ່າງ ໃນນະຄອນຫຼວງວຽງຈັນ, ຫຼາຍກວ່າ 20% ຂອງຊາວໜຸ່ມຍິງທີ່ເຄີຍມີເພດສຳພັນ ໄດ້ລາຍງານວ່າໄດ້ມີການເອົາລູກອອກ,[87] ແລະ ການສຶກສາວິໄຈ IBBS ພົບວ່າ 71% ຂອງຜູ້ໃຫ້ບໍລິການທາງເພດໄດ້ມີການເອົາລູກອອກ.[88] ບາງກຸ່ມໂດຍສະເພາະຊາວໜຸ່ມຍິງໃນຊົນນະບົດ ແລະ ຕົວເມືອງ ອາຍຸ 15-19 ປີ, ໄດ້ເດີນທາງອອກໄປປະເທດເພື່ອນບ້ານ ເພື່ອເອົາລູກອອກ.

ແຕ່ວ່າ ບໍ່ແມ່ນທຸກຄົນຈະສາມາດນຳໃຊ້ວິທີການນີ້ໄດ້ ພວກເຂົາຈຶ່ງຕ້ອງໄດ້ເພິ່ງພາ ແລະ ນຳໃຊ້ວິທີທາງອື່ນໆທີ່ມີຢູ່ພາຍໃນປະເທດ. ເນື່ອງຈາກວ່າ ການມີເພດສຳພັນກ່ອນແຕ່ງງານແມ່ນບໍ່ເປັນທີ່ຍອມຮັບ, ຈຶ່ງເຮັດໃຫ້ ຊາວໜຸ່ມມີຄວາມຫຍຸ້ງຍາກ ໃນການເຂົ້າຫາການບໍລິການດູແລດ້ານສຸຂະພາບກ່ຽວກັບ ພຕພ ແລະ ການຖືພາ ໂດຍ ທີ່ບໍ່ຖືກລັງກຽດ ແລະ ຈຳແນກ. ຂໍ້ມູນຈາກບັນດານາຍບ້ານ ຍັງຢືນຢັນວ່າ ການເອົາລູກອອກແມ່ນ ເກີດຂຶ້ນເລື້ອຍ ແລະ ການນຳໃຊ້ຢາເພື່ອເອົາລູກອອກກໍ່ຖືກນຳໃຊ້ຢ່າງແຜ່ຫຼາຍ.

## 3.2.4 ພະຍາດທີ່ມາຈາກຍຸງ

ພະຍາດທີ່ມາຈາກຍຸງ ມີບົດບາດສຳຄັນຕໍ່ກັບດ້ານສຸຂະພາບຂອງຊາວໜຸ່ມ. ທັງໄຂ້ມາລາເລຍ ແລະ ໄຂ້ເລືອດອອກ ເປັນສາເຫດສຳຄັນພາໃຫ້ມີການສູນເສຍຊີວິດຫຼາຍ ໃນ ສປປ ລາວ, ສະນັ້ນ ຈຶ່ງເປັນບັນຫາສຸຂະພາບທີ່ໜ້າເປັນຫ່ວງ (ໃນລະຫວ່າງການເກັບຂໍ້ມູນມີໜຶ່ງຢູ່ພາກສະໜາມ ຂອງການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ໄດ້ມີການແຜ່ລະບາດຂອງ ພະຍາດໄຂ້ມາລາເລຍ ແລະ ໄຂ້ເລືອດອອກ). ຄວາມສ່ຽງແມ່ນມີຄວາມກ່ຽວພັນ ແລະ ເຊື່ອມໂຍງກັບສະພາບພູມສັນຖານຂອງຊີວິດ: ຊຶ່ງໃນເຂດຊົນນະບົດທາງພາກໃຕ້ ມີການລະບາດຂອງໄຂ້ມາລາເລຍ, ສ່ວນໃນທາງພາກກາງ ແລະ ພາກເໜືອ ຕາມເຂດຕົວເມືອງມີຄວາມສ່ຽງຕໍ່ການເກີດໄຂ້ເລືອດອອກຫຼາຍກວ່າ.

---

[87] Care, AusAid and the Lao Womens Union (2012). *Sewing the Line; A qualitative baseline analysis of the risks and opportunities posed for young women by migration from rural Laos to Vientiane for the purpose of employment in the garment industry.*

[88] CHAS/MoH, USAID, FHI, Global Fund, ADB and UNAIDS (2008). *Integrated Behavioural Biological Surveillance (IBBS).*

ເປັນທີ່ຮັບຮູ້ໂດຍປະຊາຊົນທົ່ວໄປຢ່າງກວ້າງຂວາງ ວ່າຍຸງເປັນພາຫະນຳເຊື້ອໄຂ້ມາລາເລຍ ເຊິ່ງການນອນໃນມຸ້ງຈະຊ່ວຍປ້ອງກັນໄດ້. ເຖິງຢ່າງໃດກໍ່ຕາມມັນເປັນສິ່ງທີ່ຍາກ ສຳລັບຊາວໜຸ່ມທີ່ຈະຫັນເອົາຄວາມຮູ້ດັ່ງກ່າວມາປະຕິບັດຕົວຈິງ: ການເຮັດວຽກໃນສວນ ແລະໃນຕອນກາງຄືນຢູ່ໃນປ່າ ເປັນສາເຫດຂອງການເປັນໄຂ້ມາລາເລຍໃນເພດຊາຍ ໃນເຂດຊົນນະບົດ ແລະ ເຂດທີ່ມີເສັ້ນທາງເຂົ້າເຖິງຍາກ, ໂດຍສະເພາະບາງເຂດໃນແຂວງພາກໃຕ້.

ໄຂ້ເລືອດອອກ ໂດຍສ່ວຍຫຼາຍຈະເປັນບັນຫາທີ່ໜ້າເປັນຫ່ວງ ໃນເຂດຕົວເມືອງທີ່ມີຄົນໜາແໜ້ນ ເຊິ່ງຊາວໜຸ່ມທີ່ເຮັດວຽກໃນຮ້ານອາຫານ ມີຄວາມສ່ຽງໃນການຕິດເຊື້ອໄຂເລືອດອອກຈາກຍຸງໃນເວລາກາງເວັນ.

ການປິ່ນປົວ ໄຂ້ມາລາເລຍ ແມ່ນສາມາດຮັບການບໍລິການຈາກຄຣີນິກສຸຂະພາບ, ໂຮງໝໍ ແລະ ພະນັກງານສຸຂະພາບຢູ່ໃນບ້ານ, ເຖິງຢ່າງໃດກໍ່ຕາມ, ຈາກການບອກເລົ່າຂອງຊາວໜຸ່ມ ບາງຄັ້ງຢາຮັກສາບໍ່ມີໃນເວລາທີ່ຕ້ອງການປິ່ນປົວ.

ຄວາມເຊື່ອຖືງົມງວາຍ ກ່ຽວກັບສາເຫດຂອງການເປັນໄຂ້ ຍັງຄົງປາກົດໃຫ້ເຫັນຢ່າງຈະແຈ້ງໃນກຸ່ມຊົນເຜົ່າ ທີ່ຢູ່ຕາມເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ.

### 3.2.5. ຄວາມເຈັບເປັນທີ່ມາຈາກ ອາຫານແລະນ້ຳ

ການເຈັບເປັນທີ່ເກີດຈາກການຂາດສຸຂະອະນາໄມ, ຂາດການເຂົ້າເຖິງນ້ຳສະອາດ ສິ່ງຜົນກະທົບທີ່ສຳຄັນຕໍ່ການເຈັບເປັນຂອງປະຊາຊົນ ໃນ ສປປ ລາວ. ເຊິ່ງເຫັນໄດ້ຢ່າງຈະແຈ້ງ ຈາກການສົນທະນາກຸ່ມວ່າ (FGDs) ພະຍາດຖອກທ້ອງ ແມ່ນເປັນບັນຫາ ໃນທຸກແຂວງ ແລະ ທຸກພາກຂອງປະເທດ. ການຂາດຄວາມຮູ້ກ່ຽວກັບສຸຂະອະນາໄມ ແລະ ຍັງມີການບໍລິໂພກອາຫານດິບຢູ່ເປັນປະຈຳ ເຮັດໃຫ້ເກີດພະຍາດຖອກທ້ອງ ແລະ ການເຈັບເປັນຈາກການມີແມ່ທ້ອງ. ນອກຈາກນີ້, ໃນບາງຊຸມຊົນຂອງຊົນນະບົດ ຍັງບໍ່ມີລະບົບນ້ຳທີ່ໄດ້ຮັບການປັບປຸງໃຫ້ສະອາດ ດັ່ງນັ້ນ ປະຊາຊົນກໍ່ຍັງຄົງຊົມໃຊ້ນ້ຳຈາກແມ່ນ້ຳໂດຍກົງ ຫຼື ຈາກນ້ຳສ້າງທີ່ມີຄຸນນະພາບຕ່ຳ. ໃນເຂດຊົນນະບົດ ແລະ ເຂດທີ່ມີເສັ້ນທາງເຂົ້າເຖິງຍາກ ໄດ້ຍົກຂຶ້ນວ່າ ບັນຫາກ່ຽວກັບໄຂ່ຫຼັງ ແລະ ພົກຍ່ຽວ ແມ່ນເກີດຈາກການຊົມໃຊ້ນ້ຳທີ່ມີຄຸນນະພາບບໍ່ດີ.

ໃນຊາວໜຸ່ມບາງກຸ່ມ, ໂດຍສະເພາະ ກຸ່ມຊາວໜຸ່ມຍິງ (ອາຍຸ 10-14 ປີ ແລະ 15-19 ປີ) ມີຄວາມຮູ້ກ່ຽວກັບສາມສະອາດ: ກິນສະອາດ, ດື່ມສະອາດ ແລະ ຢູ່ສະອາດ. ຊຶ່ງແມ່ນມາດຕະຖານດ້ານສຸຂະອະນາໄມທີ່ໄດ້ຖືກສອນໃນຊັ້ນປະຖົມ, ເພື່ອໄດ້ປັບປຸງຄວາມຮູ້ພື້ນຖານດ້ານສຸຂະອະນາໄມ ໂດຍການສົ່ງເສີມໃຫ້ມີການລ້າງມືກ່ອນການກຽມ ແລະ ກິນອາຫານ, ກິນອາຫານທີ່ສຸກເທົ່ານັ້ນ ແລະ ດື່ມນ້ຳທີ່ຜ່ານການຕົ້ມ ແລະ ເກັບຮັກສາທີ່ປອດໄພ ນອກຈາກນັ້ນ ຍັງໄດ້ມີຄວາມເຂົ້າໃຈກ່ຽວກັບການປ້ອງກັນການເພາະພັນຂອງຍຸງ ແລະ ຄວາມຈຳເປັນທີ່ຕ້ອງສຸຂະອານາໄມຕົນເອງ ແລະ ເຄື່ອງນຸ່ງຮົ່ມ.

### 3.2.6 ອຸບັດຕິເຫດ ແລະ ການບາດເຈັບ

ອຸບັດຕິເຫດທາງຖະໜົນ ເປັນບັນຫາທີ່ຫຼາຍຄົນສະແດງຄວາມເປັນຫ່ວງຢູ່ທັງ ໃນເຂດຊົນນະບົດ ແລະ ໃນຕົວເມືອງ ໂດຍສະເພາະ ແມ່ນກ່ຽວພັນກັບພຶດຕິກຳສ່ຽງຂອງຊາວໜຸ່ມຊາຍຈາກການໃຊ້ຢາເສບຕິດ ແລະ ການດື່ມເຫຼົ້າເບຍ. ອຸບັດຕິເຫດແລະການແຂ່ງລົດຈັກ ໄດ້ຖືກລະບຸວ່າເປັນປະເດັນຫຼັກໃນທຸກກຸ່ມສົນທະນາຂອງທຸກກຸ່ມອາຍຸຊາວໜຸ່ມ ແລະ ຈາກການສຳພາດ ນາຍບ້ານ ແລະ ຜູ້ປົກຄອງ. ອຸບັດຕິເຫດທາງຖະໜົນ ເປັນສາເຫດຂອງການຕາຍຫຼັກໃນຊາວໜຸ່ມຊາຍ ອາຍຸລະຫວ່າງ 10-24 ປີ.[89]

ໃນເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ໃນແຂວງສະຫວັນນະເຂດ, ບັນຫາລະເບີດທີ່ບໍ່ທັນແຕກ ໄດ້ຖືກຍົກຂຶ້ນເປັນສາຍເຫດຫຼັກທີ່ກໍ່ໃຫ້ເກີດການບາດເຈັບສຳລັບເດັກນ້ອຍ. ນີ້ເປັນບັນຫາທີ່ເປັນອຸປະສັກທາງດ້ານພູມສັນຖານ ແລະ ເປັນໜຶ່ງໃນເປົ້າໝາຍສະຫັດສະຫວັດສະເພາະ ຂອງ ສປປ ລາວ. ນອກນັ້ນ, ການຖືກໄຟຟ້າຊ໋ອດ ກໍ່ໄດ້ຖືກກ່າວເຖິງເປັນບາງຄັ້ງຄາວ ວ່າເປັນອີກບັນຫາໜຶ່ງທີ່ພາໃຫ້ມີການບາດເຈັບ, ເນື່ອງຈາກສາຍໄຟທີ່ຕົກລົງມາ ແລະ ການຕິດຕັ້ງທີ່ບໍ່ໄດ້ມາດຕະຖານ.

## 3.3 ອຸປະສັກ ຕໍ່ການປ້ອງກັນພະຍາດ ແລະ ຮັກສາສຸຂະພາບ

ການສົນທະນາກຸ່ມ (FGDs) ໄດ້ຍົກຫຼາຍເຫດຜົນວ່າເປັນຊາວໜຸ່ມ ຈຶ່ງບໍ່ສາມາດເຂົ້າເຖິງການບໍລິການປ້ອງກັນ ແລະ ປິ່ນປົວ ທີ່ພວກເຂົາຕ້ອງການ ເພື່ອປັບປຸງ ແລະ ຮັກສາສຸຂະພາບຂອງພວກເຂົາເຈົ້າ (ເອກະສານຊ້ອນທ້າຍ 9), ເຊິ່ງລວມທັງດ້ານການເຂົ້າເຖິງ, ການຍອມຮັບ, ຄວາມເທົ່າທຽມ, ຄວາມເໝາະສົມ ແລະ ປະສິດທິຜົນຂອງການບໍລິການສຸຂະພາບ.

> *ການປິ່ນປົວມີຄວາມຫຍຸ້ງຍາກທີ່ສຸດເມື່ອເຈົ້າບໍ່ສະບາຍ, ໂຮງໝໍຢູ່ໄກ, ບາງຄົນມີພາຫະນະ, ບາງຄົນບໍ່ມີພາຫະນະ, ບາງຄົນເສຍຊີວິດຍ້ອນບໍ່ສາມາດເຂົ້າເຖິງໂຮງໝໍ*
>
> ຜູ້ຊາຍ, 15-19 ປີ, ໃນເຂດຊົນນະບົດ

ອຸປະສັກບາງຢ່າງເປັນປັດໃຈ ທີ່ມີຜົນກະທົບຕໍ່ທຸກກຸ່ມອາຍຸຂອງປະຊາກອນ, ຕົວຢ່າງ ການຂາດສະຖານທີ່ໃຫ້ບໍລິການສຸຂະພາບໃນບາງບ່ອນ, ໂດຍສະເພາະໃນເຂດທີ່ມີເສັ້ນທາງເຂົ້າເຖິງຍາກ, ການຂາດເຂີນອຸປະກອນ, ຢາ ຫຼື ຜູ້ໃຫ້ບໍລິການ, ແລະ ການອາໄສການປິ່ນປົວແບບດັ້ງເດີມ; ບາງອຸປະສັກມີຜົນກະທົບຕໍ່ກັບທຸກກຸ່ມອາຍຸ, ແຕ່ອາດມີຄວາມສຳຄັນໂດຍສະເພາະຕໍ່ກັບຊາວໜຸ່ມ, ເຊັ່ນ ບໍ່ມີມຸ້ງ, ບໍ່ມີເງິນໃນການເດີນທາງ ຫຼື ຈ່າຍໃຫ້ການບໍລິການ

89 WHO (2007). *Youth and Road Safety.*

ສຸຂະພາບ, ຫຼື ຂາດຄວາມຮູ້ ລວມທັງ ດ້ານເພດສຶກສາ; ແລະ ອຸປະສັກອື່ນໆທີ່ອາດກ່ຽວຂ້ອງກັບຊາວໜຸ່ມໂດຍສະເພາະ, ຕົວຢ່າງ ທັດສະນະຄະຕິທາງສັງຄົມ ແລະ ທັດສະນະຄະຕິຂອງພະນັກງານແພດ ຕໍ່ກັບວິຖີທາງເພດຂອງຊາວໜຸ່ມ, ຊຶ່ງມີຜົນກະທົບຕໍ່ກັບການປ້ອງກັນ (ເຊັ່ນ ການເຂົ້າເຖິງຖົງຢາງອະນາໄມ) ແລະ ການປິ່ນປົວ (ເຊັ່ນ ການເຂົ້າເຖິງການປິ່ນປົວ ພຕພ). ການບໍລິການດູແລສຸຂະພາບໂດຍລວມ ຢູ່ ສປປ ລາວ ແມ່ນຕ້ອງໄດ້ເສຍຄ່າໃຊ້ຈ່າຍ.

*ບາງຄັ້ງພວກເຮົາຕ້ອງໄດ້ໃຊ້ເຮືອ, ແຕ່ພວກເຮົາບໍ່ມີເງິນທີ່ຈະໄປ*

ແມ່ຍິງ, 20-24 ປີ, ໃນເຂດຊົນນະບົດ

ນອກນັ້ນ, ຄ່າໃຊ້ຈ່າຍ ໃນການເດີນທາງ ໄປຍັງສະຖານທີ່ບໍລິການສຸຂະພາບທີ່ຫ່າງໄກ ກໍ່ຍັງເປັນຂໍ້ຈໍາກັດອັນໜຶ່ງ ສໍາລັບຄົນທີ່ຢູ່ໃນຊົນນະບົດ. ການທີ່ບໍ່ມີເງິນພຽງພໍ ເພື່ອຈ່າຍຄ່າປິ່ນປົວ ຫຼື ຈ່າຍຄ່າຢາ, ຊາວໜຸ່ມຈຶ່ງບໍ່ໄດ້ຮັບການປິ່ນປົວ ແລະ ຫັນໄປໝໍຢາພື້ນເມືອງ ຫຼື ວາງຢາປິ່ນປົວດ້ວຍຕົນເອງ ໂດຍໃຊ້ຢາທີ່ຫາຊື້ໄດ້ຕາມຕະຫຼາດ.

ຢູ່ໃນເຂດຊົນເຜົ່າ, ພະນັກງານແພດອາດບໍ່ສາມາດເວົ້າພາສາຂອງທ້ອງຖິ່ນໄດ້, ຊຶ່ງເຮັດໃຫ້ມີຄວາມຈໍາກັດຂອງດານເຂົ້າເຖິງການບໍລິການຂອງຊາວໜຸ່ມ ຊົນເຜົ່າ . ການຂາດພະນັກງານທີ່ໄດ້ການຮັບ ການຝຶກອົບຮົມ ກໍ່ລ້ວນແຕ່ສົ່ງຜົນກະທົບ ຕໍ່ຄຸນນະພາບຂອງການດູແລ, ແລະ ເປັນມີກະທົບຕໍ່ທັດສະນະຄະຕິຂອງປະຊາຊົນຕໍ່ກັບການເຂົ້າຫາການດູແລຮັກສາສຸຂະພາບ. ການຂາດເຄື່ອງມືອຸປະກອນ ແລະ ເຄື່ອງຮັບໃຊ້ທີ່ພຽງພໍ ກໍ່ເປັນອຸປະສັກຕໍ່ຄວາມສາມາດຂອງພະນັກງານແພດ ໃນການໃຫ້ການບໍລິການທີ່ມີປະສິດຕິພາບ, ໂດຍບໍ່ກ່ຽວກັບລະດັບຄວາມອາດສາມາດຂອງເຂົາເຈົ້າ.ໃນດ້ານການປ້ອງກັນ, ຫຼາຍປັດໃຈໃນຫຼາຍລະດັບທີ່ມີອິດທິພົນ ແລະ ເປັນອຸປະສັກ ຕໍ່ກັບ ຊາວໜຸ່ມ ເຊັ່ນ ໃນລະດັບບຸກຄົນ (ຕົວຢ່າງ ຂາດການສຶກສາ, ຂາດສຸຂະສຶກສາ) ຫຼື ໃນລະດັບສະພາບແວດລ້ອມ (ຕົວຢ່າງ ຂາດການເຂົ້າເຖິງນໍ້າສະອາດ, ຂາດຈິດສໍານຶກ ຫຼື ການບັງຄັບໃຊ້ກົດໝາຍຈໍລະຈອນ, ຄ່ານິຍົມທາງສັງຄົມ ແລະ ລະບຽບການຂອງສັງຄົມ, ສະພາບການເຮັດວຽກ).

*ບາງເທື່ອຝົນຕົກ ແລະ ບໍ່ສາມາດໄປຫາສຸກສາລາໄດ້, ດັ່ງນັ້ນ ຕ້ອງນອນເຈັບຢູ່ເຮືອນ*

ຜູ້ຊາຍ, 20-24 ປີ, ໃນເຂດຊົນນະບົດ

*ບໍ່ມີຄວາມຕ້ອງການໃຊ້ປະກັນໄພສຸຂະພາບ ເພາະບໍ່ມີຢາທີ່ພຽງພໍ (ຕາມຄວາມຕ້ອງການໃນການປິ່ນປົວ)*

ແມ່ຍິງ, 20-24 ປີ, ໃນເຂດຊົນນະບົດ

## 3.4 ສະຫຼຸບ

1. ບັນຫາສຳຄັນ ທີ່ມີຜົນກະທົບຕໍ່ສຸຂະພາບຂອງຄົນຮຸ່ນໜຸ່ມ ປະກອບມີ: ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ (ການມີລູກກ່ອນໄວອັນຄວນ[90], ການເອົາລູກອອກ, ພຕພ), ພະຍາດລະບາດຕ່າງໆ (ໄຂ້ມາລາເລຍ, ໄຂ້ເລືອດອອກ, ຖອກທ້ອງ), ການບາດເຈັບ (ການສັນຈອນທາງຖະໜົນ, ການໃຊ້ຄວາມຮຸນແຮງຕໍ່ກັນ), ຂາດອະນາໄມ ແລະ ພຶດຕິກຳສ່ຽງຕ່າງໆ (ການດື່ມສິ່ງມຶນເມົາ, ສານເຄມີທີ່ອອກລິດຕໍ່ປະສາດ ໂດຍຕົ້ນຕໍແລ້ວແມ່ນ ຢາບ້າ ແລະ ຢາສູບ).
2. ບັນດາປັດໄຈທາງວັດທະນະທຳ ແລະ ສັງຄົມ ມີອິດທິພົນຕໍ່ພຶດຕິກຳທີ່ມີຄວາມສ່ຽງ ແລະ ສິ່ງຈູງໃຈຂອງຊາວໜຸ່ມທີ່ກ່ຽວຂ້ອງກັບຄວາມສ່ຽງ. ການນຳໃຊ້ຢາບ້າເພື່ອຊ່ວຍໃນການເຮັດວຽກ ແມ່ນພົບເຫັນຢູ່ໃນຊຸມຊົນເຂດຊົນນະບົດ (ຊຶ່ງຖືວ່າເປັນເລື່ອງປົກກະຕິ) ແຕ່ຢູ່ໃນຕົວເມືອງການນຳໃຊ້ຢາບ້າ ແມ່ນເພື່ອຜ່ອນຄາຍອາລົມ, ສິ່ງດັ່ງກ່າວລ້ວນແຕ່ຮັບຮູ້ວ່າເປັນໄພອັນຕະລາຍ. ການມີລູກກ່ອນໄວອັນຄວນບໍ່ໄດ້ຖືວ່າເປັນເລື່ອງຜິດປົກກະຕິ, ສະນັ້ນ ສປປ ລາວ ຈຶ່ງມີອັດຕາການຖືພາຂອງຊາວໜຸ່ມສູງທີ່ສຸດໃນພາກພື້ນ. ການດື່ມສິ່ງມຶນເມົາ ຖືເປັນສິ່ງຍອມຮັບໄດ້ໃນສັງຄົມລາວ ນອກຈາກນັ້ນ ກໍ່ຍັງໄດ້ສ້າງຄວາມສ່ຽງທີ່ຮ້າຍແຮງຕໍ່ຄົນຮຸ້ນໜຸ່ມ. ການປ່ຽນແປງທັດສະນະຄະຕິ ຕໍ່ກັບບັນດາພຶດຕິກຳສ່ຽງນີ້ບໍ່ແມ່ນໜ້າທີ່ຮັບຜິດຊອບຂອງແຕ່ພຽງຂະແໜງການດຽວເທົ່ານັ້ນ.
3. ການພັດທະນາດ້ານບວກ ໃນ ສປປ ລາວ ມີຜົນໂດຍກົງກັບສຸຂະພາບ. ສິ່ງດັ່ງກ່າວລວມມີ ການສ້າງໂອກາດໃຫ້ມີການເຄື່ອນຍ້າຍແຮງງານເຊິ່ງເພີ່ມຄວາມສ່ຽງໃນການຕິດພະຍາດຕິດຕໍ່ ສຳລັບຜູ້ທີ່ອອກຈາກບ້ານໄປເຮັດວຽກ, ແລະ ບຸກຄົນທີ່ອາໃສຢູ່ໃນເຂດທີ່ຮັບເອົາແຮງງານເຄື່ອນຍ້າຍ, ການຂະຫຍາຍຕົວຂອງລະບົບເຄືອຂ່າຍຂອງເສັ້ນທາງທີ່ດີຂຶ້ນ ແລະ ລົດຍົນທີ່ມີປະສິດພາບສູງຂຶ້ນ ສິ່ງຜົນໃຫ້ມີຄວາມສ່ຽງຕໍ່ກັບການເກີດອຸບັດຕິເຫດທາງຖະໜົນທີ່ຮ້າຍແຮງ, ແລະ ການເພີ່ມຂຶ້ນຂອງຄວາມຮັບຮູ້ກ່ຽວກັບວັດທະນະທຳອື່ນໆ ທີ່ມີວິທີການດຳລົງຊີວິດທີ່ແຕກຕ່າງ ແລະ ອາດເປັນກະທົບທາງລົບຕໍ່ກັບຊາວໜຸ່ມລາວທີ່ມີຄວາມຕ້ອງການຢາກລອງ.
4. ຂາດການເຂົ້າເຖິງການບໍລິການສາທາລະນະສຸກ ບໍ່ແມ່ນພຽງແຕ່ອຸປະສັກດຽວທີ່ກີດກັ້ນການເຂົ້າເຖິງການບໍລິການຂອງຊາວໜຸ່ມ. ຄວາມຈຳເປັນໃນຄ່າໃຊ້ຈ່າຍ, ທັດສະນະຄະຕິ ຂອງແພດໝໍ ແລະ ມີຄວາມເຂົ້າໃຈຜິດວ່າແພດໝໍບໍ່ສາມາດຮັກສາຄວາມລັບ ກໍ່ເຮັດໃຫ້ຊາວໜຸ່ມບໍ່ເຂົ້າຫາການບໍລິການ. ການອາໄສໝໍຢາພື້ນເມືອງ ຍັງຄົງມີຢູ່ໃນເຂດທີ່ການໃຫ້ບໍລິການສາທາລະນະສຸກມີຈຳກັດ.
5. ຖົງຢາງອະນາໄມ ເຖິງຈະເຂົ້າເຖິງໄດ້ໂດຍທົ່ວໄປ ແຕ່ກໍ່ເປັນວິທີການຄຸມກຳເນີດທີ່ຊາວໜຸ່ມຍິງ ແລະ ຊາຍ ບໍ່ມັກນຳໃຊ້ (ຍົກເວັ້ນໃນກຸ່ມແມ່ຍິງຂາຍບໍລິການ). ແຕ່ເນື່ອງຈາກບໍ່ມີຮູບແບບການຄຸມກຳເນີດອື່ນທີ່ຊາວໜຸ່ມສາມາດເຂົ້າເຖິງ, ການມີລູກໂດຍບໍ່ພຶງປະສົງຈຶ່ງເກີດຂຶ້ນ ເຮັດໃຫ້ມີການເອົາລູກອອກແບບຜິດກົດໝາຍ ໃນ ສປປ ລາວ ຫຼື ໃນປະເທດເພື່ອນບ້ານ, ຫຼື ນຳໃຊ້ຢາເມັດທີ່ບໍ່ໄດ້ການລົງທະບຽນເພື່ອເຮັດໃຫ້ລຸລູກ ທີ່ໂດຍປາສະຈາກການແນະນຳທາງການແພດ.
6. ຢູ່ໃນນິຕິກຳ ຫຼື ເອກະສານ ກ່ຽວກັບ ນະໂຍບາຍ/ແຜນງານ ດ້ານສາທາລະນະສຸກ ບໍ່ໄດ້ເຈາະຈົງສະເພາະຊາວໜຸ່ມ ແລະ ເຍົາວະຊົນ ແຕ່ໄດ້ລະບຸອາຍຸທາງການໃນການຍິນຍອມເຫັນດີທາງດ້ານກົດໝາຍ.
7. ປະກົດວ່າແພດໝໍຜູ້ໃຫ້ບໍລິການ ບໍ່ໄດ້ຮັບການຝຶກອົບຮົມສະເພາະເພື່ອຕອບສະໜອງກັບຄວາມຕ້ອງການຂອງຄົນຮຸ້ນໜຸ່ມ. ເພາະສະນັ້ນ, ໂດຍສະເພາະ ພຕພ ມັກຈະບໍ່ໄດ້ຮັບການປິ່ນປົວ ໃນຊາວໜຸ່ມ ທີ່ບໍ່ທັນມີຄວາມໝັ້ນໃຈທີ່ຈະປຶກສາກັບຜູ້ໃຫ້ບໍລິການ. ໃນຂະນະທີ່ ມີແຜນງານທີ່ໄດ້ຮັບທຶນຈາກຜູ້ໃຫ້ທຶນ ກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ແຜນງານເຫຼົ່ານີ້ ຍັງມີຂໍ້ຈຳກັດທາງດ້ານພູມສັນຖານ ແລະ/ຫຼື ເນັ້ນໃສ່ພົນລະເມືອງສະເພາະກຸ່ມໃນວົງແຄບເທົ່ານັ້ນ.

[90] ສິ່ງທີ່ໜ້າສົນໃຈ ການແຕ່ງງານກ່ອນໄວອັນຄວນ ແມ່ນຖືກເຂົ້າໃຈວ່າບໍ່ແມ່ນບັນຫາທັງຈາກ FGDs ຫຼື KIIs ຈາກນາຍບ້ານ ແລະ/ຫຼື ຜູ້ປົກຄອງ.



Micka Perier/UNFPA, Lao PDR

4

# IV ການສຶກສາ

ລະດັບການສຶກສາຂອງຜູ້ເປັນແມ່ ແມ່ນມີສາຍພົວພັນກັບການຢູ່ຫຼອດ, ຖານະພາບດ້ານໂພຊະນາການ, ສຸຂະພາບ ແລະ ການຮຽນຈົບຊັ້ນຂອງລູກຂອງລາວ.[91] ໂດຍສະເພາະ ການສຶກສາຂອງຊາວໜຸ່ມຍິງ ທີ່ອີກ 10 ປີ ຕໍ່ໜ້າ ອາດກາຍເປັນແມ່ຂອງຊາວໜຸ່ມລາວຮຸ່ນຕໍ່ໄປ ນັ້ນແມ່ນມີຄວາມສໍາຄັນໃນການກໍານົດອະນາຄົດຊາດ.

ຄຸນະພາບຂອງການສຶກສາ ແມ່ນເປັນສິ່ງທີ່ຈໍາເປັນສໍາລັບສິດທິຂອງນັກຮຽນຕໍ່ກັບການສຶກສາ, ແລະ ກວມເອົາຫຼາຍປະເດັນຕ່າງໆລຸ່ມນີ້:

- ການຮັບປະກັນຄວາມອາດສາມາດໃນການສິດສອນຂອງຄູອາຈານ ເພື່ອສ້າງໃຫ້ຊາວໜຸ່ມມີຄວາມສົນໃຈ ແລະ ມີສ່ວນຮ່ວມ. ການພັດທະນາຫຼັກສູດ ເພື່ອກະກຽມໃຫ້ນັກຮຽນມີອານາຄົດທີ່ປະສົບຜົນສໍາເລັດ ໂດຍສ້າງທັກສະຊີວິດ, ທັກສະດ້ານວິຊາການ ແລະ ຄວາມຄິດສ້າງສັນ ທີ່ຈໍາເປັນຕໍ່ເຂົາເຈົ້າ.
- ສ້າງສະພາບແວດລ້ອມທີ່ປອດໄພ, ສະອາດ ແລະ ເຮັດໃຫ້ນັກຮຽນສາມາດເຂົ້າເຖິງສິ່ງອໍານວຍຄວາມສະດວກທີ່ຈໍາເປັນຕ່າງໆ ລວມທັງ ສິ່ງອໍານວຍຄວາມສະດວກດ້ານສຸຂະອະນາໄມ, ບ່ອນຫຼິ້ນ, ແລະ ສະຖານທີ່ຫຼິ້ນກິລາຕ່າງໆ, ແລະ ປົກປ້ອງຈາກສິ່ງເສບຕິດ.

ການວິໄຈນີ້ ແລະ ຂໍ້ມູນຈາກແຫຼ່ງອື່ນໆ ໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ການສຶກສາ ຢູ່ໃນ ສປປ ລາວ ບໍ່ທັນໄດ້ຕອບສະໜອງບັນທັດຖານເຫຼົ່ານີ້ເທົ່າທີ່ຄວນ.

## 4.1 ນະໂຍບາຍ ແລະ ແຜນງານດ້ານການສຶກສາສໍາລັບຊາວໜຸ່ມ ແລະ ເຍົາວະຊົນ

ເຖິງແມ່ນວ່າ ການສຶກສາຊັ້ນປະຖົມ ເປັນການສຶກສາພາກບັງຄັບ ໃນ ສປປ ລາວ, ອັດຕາການສໍາເລັດການສຶກສາໃນຊັ້ນປະຖົມມີພຽງ 65% ໃນປີ 2012. ຄ່າສະເລ່ຍປີເຂົ້າໂຮງຮຽນ ແມ່ນ 8.8 ປີ ສໍາລັບເພດຊາຍ ແລະ 7.6 ປີ ສໍາລັບເພດຍິງ. ໃນທົ່ວປະເທດ, ໜ້ອຍກວ່າເຄິ່ງໜຶ່ງຂອງເດັກນ້ອຍ (44.6%) ໃນເກນອາຍຸເຂົ້າຮຽນຊັ້ນມັດທະຍົມ (11-17 ປີ) ໄດ້ເຂົ້າຮຽນໃນຊັ້ນມັດທະຍົມ; ແລະ 25% ແມ່ນຍັງເຂົ້າຮຽນ ໃນຊັ້ນປະຖົມ ສ່ວນ 30% ແມ່ນບໍ່ໄດ້ເຂົ້າໂຮງຮຽນເລີຍ.[92]

ໃນມາດຕາ 6 ວ່າດ້ວຍ ສິດທິຂອງພົນລະເມືອງຕໍ່ກັບການສຶກສາ (ກົດໝາຍວ່າດ້ວຍການສຶກສາ 2007) ໄດ້ກ່າວເຖິງການສົ່ງເສີມການສຶກສາ ແລະ ການຝຶກອົບຮົມໃຫ້ກັບພົນລະເມືອງທັງໝົດທຸກຄົນ, ໂດຍບໍ່ມີການຈໍາແນກຊົນເຜົ່າ, ສີຜິວ, ສາດສະໜາດ, ເພດ, ອາຍຸ ແລະ ຖານະທາງເສດຖະກິດ-ສັງຄົມ, ທຸກຄົນແມ່ນມີສິດຕໍ່ການສຶກສາຊັ້ນປະຖົມ ເຊິ່ງເປັນພາກບັງຄັບ, ເລີ່ມແຕ່ອາຍຸ 6 ປີ (ມາດຕາ 17). [ການສຶກສາໃນຊັ້ນມັດທະຍົມຕົ້ນ ແມ່ນເປັນທາງເລືອກ, ແລະ ບໍ່ມີຢູ່ທຸກຂົງເຂດ/ພື້ນທີ່]. ຜົນຈາກຂໍ້ມູນມີໜຶ່ງ ໄດ້ສະແດງໃຫ້ວ່າມີບ້ານໃນເຂດຊົນນະບົດທີ່ມີຫົນທາງເຂົ້າເຖິງຍາກ ໂດຍສະເພາະໃນເຂດຊົນເຜົ່າ, ຍັງບໍ່ສາມາດເຂົ້າເຖິງໂຮງຮຽນໄດ້. *ໃນມາດຕາ 18, 20 ແລະ 22* ວາງໄລຍະເວລາຂອງປີຮຽນ ສໍາລັບຊັ້ນປະຖົມ (5 ປີ), ມັດທະຍົມຕອນຕົ້ນ (4 ປີ) ແລະ ມັດທະຍົມຕອນປາຍ (3 ປີ). ການສຶກສາຂັ້ນວິຊາຊີບ ແບ່ງອອກເປັນ 3 ລະດັບ ລະຫວ່າງ 6 ເດືອນ ຫາ 3 ປີ. ການສຶກສາລະດັບມະຫາວິທະຍາໄລ ປະລິນຍາຕີ ແມ່ນຢ່າງໜ້ອຍ 4 ປີ.

ສິດທິໃນການສຶກສາ ແມ່ນໄດ້ມີການອະທິບາຍຢ່າງກວ້າງຂວາງ ໃນກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (ປີ 2007). ສິດໃນການສຶກສາ ທີ່ແມ່ນ 1 ໃນ 10 ສິດຂອງເດັກນ້ອຍ, ໄດ້ຮັບການປົກປ້ອງ ໃນ *ມາດຕາທີ 3* ຂອງກົດໝາຍດັ່ງກ່າວ. *ມາດຕາທີ 30* ໄດ້ກໍານົດຢ່າງຈະແຈ້ງ ເຖິງຊາວໜຸ່ມທີ່ພິການ ມີສິດເທົ່າທຽມໃນການສຶກສາ ແລະ ການຝຶກອົບຮົມວິຊາຊີບ ໂດຍບໍ່ຖືກແບ່ງແຍກ. ໃນນະໂຍບາຍການສຶກສາຮຽນຮ່ວມ (ປີ 2011) ລັດຖະບານໄດ້ສະໜັບສະໜູນ ແລະ ສ້າງເງື່ອນໄຂອັນສະດວກ ໃຫ້ແກ່ເດັກນ້ອຍຜູ້ທີ່ພິການ ແລະ ສົ່ງເສີມຂະແໜງເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງພາຍໃນ ແລະ ສາກົນ ເພື່ອສະໜັບສະໜູນການສຶກສາ ສໍາລັບເດັກນ້ອຍ ແລະ ຊາວໜຸ່ມຜູ້ພິການ.

ການສຶກສາ ຍັງໃຫ້ໄດ້ຮັບການສະໜັບສະໜູນ ຈາກສູນກາງຊາວໜຸ່ມ ປະຊາຊາຊົນ ປະຕິວັດລາວ. ກົດໝາຍວ່າດ້ວຍ ຄະນະກໍາມະທິການ ຊາວໜຸ່ມປະຊາຊົນ ປະຕິວັດລາວ, ກົດໝາຍວ່າດ້ວຍ ຊາວໜຸ່ມ ປະຊາຊົນ ປະຕິວັດລາວ (ປີ 2009), ມາດຕາທີ 9 ວ່າດ້ວຍ ສິດ ແລະ ໜ້າທີ່, ໄດ້ກ່າວເຖິງສິດທິຕົ້ນຕໍ ຂອງຄະນະກໍາມະການ ຊາວໜຸ່ມປະຊາຊົນ ປະຕິວັດລາວ ໃນການໃຫ້ການສຶກສາແກ່ເຍົາວະຊົນ (ອາຍຸ 9-15 ປີ) ແລະ ຊາວໜຸ່ມ (ອາຍຸ 15-35 ປີ) ກ່ຽວກັບ ແນວຄິດການເມືອງ ແລະ ຄວາມສາມະຄີ ພ້ອມກັນນັ້ນກໍ່ເວົ້າເຖິງ ການປົກປ້ອງຜົນປະໂຫຍດ ຂອງຊາວໜຸ່ມ ແລະ ເຍົາວະຊົນໂດຍການວາງແຜນຍຸດທະສາດ ແລະ ແຜນພັດທະນາຊາວໜຸ່ມ ແລະ ເຍົາວະຊົນ.

ກະຊວງສຶກສາທິການ ແລະ ກິລາ (MoEs), ມີຄວາມຮັບຜິດຊອບໂດຍກົງ ຫຼາຍກວ່າກະຊວງອື່ນໆ ຕໍ່ກັບຊາວໜຸ່ມ ແລະ ເຍົາວະຊົນ. ໃນແຜນການປະຈຸບັນ ຂອງກະຊວງສຶກສາທິການ ແລະ ກິລາ ໄດ້ກໍານົດບູລິມະສິດໃນການເຂົ້າເຖິງການສຶກສາຂັ້ນປະຖົມສໍາລັບໝົດທຸກຄົນ. ກະຊວງ ໄດ້ມີຍຸດທະສາດໃນການປະຕິຮູບການສຶກສາ ລວມທັງການເພີ່ມປີການຮຽນ ໃນຊັ້ນມັດທະຍົມຕົ້ນ ຈາກ 3 ປີ ເປັນ 4 ປີ. ສະຖາບັນ ພັດທະນາຜູ້ບໍລິຫານການ

---

91 ກະຊວງສາທາ ແລະ ສູນສະຖິຕິແຫ່ງຊາດ (2012). ການສໍາຫຼວດດັດຊະນີໝາຍສັງຄົມລາວ.

92 *Ibid.*

ສຶກສາ ໄດ້ຖືກສ້າງຕັ້ງຂຶ້ນ ເພື່ອປັງປຸງຄວາມອາດສາມາດຂອງຄູອາຈານ. ກະຊວງ ສຶກສາທິການ ແລະ ກິລາ ມີແຜນທີ່ຈະພັດທະນາລະບົບການສຶກສາ ແລະ ການຝຶກອົບຮົມ ໃຫ້ໄດ້ມາດຕະຖານອາຊຽນ ແລະ ສາກົນ, ແຕ່ວ່າ ມາຮອດປະຈຸບັນຍັງບໍ່ທັນມີແຜນດຳເນີນງານ ໃນການຈັດຕັ້ງປະຕິບັດຍຸດທະສາດນີ້.

ກອບການພັດທະນາການສຶກສາ (ປີ 2009-2015) ຂອງກະຊວງ ສຶກສາທິການ ແລະ ກິລາ ໄດ້ເນັ້ນໃສ່ການປັບປຸງການເຂົ້າເຖິງການສຶກສາຂັ້ນພື້ນຖານສຳລັບເດັກຍິງ, ເດັກນ້ອຍ ທີ່ມີຄວາມຕ້ອງການພິເສດ ແລະ ເດັກນ້ອຍທີ່ຢູ່ໃນເຂດຊົນນະບົດ. ແຜນງານທີ່ຍັງບໍ່ໄດ້ຮັບທຶນຊ່ວຍເຫຼືອ ສຳລັບການຂະຫຍາຍໂອກາດ ປະກອບມີແຜນງານການສຶກສາແບບທຽບເທົ່າ ແລະ ການກັບເຂົ້າຮຽນຄືນຂອງຜູ້ທີ່ອອກໂຮງຮຽນ ແລະ ຊາວໜຸ່ມທີ່ຍັງວ່າງງານທັງໃນຕົວເມືອງ ແລະ ເຂດຊົນນະບົດ. ໄດ້ວາງແຜນຂະຫຍາຍໂຄງລ່າງພື້ນຖານ (ທີ່ຍັງບໍ່ທັນໄດ້ຮັບທຶນຊ່ວຍເຫຼືອຢ່າງພຽງພໍ) ເພື່ອເພີ່ມຈຳນວນຫ້ອງຮຽນໃນຊັ້ນປະຖົມ, ມັດທະຍົມຕອນຕົ້ນ, ແລະມັດທະຍົມຕອນປາຍ ແລະ ປັບປຸງການສຶກສາວິຊາຊີບໃນຊັ້ນທັດທະຍົມ ໂດຍສະເພາະໃນເມືອງທຸກຍາກ ແລະ ດ້ອຍໂອກາດ/ຂາດເຂີນການເຂົ້າເຖິງການບໍລິການທີ່ສຸດ.

ກະຊວງ ສຶກສາທິການ ແລະ ກິລາ ຍັງມີຄວາມຮັບຜິດຊອບ ຕໍ່ກັບວຽກງານອາຊີວະສຶກສາ. ອີງຕາມຂໍ້ມູນຈາກ ກະຊວງ, ການເຂົ້າຮຽນໃນຂະແໜງອາຊີວະສຶກສາ ແມ່ນກວມພຽງແຕ່ 1 ສ່ວນ 3 ຂອງໂກຕາທັງໝົດທີ່ກຳນົດໃຫ້ສຳລັບຂະແໜງດັ່ງກ່າວ. ສາຍເຫດຫຼັກ ອາດເນື່ອງມາຈາກການທີ່ສັງຄົມຍັງບໍ່ເຫັນຄວາມສຳຄັນຂອງຂະແໜງອາຊີວະ ປຽບທຽບໃສ່ການສຶກສາໃນມະຫາວິທະຍາໄລ, ເຖິງວ່າຈະມີຄວາມຕ້ອງການ ແລະ ໂອກາດຢ່າງຫຼວງຫຼາຍທາງດ້ານວິຊາການໃນຂະແໜງກະສິກຳ, ກໍ່ສ້າງ ແລະ ບໍ່ແຮ່ ເມື່ອທຽບໃສ່ຕຳແໜ່ງງານໃນການສຶກສາຊັ້ນສູງກໍ່ຕາມ, ເຊິ່ງແນວຄວາມຄິດດັ່ງກ່າວໄດ້ຮັບການຢັ້ງຢືນຈາກ ອົງການແຮງງານສາກົນ (ILO), ສູນກາງຊາວໜຸ່ມ ແລະ ການສຳພາດກຸ່ມຊາວໜຸ່ມ, ພໍ່ແມ່ຂອງພວກເຂົາ ແລະ ອຳນາດການປົກຄອງ.

ກະຊວງ ສຶກສາທິການ ແລະ ກິລາ ໄດ້ສ້າງແຮງຈູງໃຈ ຕໍ່ກັບຂະແໜງອາຊີວະສຶກສາ ເຊັ່ນ ບໍ່ມີການສອບເສັງເຂົ້າ ແລະ ການໃຫ້ເບ້ຍລ້ຽງສຳລັບນັກຮຽນ, ແຕ່ກໍ່ບໍ່ມີປະສິດຕິຜົນພຽງພໍຕໍ່ກັບການເພີ່ມຈຳນວນນັກຮຽນ. ມັນມີຄວາມຕ້ອງນິຕິກຳທີ່ເອື້ອອຳນວຍ, ການເຜີຍແຜ່ຂໍ້ມູນຂ່າວສານທີ່ກວ້າງຂຶ້ນ ແລະ ການສົ່ງເສີມການສຶກສາໃນຂະແໜງ ໃຫ້ແກ່ນັກຮຽນໃນຊັ້ນມັດທະຍົມ. ໃນປະຈຸບັນ ກະຊວງສຶກສາທິການ ແລະ ກິລາ ກຳລັງຮ່າງກົດໝາຍວ່າດ້ວຍການຮຽນອາຊີວະສຶກສາ ເຊິ່ງຈະນຳສະເໜີເຂົ້າໃນສະພາແຫ່ງຊາດ ໃນທ້າຍປີ 2013. ນອກຈາກນັ້ນ ຍັງມີຍຸດທະສາດການສຶກສາວິຊາຊີບ ໃນຂັ້ນມັດທະຍົມສຶກສາ ທີ່ໄດ້ທົດລອງ ໃນ 6 ໂຮງຮຽນ ໄດ້ແບ່ງເວລາການຮຽນອອກເປັນການສຶກສາທົ່ວໄປ (60%) ແລະ ການຮຽນອາຊີວະ (40%), ເຊິ່ງຫຼັງຈາກຈົບຊັ້ນມັດທະຍົມຕອນປາຍ ພວກເຂົາຈະສາມາດໄດ້ຮັບວິຊາສະເພາະ/ຄຸນວຸດທິໃດໜຶ່ງ.

ແຜນງານການສຶກສາ ກໍ່ຍັງເປັນບູລິມະສິດ ຂອງຫຼາຍອົງການຈັດຕັ້ງພາຍໃນແລະສາກົນ ທີ່ເຮັດວຽກ ໃນ ສປປ ລາວ. ໃນການທົບທວນແຜນງານ ໃນການວິໄຈຄັ້ງນີ້, ພົບວ່າ ມີທັງໝົດ 21 ແຜນງານທີ່ເນັ້ນໜັກໃສ່ດ້ານການສຶກສາ (ລວມທັງ ສຸຂະສຶກສາ) ຫຼື ການພັດທະນາທັກສະ ລວມມີການເຊື່ອມສານແຜນງານ ເຂົ້າໃນລະບົບການສຶກສາທາງການ, ເຊັ່ນ ໂຄງການຫຼັກສູດທັກສະຊີວິດ, ແລະ ແຜນງານຄວາມຮູ້ກ່ຽວກັບທຸລະກິດ ຂອງ ອົງການ ILO ໃນໂຮງຮຽນມັດທະຍົມທີ່ຖືກຄັດເລືອກ; ການສຶກສານອກລະບົບ ເຊິ່ງມີຈຸດປະສົງເພື່ອສົ່ງເສີມໂອກາດໃນການຮໍ່າຮຽນສຳລັບຊາວໜຸ່ມນອກໂຮງຮຽນ ແລະ ປະຊາຊົນຜູ້ດ້ອຍໂອກາດ, ເຊັ່ນ ແຜນງານຄູເຄື່ອນທີ່; ແລະແຜນງານການສຶກສານອກລະບົບທີ່ມີຈຸດປະສົງເພື່ອໃຫ້ການສຶກສາປະຊາຊົນເປົ້າໝາຍກ່ຽວກັບບັນຫາສະເພາະ ເຊັ່ນ ແຜນງານປ້ອງກັນອຸບັດຕິເຫດທາງຖະໜົນ ແລະ ຄວາມພິການ. ແຜນງານການສຶກສາ ແລະ ພັດທະນາທັກສະ ກວມເອົາ 6 ໃນ 7 ແຜນງານລະດັບຊາດ ແລະ ໂດຍທົ່ວໄປມີຂອບເຂດການປົກຄຸມທີ່ກວ້າງຂວາງ.

ແຜນງານການພັດທະນາທັກສະ ສ່ວນໃຫຍ່ແມ່ນການຝຶກອົບຮົມວິຊາຊີບ, ເຊັ່ນແຜນງານທີ່ ຈັດຕັ້ງໂດຍອົງການເພື່ອນມິດ ແລະ ໜ່ວຍງານຕ້ານການຄ້າມະນຸດ. ນອກຈາກນັ້ນ, ແຜນງານຈຳນວນຫຼາຍ ມີຈຸດສຸມໃສ່ທັກສະຊີວິດໂດຍລວມ, ເຊັ່ນແຜນງານທາງສະຖານີວິທະຍຸທີ່ຫຼາກຫຼາຍ. ແຜນງານທີ່ເນັ້ນໃສ່ການຝຶກອົບຮົມອາຊີວະ ສ່ວນຫຼາຍມີກຸ່ມເປົ້າໝາຍ ແມ່ນຜູ້ດ້ອຍໂອກາດ: ເດັກນ້ອຍຂ້າງຖະໜົນ, ແມ່ຍິງ ແລະ ເດັກນ້ອຍຜູ້ທີ່ເຫຍື່ອຂອງການຄ້າມະນຸດ, ແມ່ຍິງທີ່ໃຫ້ບໍລິການທາງເພດ ແລະ ແມ່ຍິງທີ່ດ້ອຍໂອກາດ. ເຖິງວ່າບາງແຜນງານການພັດທະນາທັກສະບໍ່ຮັບການວິເຄາະ, ຍັງມີສູນການຝຶກອົບຮົມດ້ານອາຊີວະ ແລະ ທັກສະວິຊາການ ຈຳນວນຫຼາຍທີ່ໄດ້ຖືກຈັດຕັ້ງປະຕິບັດໃນລະດັບຊາດ ໂດຍກົງ ຫຼື ຮ່ວມກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຈຳນວນ = 4 ແຫ່ງ), ກົມອາຊີວະສຶກສາ, ກະຊວງສຶກສາທິການ ແລະ ກິລາ (ຈຳນວນ = 21 ແຫ່ງ) ແລະ ສູນກາງສະຫະພັນແມ່ຍິງລາວ (ຈຳນວນ = 2 ແຫ່ງ). ນີ້ແມ່ນກວມເອົາ 10 ສູນ ໃນນະຄອນຫຼວງວຽງຈັນ ແລະ ອີກ 18 ສູນ ໃນຂອບເຂດທົ່ວປະເທດ.

## 4.2 ສະພາບດ້ານການສຶກສາ

### 4.2.1 ອັດຕາສ່ວນການເຂົ້າຮຽນ ແລະ ການຮູ້ໜັງສື

ໂດຍຜ່ານການທົບທວນເອກະສານທັງໝົດ, ການຄາດຄະເນການຮູ້ໜັງສື ແລະ ລະດັບການເຂົ້າໂຮງຮຽນ ໃນ ສປປ ລາວ ແມ່ນມີຄວາມແຕກຕ່າງກັນ. ໃນປີ 1992, 58.8% ຂອງຊາວໜຸ່ມລາວ ໄດ້ເຂົ້າຮຽນໃນຊັ້ນປະຖົມ, ແລະ 47% ແມ່ນຜູ້ທີ່ໄດ້ເຂົ້າຮຽນ ແລະ ຮຽນຈົບຊັ້ນປະຖົມ. ໃນປີ 2012 ຕົວເລກຈາກກະຊວງສຶກສາທິການ ແລະ ກິລາ ສະແດງໃຫ້ເຫັນວ່າ 95.2% ຂອງຊາວໜຸ່ມໄດ້ເຂົ້າຮຽນໃນຊັ້ນປະຖົມ, ແລະ 70% ໄດ້ຮຽນຈົບຊັ້ນປະຖົມ. ໃນໄລຍະດຽວກັນນັ້ນ, ການຮູ້ໜັງສືຂອງຊາວໜຸ່ມໃນກຸ່ມອາຍຸ 15-24 ປີ (ລວມທັງ ເພດຍິງ ແລະເພດຊາຍ) ມີການເພີ່ມຂຶ້ນພຽງແຕ່ 71.1% ຫາ 73.1%. ໃນປີ 2012, ການສຳຫຼວດດັດຊະນີໝາຍສັງຄົມລາວ LSIS ພົບວ່າ 2 ໃນ 3 ຂອງຊາວໜຸ່ມຍິງ (ອາຍຸ 15-24 ປີ) ແລະ 3 ໃນ 4 ຂອງຊາວໜຸ່ມຊາຍ ໃນກຸ່ມອາຍຸດຽວກັນ ຮູ້ໜັງສື. ອັດຕາການຮູ້ໜັງສື ຂອງກຸ່ມ 15-19 ປີ ແມ່ນສູງກວ່າ ອັດຕາຂອງກຸ່ມອາຍຸ 20-24 ປີ ພຽງ

ເລັກນ້ອຍ ເຊິ່ງສະແດງໃຫ້ເຫັນການປັບປຸງອັດຕາການຮູ້ໜັງສືຂອງຊາດ (ເບິ່ງຮູບ 4, ເອກະສານຊ້ອນທ້າຍ 3). ອັດຕາການຮູ້ໜັງສື ກໍ່ຍັງພົບວ່າມີຄວາມກ່ຽວພັນທາງບວກ ກັບສະພາບເສດຖະກິດ-ສັງຄົມ, ແລະ ກຸ່ມຊົນເຜົ່າລາວ-ໄຕ ຊຶ່ງມີລະດັບການຮູ້ໜັງສື ທີ່ສູງກວ່າ ກຸ່ມຊົນເຜົ່າຈີນ-ຕິເບດ.[93]

## 4.2.2 ຄວາມບໍ່ເທົ່າທຽມດ້ານການສຶກສາ

ໃນທົ່ວປະເທດ, ໂດຍລວມແມ່ນບໍ່ມີຄວາມແຕກໂຕນກັນດ້ານບົດບາດຍິງ-ຊາຍ, ລະຫວ່າງເດັກຍິງ-ເດັກຊາຍ ທີ່ເຂົ້າຮຽນໃນຊັ້ນມັດທະຍົມ. ເຖິງຢ່າງໃດກໍ່ຕາມ, ຄວາມແຕກໂຕນກັນທີ່ສຳຄັນ ແມ່ນພົບໃນບາງກຸ່ມຂອງພົນລະເມືອງ; ຂໍ້ເສຍປຽບຂອງເດັກຍິງ ໃນການສຶກສາຊັ້ນມັດທະຍົມ ແມ່ນມີຫຼາຍສຳລັບເດັກນ້ອຍທີ່ດຳລົງຊີວິດໃນບັນດາຄອບຄົວທີ່ມີຄວາມທຸກຍາກທີ່ສຸດ (ຄ່າດັດຊະນີຄວາມເທົ່າທຽມກັນດ້ານບົດບາດຍິງ-ຊາຍແມ່ນ 0.66 ລະຫວ່າງເດັກຍິງ/ເດັກຊາຍ), ແລະ ລະຫວ່າງເດັກນ້ອຍ ໃນຄອບຄົວໃນກຸ່ມພາສາປາກເວົ້າມົ້ງ-ມຽນ (ຄ່າດັດຊະນີຄວາມເທົ່າທຽມກັນດ້ານບົດບາດຍິງ-ຊາຍ ແມ່ນ 0.73 ລະຫວ່າງເດັກຍິງ/ເດັກຊາຍ).[94]

ຂໍ້ມູນເກັບກຳຈາກຊາວໜຸ່ມໃນການສຶກສາຄັ້ງນີ້ ໄດ້ສະແດງໃຫ້ເຫັນວ່າ ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ, ຊາວໜຸ່ມບໍ່ຄ່ອຍເຫັນຄຸນຄ່າຂອງການສຶກສາເນື່ອງຈາກວ່າ ການຖາງປ່າເຮັດໄຮ່, ການປູກເຂົ້າ ແລະ ລ້ຽງສັດ ແມ່ນອາຊີບຫຼັກ. ສຳລັບເດັກຊາຍ, ການເຂົ້າຮຽນໃນລະດັບຊັ້ນມັດທະຍົມຕົ້ນແມ່ນມີຄວາມເປັນໄປໄດ້ ຖ້າພໍ່ແມ່ຂອງເຂົາສາມາດຈ່າຍຄ່າອຸປະກອນການຮຽນ, ເສື້ອຜ້າ ແລະ ການເດີນທາງໄປໂຮງຮຽນໄດ້.

ສຳລັບເດັກຍິງ, ໂດຍສະເພາະ ກຸ່ມເດັກຍິງຈາກຊົນເຜົ່າສ່ວນນ້ອຍ ຢູ່ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ, ແມ່ນບໍ່ມີໂອກາດທີ່ຈະໄດ້ເຂົ້າໂຮງຮຽນກາຍຊັ້ນປະຖົມ ເນື່ອງຈາກອຸປະສັກທາງດ້ານວັດທະນະທຳ ແລະ ການທີ່ບໍ່ເຫັນປະໂຫຍດຂອງການສຶກສາຕໍ່ກັບຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ.

ໃນເຂດທີ່ການແຕ່ງງານ ແລະ ການມີລູກແຕ່ນ້ອຍເປັນເລື່ອງທຳມະດາ, ບໍ່ມີແຮງຈູງໃຈທີ່ແຮງກ້າ ທີ່ເຮັດໃຫ້ເດັກຍິງໄດ້ຮຽນເກີນຊັ້ນປະຖົມ. ເຖິງຢ່າງໃດກໍ່ຕາມ, ເດັກຍິງບາງຄົນທີ່ຢູ່ໃນເຂດຊົນນະບົດ ລວມທັງຜູ້ທີ່ເຂົ້າຮ່ວມກຸ່ມສົນທະນາ ບອກວ່າພວກເຂົາຢາກສືບຕໍ່ຮຽນ ຖ້າມີທຶນຮອນ ແລະ ກິນໄກ ທີ່ໃຫ້ພວກເຂົາໄດ້ເຂົ້າຮຽນໃນຊັ້ນມັດທະຍົມ ເຖິງແມ່ນວ່າຈະບໍ່ມີໂຮງຮຽນຢູ່ໃກ້ບ້ານຂອງພວກເຂົາກໍ່ຕາມ. ໃນກຸ່ມສົນທະນາຫຼັກ ຮ່ວມກັບຜູ້ປົກຄອງ ແລະ ນາຍບ້ານ, ໄດ້ມີການກ່າວເຖິງຊາວໜຸ່ມທີ່ພິການ ລວມທັງການບໍ່ສາມາດເຂົ້າເຖິງການສຶກສາລະດັບ ສູງກວ່າຊັ້ນມັດທະຍົມປີທີ 3 ແລະ ບັນຫາການຈຳແນກ.

> *ກຸ່ມເດັກຍິງ ອາຍຸ 14-19 ປີ ສ່ວນຫຼາຍແມ່ນຊ່ວຍພໍ່ແມ່ຂອງພວກເຂົາ, ບາງຄົນອອກໂຮງຮຽນເພື່ອແຕ່ງງານ, ມີຜົວ ພວກເຂົາເຈົ້າຕ້ອງປູກຕົ້ນຊາ.*
>
> ຜູ້ຊາຍ, ອາຍຸ 20-24 ປີ, ໃນເຂດຊົນນະບົດ

ໂດຍທົ່ວໄປ, ການເຂົ້າເຖິງການສຶກສາຊັ້ນມັດທະຍົມ ແລະ ການສຶກສາຊັ້ນສູງ ແມ່ນງ່າຍກວ່າ ແລະ ໄດ້ຮັບຄວາມນິຍົມຫຼາຍກວ່າ ໃນເຂດຕົວເມືອງທຽບໃສ່ ໃນເຂດຊົນນະບົດ ຊຶ່ງສະແດງອອກໃນອັດຕາສ່ວນເຂົ້າຮຽນໃນຊັ້ນມັດທະຍົມທີ່ສູງກວ່າ ໃນເຂດຕົວເມືອງ (ເບິ່ງຮູບພາບ 3, ເອກະສານຊ້ອນທ້າຍ 3).[95] ປະຊາຊົນທີ່ຖືກສຳພາດຢູ່ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ບໍ່ຄ່ອຍເຫັນຜົນປະໂຫຍດຂອງການສຶກສານອກຈາກການຮູ້ໜັງສືຂັ້ນພື້ນຖານ, ເຊິ່ງມີຄວາມຈຳເປັນເພື່ອເຂົ້າເຮັດວຽກຢູ່ໃນບາງໂຮງງານ.

## 4.2.3 ການເຂົ້າໂຮງຮຽນ ແລະ ການປະລະການຮຽນ

ຊາວໜຸ່ມທີ່ໄດ້ເຂົ້າຮ່ວມການສົນທະນາກຸ່ມ ທີ່ເຂົ້າໂຮງຮຽນ ຫຼື ໄດ້ເຄີຍເຂົ້າໂຮງຮຽນ ໄດ້ເລົ່າກ່ຽວກັບກິດຈະກຳທີ່ພວກເຂົາມັກໃນໂຮງຮຽນ ເຊັ່ນ ກິລາໂດຍສະເພາະ ສຳລັບຊາວໜຸ່ມຊາຍ. ສ່ວນເດັກຍິງ ແມ່ນມັກດ້ານການພົວພັນທາງດ້ານສັງຄົມຢູ່ຮ່ວມກັນຂອງນັກຮຽນ ໃນໂຮງຮຽນ ແລະ ໃນເວລາທີ່ເຂດໂຮງຮຽນ ແມ່ນສະອາດ ແລະ ສະຫງົບ, ລວມທັງສາຍພົວພັນກັບຄູອາຈານ, ການຫຼິ້ນເກມ ແລະ ໜ້າທີ່ຮັບຜິດຊອບໃນການຮັກສາຄວາມສະອາດຂອງເດີ່ນໂຮງຮຽນ ແລະ ຫ້ອງຮຽນ. ແຕ່ທາງກົງກັນຂ້າມ ເດີ່ນໂຮງຮຽນ ແລະ ຫ້ອງຮຽນ ທີ່ບໍ່ໄດ້ຄຸນະພາບ ແລະ ບໍ່ສະອາດ, ແລະ ຄູອາຈານມີຄວາມເຂັ້ມງວດເກີນໄປໃນການໃສ່ໂທດ ຫຼື ຂາດແຮງຈູງໃຈໃນການສິດສອນ, ເຮັດໃຫ້ຊາວໜຸ່ມບໍ່ຢາກໄປໂຮງຮຽນ: ໃນການສະແດງຄວາມແຕກຕ່າງດັ່ງກ່າວນີ້ ເຫັນວ່າຊາວໜຸ່ມຍິງກ້າສະແດງອອກກວ່າຊາວໜຸ່ມຊາຍ.

> *ເຮືອນຫຼັງນ້ອຍ, ຄອບຄົວທຸກຍາກ, ບໍ່ມີໃຜຊ່ວຍເຮັດໄຮ່. ເດັກຍິງອອກໂຮງຮຽນຫຼາຍກວ່າເດັກຊາຍ*
>
> ຜູ້ຊາຍ, ອາຍຸ 20-24 ປີ, ໃນເຂດຊົນນະບົດ

ການສຶກສາວິໄຈ ໃນປີ 2009 ກ່ຽວກັບອຸປະສັກຕໍ່ການເຂົ້າໂຮງຮຽນ ພົບວ່າ 2 ສາເຫດຫຼັກທີ່ເດັກນ້ອຍອອກໂຮງຮຽນ ແມ່ນລາຍຮັບຂອງພໍ່ແມ່ຕໍ່າ (23% ຂອງການອອກໂຮງຮຽນ ແມ່ນໃນກຸ່ມທີ່ພໍ່ແມ່ຂອງເຂົາເຈົ້າ ມີລາຍຮັບຕ່ຳກວ່າ 200,000 ກີບຕໍ່ເດືອນ) ແລະ ໄລຍະທາງໄກ ລະຫວ່າງບ້ານ ແລະ ໂຮງຮຽນ (22.5% ຂອງການອອກໂຮງຮຽນລາຍງານວ່າເຂົາເຈົ້າຕ້ອງເດີນທາງໄປໂຮງຮຽນໄກກວ່າ 10 ກມ).[96]

[93] ກະຊວງສາທາ ແລະ ສູນສະຖິຕິແຫ່ງຊາດ (2012). *ການສຳຫຼວດດັດຊະນີໝາຍສັງຄົມລາວ.*

[94] *Ibid.*

[95] ກະຊວງສາທາ ແລະ ສູນສະຖິຕິແຫ່ງຊາດ (2012). *ການສຳຫຼວດດັດຊະນີໝາຍສັງຄົມລາວ.*

[96] ສູນການສຶກສາຮຽນຮ່ວມ ແລະ ອົງການ ADB (2009). *Obstracles to school attendance and strategies for increasing the number of children in schools.*

Education

ຂໍ້ມູນທີ່ໄດ້ຈາກກຸ່ມສົນທະນາກັບຊາວໜຸ່ມ ໄດ້ສະແດງໃຫ້ເຫັນວ່າ ຊ່ວງໄລຍະເວລາຕົ້ນຕໍທີ່ຊາວໜຸ່ມອອກໂຮງຮຽນ ແມ່ນໃນໄລຍະອາຍຸທີ່ຈະເຂົ້າໂຮງຮຽນຕໍ່ຊັ້ນມັດທະຍົມຕອນຕົ້ນ. ເມື່ອເດັກນ້ອຍອາຍຸໄດ້ 10 ປີ ໂດຍສະເພາະຢູ່ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ເສັ້ນທາງເຂົ້າເຖິງຍາກ ພວກເຂົາກາຍເປັນແຫຼ່ງແຮງງານທີ່ສໍາຄັນໃນການຊ່ວຍຄອບຄົວ ປູກຝັງ, ລ້ຽງສັດ; ສະນັ້ນ, ແຮງງານຂອງພວກເຂົາຈຶ່ງມີຄວາມຕ້ອງການໃນຄອບຄົວ (ໂດຍສະເພາະໃນກໍລະນີຂອງເດັກຊາຍ).

ຊາວໜຸ່ມຍິງທີ່ຢູ່ໃນຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ອາດຖືກໃຫ້ຢູ່ເຮືອນເພື່ອເບິ່ງແຍງນ້ອງໆ. ຊາວໜຸ່ມທີ່ອອກໂຮງຮຽນ ເພື່ອໄປເຮັດວຽກໃນໂຮງງານ ແລະ ຊາວໜຸ່ມໃນເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ອອກໂຮງຮຽນເພື່ອແຕ່ງງານ ແລະ ປູກຝັງຊ່ວຍຄອບຄົວ. ການຖືພາ ເຊິ່ງສ່ວນຫຼາຍມັກຈະນໍາໄປສູ່ການແຕ່ງງານ ເປັນອີກເຫດຜົນໜຶ່ງທີ່ເຮັດໃຫ້ຊາວໜຸ່ມຕ້ອງໄດ້ອອກໂຮງຮຽນ.

*ຊາວໜຸ່ມໃນອາຍຸ 14-15 ປີ ແມ່ນໃຫຍ່ພໍ ທີ່ຈະແຕ່ງງານ.*

ຜູ້ປົກຄອງ, ໃນເຂດຊົນນະບົດ

*ເດັກຍິງມີຄວາມສ່ຽງ ເມື່ອພວກເຂົາຖືພາ. ພວກເຂົາອອກໂຮງຮຽນ*

ຜູ້ຊາຍ, ອາຍຸ 20-24 ປີ, ໃນເຂດຕົວເມືອງ

ໃນຕົວເມືອງ ການອອກໂຮງຮຽນມີແນວໂນ້ມເກີດຂຶ້ນຊ້າກວ່າ, ຫຼັງຈາກພວກເຂົາຈົບຊັ້ນມັດທະຍົມຕອນຕົ້ນ, ໂດຍສະເພາະເດັກຊາຍທີ່ເລີ່ມໃຊ້ເວລາກັບໝູ່, ຫຼີ້ນເກມຄອມພິວເຕີ ແລະ ມີຄວາມເປັນໄປໄດ້ສູງທີ່ຈະໄດ້ຮັບອິດທິພົນຈາກໝູ່ຜູ້ທີ່ອອກໂຮງຮຽນແລ້ວ. ບາງຄົນເສັງບໍ່ຜ່ານກໍ່ອອກໂຮງຮຽນ. ໂດຍສະເພາະແລ້ວ ສິ່ງນີ້ອາດເປັນບັນຫາ ສໍາລັບເດັກຊາຍ ທີ່ພໍ່ແມ່ຕ່າງກໍ່ພາກັນເຮັດວຽກ ແລະ ບໍ່ຄ່ອຍໄດ້ໃຫ້ການຊີ້ນໍາ ແລະ ສະໜັບສະໜູນຢ່າງຕັ້ງໜ້າ ເພື່ອໃຫ້ສືບຕໍ່ເຂົ້າໂຮງຮຽນ. ເດັກຊາຍ ແລະ ເດັກຍິງອາດຈະຢູ່ບ້ານເພື່ອຊ່ວຍທຸລະກິດຄອບຄົວ ຖ້າຜົນການຮຽນຂອງພວກເຂົາບໍ່ປະສົບຜົນສໍາເລັດ: ອຸປະສັກດ້ານການເງິນ ແມ່ນມີນໍ້າໜັກສູງ ທີ່ສ້າງໂອກາດໃຫ້ອອກໂຮງຮຽນ ເພື່ອສ້າງລາຍຮັບສໍາລັບຊາວໜຸ່ມ ໃນກຸ່ມອາຍຸ 15-19 ປີ ໃນເຂດຕົວເມືອງ.

*ຄ້າງຫ້ອງເຮັດໃຫ້ເດັກນ້ອຍອອກໂຮງຮຽນໄປເຮັດວຽກ (ຂາຍເຄື່ອງ)*

ຜູ້ຊາຍ, ອາຍຸ 15-19 ປີ, ໃນເຂດຕົວເມືອງ

*ບາງຄົນອອກໂຮງຮຽນ (ເດັກຊາຍ) ຍ້ອນຕິດຢາ*

ແມ່ຍິງ, ອາຍຸ 20-24 ປີ, ໃນເຂດຊົນນະບົດ

ໜຶ່ງໃນເຫດຜົນຂອງການອອກໂຮງຮຽນ ທີ່ໄດ້ຍົກຂຶ້ນ ໃນເຂດ ຕົວເມືອງ ແລະ ຊົນນະບົດ ແມ່ນການຕິດຢາເສບຕິດ. ຊາວໜຸ່ມເພດຊາຍ ໃນກຸ່ມອາຍຸ 15-19 ປີ ແມ່ນຢູ່ໃນສະຖານະພາບທີ່ສ່ຽງທີ່ສຸດໃນການເຂົ້າເຖິງຢາເສບຕິດ, ແລະ ການຕັດສິນໃຈອອກໂຮງຮຽນ ອາດກ່ຽວຂ້ອງກັບການຂາຍຢາເສບຕິດ ເພື່ອຫາເງິນ ຫຼື ຜົນກະທົບຂອງຢາບ້າ ຕໍ່ຄວາມສາມາດໃນການຮໍ່າຮຽນ ໃນໂຮງຮຽນ ຂອງພວກເຂົາ.

ໃນຂົງເຂດຂອງການເກັບກໍາຂໍ້ມູນ, ຜູ້ປົກຄອງຫຼາຍຄົນບອກວ່າ ຄວາມກົດດັນຈາກໝູ່ແມ່ນປະເດັນທີ່ສໍາຄັນ ແລະ ໄດ້ເນັ້ນໜັກກ່ຽວກັບອິດທິພົນຂອງໝູ່ ໃນການຊັກນໍາໃຫ້ຊາວໜຸ່ມເຂົ້າຮ່ວມກິດຈະກໍາທີ່ບໍ່ເປັນທີ່ຍອມຮັບ ເຊັ່ນ ການອອກໂຮງຮຽນ, ການແຂ່ງລົດ, ການໃຊ້ຢາເສບຕິດ ສໍາລັບຊາວໜຸ່ມຊາຍ ແລະ ການມີເພດສໍາພັນກ່ອນໄວອັນຄວນສໍາລັບຊາວໜຸ່ມຍິງ.

## 4.2.4 ການເຂົ້າເຖິງການສຶກສາຊັ້ນສູງ ແລະ ການຝຶກອົບຮົມວິຊາຊີບ

ການເຂົ້າເຖິງການສຶກສາໃນຂັ້ນມະຫາວິທະຍາໄລ ຫຼື ການຝຶກອົບຮົມວິຊາຊີບ ຍັງເປັນເລື່ອງຍາກສໍາລັບຊາວໜຸ່ມສ່ວນຫຼາຍ ໃນ ສປປ ລາວ. ໃນປີ 2010 ບົດລາຍງານ ການສໍາຫຼວດກໍາລັງແຮງງານ ໄດ້ລາຍງານວ່າ ມີພຽງ 2.95% ຂອງພົນລະເມືອງລາວທັງໝົດ ໃນກຸ່ມອາຍຸ 15-64 ປີ ໄດ້ຮັບການຝຶກອົບຮົມວິຊາຊີບ ໃນຮູບແບບໃດໜຶ່ງ.[97] ສໍາລັບກຸ່ມອາຍຸ 15-19 ປີ, ຮູບແບບການຝຶກອົບຮົມວິຊາຊີບທີ່ພົບເຫັນທົ່ວໄປ ສ່ວນຫຼາຍແມ່ນການຕັດຜົມ, ຖັກແສ່ວ ແລະ ການຮຽນພາສາຕ່າງປະເທດ. ສໍາລັບໃນກຸ່ມອາຍຸ 20-24 ປີ ຮູບແບບການຝຶກອົບຮົມວິຊາຊີບທີ່ພົບເຫັນທົ່ວໄປຫຼາຍທີ່ສຸດ ແມ່ນການຮຽນຂັບຂີ່ລົດ ແລະ ການຝຶກອົບຮົມຄອມພິວເຕີ/ຊອບແວ.

ໃນກຸ່ມສົນທະນາກັບພໍ່ແມ່ ແລະ ຊາວໜຸ່ມ ໄດ້ຊ່ວຍຊີ້ໃຫ້ເຫັນສາຍເຫດວ່າເປັນຫຍັງຊາວໜຸ່ມ ຈຶ່ງບໍ່ນິຍົມເຂົ້າຮຽນສາຍອາຊີວະສຶກສາ, ເຖິງແມ່ນວ່າພວກເຂົາຈະສາມາດຈ່າຍຄ່າຮຽນໄດ້. ອໍານາດການປົກຄອງບ້ານ ໃຫ້ຂໍ້ສັງເກດວ່າ ຜູ້ເປັນພໍ່ແມ່ສົ່ງເສີມໃຫ້ລູກຂອງຕົນໄດ້ເຂົ້າຮຽນໃນມະຫາວິທະຍາໄລ ແລະ ຖ້າເປັນໄປໄດ້ກໍ່ມີຕໍາແໜ່ງສູງໃນສາຍພັກ, ແທນທີ່ຈະສະໜັບສະໜູນເຂົາເຈົ້າໃຫ້ເຂົ້າຮຽນສາຍອາຊີວະ ເຊິ່ງເປັນການເປີດໂອກາດອັນແນ່ນອນໃຫ້ສາມາດມີວຽກເຮັດງານທໍາສໍາລັບແຮງງານທີ່ມີສີມື. ຊາວໜຸ່ມທີ່ບໍ່ໄດ້ຮັບທຶນການສຶກສາ ຫຼື ເງິນສະໜັບສະໜູນທາງດ້ານການສຶກສາ ມີຄວາມດີໃຈທີ່ຈະເຂົ້າຮຽນໃນສາຍອາຊີວະ, ແຕ່ສ່ວນຫຼາຍພວກເຂົາບໍ່ມີພື້ນຖານການສຶກສາທີ່ຕ້ອງການໃນການສະໝັກຮຽນ.

ໃນຫຼາຍການສໍາພາດຜູ້ໃຫ້ຂໍ້ມູນຫຼັກ (KIIs) ກັບອົງຂອງລັດຖະບານ ໄດ້ເວົ້າເຖິງບັນຫາຂອງຊາວໜຸ່ມທີ່ຖືກສົ່ງເສີມຈາກພໍ່ແມ່ຂອງພວກເຂົາ ເພື່ອເຂົ້າຮຽນໃນລະດັບມະຫາວິທະຍາໄລ, ໂດຍຫວັງວ່າຈະໄດ້ເຂົ້າເປັນລັດຖະກອນ ເຊິ່ງຄວາມຄາດຫວັງນີ້ອາດບໍ່ສາມາດບັນລຸໄດ້, ໃນຂະນະທີ່ມີຄວາມຕ້ອງການແຮງງານທີ່ມີທັກສະວິຊາຊີບສູງ ເພື່ອຕອບສະໜອງຄວາມຕ້ອງການ ຂອງຂະແໜງອຸດສາຫະກໍາ ແລະ ກະສິກໍາ. ສະນັ້ນ, ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ພະຍາຍາມຫຼຸດຈຸດສຸມໃສ່ການສຶກສາລະດັບປະລິຍາຕີ ແລະ ເນັ້ນໃສ່ການຝຶກອົບຮົມທັກສະຕ່າງໆທີ່ແທດເໝາະກັບວຽກງານທີ່ມີຢູ່.

*ນັກຮຽນທີ່ຮຽນດີ ບໍ່ສາມາດທີ່ຈະສືບຕໍ່ຮຽນໄດ້ ຖ້າພວກເຂົາບໍ່ຮູ້ຈັກໃຜ (ບໍ່ມີເສັ້ນສາຍ)*

ອໍານາດການປົກຄອງບ້ານ, ໃນເຂດຕົວເມືອງ

[97] ILO, MoLSW, MPI (2010). *Labour Force and Using Child Labour Survey.*

ມີຄວາມເປັນຫ່ວງເປັນໃຍຢ່າງຫຼວງຫຼາຍ ກ່ຽວກັບຄວາມຈຳເປັນທີ່ຕ້ອງຮັບປະກັນຄວາມສອດຄ່ອງກັບມາດຕະຖານຂອງອາຊຽນ ເພື່ອໃຫ້ທັນກັບເວລາຮ່ວມເຂົ້າເປັນປະຊາຄົມເສດຖະກິດອາຊຽນ. ບັນຫາດັ່ງກ່າວຖືວ່າເປັນສິ່ງທ້າທາຍ, ໂດຍສະເພາະ ສຳລັບຊາວໜຸ່ມຢູ່ໃນເຂດຊົນນະບົດທີ່ຍັງຂາດການສຶກສາໃນລະບົບສາມັນ ຫຼື ການຝຶກວິຊາຊີບ.

> *ສະເພາະຜູ້ທີ່ຮຽນເກັ່ງອັນດັບໜຶ່ງ ແລະ ອັນດັບສອງເທົ່ານັ້ນ ທີ່ສາມາດຮຽນຕໍ່ການສຶກສາຊັ້ນສູງ*
> ແມ່ຍິງ, ອາຍຸ 20-24 ປີ, ໃນເຂດຊົນນະບົດ

ຄ່າຮຽນ, ຄ່າເດີນທາງ, ຄ່າເຄື່ອງນຸ່ງຮົ່ມ, ປຶ້ມຮຽນ ແລະ ບ່ອນພັກເຊົາ ເຮັດໃຫ້ການສຶກສາຫຼັງມັດທະຍົມ ສ່ວນຫຼາຍ ແມ່ນສຳລັບຜູ້ທີ່ຮັ່ງມີເທົ່ານັ້ນ. ຂໍ້ມູນຈາກການສຳຫຼວດດັດຊະນີໝາຍສັງຄົມ ລາວ (LSIS) ຢັ້ງຢືນໃຫ້ເຫັນສາຍພົວພັນລະຫວ່າງເຂດຕົວເມືອງ, ກຸ່ມຄົນຮັ່ງມີ, ແລະ ລະດັບການສຶກສາຂອງແມ່ (ເບິ່ງໃນຮູບທີ 3, ເອກະສານ-ຊ້ອນທ້າຍ 3).[98]

ຊາວໜຸ່ມບາງຄົນທີ່ໂຊກດີ ມີເງື່ອນໄຂໄດ້ຮັບທຶນການສຶກສາ ເພື່ອເຂົ້າຮຽນໃນມະຫາວິທະຍາໄລ, ແຕ່ການສົນທະນາກຸ່ມ ໄດ້ຊີ້ໃຫ້ເຫັນວ່າ ມີຈຳນວນໜ້ອຍທີ່ສຸດທີ່ຈະມີໂອກາດຮັບທຶນດັ່ງກ່າວ: ມີພຽງນັກຮຽນ 2-3 ຄົນ ຕໍ່ເມືອງເທົ່ານັ້ນ ທີ່ອາດຈະໂຊກດີໄດ້ຮັບການສະໜັບສະໜູນທາງງົບປະມານສຳລັບຄ່າຮຽນ ແລະ ຄ່າໃຊ້ຈ່າຍ ໃນການດຳລົງຊີວິດ. ສ່ວນຜູ້ອື່ນໆ, ການຂາດການພົວພັນ ຫຼື ຮູ້ຈັກໃຜ, ອາດຈະເປັນສິ່ງທີ່ຈຳກັດຄວາມສາມາດໃນການຊອກຫາການສະໜັບສະໜູນເພີ່ມ. ຂໍ້ມູນມີໜຶ່ງ ບໍ່ສະແດງໃຫ້ເຫັນຈະແຈ້ງວ່າ ເດັກຍິງຈະຮັບທຶນການສຶກສາ ຫຼື ບໍ່ ຖ້າພວກເຂົາຕ້ອງອອກໄປອາໃສຢູ່ໄກຈາກຄອບຄົວ.

ຈາກການສົນທະນາກຸ່ມກັບນັກສຶກສາມະຫາວິທະຍາໄລ ແລະ ກັບຊາວໜຸ່ມ ໃນເຂດຊົນນະບົດ ແລະ ຕົວເມືອງ, ພວກເຂົາຍົກບັນຫາຄວາມບໍ່ສອດຄ່ອງລະຫວ່າງ ແຜນງານການສຶກສາ ແລະ ການຝຶກອົບຮົມວິຊາຊີບ ທີ່ມີຢູ່ໃນ ລາວ ແລະ ປະເພດຂອງວຽກທີ່ມີຢູ່ໃນຕະຫຼາດແຮງງານ. ຊາວໜຸ່ມມີຄວາມຮູ້ສຶກວ່າການສຶກສາຂອງເຂົາເຈົ້າ ບໍ່ໄດ້ປູພື້ນຖານໃນການກຽມຄວາມພ້ອມດັ່ງທີ່ພວກເຂົາຄາດຫວັງໄວ້.

> *ຂ້ອຍໄດ້ຮັບການຝຶກອົບຮົມທາງດ້ານບັນຊີ, ແຕ່ວຽກທີ່ມີຢູ່ແມ່ນສຳລັບແມ່ບ້ານ ສະນັ້ນ ຂ້ອຍຈຶ່ງບໍ່ສາມາດຊອກວຽກເຮັດ.*
> ແມ່ຍິງ, ອາຍຸ 20-24 ປີ, ໃນເຂດຕົວເມືອງ

## 4.3 ອຸປະສັກຕໍ່ການສຶກສາ

ອຸປະສັກຕໍ່ການສຶກສາ ໃນ ສປປ ລາວ ມີຫຼາຍບັນຫາ (ເບິ່ງຂໍ້ 3 ເອກະສານຊ້ອນທ້າຍ 9). ການຂາດການສຶກສາ ເປັນວົງໂຄຈອນທີ່ຊ້ຳເຊື້ອທີ່ເກີດຈາກຄວາມບໍ່ເທົ່າທຽມທາງດ້ານຊົນເຜົ່າ, ສະຖານະພາບທາງເສດຖະກິດ ແລະ ສຸຂະພາບ ເຊິ່ງມີອິດທິພົນຕໍ່ກັບຂົງເຂດອື່ນໆຂອງຊີວິດ ໃນ ສປປ ລາວ. ການສຶກສາຂອງແມ່ ມີຄວາມກ່ຽວພັນກັບການຢູ່ລອດຂອງເດັກນ້ອຍ, ການພັດທະນາການຂອງເດັກແລກເກີດ ແລະ ຄວາມພ້ອມໃນເຂົ້າຮຽນຂອງເດັກ, ດັ່ງນັ້ນການຂາດການສຶກສາຂອງແມ່ ທີ່ມີມາແຕ່ອະດີດມີຜົນກະທົບຍາວນານຕໍ່ກັບອະນາຄົດ.[99]

> *ຫຼັງຈາກທີ່ພວກເຂົາຈົບໂຮງຮຽນປະຖົມ, ພວກເຂົາຕ້ອງສືບຕໍ່ເຂົ້າຮຽນຊັ້ນມັດທະຍົມ ແຕ່ບໍ່ມີຫໍພັກສຳລັບພວກເຂົາ*
> ຜູ້ຊາຍ,15-19 ປີ, ໃນເຂດຊົນນະບົດ

ການສົນທະນາກຸ່ມໃນເຂດຊົນນະບົດບາງກຸ່ມ ໄດ້ຍົກບັນຫາການທີ່ບໍ່ມີໂຮງຮຽນເປັນໜຶ່ງໃນອຸປະສັກ, ແຕ່ເຖິງແມ່ນວ່າໂຮງຮຽນຈະມີກໍ່ຕາມ ແຕ່ສະພາບແວດລ້ອມຂອງໂຮງຮຽນ ອາດສົ່ງຜົນໃຫ້ອັດຕາການມາເຂົ້າໂຮງຮຽນຂອງຊາວໜຸ່ມຫຼຸດລົງ ເຊັ່ນ ການຂາດສິ່ງອຳນວຍຄວາມສະດວກດ້ານສຸຂະອານາໄມໃນໂຮງຮຽນ ອາດເຮັດໃຫ້ເດັກຍິງທີ່ມີປະຈຳເດືອນບໍ່ຢາກມາໂຮງຮຽນ ແລະ ອາດສົ່ງຜົນກະທົບຕໍ່ກັບຕໍ່ສຸຂະພາບຂອງນັກຮຽນ. ການຂາດໂຮງຮຽນກິນນອນກໍ່ຍັງແມ່ນບັນຫາ ສຳລັບນັກຮຽນໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ແລະ ໄລຍະທາງຈາກບ້ານຫາໂຮງຮຽນກໍ່ເປັນອຸປະສັກທີ່ສຳຄັນສຳລັບຊາວໜຸ່ມຍິງ ຊຶ່ງອາດບໍ່ໄດ້ຮັບອະນຸຍາດໃຫ້ອາໃສຢູ່ຫ່າງໄກຈາກຄອບຄົວເພື່ອເຂົ້າໂຮງຮຽນ.

ສຸຂະພາບທີ່ບໍ່ແຂງແຮງ ອາດເປັນປັດໄຈໜຶ່ງ, ເຊັ່ນ ສຸຂະພາບຂອງຊາວໜຸ່ມເອງ ທີ່ເຮັດໃຫ້ພວກເຂົາບໍ່ສາມາດເຂົ້າຮຽນ ຫຼື ສຸຂະພາບຂອງພໍ່ແມ່ນັກຮຽນ ເຊິ່ງອາດຮຽກຮ້ອງໃຫ້ຊາວໜຸ່ມຕ້ອງໄດ້ອອກໂຮງຮຽນ ເພື່ອມາດູແລພໍ່ແມ່ ຫຼື ເຮັດວຽກເປັນຜູ້ຄ້ຳຈູນຄອບຄົວ. ນອກນັ້ນ ການຖືພາຍັງເປັນສາເຫດທີ່ສຳຄັນຂອງການອອກໂຮງຮຽນສຳລັບເດັກຍິງ.

> *ບາງເທື່ອບໍ່ສະບາຍ ແລ້ວຕ້ອງໄດ້ອອກໂຮງຮຽນ*
> ແມ່ຍິງ,15-19 ປີ, ໃນເຂດຊົນນະບົດ

ອຸປະສັກດ້ານວັດທະນະທຳ-ສັງຄົມ ກໍ່ເປັນອຸປະສັກສຳຄັນ, ລວມທັງ ຄວາມແຕກຕ່າງທາງດ້ານຊົນເຜົ່າລະຫວ່າງ ນັກຮຽນ ແລະ ຄູຂອງເຂົາເຈົ້າ ແລະ ຂາດການຊຸກຍູ້ໃນການເຂົ້າໂຮງຮຽນ ສຳລັບເດັກນ້ອຍຊົນເຜົ່າ ຜູ້ທີ່ມີພໍ່ແມ່ ທີ່ບໍ່ຄ່ອຍເຫັນຄຸນຄ່າຂອງການສຶກສາ.

---

98 ກະຊວງສາທາ ແລະ ສູນສະຖິຕິແຫ່ງຊາດ (2012). *ການສຳຫຼວດດັດຊະນີໝາຍສັງຄົມລາວ.*

99 ກະຊວງສາທາ ແລະ ສູນສະຖິຕິແຫ່ງຊາດ (2012). *ການສຳຫຼວດດັດຊະນີໝາຍສັງຄົມລາວ.*

## 4.4 ສະຫຼຸບ

1. ມີອຸປະສັກຫຼາຍຢ່າງໃນການເຂົ້າໂຮງຮຽນຂອງຊາວໜຸ່ມ ເຊັ່ນ: ຂໍ້ຈຳກັດທາງດ້ານການເງິນ, ຂາດການສະໜັບສະໜູນຂອງພໍ່ແມ່, ຂາດຄວາມເຊື່ອໝັ້ນຂອງເດັກ ແລະ ພໍ່ແມ່ ຕໍ່ກັບຜົນປະໂຫຍດຂອງການສຶກສາຕໍ່ກັບຄວາມສຳເລັດໃນອະນາຄົດຂອງຊາວໜຸ່ມ, ກິດຈະກຳ ແລະ ບູລິມະສິດອື່ນໆ ເປັນຕົ້ນ ວຽກເຮັດງານທຳ, ການເອົານ້ອງ ແລະ ການແຕ່ງງານ, ແລະ ຄວາມກັງວົນກ່ຽວກັບໄລຍະທາງ ແລະ ພື້ນຖານໂຄງລ່າງ. ເພື່ອແກ້ໄຂບັນຫາດັ່ງກ່າວນີ້ ຄວາມຕ້ອງການ ແລະ ການເຂົ້າເຖິງໂຮງຮຽນຂອງຊາວໜຸ່ມຕ້ອງເພີ່ມຂຶ້ນ ໂດຍສະເພາະ ສຳລັບເດັກຍິງໃນເຂດຊົນນະບົດ.
2. ອາດມີຄວາມເຂົ້າໃຈຜິດວ່າ ການສຶກສາຊັ້ນສູງ (ມະຫາວິທະຍາໄລ) ມີຄຸນຄ່າຫຼາຍກວ່າ ການພັດທະນາທັກສະທາງດ້ານວິຊາຊີບ. ມີຄວາມຈຳເປັນທີ່ຈະໄດ້ປັບປຸງ ແລະ ສົ່ງເສີມວຽກງານອາຊີວະສຶກສາ ຢູ່ ສປປ ລາວ ໃຫ້ເພີ່ມເຕີມ.
3. ໂຮງຮຽນອາດເປັນສະຖານທີ່ ທີ່ສຳຄັນ ຊ່ວຍປັບປຸງສຸຂະພາບຂອງຊາວໜຸ່ມໃຫ້ແຂງແຮງຂຶ້ນ ໂດຍຜ່ານສຸຂະສຶກສາທັກສະຂັ້ນພື້ນຖານ, ການພັດທະນາການບໍລິການສຸຂະພາບຂອງໂຮງຮຽນ[100], ປັບປຸງນ້ຳສະອາດ ແລະ ສຸຂະພິບານ ແລະ ກາລະໂອກາດສຳລັບການເກັບກຳຂໍ້ມູນກ່ຽວກັບພຶດຕິກຳສ່ຽງ (ໃນປັດຈຸບັນ ກຳລັງມີການວາງແຜນ ກ່ຽວກັບ ການດຳເນີນການສຳຫຼວດສຸຂະພາບຂອງນັກຮຽນໃນທົ່ວໂລກ (GSHS)).
4. ການປັບປຸງສຸຂະພາບຂອງຊາວໜຸ່ມ (ການປິ່ນປົວພະຍາດແມ່ກາຝາກ, ການຫຼຸດຜ່ອນການຖືພາແຕ່ອາຍຸຍັງນ້ອຍ, ຫຼຸດຜ່ອນການນຳໃຊ້ສານເສບຕິດ, ປັບປຸງໂພສະນາການ) ອາດມີຜົນກະທົບທີ່ສຳຄັນຕໍ່ກັບຜົນການຮຽນ ແລະ ການເຂົ້າຮຽນ.
5. ເຖິງແມ່ນມີຄວາມຄືບໜ້າທີ່ເຫັນໄດ້ຢ່າງຊັດເຈນ ໃນການບັນລຸຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການເຂົ້າຮຽນ ແລະ ຮຽນຈົບຊັ້ນ, ຍັງຄົງມີຄວາມແຕກໂຕນກັນລະຫວ່າງຍິງ-ຊາຍ ທີ່ສຳຄັນ ໂດຍສະເພາະໃນຂັ້ນມັດທະຍົມສຶກສາ ຢູ່ໃນບາງຊຸມຊົນທີ່ມີເສັ້ນທາງເຂົ້າເຖິງຍາກ ແລະ ໃນເຂດຊົນເຜົ່າ.
6. ມີຄວາມຈຳເປັນທີ່ຕ້ອງເພີ່ມທະວີການຮ່ວມມືລະຫວ່າງຂະແໜງການສຶກສາ ແລະ ຂະແໜງແຮງງານ ເພື່ອຮັບປະກັນວ່າຊາວໜຸ່ມທຸກຄົນ, ໂດຍບໍ່ຄຳນຶງເຖິງເພດ, ຄວາມພິການ ຫຼື ຊົນເຜົ່າ ຕ່າງກໍ່ໄດ້ຮັບຜົນປະໂຫຍດ ຈາກກາລະໂອກາດ ການຈະເລີນເຕີບຕົວທີ່ຈະເກີດຂຶ້ນ ໃນພາກພື້ນ ແລະ ຮັບປະກັນປະສິດຕິຜົນໃນການຂ້າມຜ່ານ ຈາກໂຮງຮຽນໄປສູ່ການມີວຽກເຮັດງານທຳ.

Education

[100] ການບໍລິການສຸຂະພາບໃນໂຮງຮຽນປະຈຸບັນ ສ່ວນຫຼາຍແມ່ນການໃຫ້ທາດເຫຼັກ (ອີງຕາມການຊ່ວຍເຫຼືອຂອງຜູ້ໃຫ້ທຶນ), ແລະ ການປິ່ນປົວພະຍາດກາຝາກ. ບໍ່ມີການບໍລິການສຸຂະພາບຂອງໂຮງຮຽນ. The only health service in schools for the moment is some iron supplementation (here and there as provided by various donors), and treatment for parasitic infections. There is no school health service per se.




Micka Perier/UNFPA, Lao PDR

5

# V ການມີວຽກເຮັດງານທຳ

## 5.1 ນະໂຍບາຍ ແລະ ແຜນງານ ທີ່ກ່ຽວຂ້ອງເຖິງຊາວໜຸ່ມ ແລະ ການມີວຽກເຮັດງານທຳ

ສປປ ລາວ ໄດ້ເຂົ້າເປັນສະມາຊິກຂອງອົງການແຮງງານສາກົນ (ILO) ໃນ ປີ 1965. ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກມີຂໍ້ຂັດແຍ່ງ ແລະ ວິກິດການພາຍໃນພາກພື້ນຈຶ່ງເຮັດໃຫ້ ສປປ ລາວ ບໍ່ສາມາດເຂົ້າຮ່ວມໄດ້ ຈົນເຖິງທ້າຍທົດສະວັດ 1980s. ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ (MoLSW) ໄດ້ຖືກສ້າງຕັ້ງຂຶ້ນ ໃນປີ 1993, ເຊິ່ງປະກອບດ້ວຍ 2 ແຜນຍຸດທະສາດຄື: ຍຸດທະສາດການພັດທະນາແຮງງານ ແລະ ຍຸດທະສາດດ້ານສະຫວັດດີການສັງຄົມ. ແຕ່ວ່າ ສອງຍຸດທະສາດນີ້ ບໍ່ໄດ້ມີການເຈາະຈິງສະເພາະຕໍ່ກັບຊາວໜຸ່ມ, ແຕ່ກະຊວງຮັບຮູ້ວ່າຊາວໜຸ່ມແມ່ນກວມເອົາຈຳນວນຫຼາຍຂອງກຳລັງແຮງງານ.

ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2007) *ມາດຕາ 83* ໄດ້ລະບຸໄວ້ວ່າ ຜູ້ໃຊ້ແຮງງານ ເດັກນ້ອຍທີ່ມີອາຍຸຕ່ຳກວ່າ 14 ປີ ຕ້ອງໄດ້ຮັບການສຶກສາອົບຮົມຄືນ. ວິທີການແບບດຽວກັນນີ້ ຍັງໃຊ້ຕໍ່ກັບພຶດຕິກຳທີ່ເປັນຕົວຢ່າງ ບໍ່ດີຕໍ່ກັບເດັກນ້ອຍ, ແລະ ການລ່ວງລະເມີດອື່ນໆທີ່ບໍ່ຮຸນແຮງ ດັ່ງທີ່ໄດ້ກຳນົດຢູ່ໃນກົດໝາຍສະບັບນີ້.

*ມາດຕາ 41* ຂອງ ກົດໝາຍແຮງງານ (2006) ກ່ຽວກັບ ແຮງງານເດັກນ້ອຍ ໄດ້ລະບຸໄວ້ວ່າ ນາຍຈ້າງສາມາດຈ້າງແຮງງານເດັກນ້ອຍ ຜູ້ທີ່ມີອາຍຸຢ່າງໜ້ອຍ 14 ປີ ແລະ ຕ່ຳກວ່າ 18 ປີ ໄດ້ ຖ້າວ່າເວລາເຮັດວຽກບໍ່ເກີນ 8 ຊົ່ວໂມງຕໍ່ມື້ ແລະ ຕ້ອງບໍ່ໃຫ້ເຮັດວຽກທີ່ຈັດຢູ່ໃນປະເພດວຽກໜັກ ຫຼື ເປັນອັນຕະລາຍຕໍ່ສຸຂະພາບຂອງພວກເຂົາ, ເຊິ່ງໃນນັ້ນລວມມີ ວຽກທຸກຊະນິດ ໃນຂະແໜງບໍ່ແຮ່ ແລະ ວຽກທີ່ເຮັດໃນອຸໂມງ ຫຼື ຢູ່ໃຕ້ນ້ຳ; ການຜະລິດສິນຄ້າທີ່ນຳໃຊ້ສານເຄມີ, ລະເບີດ ຫຼື ສານທີ່ເປັນພິດ; ວຽກທີ່ພົວພັນກັບຊາກສົບຂອງມະນຸດ ຫຼື ຄວາມສ່ຽງທີ່ຈະປະເຊີນກັບພະຍາດຕິດຕໍ່; ວຽກລ່ວງເວລາ, ຫຼື ວຽກ ໃນຕອນກາງຄືນ ແຕ່ 22:00 ໂມງ ເຖິງ 05:00; ວຽກໃນສະພາບແວດລ້ອມທີ່ມີສຽງດັງ ຫຼື ການສັ່ນສະເທືອນເກີນຄວນ; ຫຼື ວຽກໃນສະຖານທີ່ໃຫ້ບໍລິການເຫຼົ້າເບຍ ຫຼື ການພະນັນ.

ຍັງມີຄວາມແຕກໂຕນກັນລະຫວ່າງອາຍຸຕ່ຳສຸດຕາມກົດໝາຍ ທີ່ສາມາດໃຫ້ເຮັດວຽກໄດ້ (14 ປີ) ກັບ ອາຍຸຂອງນັກຮຽນທີ່ຈົບການສຶກສາພາກບັງຄັບ (11 ຫຼື 12 ປີ). ຄວາມແຕກໂຕນດັ່ງກ່າວ ເຮັດໃຫ້ເກີດຊ່ອງຫວ່າງ ເນື່ອງຈາກວ່າ ເດັກນ້ອຍທີ່ຈົບການສຶກສາພາກບັງຄັບ ບໍ່ຈຳເປັນຕ້ອງສືບຕໍ່ຮຽນ, ພວກເຂົາສາມາດເລີ່ມເຮັດວຽກໄດ້ ແຕ່ບໍ່ຖືກຕາມກົດໝາຍແຮງງານທີ່ລະບຸໄວ້.

ການວິໄຈນີ້ ພົບວ່າມີພຽງແຕ່ສາມແຜນງານທີ່ເຈາະຈິງສະເພາະຊາວໜຸ່ມ ແລະ ການມີວຽກເຮັດງານທຳ. ສາມແຜນງານນີ້ ລວມມີ ***ສູນເພື່ອນມິດ***, ເຊິ່ງເປັນແຜນງານຂະໜາດນ້ອຍທີ່ສະໜອງໂອກາດທາງທຸລະກິດ ແລະ ການຊອກວຽກເຮັດງານທຳ ໃຫ້ແກ່ເດັກນ້ອຍຂ້າງຖະໜົນ, ຊາວໜຸ່ມ ແລະ ແມ່ຍິງທີ່ມີຄວາມສ່ຽງ; ແລະ ແຜນງານການສົ່ງເສີມທ່າແຮງດ້ານທຸລະກິດ ແລະ ພອນສະຫວັນ *(STEPS)*, ທີ່ສົ່ງເສີມດ້ານການປະກອບການໃຫ້ແກ່ຊາວ ໜຸ່ມ ໂດຍການສ້າງ 2 ສູນ ເພື່ອໃຫ້ຄຳປຶກສາດ້ານອາຊີບ ແລະ ການຊອກວຽກເຮັດງານທຳ. ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ໄດ້ສ້າງເຄືອຂ່າຍສູນບໍລິການຈັດຫາງານ 9 ແຫ່ງ ຢູ່ 9 ແຂວງ ຄື ນະຄອນຫລວງວຽງຈັນ, ແຂວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ໄຊຍະບູລີ, ແລະ ຫລວງພະບາງ. ສູນບໍລິການຈັດຫາງານ ແມ່ນມີໜ້າທີ່ຈັດຫາອາຊີບທີ່ເໝາະສົມ, ແນະນຳ, ສົ່ງຕໍ່ ແລະ ການຊ່ວຍເຫຼືອນາຍຈ້າງ ແຕ່ວ່າແຜນງານນີ້ບໍ່ທັນໄດ້ເນັ້ນໃສ່ຊາວໜຸ່ມໂດຍສະເພາະເຈາະຈິງ.

ຊາວໜຸ່ມ ໃນກຸ່ມສົນທະນາ ໄດ້ຍົກການຂາດໂອກາດທາງດ້ານວຽກເຮັດງານ ເປັນປະເດັນທີ່ພວກເຂົາກັງວົນໃຈ ຈຶ່ງມີຄວາມຈຳເປັນທີ່ຕ້ອງມີມາດຕະການສຸມໃສ່ຊາວໜຸ່ມເພີ່ມຂຶ້ນ ຫຼື ສ້າງຄວາມເຂົ້າໃຈເພີ່ມຂຶ້ນ ກ່ຽວກັບການບໍລິການ ທີ່ພວກເຂົາສາມາດນຳໃຊ້ ໂດຍສະເພາະໃນເຂດຕົວເມືອງ ເຊິ່ງໃນປະຈຸບັນອາດບໍ່ຄ່ອຍມີການເຮັດສວນຄົວປູກຝັງລ້ຽງສັດໃຫ້ຊາວໜຸ່ມໃນຕົວເມືອງໄດ້ເລືອກ.

ໃນທົ່ວປະເທດໄດ້ມີການສ້າງຕັ້ງສູນຝຶກອົບຮົມວິຊາຊີບຫຼາຍແຫ່ງ ພາຍໃຕ້ການຄຸ້ມຄອງຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ ລວມທັງ ສະຫະພັນແມ່ຍິງ ແລະ ສູນກາງຊາວໜຸ່ມ. ການຝຶກອົບຮົມໄດ້ຈັດຕັ້ງຂຶ້ນຢູ່ໃນຫຼາຍຂົງເຂດວິຊາຊີບເປັນຕົ້ນ: ການຄ້າຂາຍອຸປະກອນໄຟຟ້າ, ການປຸງແຕ່ງ, ການຜະລິດເຄື່ອງນຸ່ງຮົ່ມ, ຊ່າງໄມ້, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ກົນຈັກລົດຍົນ. ໃນໄລຍະ 2 ຫາ 3 ປີ ຜ່ານມາ, ສູນຝຶກອົບຮົມວິຊາຊີບຕ່າງໆໄດ້ຝຶກໃຫ້ກວ່າ 88,000 ຄົນ, ໃນນັ້ນ ສ່ວນຫຼາຍແມ່ນຊາວໜຸ່ມ. ແຜນຍຸດທະສາດການຝຶກອົບຮົມວິຊາຊີບຈະໄດ້ຮັບການປະເມີນຄືນໃນປີ 2015.

ຢູ່ ສປປ ລາວ, ອົງການແຮງງານສາກົນ (ILO) ຮ່ວມມືກັບລັດຖະບານລາວ ໂດຍສະເພາະແມ່ນກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ແລະ ກຳມະບານ. ອົງການ ILO ບໍ່ໄດ້ຈັດຕັ້ງແຜນງານ ທີ່ເລັ່ງໃສ່ຊາວໜຸ່ມໂດຍກົງ, ແຕ່ວຽກງານດັ່ງກ່າວ ກໍ່ເປັນປະໂຫຍດໃຫ້ແກ່ຊາວໜຸ່ມ. ບົດບາດຕົ້ນຕໍຂອງ ອົງການ ILO ກໍ່ເພື່ອສະໜັບສະໜູນການສ້າງມາດຕະຖານແຮງງານແຫ່ງຊາດໃຫ້ສອດຄ່ອງກັບມາດຕະຖານອາຊຽນ ແລະ ສົ່ງເສີມການປົກປ້ອງທາງສັງຄົມ ແລະ ການເຄື່ອນຍ້າຍທີ່ປອດໄພ. ໃນອະນາຄົດ, ອົງການ ILO ຈະສືບຕໍ່ມີສ່ວນຮ່ວມໃນການພັດທະນາມາດຕະຖານ, ລວມທັງລາຍຮັບທີ່ເປັນທຳ ແລະ ເງື່ອນໄຂໃນການເຮັດວຽກທີ່ປອດໄພ.

ການປະກັນສັງຄົມດ້ານສຸຂະພາບ ແລະ ສະຫວັດດີການສັງຄົມ ມີເປົ້າໝາຍທີ່ຈະກວມເອົາ 50 % ຂອງປະຊາກອນທັງໝົດ ໃນທ້າຍ 2015 (ປະຈຸບັນນີ້ ກວມເອົາ 25% ເທົ່ານັ້ນ).

## 5.2 ສະພາບການມີວຽກເຮັດງານທຳ

ຊາວໜຸ່ມ ກວມເອົາອັດຕາສ່ວນສູງຂອງກຳລັງແຮງງານທັງໝົດ ໃນ ສປປ ລາວ; ຈຳນວນເກືອບເຄິ່ງໜຶ່ງຂອງປະຊາກອນທີ່ມີອາຍຸລະຫວ່າງ 15-19 ປີ ແມ່ນປະກອບເຂົ້າໃນກຳລັງແຮງງານ (ຜູ້ຊາຍ 43.5% ແລະ ຜູ້ຍິງ 54.3%). ໂດຍລວມ, ໃນກຸ່ມອາຍຸ 15-24 ປີ ອັດຕາສ່ວນຂອງຜູ້ຍິງທີ່ເຮັດວຽກ ໃນປັດຈຸບັນ ແມ່ນສູງກ່ວາອັດຕາສ່ວນຂອງຜູ້ຊາຍ (ແຕ່ວ່າອັດຕາສ່ວນນີ້ ມີການປ່ຽນແປງ ໃນກຸ່ມທີ່ມີອາຍຸຫຼາຍກວ່າ 25 ປີຂຶ້ນໄປ); ສະຖິຕິດັ່ງກ່າວ ສະແດງໃຫ້ເຫັນວ່າ ຜູ້ຍິງແມ່ນເລີ້ມເຂົ້າເຮັດວຽກຕັ້ງແຕ່ອາຍຸຍັງນ້ອຍທຽບກັບຜູ້ຊາຍ.[101] ບັນຫາທາງການເງິນຂອງຄອບຄົວ ອາດເປັນສາຍເຫດເຮັດໃຫ້ ເດັກນ້ອຍອອກຈາກໂຮງຮຽນ ແລະ ຊອກວຽກເຮັດ; ບົດການສຶກສາຄົ້ນຄວ້າ ກ່ຽວກັບແຮງງານເດັກໃນຂົງເຂດການຜະລິດດິນຈີ່ ພົບວ່າໃນບາງໂຮງງານ ໃນບາງແຂວງ ມີເດັກນ້ອຍອາຍຸພຽງ 9 ປີ ເຮັດວຽກ.[102] ນອກນັ້ນ ຍັງມີບົດສຶກສາຄົ້ນຄ້ວາໜຶ່ງ ໄດ້ພົບວ່າເດັກນ້ອຍ ອາຍຸ 14 - 17 ປີ ທີ່ອອກໂຮງຮຽນແລ້ວ ຈຳນວນໜຶ່ງໄດ້ເຮັດວຽກຫຼາຍກວ່າ 48 ຊົ່ວໂມງຕໍ່ອາທິດ.[103] ບົດລາຍງານສະບັບໜຶ່ງ ໄດ້ໃຫ້ຄຳແນະນຳ ໃນການສ້າງຕົວຊີ້ວັດເພື່ອໃຊ້ໃນການ ຕິດຕາມ ແລະ ການຕ້ານການໃຊ້ແຮງງານເດັກ ພ້ອມທັງດຳເນີນໂຄງການ ການສ້າງລາຍໄດ້ເສີມ ເພື່ອຊ່ວຍໃຫ້ຄອບຄົວບໍ່ຈຳເປັນຕ້ອງສົ່ງລູກຫລານ ຂອງຕົນອອກໄປຊອກວຽກເຮັດງານທຳ.[104]

> *ເດັກຊາຍ ເຮັດວຽກເປັນກຳມະກອນຢູ່ໂຮງງານໂຕະທີນ, ເປັນກຳມະກອນກໍ່ສ້າງ, ເດັກຍິງເຮັດວຽກຢູ່ໂຮງງານຕັດຫຍິບ.*
>
> ອຳນາດການປົກຄອງຂັ້ນເມືອງ, ໃນເຂດຊົນນະບົດ

ປະຊາກອນສ່ວນໃຫຍ່ຂອງ ສປປ ລາວ ອາໃສໃນເຂດຊົນນະບົດ ແລະ ວຽກກະສິກຳ, ລວມທັງການເຮັດໄຮ່, ເຮັດນາ, ປູກຜັກ ແລະ ການລ້ຽງສັດ ແມ່ນເປັນລາຍຮັບຫຼັກຂອງຄອບຄົວສ່ວນຫຼາຍ. ຈາກການສຳພາດກຸ່ມ ພົບວ່າໂຮງງານໃນເຂດຊົນນະບົດ ໄດ້ເພີ່ມຂຶ້ນ (ເຊັ່ນ ໂຮງງານກ້ອງຖ່າຍຮູບ Nikon, ໂຮງງານຕັດຫຍິບ, ໂຮງງານຢາສູບ) ໂຮງງານເຫຼົ່ານີ້ໄດ້ຫາແຮງງານທີ່ບໍ່ຈຳເປັນຕ້ອງມີສີມື, ແລະ ພາຍໃນບ້ານ ກໍ່ອາດມີວຽກເພີ່ມ ເຊັ່ນ ການປຸກສ້າງເຮືອນ. ໃນເຂດຊົນນະບົດບາງເຂດ, ການຂຸດຄົ້ນບໍ່ແຮ່ ເຊັ່ນ: ບໍ່ແຮ່ເຊໂປນ ໃນແຂວງສະຫວັນນະເຂດ, ອາດຈະຈ້າງງານ ແລະ ສະໜອງການຝຶກອົບຮົມໃຫ້ຊາວໜຸ່ມ. ເຖິງຢ່າງໃດກໍ່ຕາມ, ສຳລັບຊາວໜຸ່ມຫຼາຍຄົນທີ່ອາໃສຢູ່ໃນເຂດຊົນນະບົດ, ທີ່ໄດ້ຮັບການສຶກສາຕໍ່າກວ່າຊັ້ນມັດທະຍົມ ແລະ ມີລະດັບການສຶກສາພໍອ່ານອອກຂຽນໄດ້ ອາດຈະບໍ່ຖືກເລືອກເຂົ້າໃນໂຄງການຂະໜາດໃຫຍ່ ເຊັ່ນ: ການຂຸດຄົ້ນບໍ່ແຮ່ ຫຼື ສ້າງຫົນທາງ, ເຂື່ອນໄຟຟ້າ.

> *ຄວາມສາມາດຂອງແຮງງານລາວແມ່ນຕໍ່າກວ່າປະເທດອື່ນໆ, ເຂົາເຈົ້າບໍ່ມີສີມື, ບໍ່ສາມາດເຮັດວຽກກັບຊີມັງ, ບໍ່ສາມາດຂັບຂີ່ພາຫານະ*
>
> ອຳນາດການປົກຄອງບ້ານ, ໃນເຂດຕົວເມືອງ

> *ຄົນເປັນໄຂ້ຍຸງ ຍ້ອນເຂົາເຈົ້າເຂົ້າປ່າໄປຫາໄມ້ຂະຍຸງ.*
>
> ອຳນາດການປົກຄອງບ້ານ, ໃນເຂດຊົນນະບົດ

ສຳລັບ ຊາວໜຸ່ມທີ່ບໍ່ໄດ້ເຮັດວຽກກະສິກຳຂອງຄອບຄົວ, ກຸ່ມສົນທະນາ ໄດ້ຍົກໃຫ້ເຫັນວ່າ ຍັງມີໂອກາດທາງດ້ານ ການຜະລິດກະສິກຳເປັນສິນຄ້າອື່ນໆ ເຊັ່ນ: ການປູກຊາ, ຕົ້ນວິກ, ຕົ້ນຢາງພາຣາ, ກາເຟ, ອ້ອຍ ແລະ ການປູກມັນຕົ້ນ. ການເກັບເຄື່ອງປ່າຂອງດົງ ສາມາດສ້າງລາຍໄດ້ທາງດ້ານກະສິກຳ ໃຫ້ແກ່ຄົນຮຸ່ນໜຸ່ມໃນຊົນນະບົດ ແລະ ໃນຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ເຊັ່ນ: ຈາກການເກັບໝາກແໜ່ງ, ໄມ້ຂະຍູງ, ໜໍ່ໄມ້, ຫວາຍ ແລະ ເຫັດ. ການເຮັດວຽກທີ່ຖືກກົດໝາຍ ຫຼື ບາງຄັ້ງເຮັດວຽກຜິດກົດໝາຍ ເຊັ່ນ: ການຫາໄມ້ຂະຍູງ ແມ່ນເປັນແຫຼ່ງລາຍຮັບຕົ້ນຕໍຂອງຊາວໜຸ່ມຊາຍ ໃນບາງແຂວງພາກໃຕ້, ພວກເຂົາຈະເຂົ້າປ່າໃນຕອນກາງຄືນເພື່ອຕັດ ແລະ ລຳລຽງໄມ້ (ເຊິ່ງເຮັດໃຫ້ພວກເຂົາມີຄວາມສ່ຽງໃນການເປັນໄຂ້ມາລາເລຍ).

ຊາວໜຸ່ມໃນຊົນນະບົດ ແລະ ໃນເຂດຕົວເມືອງ ມີຄວາມອາດສາມາດເຂົ້າເຮັດວຽກເປັນພະນັກງານໂຮງແຮມ ຫຼື ພະນັກງານຮ້ານອາຫານ ໃນຂະແໜງອຸດສາຫະກຳການບໍລິການທີ່ກຳລັງຂະຫຍາຍຕົວ. ສຳລັບຊາວໜຸ່ມ, ຊາຍ ແລະ ຍິງ ທີ່ມີຄວາມຮູ້ດ້ານພາສາຕ່າງປະເທດ ມີໂອກາດຊອກວຽກເຮັດງານທຳໄດ້ງ່າຍກວ່າ.

ຊາວໜຸ່ມໃນຕົວເມືອງນິຍົມເຮັດວຽກຢູ່ໃນຂົງເຂດການຄ້າຂາຍຍ່ອຍ ເຊັ່ນ: ໃນຕະຫຼາດ, ສູນການຄ້າ ITECC ແລະ ສະຖານທີ່ຂາຍຍ່ອຍຂະໜາດໃຫຍ່ອື່ນໆ. ຊາວໜຸ່ມຊາຍໃນຕົວເມືອງນິຍົມເຮັດທຸລະກິດກ່ຽວກັບຂາຍໂທລະສັບມືຖື ແລະ ຂາຍເຄື່ອງອຸປະກອນຕ່າງໆ, ສ່ວນຊາວໜຸ່ມຍິງ ໃນຕົວເມືອງ ຈະຂາຍສິ່ງຂອງທີ່ຫຼາກຫຼາຍໃນຮ້ານຄ້າຕ່າງໆ.

> *ສ່ວນໃຫຍ່ແມ່ນເຮັດວຽກຢູ່ໂຮງແຮມ, ບາງຄົນທີ່ໄດ້ພາສາກໍ່ເຮັດວຽກຢູ່ຮ້ານອາຫານ, ແຕ່ບາງຄົນກໍ່ເຮັດວຽກເປັນກຳມະກອນຂົນຊີມັງ*
>
> ພໍ່ແມ່, ໃນເຂດຕົວເມືອງ

> *ການຕໍ່າຫູກ, ສູນກາງສະຫະພັນແມ່ຍິງ ແລະ ສູນກາງຊາວໜຸ່ມ ບໍ່ມີການຝຶກອົບຮົມປະເພດນີ້*
>
> ອຳນາດການປົກຄອງຂັ້ນບ້ານ, ໃນເຂດຕົວເມືອງ

ສ່ວນຫຼາຍໃນເຂດຊົນນະບົດ ແລະ ເຂດທີ່ມີເສັ້ນທາງເຂົ້າເຖິງຍາກ, ເຄື່ອງຫັດຖະກຳໄດ້ແມ່ນໜຶ່ງໃນແຫຼ່ງລາຍຮັບຂອງຊາວໜຸ່ມ. ວຽກຫັດຖະກຳເຊິ່ງເປັນວຽກເສີມ ແລະ ຍັງເປັນໂອກາດທີ່ຈະຫາລາຍໄດ້ເພີ່ມ, ຊາວໜຸ່ມຍິງອາດຈະໄດ້ຮັບການຝຶກອົບຮົມຕໍ່າຫູກຈາກຄອບຄົວຂອງພວກເຂົາ ຫຼື ຈາກໂຮງຮຽນວິຊາຊີບ. ເຄື່ອງນຸ່ງຈາກການຕຳຫູກຍັງຖືກນຳໃຊ້ໃນຊີວິດປະຈຳວັນຂອງແມ່ຍິງໃນ ສປປ ລາວ ຢ່າງຕໍ່ເນື່ອງ ແລະ ສົ່ງເສີມຄວາມສາມາດ ໃຫ້ອຸດສະຫະກຳຂອງຜູ້ຕໍ່າຫູກ ແລະ ການຕັດຫຍິບ.

---

[101] ILO, MoLSW, MPI (2010). *Labour Force and Using Child Labour Survey.*

[102] MLSW ແລະ ມະຫາວິທະຍາໄລແຫ່ງຊາດ (2004). *Child Labour in Lao Brick Sector.*

[103] National Statistics Centre, IoM (2010). *Child Labour Survey.*

[104] MLSW ແລະ ມະຫາວິທະຍາໄລແຫ່ງຊາດ (2004). *Child Labour in Lao Brick Sector.*

ຊາວໜຸ່ມຊາຍໃນຊົນນະບົດ ສ່ວນຫຼາຍໄດ້ເວົ້າເຖິງການຮັບຈ້າງແຮງງານເປັນລາຍມື້ ຫຼື ເປັນໄລຍະເວລາສັ້ນໆ ໃນການຂົນ ຫຼື ເຄື່ອນຍ້າຍອຸປະກອນ ແລະ ເຄື່ອງສະໜອງຕ່າງໆ. ກຸ່ມສົນທະນາຍິງ ແລະ ຊາຍ ໄດ້ຍົກໃຫ້ເຫັນວ່າ ຄົນຮຸ່ນໜຸ່ມອາຍຸແຕ່ 10-14 ປີ ອາດຊ່ວຍເຮັດວຽກໃນການຂົນນ້ຳໃນເຂດກໍ່ສ້າງ (ສຳລັບປະສົມປູນ). ສ່ວນການໃຊ້ແຮງງານທີ່ໜັກກວ່າ, ເຊັ່ນການຂົນດິນຈີ່, ເປົາຊີມັງ ແລະ ໄມ້ ໃນວຽກກໍ່ສ້າງໂດຍທົ່ວໄປ ແມ່ນສຳລັບຊາວໜຸ່ມຊາຍ ທີ່ມີອາຍຸແຕ່ 14 ປີ ຂຶ້ນໄປ ເນື່ອງຈາກວຽກເຫຼົ່ານີ້ ມີຄວາມຈຳເປັນທີ່ຕ້ອງໃຊ້ກຳລັງທາງຮ່າງກາຍ.

## 5.2.1 ຄວາມແຕກຕ່າງ ດ້ານບົດບາດຍິງ-ຊາຍ

ກຸ່ມສົນທະນາ ໃນທຸກຂົງເຂດ ໄດ້ອະທິບາຍຄວາມແຕກຕ່າງລະຫວ່າງຍິງ-ຊາຍ ກ່ຽວກັບປະເພດຂອງວຽກທີ່ມີຢູ່, ໂດຍສ່ວນຫຼາຍຄວາມແຕກຕ່າງແມ່ນອີງໃສ່ຄວາມຕ້ອງການທາງດ້ານກຳລັງແຮງທາງຮ່າງກາຍຂອງວຽກນັ້ນໆ. ຊາວໜຸ່ມຊາຍຈະເຮັດວຽກກໍ່ສ້າງ ແລະ ວຽກໃຊ້ແຮງງານອື່ນໆ, ສ່ວນຊາວໜຸ່ມຍິງ ຈະເຮັດວຽກ (ໂດຍປົກກະຕິຈະບໍ່ໄດ້ຮັບເງິນຄ່າຈ້າງ) ເພື່ອຊ່ວຍວຽກໃນຄອບຄົວ. ວຽກໃນຮ້ານອາຫານມີສຳລັບທັງເພດຍິງ ແລະ ຊາຍ. ການປູກຝັງ, ການເຮັດໄຮ່, ແລະ ເຮັດນາ ລ້ວນແຕ່ເປັນວຽກທີ່ໃຊ້ກຳລັງແຮງງານຂອງທັງເພດຍິງ ແລະ ຊາຍ. ວຽກໃນໂຮງງານຈຳນວນໜຶ່ງ ອາດຈະບໍ່ມີໃຫ້ສຳລັບຊາວໜຸ່ມທີ່ກຶກໜັງສື, ເຊິ່ງສ່ວນຫຼາຍແມ່ນເພດຍິງ, ແຕ່ຜູ້ຍິງຈຳນວນໜຶ່ງ ກໍ່ຍັງສາມາດຫາວຽກເຮັດໄດ້ໃນໂຮງງານຕັດຫຍິບ.

> *ຜູ້ຍິງບໍ່ມີຄວາມຮູ້; ພວກເຂົາເຈົ້າໄປເຮັດວຽກຢູ່ຕ່າງປະເທດ*
>
> ເພດຍິງ, ອາຍຸ 15 19 ປີ, ໃນເຂດຕົວເມືອງ

ຊາວໜຸ່ມຫຼາຍຄົນໃນເຂດຕົວເມືອງ ແລະ ເຂດຊົນນະບົດ ຍັງມີ**ທັດສະນະແບບດັ້ງເດີມ ກ່ຽວກັບ ບົດບາດຍິງ-ຊາຍ** ໃນຂົງເຂດການມີວຽກເຮັດງານທຳ. ເພດຍິງຈຳນວນໜຶ່ງໃນຕົວເມືອງ ເຮັດວຽກໃນຂົງເຂດການບໍລິການໃນຮ້ານເບຍ, ເສີບອາຫານຢູ່ຮ້ານອາຫານ ແລະ ຂາຍເຄື່ອງຍ່ອຍ; ຢູ່ໃນເຂດຊົນນະບົດເຂົາເຈົ້າໄດ້ເຮັດກັບຄອບຄົວຂອງຕົນໃນວຽກກະສິກຳ ຫຼື ເປັນຜູ້ຂາຍເຄື່ອງຢູ່ຕະຫຼາດ. ເພດຊາຍຈຳນວນໜຶ່ງໃນເຂດຕົວເມືອງເຮັດວຽກຢູ່ໂຮງງານ, ສວນ, ວຽກກໍ່ສ້າງ ແລະ ໂດຍທົ່ວໄປແລ້ວສາມາດໄດ້ຮັບຄ່າຕອບແທນຫຼາຍກວ່າເພດຍິງ. ເພດຊາຍໃນຊົນນະບົດ ສ່ວນຫຼາຍແມ່ນຊອກຫາວຽກທາງດ້ານກະສິກຳ, ໃນໂຮງຈັກໂຮງງານ ຫຼື ວຽກກໍ່ສ້າງ. ຊາວໜຸ່ມທັງໃນຕົວເມືອງ ແລະ ຊົນນະບົດ, ທັງຍິງ ແລະ ຊາຍ, ອາດຈະເຄື່ອນຍ້າຍເພື່ອຊອກຫາວຽກເຮັດງານທຳ, ເຊິ່ງເຮັດໃຫ້ພວກເຂົາມີຄວາມສ່ຽງທີ່ຈະຖືກເອົາລັດເອົາປຽບ.

## 5.2.2 ການເຄື່ອນຍ້າຍ

ການເຄື່ອນຍ້າຍເປັນບັນຫາທ້າທາຍທີ່ເຮັດໃຫ້ ຊາວໜຸ່ມຍິງ ແລະ ຊາຍ ຕົກຢູ່ໃນສະພາບທີ່ມີຄວາມສ່ຽງ ທັງຢູ່ພາຍໃນ, ປະເທດໃກ້ຄຽງ ແລະ ປະເທດທີ່ຢູ່ຫ່າງໄກ. ເນື່ອງຈາກໂອກາດທີ່ມີວຽກເຮັດງານທຳໃນທ້ອງຖິ່ນຕົນເອງຍັງມີຄວາມຈຳກັດ ອາດເຮັດໃຫ້ຊາວໜຸ່ມມີຄວາມສ່ຽງຕໍ່ການຄ້າມະນຸດ, ຄວາມສ່ຽງດ້ານສຸຂະພາບ ແລະ ບັນຫາດ້ານການປົກປ້ອງ ຍ້ອນຢູ່ໃນສະພາບທີ່ບໍ່ຖືກກົດໝາຍຂອງເຂົາເຈົ້າ ຢູ່ໃນປະເທດບ່ອນທີ່ເຂົາເຈົ້າກຳລັງເຮັດວຽກຢູ່. ເຖິງແມ່ນວ່າ ການຄ້າມະນຸດມີຜົນກະທົບຕໍ່ກັບທັງຊາວໜຸ່ມຍິງ ແລະ ຊາຍ, ບັນຫາຂອງເພດຍິງແມ່ນໄດ້ຮັບຄວາມສົນໃຈຫຼາຍກວ່າເນື່ອງຈາກຄວາມສ່ຽງທີ່ກ່ຽວພັນກັບການຂູດຮີດທາງເພດ. ອີງຕາມການສຳພາດຜູ້ໃຫ້ຂໍ້ມູນຫຼັກ ຈາກອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະ ອາສະຍາກຳ *UNODC*, ເງື່ອນໄຂທາງດ້ານການເຮັດວຽກຂອງຊາວໜຸ່ມຊາຍ ທີ່ສົ່ງຜົນໃຫ້ມີຄວາມສ່ຽງທາງດ້ານສຸຂະພາບ ແລະ ຄວາມປອດໄພຂອງພວກເຂົາ ມີຄວາມສາຄັນຄືກັນກັບຄວາມສ່ຽງທີ່ແມ່ຍິງໄດ້ຮັບ. ແຕ່ຄວາມສ່ຽງຂອງ ແມ່ຍິງແມ່ນເປັນທີ່ຮັບຮູ້ຫຼາຍກວ່າ.

> *ຖ້າບໍ່ມີວຽກເຮັດ, ພວກເຂົາໄປແຂວງອື່ນ*
>
> ເພດຊາຍ, 20-24 ປີ, ໃນເຂດຕົວເມືອງ

ການເຂົ້າຫາວຽກມີຄວາມແຕກຕ່າງກັນໃນແຕ່ລະລະດູການໃນແຕ່ລະແຂວງ ແລະ ລະຫວ່າງເຂດຊົນນະບົດ/ເຂດຕົວເມືອງ. ການມີທຸລະກິດ ແລະ ຮ້ານຂາຍເຄື່ອງຕ່າງໆ ກໍ່ມີຄວາມແຕກຕ່າງກັນຕາມແຕ່ລະທ້ອງຖິ່ນ, ເຮັດໃຫ້ຊາວໜຸ່ມມີຄວາມຈຳເປັນທີ່ຈະຕ້ອງເຄື່ອນຍ້າຍພາຍໃນປະເທດ ແລະ ອອກຕ່າງປະເທດເພື່ອຊອກວຽກເຮັດ. ຄົນຮຸ່ນໜຸ່ມໃນ ສປປ ລາວ ທີ່ຊອກຫາວຽກ ຈຳເປັນຕ້ອງມີການເຄື່ອນຍ້າຍເລື້ອຍໆ. ເຖິງວ່າບັນຫາດັ່ງກ່າວ ອາດມີຜົນກະທົບຕໍ່ກັບຊາວໜຸ່ມຈຳນວນໜຶ່ງທີ່ມາຈາກຊົນນະບົດ, ແຕ່ວ່າ ຊາວໜຸ່ມໃນຕົວເມືອງໃຫຍ່ຫຼາຍແຫ່ງໄດ້ກ່າວວ່າມັນມີຄວາມຈຳເປັນທີ່ພວກເຂົາຕ້ອງເຄື່ອຍຍ້າຍຊອກຫາວຽກໃນຂົງເຂດອື່ນໆຂອງປະເທດ ເພື່ອຊອກວຽກເຮັດຕາມໂຮງງານ, ຮ້ານຂາຍເຄື່ອງ ແລະ ວຽກບໍລິການອື່ນໆ.

> *ຢູ່ບ້ານຂອງພວກເຮົາ 5-6 ເປີເຊັນໄປເຮັດວຽກຢູ່ຕ່າງປະເທດ, ເຮັດວຽກຢູ່ໃນໂຮງງານຕັດຫຍິບ ແລະ ກໍ່ສ້າງ*
>
> ແມ່ຍິງ, 20-24 ປີ, ໃນເຂດຊົນນະບົດ

ການເຄື່ອນຍ້າຍຂອງຊາວໜຸ່ມ ໃນເຂດຊົນນະບົດ ແລະ ເຂດຕົວເມືອງ ໃນນັ້ນສ່ວນໜ້ອຍແມ່ນຊາວໜຸ່ມມາຈາກເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ທີ່ມັກອອກໄປເຮັດວຽກໃນຕ່າງປະເທດ ສ່ວນຫຼາຍແມ່ນ ປະເທດໄທ.

ຊາວໜຸ່ມຍິງ ອາດຖືກຕົວະວ່າໄປເຮັດວຽກເປັນແມ່ບ້ານ ແຕ່ສຸດທ້າຍກໍ່ຕົກເປັນເຫຍື່ອຂອງການຄ້າມະນຸດ ໃນຂົງເຂດການຂາຍບໍລິການທາງເພດ. ຊາວໜຸ່ມຊາຍອາດໄປເຮັດວຽກ ໃນສວນ ແລະ ໃນໂຮງງານ ຢູ່ບາງແຂວງຂອງປະເທດໄທ ທີ່ມີຊາຍແດນຕິດກັບ ສປປ ລາວ. ພວກເຂົາອາດເດີນທາງໄປເຮັດວຽກເປັນເວລາ 3 - 4 ເດືອນ ແລະ ກັບມາພັກຢູ່ບ້ານ. ຊາວໜຸ່ມໃນຊົນນະບົດບາງຄົນອາດເດີນທາງໄປເຮັດວຽກໃນປະເທດໄທຄັ້ງດຽວ ແລະ ກັບຄືນໄປເຮັດນາກັບຄອບຄົວ.

ເນື່ອງຈາກ ນາຍໜ້າໄດ້ຕົວະຍົວະ-ຫຼອກລວງ ຊາວໜຸ່ມໄປເຮັດວຽກໃນປະເທດເພື່ອນບ້ານ, ເຊິ່ງພວກເຂົາອາດບໍ່ຮູ້ວ່າພວກເຂົາໄປເຮັດວຽກແບບຜິດກົດໝາຍ.

ເປັນຜົນໃຫ້ບາງຄົນຖືກສົ່ງກັບບ້ານໂດຍເຈົ້າໜ້າທີ່ຂອງປະເທດນັ້ນໆ ແລະ ເຮັດໃຫ້ຊາວໜຸ່ມດັ່ງກ່າວຕົກຢູ່ໃນຄວາມສ່ຽງໜ້ອຍ. ມີພຽງຊາວໜຸ່ມສ່ວນໜ້ອຍ ທີ່ເດີນທາງໄປປະເທດມາເລເຊຍ ແລະ ຈີນ ເພື່ອເຮັດວຽກກໍ່ສ້າງ ແລະ ໃນໂຮງຈັກໂຮງງານ. ສ່ວນຊາວໜຸ່ມທີ່ມີພີ່ນ້ອງໃນເຂດ ອາເມລິກາເໜືອ ຫຼື ເອີຣົບ ອາດຈະໄດ້ມີໂອກາດເດີນທາງໄປເຮັດວຽກຢູ່ບ່ອນດັ່ງກ່າວ.

> *ເຈົ້າໄປດ້ອຍໂຕເຈົ້າເອງ (ແບບຜິດກົດໝາຍ); ເຈົ້າເຮັດໜັງສືແຜ່ນແດນ ແລະ ເຈົ້າສາມາດໄປແບບຖືກກົດໝາຍ*
>
> ຜູ້ຊາຍ, 20-24 ປີ, ໃນເຂດຊົນນະບົດ

ຜົນການວິໄຈດັ່ງກ່າວ ແມ່ນໄດ້ຮັບການຢັ້ງຢືນຈາກບົດຄົ້ນຄວ້າທາງຄຸນະພາບ ໃນບໍ່ດົນມານີ້ກ່ຽວກັບຊາວໜຸ່ມຍິງເຄື່ອນຍ້າຍ ທີ່ເຮັດວຽກໃນໂຮງງານຕັດຫຍິບ: ນອກຈາກ ຄວາມຮູ້ທີ່ຈຳກັດກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບໄວຈະເລີນພັນ, ແມ່ຍິງເຫຼົ່ານີ້ ຍັງພົບກັບບັນຫາທ້າທາຍໃນການຄຸ້ມຄອງດ້ານການເງິນ (ເຊັ່ນ: ການເຂົ້າເຖິງການກູ້ຢືມເງິນ ແລະ ການບໍລິການທະນາຄານ, ການເຂົ້າໃຈລະບົບເບີກຈ່າຍເງິນເດືອນ ແລະ ການສົ່ງເງິນຄືນກັບບ້ານ) ພ້ອມທັງການຖືກຂົ່ມເຫັງຈາກນາຍຈ້າງ ແລະ ອຸປະສັກຫລາຍຢ່າງ ໃນການເຂົ້າເຖິງ ການບໍລິໂພກອາຫານ ແລະ ໂພສະນາການ.[105] ໂດຍລວມແລ້ວ, ຊາວໜຸ່ມທີ່ມີການເຄື່ອນຍ້າຍ ແມ່ນຂາດການກຽມພ້ອມທີ່ດີເພື່ອຍ້າຍເຂົ້າສູ່ຕົວເມືອງໃຫຍ່ ແລະ ຍັງຕ້ອງການ ການເຝິກອົບຮົມກ່ຽວກັບ 'ທັກສະຊີວິດ'. ບົດລາຍງານນີ້ ຊຸກຍູ້ໃຫ້ພາກທຸລະກິດຕັດຫຍິບ ລິເລີ້ມກອບການປະຕິບັດງານໃຫ້ດີກວ່າເກົ່າ ແລະ ພັດທະນາລະບົບເຄື່ອຂ່າຍການສະໜັບສະໜັບສະໜູນລະຫວ່າງເພື່ອນຕໍ່ເພື່ອນ (robust peer support networks) ພາຍໃນໂຮງງານ.[106]

**ຊາວໜຸ່ມຍິງ ໂດຍສະເພາະຜູ້ທີ່ເຄື່ອນຍ້າຍ** ມີໂອກາດເຂົ້າເຮັດວຽກໃນຂົງເຂດທີ່ມີຄວາມສ່ຽງສູງ ເຊັ່ນ: ການເຮັດວຽກ ໃນສະຖານບັນເທີງ ແລະ ທຸລະກິດຂາຍບໍລິການທາງເພດ ເຊິ່ງມີການຂົ່ມເຫັງ ແລະ ຂູດຮີດໃນລະດັບທີ່ສູງ, ແລະ ການບໍລິການຊ່ວຍເຫຼືອຂອງທາງການແມ່ນຈຳກັດ ແລະ ບໍ່ສາມາດເຂົ້າເຖິງໄດ້.[107] ການປະເມີນຜົນແບບເລັ່ງລັດຂອງ ອົງການ UNICEF ທີ່ໄດ້ເຮັດການສຳພາດ ແລະ ສົນທະນາກຸ່ມນຳຊາວໜຸ່ມ ຈຳນວນ 72 ຄົນ ທີ່ເປັນກຸ່ມທີ່ມີຄວາມສ່ຽງຕໍ່ເຊື້ອເຮສໄອວີ, ບັນຫາຢາເສບຕິດ, ການຂາຍບໍລິການທາງເພດ ແລະ ກຸ່ມຊາວໜຸ່ມທີ່ເປັນກຸ່ມເພດທີ່ສາມ, ພວກເຂົາຍົກໄດ້ຍົກບັນຫາ ກ່ຽວກັບການຂາດໂອກາດຕໍ່ການຮຽນ, ການມີວຽກເຮັດງານທຳ ແລະ ການສ້າງລາຍຮັບແບບຖາວອນ. ການເຄື່ອນຍ້າຍເຂົ້າສູ່ຕົວເມືອງເພື່ອຊອກວຽກເຮັດ ແລະ ສົ່ງເງິນກັບບ້ານໃຫ້ຄອບຄົວ ໄດ້ມີການລາຍງານຈາກການວິໄຈໃນທຸກໆກຸ່ມ, ແຕ່ການຂາດເຂີນເງິນສຳລັບຄ່າກິນຢູ່ທົ່ວໄປ ແມ່ນຍັງເປັນບັນຫາຂອງທຸກໆຄົນ. ຊາວໜຸ່ມສ່ວນຫຼາຍທີ່ໄດ້ຖືກສຳພາດສະແດງໃຫ້ຮູ້ວ່າພວກເຂົາຕ້ອງການມີຊີວິດທີ່ດີຂຶ້ນກວ່າເກົ່າ.[108]

## 5.3 ອຸປະສັກຕໍ່ການມີວຽກເຮັດງານທຳ

**ອັດຕາການຫວ່າງງານ** ຂອງຊາວໜຸ່ມທີ່ມີອາຍຸ 15-24 ປີ ແມ່ນມີອັດຕາສ່ວນສູງກວ່າ ຜູ້ທີ່ມີອາຍຸຫຼາຍກວ່າ 25 ປີ ທັງໃນເຂດຕົວເມືອງ ແລະ ເຂດຊົນນະບົດ, ເຖິງແມ່ນວ່າ ໃນເຂດຕົວເມືອງ ພົບວ່າມີອັດຕາສູງກວ່າ, ເຊິ່ງອັດຕາການຫວ່າງງານຂອງຊາວໜຸ່ມທີ່ມີອາຍຸ 15-24 ປີ ຢູ່ໃນລະຫວ່າງ 6% ຫາ 7.5%.[109] ນີ້ໝາຍຄວາມວ່າ ຊາວໜຸ່ມທີ່ຫວ່າງງານໃນເຂດຕົວເມືອງ ແມ່ນຕ້ອງການຄວາມເອົາໃຈໃສ່ເປັນພິເສດ.

> *ຫາວຽກຍາກຫຼາຍຍ້ອນການສຶກສາຕໍ່າ*
>
> ແມ່ຍິງ 15-19 ປີ, ໃນເຂດຕົວເມືອງ

ກຸ່ມສົນທະນາ ໄດ້ຊີ້ໃຫ້ເຫັນອຸປະສັກຫຼາຍຢ່າງທີ່ກີດຂວາງຊາວໜຸ່ມ ໃນການເຂົ້າເຖິງວຽກງານທີ່ເປັນທຳ ແລະ ໄດ້ຮັບຄ່າຈ້າງດີ (ເບິ່ງ ຂໍ້ທີ່ 4, ໃນເອກະສານຊ້ອນທ້າຍ 9), ເຊັ່ນ ການສ້າງຄອບຄົວແຕ່ອາຍຸຍັງນ້ອຍ, ສຸຂະພາບບໍ່ແຂງແຮງ ແລະ ຂາດການສຶກສາ ແລະ ການຝຶກອົບຮົມ ເຊິ່ງມີຄວາມສຳຄັນພື້ນຖານເພື່ອຊອກວຽກທີ່ດີທີ່ສຸດໃນອະນາຄົດ. ນອກນັ້ນ, ຖ້າປາສະຈາກການຝຶກອົບຮົມ ແລະ ການສະໜັບສະໜູນທາງດ້ານການເງິນ ເພື່ອເລີ່ມເຮັດທຸລະກິດຂອງຕົວເອງ, ຊາວໜຸ່ມທີ່ມີການສຶກສາໜ້ອຍໄດ້ຖືກຈຳກັດໃຫ້ພວກເຂົາຕ້ອງເດີນຕາມຮອຍການເຮັດວຽກຂອງພໍ່ແມ່ ຫຼື ເຮັດວຽກທີ່ໄດ້ຄ່າຕອບແທນຕໍ່າຈາກການໃຊ້ແຮງງານທີ່ບໍ່ມີສີມື.

ອຳນາດການປົກຄອງ ຍອມຮັບວ່າ ຊາວໜຸ່ມບໍ່ພຽງແຕ່ຂາດວຽກເຮັດງານທຳ ແຕ່ຊາວໜຸ່ມຍັງຂາດຝີມືແຮງງານຕາມຄວາມຕ້ອງການ (ຕົວຢ່າງ: ທັກສະການຂັບລົດ ແລະ ການກໍ່ສ້າງ) ຊຶ່ງເປັນວຽກທີ່ມີຢູ່. ເຖິງວ່າຍັງມີວຽກທີ່ຕ້ອງໃຊ້ສີມືແຮງງານອີກຫຼາຍປະເພດ ໃນໂຄງການທີ່ສຳປະທານຈາກລັດຖະບານ ເຊັ່ນ: ການກໍ່ສ້າງທາງ ແລະ ບໍ່ແຮ່, ແຕ່ຜົນປະໂຫຍດມີພຽງເລັກນ້ອຍຕໍ່ຊາວໜຸ່ມລາວເນື່ອງຈາກແຮງງານທີ່ມີສີມືຈາກຕ່າງປະເທດເຂົ້າມາເຮັດໜ້າທີ່ແທນຄົນລາວທີ່ບໍ່ຄຸນນະວຸດທິພຽງພໍ.

> *ເຖິງແມ່ນວ່າພວກເຂົາຈົບມະຫາວິທະຍາໄລ, ແຕ່ກໍ່ມີຄວາມຫຍຸ້ງຍາກຫຼາຍທີ່ຈະຊອກຫາວຽກເຮັດງານທຳ.*
>
> ຜູ້ປົກຄອງ, ໃນເຂດຕົວເມືອງ

ຫຼາຍຄູ່ຮ່ວມງານ ໄດ້ຍອມຮັບວ່າສິ່ງທ້າທາຍຫຼັກໃນການຊອກວຽກງານທຳ ສຳລັບຊາວໜຸ່ມຄືເຂົາເຈົ້າບໍ່ມີຄວາມຕ້ອງທີ່ຈະສຶກສາສາຍວິຊາຊີບ, ເຂົາເຈົ້າເລືອກທີ່ຈະຮຽນໃນມະຫາວິທະຍາໄລຫຼາຍກວ່າ. ເຖິງແມ່ນວ່າຍັງມີການຂາດແຄນວິຊາການຢ່າງໜັກໃນຫຼາຍຂະແໜງ, ລວມທັງ ຂະແໜງກະສິກຳ, ກໍ່ສ້າງ ແລະ ຂຸດຄົ້ນບໍ່ແຮ່ ທີ່ມີຄວາມຕ້ອງການຈ້າງງານ, ໃນຂະນະທີ່ຕະຫຼາດແຮງງານສຳລັບນັກສຶກສາທີ່ຮຽນຈົບມະຫາວິທະຍາໄລຍັງຈຳກັດ. ຈາກການສຳພາດນັກຮຽນມະຫາວິທະຍາໄລ ລວມທັງຜູ້ທີ່ຮຽນຈົບແລ້ວ ຊີ້ໃຫ້ເຫັນວ່າສິ່ງທີ່ເຂົ້າຮຽນບໍ່ໄດ້ແທດເໝາະກັບກາລະໂອກາດຂອງວຽກທີ່ມີຢູ່ລາວ.

---

[105] Care, AusAid and the Lao Womens Union (2012). *Sewing the Line; A qualitative baseline analysis of the risks and opportunities posed for young women by migration from rural Laos to Vientiane for the purpose of employment in the garment industry.*

[106] Idem

[107] CARE (2009), *Just Beginning. A qualitative baseline analysis of the risk of abuse and exploitation of sex workers in Vientiane Capital and subsequent access to elgal services.*

[108] UNICEF Lao PDR and the Ministry of Health (2011). *A Rapid Assessment: Most-At-Risk Adolescents and Young People to HIV in Lao PDR.*

[109] ILO, MoLSW, MPI (2010). *Labour Force and Using Child Labour Survey.*

## 5.4 ສະຫຼຸບ

1. ໂອກາດໃນການຈ້າງງານ ມີຄວາມແຕກຕ່າງຫຼາຍລະຫວ່າງເຂດຕົວເມືອງ, ຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ແລະ ລະຫວ່າງຍິງ ແລະ ຊາຍ. ຍັງບໍ່ມີຄວາມສອດຄ່ອງລະຫວ່າງຊາວໜຸ່ມ ແລະ ປະເພດຂອງວຽກທີ່ມີສໍາລັບເຂົາເຈົ້າ. ມີພຽງຊາວໜຸ່ມຈໍານວນໜຶ່ງທີ່ໄດ້ຮັບການຝຶກອົບຮົມສໍາລັບວຽກງານທີ່ມີຢູ່ ແລະ ຍັງຂາດຂໍ້ມູນຂ່າວສານ ກ່ຽວກັບການຮັບສະໝັກວຽກທີ່ຕ້ອງການສະເພາະຄົນບໍ່ມີສີມື ແລະ ສີມືແຮງງານຕໍ່າ.
2. ວຽກງານແບບກຸ້ມຕົນເອງ ແມ່ນມີຢູ່ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ, ແຕ່ໂດຍທົ່ວໄປຈະບໍ່ໄດ້ຮັບຄ່າຈ້າງ (ລວມເຖິງການເກັບເຄື່ອງປ່າຂອງດົງມາຂາຍ). ເຖິງຢ່າງໃດກໍ່ຕາມ ໂອກາດໃນການມີວຽກເຮັດແບບດັ້ງເດີມ ຍັງມີຢູ່ຢ່າງຫຼວງຫຼາຍ ແຕ່ບໍ່ໄດ້ສ້າງໂອກາດແກ່ຊາວໜຸ່ມ ໃນການຫຼຸດພົ້ນອອກຈາກວົງຈອນຂອງຄວາມທຸກຍາກໄດ້.
3. ຊາວໜຸ່ມບໍ່ທັນຖືກກໍານົດເປັນບຸລິມະສິດທີ່ສໍາຄັນ ທີ່ໄດ້ຮັບການປົກປ້ອງ ຢູ່ໃນນິຕິກໍາ ແລະ ຍຸດທະສາດຕ່າງໆ ທີ່ມີເພື່ອເພີ່ມໂອກາດຂອງການມີວຽກເຮັດງານທໍາ ໃນ ສປປ ລາວ, ເຖິງແມ່ນວ່າ ໃນຄວາມເປັນຈິງ ພວກເຂົາເປັນອົງປະກອບທີ່ສໍາຄັນດ້ານກໍາລັງແຮງງານ ແຕ່ບໍ່ມີການສະຫງວນວຽກສະເພາະສໍາລັບຄົນຮຸ້ນໜຸ່ມ.
4. ຊາວໜຸ່ມມີການເຄື່ອນຍ້າຍຢູ່ພາຍໃນ ແລະ ໄປປະເທດໃກ້ຄຽງ ໂດຍບໍ່ມີການຮັບປະກັນດ້ານສຸຂະພາບ ແລະ ດ້ານກົດໝາຍຮອງຮັບສໍາລັບພວກເຂົາ.

Employment



Micka Perier/UNFPA, Lao PDR

6

# VI ການປົກປ້ອງ

ຄວາມໝາຍຂອງການປົກປ້ອງ ໃນການວິໄຈນີ້ ແມ່ນລວມທັງການປ້ອງກັນໃຫ້ມີຄວາມປອດໄພທາງດ້ານຮ່າງກາຍ, ຈິດໃຈ ແລະ ກົດໝາຍ, ໂດຍຜ່ານລະບຽບການຂອງຂອບເຂດກົດໝາຍຂອງ ສປປ ລາວ ແລະ ອໍານາດການປົກຄອງ ແລະ ຜູ້ມີໜ້າທີ່ຮັບຜິດຊອບ ໃນການໃສ່ວິໄນ ແລະ ຮັບປະກັນຄວາມປອດໄພຂອງຊາວໜຸ່ມ.

## 6.1 ນະໂຍບາຍ ແລະ ແຜນງານທີ່ພົວພັນກັບການປົກປ້ອງສໍາລັບຄົນຮຸ້ນໜຸ່ມ

ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2007) ໄດ້ກໍານົດຫຼາຍຂົງເຂດທີ່ເດັກນ້ອຍ (ກໍານົດວ່າຜູ້ທີ່ມີອາຍຸຕໍ່າກວ່າ 18 ປີລົງມາ) ຕ້ອງໄດ້ຮັບການປົກປ້ອງໂດຍກົດໝາຍ. *ມາດຕາ 2* ກໍານົດເອົາເດັກນ້ອຍທີ່ມີຄວາມດ້ອຍໂອກາດ ຍ້ອນສະຖານະພາບເປັນເດັກກໍາພ້າ ຫຼື ເຄິ່ງກໍາພ້າ, ເດັກທີ່ຖືກລ່ວງລະເມີດ, ປະປ່ອຍ, ຊູດຣິດ, ຕິດຢາ ຫຼື ໄດ້ຮັບຜົນກະທົບຈາກການຕິດເຊື້ອເຮສໄອວີເຊິ່ງໄດ້ຮັບການປົກປ້ອງຈາກກົດໝາຍສະບັບນີ້. ນອກຈາກນັ້ນ, ເດັກນ້ອຍພິການ, ແມ່ນໄດ້ຮັບການນິຍາມວ່າເປັນເດັກນ້ອຍທີ່ "ບໍ່ມີຄວາມສົມບູນທາງດ້ານຮ່າງກາຍ, ມັນສະໝອງ ແລະ ຈິດໃຈ" ການພິການດັ່ງກ່າວອາດຈະເກີດຂຶ້ນໃນເວລາເກີດ ຫຼື ຫຼັງການເກີດ ແລະ ແມ່ນຄວາມຮັບຜິດຊອບຂອງລັດ ທີ່ຈະສະໜອງ "ການຮຽນໂດຍບໍ່ເສຍຄ່າ ແລະ ສະໜອງອຸປະກອນການຮຽນ, ການຊ່ວຍເຫຼືອທີ່ຈໍາເປັນ ແລະ ໄດ້ຮັບການຍົກເວັ້ນຄ່າຮຽນ ເພື່ອສົ່ງເສີມເດັກທີ່ດ້ອຍໂອກາດ, ເດັກຈາກເຂດຫ່າງໄກສອກຫຼີກ ແລະ ເດັກທີ່ມາຈາກຄອບຄົວທຸກຍາກ" (ມາດຕາ 29), "ແລະ ໃຫ້ເຂົ້າເຖິງການຝຶກອົບຮົມວິຊາຊີບ" (ມາດຕາ 30). ໃນ *ມາດຕາ 3* ຂອງກົດໝາຍດັ່ງກ່າວ ໄດ້ກໍານົດສິດຂອງເດັກນ້ອຍ ແລະ ຄວາມຮັບຜິດຊອບຂອງພໍ່ແມ່, ຜູ້ປົກຄອງ, ສັງຄົມ ແລະ ລັດ.

*ມາດຕາ 8* ກໍານົດວ່າຄວາມຮັບຜິດຊອບຂັ້ນພື້ນຖານຂອງລັດ ແມ່ນສ້າງນະໂຍບາຍກ່ຽວກັບວຽກການສຶກສາ ແລະ ສ້າງຄວາມອາດສາມາດໃຫ້ເດັກນ້ອຍມີນໍ້າໃຈຮັກຊາດ ແລະ ບ້ານເກີດເມືອງນອນ. ພາຍໃຕ້ *ມາດຕາ 9* ໄດ້ກ່າວເຖິງຄວາມຮັບຜິດຊອບຫຼັກຂອງສັງຄົມ ແມ່ນການປະກອບສ່ວນໃນການສ້າງສາ ແລະ ພັດທະນາຮ່າງກາຍ ແລະ ສະຕິປັນຍາຂອງເດັກນ້ອຍ, ເປັນຕົ້ນແມ່ນການປະກອບສ່ວນສ້າງສາປັບປຸງສະຖານທີ່ປິ່ນປົວສຸຂະພາບ, ສະຖານທີ່ສຶກສາຮໍ່າຮຽນ, ເຄື່ອນໄຫວສິລະປະວັດທະນະທໍາ, ກິລາກາຍະກໍາ ແລະ ປົກປ້ອງເດັກຈາກປະກົດການຫຍໍ້ທໍ້ຕ່າງໆທາງສັງຄົມ. *ມາດຕາ 48* ຫ້າມບໍ່ໃຫ້ເດັກນ້ອຍນໍາໃຊ້ຢາເສບຕິດ, ການດື່ມເຫຼົ້າ, ເບຍ ແລະ ການສູບຢາ. ຫ້າມບໍ່ໃຫ້ເດັກຮັບໃຊ້ຢູ່ໃນສະຖານບັນເທີງໃນຍາມກາງຄືນ, ບ້ານພັກ, ໂຮງແຮມ ແລະ ຮ້ານອາຫານ ແລະ ນໍາໃຊ້ການບໍລິການຂອງສະຖານທີ່ຕ່າງໆເຫຼົ່ານັ້ນໃນທາງທີ່ "ບໍ່ຖືກຕ້ອງ ແລະ ບໍ່ເໝາະສົມ". ສິ່ງລາມົກອານາຈານ, ການພະນັນ ແລະ ການນໍາໃຊ້ອາວຸດຕ່າງໆກໍຖືກຫ້າມ ພາຍໃຕ້ກົດໝາຍສະບັບນີ້. ອີງໃສ່ *ມາດຕາ 49* ຫ້າມພໍ່ແມ່, ຜູ້ປົກຄອງ ແລະ ບຸກຄົນອື່ນໆ ເຮັດໃຫ້ເດັກນ້ອຍໄດ້ຮັບບາດເຈັບ ຫຼື ໝິ່ນປະໝາດເດັກ, ບໍ່ອະນຸຍາດໃຫ້ເດັກເຮັດວຽກໃນສະຖານທີ່ຕ້ອງຫ້າມ ຫຼື ເຂົ້າເຖິງສານເສບຕິດທີ່ຕ້ອງຫ້າມ. ຍັງມີຂໍ້ຫ້າມຢ່າງຈະແຈ້ງ ກ່ຽວກັບການອະນຸຍາດໃຫ້ເດັກອາຍຸຕໍ່າກວ່າ 18 ປີ ເຂົ້າຮ້ານອາຫານທີ່ບໍລິການເຫຼົ້າ ຫຼື ຂອງມຶນເມົາ ປະເພດອື່ນໆ, ການໂຄສະນາເຫຼົ້າ ຫຼື ຢາສູບ ໃກ້ກັບໂຮງຮຽນ ຫຼື ເຂດຊຸມຊົນ ແລະ "ການເປັນຕົວຢ່າງທີ່ບໍ່ດີສໍາລັບເດັກ".

ເດັກທີ່ມີອາຍຸຕໍ່າກວ່າ 15 ປີ ເວລາກະທໍາຜິດ ຈະບໍ່ຖືວ່າເປັນຜູ້ກະທໍາຜິດທາງອາຍາ ຕາມທີ່ໄດ້ກໍານົດ ໃນກົດໝາຍອາຍາ. *ມາດຕາ 53* ຂອງ ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍໄດ້ກໍານົດວ່າມີ 4 ຂະແໜງການ ທີ່ໄດ້ສະໜອງວິທີການແກ້ໄຂບັນຫາໂດຍທີ່ບໍ່ຜ່ານສານເຊິ່ງລວມມີໜ່ວຍງານໄກ່ເກ່ຍຄະດີເດັກນ້ອຍຂັ້ນບ້ານ, ຫ້ອງການຍຸຕິທໍາເມືອງ ຫຼື ເທດສະບານ, ອົງການສືບສວນ-ສອບສວນ, ແລະ ອົງການໄອຍະການປະຊາຊົນ. ສານເດັກນ້ອຍໃນ *ມາດຕາ 69* ເວົ້າເຖິງຄະດີອາຍາທີ່ເດັກເປັນຜູ້ກະທໍາຄວາມຜິດ; ຄະດີກ່ຽວກັບແຮງງານເດັກນ້ອຍ; ຄະດີແພ່ງທີ່ພົວພັນກັບເດັກນ້ອຍ; ແລະ ຄະດີອື່ນໆທີ່ພົວພັນກັບເດັກ.

*ມາດຕາ 74* ກໍານົດວ່າ "ເດັກນ້ອຍກະທໍາຜິດທີ່ສານຕັດສິນລົງໂທດຕັດອິດສະລະພາບ ຈະຖືກສົ່ງໄປຍັງສູນຝຶກອົບຮົມວິຊາຊີບ ສໍາລັບເດັກນ້ອຍກະທໍາຜິດ" ແລະ ໄດ້ມີການກໍານົດສິດ ແລະ ໜ້າທີ່ຂອງສະຖາບັນດັ່ງກ່າວ, ແລະ ສິດ ແລະ ຄວາມຮັບຜິດຊອບຂອງເດັກນ້ອຍທີ່ຢູ່ສະຖານທີ່ດັ່ງກ່າວ.

ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, *ມາດຕາ 60*, ໄດ້ອະທິບາຍອໍານາດຂອງສານເດັກເພື່ອພິຈາລະນາຄໍາຮ້ອງຟ້ອງຕໍ່ເດັກ (ກໍານົດໂດຍສານວ່າເດັກແມ່ນຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ ລົງມາ). *ມາດຕາ 53 ແລະ 114* ໄດ້ເວົ້າວ່າຖ້າເດັກຕໍ່າກວ່າ 15 ປີ ຖືກຮຽກໃຫ້ປະກົດຕົວຕໍ່ສານ, ຄໍາສັ່ງສານດັ່ງກ່າວຕ້ອງໄດ້ສົ່ງໃຫ້ພໍ່ແມ່ ຫລື ຜູ້ປົກຄອງຂອງເດັກໂດຍກົງ. ຄົນຮຸ້ນໜຸ່ມທີ່ມີອາຍຸເກີນ 18 ປີ ແມ່ນຈະໄດ້ຮັບການພິຈາລະນາຄະດີຄືກັບຜູ້ໃຫຍ່.

ພາກທີ 6 ຂອງ ກົດໝາຍອາຍາ (2005) ໄດ້ພິຈາລະນາການກະທໍາຜິດທີ່ພົວພັນກັບສາຍພົວພັນທາງສົມລົດ ແລະ ລະ ບຽບການຕາມປະເພນີ. *ມາດຕາ 128 ເຖິງ 134* ພົວພັນເຖິງການປັບໄໝ ແລະ ການລົງໂທດສໍາລັບການກະທໍາຜິດດ້ານການຂົ່ມຂືນເດັກ ແລະ ການຄ້າມະນຸດ. ຕົວຢ່າງ *ມາດຕາ 129* ກໍານົດວ່າບຸກຄົນໃດທີ່ພົວພັນກັບການມີເພດສໍາພັນກັບເດັກຍິງ ຫຼື ເດັກຊາຍທີ່ມີອາຍຸຕໍ່າກວ່າ 15 ປີ ຈະຖືກຈໍາຄຸກ ແຕ່ 1 ເຖິງ 5 ປີ ແລະ ຈະຖືກປັບໃໝ ແຕ່ 2,000,000 ເຖິງ 5,000,000 ກີບ. *ມາດຕາ 133* ໄດ້ກໍານົດວ່າບຸກຄົນໃດທີ່ບັງຄັບເດັກທີ່ມີອາຍຸຕໍ່າກວ່າ 18 ປີ ໃຫ້ຂາຍບໍລິການທາງເພດ ຈະຖືກຈໍາຄຸກແຕ່ 10-20 ປີ ແລະ ຈະຖືກປັບໃໝ ແຕ່ 20,000,000 ກີບ ຫາ 50,000,000 ກີບ.

ຢູ່ໃນກົດໝາຍຄອບຄົວ ປີ 2008, *ມາດຕາ 9* ໄດ້ກໍານົດວ່າຄົນຮຸ້ນໜຸ່ມ, ທັງເພດຍິງ ແລະ ເພດຊາຍ ຕ້ອງມີອາຍຸ 18 ປີ ຂຶ້ນໄປ ຈຶ່ງຈະສາມາດເອົາກັນເປັນຜົວເມຍໄດ້ ແລະ ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (2004), ມາດຕາ 17 ກ່ຽວກັບ ສິດສະເໝີພາບທາງດ້ານຄອບຄົວໄດ້ກໍານົດວ່າແມ່ຍິງທີ່ມີອາຍຸແຕ່ 18 ປີ ຂຶ້ນໄປ ມີເສລີພາບໃນການເລືອກຄູ່ຄອງເພື່ອສ້າງຄອບຄົວ.

ເຖິງແມ່ນວ່າຈະບໍ່ມີກົດໝາຍໃດໄດ້ກຳນົດກ່ຽວກັບການລົງໂທດ/ໃສ່ວິໄນທາງຮ່າງກາຍໄວ້ຢ່າງຈະແຈ້ງກໍ່ຕາມ, ແຕ່ມີຫຼາຍໆມາດຕາຂອງກົດໝາຍວ່າດ້ວຍການປົກປ້ອງສິດທິເດັກ (2007) ໄດ້ເນັ້ນໃສ່ການລ່ວງລະເມີດທາງຮ່າງກາຍ ແລະ ສິນລະທຳ, ປ່ອຍປະ ແລະ ສິ່ງອື່ນໆທີ່ບໍ່ຄວນປະຕິບັດຕໍ່ກັບເດັກ.

*ມາດຕາ 13* ຂອງກົດໝາຍວ່າດ້ວຍການຈາລະຈອນທາງທ້ອງຖະໜົນ (2000) ກຳນົດວ່າ "ຄົນທີ່ຂີ່ລົດຈັກຕ້ອງໃສ່ໝວກກັນກະທົບທີ່ໄດ້ມາດຕະຖານ". ໃນ *ມາດຕາ 10*, ອາຍຸໃນການຂັບຂີ່ລົດທີ່ຖືກຕ້ອງຕາມກົດໝາຍ ໄດ້ກຳນົດໄວ້ທີ່ 15 ປີ ແລະ ສູງກວ່າ, ຜູ້ທີ່ມີອາຍຸ 15-18 ປີ ຈຳກັດໃນການໃຊ້ລົດຈັກທີ່ມີແຮງຈັກຕໍ່າກວ່າ 110cc. ຢູ່ໃນມາດຕາດຽວກັນ, ຜູ້ທີ່ຈະຂັບຂີ່ລົດຖີບຕ້ອງເປັນຜູ້ມີອາຍຸ 12 ປີ ຂຶ້ນໄປ.

ກົດໝາຍຢາສູບ ປີ 2009, *ມາດຕາ 50*, ຫ້າມບຸກຄົນທີ່ມີອາຍຸຕໍ່າກວ່າ 18 ປີ ສູບ, ຊື້ ຫຼື ຂາຍຢາສູບ. ມີຫຼາຍລະບຽບການຄຸ້ມຄອງການປ້ອງກັນ ແລະ ປິ່ນປົວຈາກການໃຊ້ສານທີ່ມີຜົນກະທົບຕໍ່ລະບົບປະສາດ. *ມາດຕາ 55* ຂອງ ກົດໝາຍວ່າດ້ວຍຢາເສບຕິດ ປີ 2007 ເຊິ່ງແມ່ນສ່ວນໜຶ່ງຂອງກົດໝາຍຢາເສບຕິດ (2007) ກຳນົດໜ້າທີ່ ແລະ ຄວາມຮັບຜິດຊອບຂອງບຸກຄົນ ໂດຍສະເພາະຊາວໜຸ່ມ ແລະ ເຍົາວະຊົນ ເພື່ອສະກັດກັ້ນ ແລະ ຕ້ານຢາເສບຕິດ ເຊັ່ນວ່າ: ຊາວໜຸ່ມເອງມີຄວາມຮັບຜິດຊອບທີ່ຈະບໍ່ໃຊ້ຢາເສບຕິດ ແລະ ເມື່ອຕິດຢາເສບຕິດແລ້ວ ກໍ່ຕ້ອງຕັດສິນໃຈເຂົ້າຮັບການປິ່ນປົວອອກຈາກຢາເສບຕິດ.

*ມາດຕາ 46 ແລະ 47*, ຂອງກົດໝາຍວ່າດ້ວຍການປົກປ້ອງສິດທິເດັກ (2007) ກຳນົດການປ້ອງກັນ ແລະ ການຟື້ນຟູການຕິດຢາເສບຕິດໃນຄົນຮຸ່ນໜຸ່ມ ແລະ ສະໜອງເງື່ອນໄຂ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ເຂົາເຈົ້າ ກ່ຽວກັບການປິ່ນປົວ, ການຟື້ນຟູ, ການບຳບັດ ແລະ ໃຫ້ຄວາມຮູ້ຄວາມເຂົ້າໃຈກ່ຽວກັບໄພອັນຕະລາຍ ແລະ ຜົນສະທ້ອນຂອງສິ່ງເສບຕິດ ພ້ອມທັງການຝຶກອົບຮົມວິຊາຊີບ ເພື່ອຊຸກຍູ້ໃຫ້ມີການມີສ່ວນຮ່ວມຂອງສັງຄົມຫຼາຍຂຶ້ນ.

ໃນຂະນະທີ່ບໍ່ມີກົດເກນ ຫຼື ກົດໝາຍໃດທີ່ເວົ້າເຖິງອາຍຸຕໍ່າສຸດໃນການບວດເປັນສຳມະເນນ ໃນພຸດທະສາດສະໜາ ຢູ່ ໃນ ສປປ ລາວ, ໂດຍທົ່ວໄປອາຍຸຕໍ່າສຸດທີ່ເປັນທີ່ຍອມຮັບ ໃນການເຂົ້າບວດເປັນສຳມະເນນແມ່ນ 7 ປີ. ເຖິງຢ່າງໃດກໍ່ຕາມ, ການຈະເຂົ້າບວດເປັນສຳມະເນນ ຫຼື ແມ່ຊີ ໃນເກນອາຍຸດັ່ງກ່າວ, ຕ້ອງໄດ້ຮັບອະນຸຍາດຈາກພໍ່ແມ່ ແລະ ຜູ້ປົກຄອງ.

ໃນ *ມາດຕາ 35* ຂອງກົດໝາຍການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງເດັກ (2007), ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ແມ່ນອົງການຄຸ້ມຄອງມີໜ້າທີ່ໃນການປົກປ້ອງ ແລະ ໃຫ້ການຊ່ວຍເຫຼືອເດັກນ້ອຍຜ່ານຄະນະກຳມະການ ໃນການປົກປ້ອງ ແລະ ຊ່ວຍເຫຼືອເດັກນ້ອຍ. ຄະນະກຳມະການຕ້ານການຄ້າມະນຸດແຫ່ງຊາດ ຮັບຜິດຊອບບັນຫາທີ່ພົວພັນກັບການຄ້າມະນຸດ, ເຊິ່ງໄດ້ປະຕິບັດວຽກງານຮ່ວມກັບສະຫະພັນແມ່ຍິງລາວ, ກະຊວງ ສາທາລະນະສຸກ, ແລະ ກະຊວງປ້ອງກັນຄວາມສະຫງົບ. ນອກຈາກນັ້ນ ພະນັກງານຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຍັງໄດ້ຖືກມອບໝາຍໃຫ້ປະຕິບັດວຽກງານກັບ ສູນເພື່ອນມິດ ເພື່ອແກ້ໄຂຄວາມຕ້ອງການຂອງເດັກຜູ້ດ້ອຍໂອກາດ, ຜູ້ທີ່ບໍ່ມີທີ່ພັກອາໃສ ແລະ ເດັກນ້ອຍກໍ່າພ້າ.

8 ແຜນງານ ທີ່ຈັດຕັ້ງປະຕິບັດ ໂດຍອົງການທີ່ບໍ່ຂຶ້ນກັບລັດຖະບານ ໄດ້ກວມເອົາບັນຫາຕ່າງໆທີ່ຖືກແຍກປະເພດຂອງການປົກປ້ອງ, ພົວພັນເຖິງບົດບາດຍິງ-ຊາຍ, ການໃຊ້ຄວາມຮຸນແຮງ, ການຄ້າມະນຸດ, ອາຍຸ, ຊົນເຜົ່າ, ຜູ້ຂາຍບໍລິການ ແລະ ກຸ່ມທີ່ດ້ອຍໂອກາດອື່ນໆ.

ມີພຽງແຜນງານດຽວ ທີ່ເນັ້ນໃສ່ຄົນຮຸ້ນໜຸ່ມ ແລະ ຄວາມພິການ, ໂດຍອີງໃສ່ການປັບປຸງການເຂົ້າເຖິງການສຶກສາສຳລັບເດັກທີ່ພິການ. ບໍ່ມີແຜນງານໃດໄດ້ກຳນົດການຈັດຕັ້ງປະຕິບັດວຽກງານກ່ຽວກັບບັນຫາການປົກປ້ອງ ສຳລັບຄົນຮຸ້ນໜຸ່ມທີ່ມີຄວາມພິການ, ນອກຈາກນັ້ນ, ມີ 3 ແຜນງານໄດ້ສຸມໃສ່ການຫຼຸດຜ່ອນຄວາມສ່ຽງທີ່ຕິດພັນກັບອຸບັດເຫດທາງຖະໜົນ ແລະ ບັນຫາລະເບີດບໍ່ທັນແຕກ UXO, ສະນັ້ນ, ຈຶ່ງອາດຖືວ່າເປັນການປ້ອງກັນຄວາມພິການ.

ກ່ຽວກັບການຄ້າມະນຸດ, ອົງການສະຫະປະຊາຊາດຕ້ານຢາເສບຕິດ ແລະ ອາສະຍາກຳ UNODC ໄດ້ປະຕິບັດວຽກງານຮ່ວມກັບ ອົງການຕົວແທນສາກົນ ຂອງ ສປຊ UNIAP ໃນການສ້າງຂີດຄວາມສາມາດໃຫ້ຂະແໜງຕຸລາການ ໃນຂົງເຂດການບັງຄັບໃຊ້ກົດໝາຍ, ການດຳເນີນຄະດີ ແລະ ການເພີ່ມຄວາມເຂົ້າໃຈຕໍ່ກັບບັນດາກົດໝາຍຕ້ານການຄ້າມະນຸດ. ໃນຂະນະທີ່ວຽກງານດັ່ງກ່າວພົວພັນກັບຄົນຮຸ້ນໜຸ່ມ, ຄົນຮຸ້ນໜຸ່ມກໍ່ບໍ່ໄດ້ຖືກກຳນົດສະເພາະຢູ່ໃນແຜນງານເຫຼົ່ານີ້. ເຖິງຢ່າງໃດກໍ່ຕາມ, ເປັນທີ່ຮັບຮູ້ກັນວ່າ ລະບົບເສດຖະກິດ-ສັງຄົມ ໃນປັດຈຸບັນ ຍັງຂາດແຄນໂອກາດໃນການຈ້າງງານເຊິ່ງໄດ້ຂັບເຄື່ອນໃຫ້ມີການຄ້າມະນຸດ ໂດຍສະເພາະ ເກີດຂຶ້ນກັບຄົນຮຸ້ນໜຸ່ມ. ທັງຍິງ ແລະ ຊາຍ ໄດ້ຮັບຜົນກະທົບຈາກການຄ້າມະນຸດ, ແຕ່ວ່າຄວາມເອົາໃຈໃສ່ຕໍ່ກັບແມ່ຍິງ ແມ່ນຫຼາຍກວ່າ ເນື່ອງຈາກວ່າ ຊາວໜຸ່ມຍິງມີຄວາມສ່ຽງທີ່ຈະໄດ້ຮັບຈາກການຂູດຮີດທາງເພດ. ໂຄງການ ການດຳເນີນງານ 3 ຝ່າຍ ເພື່ອປົກປ້ອງຜູ້ເຄື່ອນຍ້າຍ ຈາກການເອົາລັດເອົາປຽບທາງດ້ານແຮງງານ ໃນບັນດາປະເທດລຸ່ມແມ່ນ້ຳຂອງ ຂອງອົງການແຮງງານສາກົນ (*ILO*) ທີ່ໄດ້ເນັ້ນໃສ່ການສ້າງຄວາມເຂັ້ມແຂງໃນການກຳນົດ ແລະ ຈັດຕັ້ງປະຕິບັດນະໂຍບາຍການປົກປ້ອງການສະໝັກງານ ແຕ່ຍັງບໍ່ທັນມີຈຸດສຸມຕໍ່ກັບຄວາມຕ້ອງການຂອງແຮງງານເຄື່ອນຍ້າຍຂອງຄົນຮຸ້ນໜຸ່ມ ນອກຈາກວ່າ ພວກເຂົາຖືກຈັດໃນກຸ່ມເດັກນ້ອຍ ເຊິ່ງເປັນກຸ່ມທີ່ໄດ້ຮັບການເອົາໃຈໃສ່ຫຼາຍກວ່າ.

## 6.2 ສະພາບດ້ານການປົກປ້ອງ

ເຖິງແມ່ນວ່າຢູ່ໃນຫຼາຍກົດໝາຍ ຈະມີການກຳນົດໄວ້ຢ່າງກວ້າງຂວາງກ່ຽວກັບການປົກປ້ອງຊາວໜຸ່ມ ແລະ ເຍົາວະຊົນ ກໍ່ຕາມ, ແຕ່ການປົກປ້ອງເດັກນ້ອຍຍັງ ເປັນບັນຫາທ້າທ້າຍຢູ່ ສປປ ລາວ ຍ້ອນການບັງຄັບໃຊ້ກົດໝາຍຍັງບໍ່ທັນຮັດກຸມເທົ່າທີ່ຄວນ. ມີຫຼາຍບັນຫາທີ່ໄດ້ຖືກຍົກຂຶ້ນຢູ່ໃນບົດລາຍງານສະບັບນີ້ ກ່ຽວກັບການປົກປ້ອງເດັກນ້ອຍ ເຊິ່ງພົວພັນເຖິງສິ່ງທີ່ເຂົາເຈົ້າເຮັດເພື່ອປົກປ້ອງຄົນຮຸ້ນໜຸ່ມທີ່ມີຄວາມສ່ຽງ ຫຼື ຄົນຮຸ້ນໜຸ່ມທີ່ເປັນຜູ້ຖືກ

ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ, ການຂູດຮີດ, ການລ່ວງລະເມີດ ແລະ ປ່ອຍປະ. ບັນຫາເຫຼົ່ານັ້ນ ກວມເອົາຄົນຮຸ້ນໜຸ່ມທີ່ແຕ່ງງານກ່ອນເກນອາຍຸອັນຄວນ ແລະ ຄົນຮຸ້ນໜຸ່ມ ທີ່ເຮັດວຽກ ຫຼື ຖືກກົດຂີ່, ລວມທັງຄົນຮຸ້ນໜຸ່ມທີ່ພົວພັນກັບການຂາຍບໍລິການທາງເພດ.

ບົດປະເມີນຜົນກ່ຽວກັບບົດບາດຍິງ-ຊາຍທົ່ວປະເທດ ປີ 2012 ໄດ້ສັງເກດເຫັນ ບັນຫາຂອງການຄ້າມະນຸດ ແລະ ໄດ້ລາຍງານວ່າ: ແມ່ຍິງ ແລະ ເດັກນ້ອຍຍິງ ທີ່ຕົກເປັນເຫຍື່ອຂອງການຄ້າມະນຸດ ສ່ວນຫລາຍແລ້ວແມ່ນຖືກບັງຄັບໃຫ້ຄ້າປະເວນີ ແລະ ເປັນແຮງງານຮັບໃຊ້ພາຍໃນເຮືອນ.[110] ບໍ່ມີຂໍ້ມູນເພີ່ມເຕີມທີ່ເປັນລາຍລະອຽດກ່ຽວກັບບັນຫາການຄ້າມະນຸດເດັກນ້ອຍ ສຳລັບການວິໄຈ.

ການດື່ມສິ່ງມຶນເມົາ (ເຫຼົ້າ,ເບຍ) ເປັນບັນຫາສຳລັບທັງຊາວໜຸ່ມຍິງ ແລະ ຊາຍ. ສ່ວນໜຶ່ງຂອງບັນຫາແມ່ນມາຈາກການໂຄສະນາ ແລະ ການໂຄສະນາສິ່ງມຶນເມົາ (ເຫຼົ້າ,ເບຍ), ລວມທັງທັດສະນະທາງສັງຄົມຕໍ່ກັບການດື່ມເຫຼົ້າເບຍ; ແລະ ເປັນບັນຫາທີ່ຕ້ອງເອົາໃຈໃສ່ເນື່ອງຈາກວ່າ ການດື່ມສິ່ງມຶນເມົາກໍ່ໃຫ້ເກີດອຸບັດຕິເຫດ, ນຳໄປສູ່ການນຳໃຊ້ສິ່ງເສບຕິດອື່ນໆ ລວມທັງການມີເພດສຳພັນທີ່ບໍ່ປອດໄພ. ນິຕິກຳສະບັບໃໝ່ເພື່ອຈຳກັດການດື່ມສິ່ງມຶນເມົາ ສຳລັບຜູ້ທີ່ມີອາຍຸເກີນ 18 ປີ ຈະຖືກປະກາດໃຊ້ໃນປີ 2015, ຄົນຮຸ້ນໜຸ່ມຕ້ອງສະແດງບັດປະຈຳຕົວປະຊາຊົນ ກ່ອນທີ່ເຂົາເຈົ້າຈະສາມາດສັ່ງ ຫຼື ດື່ມເຫຼົ້າເບຍ ຫຼື ກ່ອນເຂົ້າໃນບາ ແລະ ສະຖານທີ່ບັນເທີງຕ່າງໆໃນຍາມລາຕີ. ສຳລັບຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ ແມ່ນໄດ້ມີກົດໝາຍເພື່ອຫ້າມບໍ່ໃຫ້ດື່ມສິ່ງມຶນເມົາ ລວມທັງມີການຫ້າມໂຄສະນາ. ສະນັ້ນ, ການປັບປຸງກົດໝາຍເພີ່ມຕື່ມດັ່ງກ່າວຍັງບໍ່ທັນສາມາດຮູ້ໄດ້ວ່າ ຈະໄດ້ຮັບຜົນທີ່ໄດ້ຮັບຕາມຄວາມຕ້ອງການບໍ່.

### 6.2.1 ການໃຊ້ຄວາມຮຸນແຮງ ແລະ ການລ່ວງລະເມີດທາງຮ່າງກາຍ

ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2007) ໄດ້ກຳນົດວ່າ ການລ່ວງລະເມີດທາງຮ່າງກາຍແມ່ນການທຸບຕີ, ແລະ ການລ່ວງລະເມີດທາງເພດເປັນການຂົ່ມຂືນ ຫຼື ການເຮັດໃຫ້ເດັກນ້ອຍເປັນຜູ້ຖືກເຄາະຮ້າຍຈາກການພົວພັນທາງເພດ ຫຼື ຈາກສິ່ງລາມົກອານາຈານ. ນອກນັ້ນຍັງໄດ້ກຳນົດເພີ່ມເຕີມວ່າ ການທໍລະມານແມ່ນພຶດຕິກຳໃດໜຶ່ງ ຫຼື ການປ່ອຍປະ ທີ່ກໍ່ໃຫ້ເກີດອັນຕະລາຍທາງດ້ານຮ່າງກາຍ ແລະ ຈິດໃຈຂອງເດັກນ້ອຍ, ການລ່ວງລະເມີດທາງເພດ ຫຼື ການຍຸຍົງສົ່ງເສີມເດັກໃຫ້ກະທຳຜິດທາງອາຍາ ຫຼື ເຮັດບາງສິ່ງທີ່ເປັນອັນຕະລາຍທາງດ້ານຮ່າງກາຍ ແລະ ຈິດໃຈຂອງເດັກນ້ອຍ. ເຖິງແມ່ນວ່າກົດໝາຍຫຼາຍສະບັບໄດ້ວາງຂໍ້ຫ້າມການໃຊ້ຄວາມຮຸນແຮງ ແລະ ການກົດຂີ່ແຮງງານເດັກກໍ່ຕາມ ແຕ່ຜົນການສຳຫຼວດດັດຊະນີໝາຍສັງຄົມລາວ LSIS ໄດ້ລາຍງານວ່າ **ການໃຊ້ຄວາມຮຸນແຮງຕໍ່ເດັກນ້ອຍ**ແມ່ນຍັງພົບຫຼາຍ; ໃນນັ້ນ, ເດັກອາຍຸ 10 -14 ປີ ຈຳນວນ 75.7% ແມ່ນມີປະສົບການ ທີ່ຜູ້ໃຫຍ່ໃສ່ໂທດຕໍ່ພວກເຂົາ, ແລະ ຜູ້ໃຫຍ່ ຈຳນວນຫລາຍກວ່າ 40% ມີຄວາມເຊື່ອວ່າ ເດັກຈະຕ້ອງໄດ້ຮັບການລົງໂທດທາງຮ່າງກາຍ.[111]

> *ຄູອາຈານລົງໂທດເຂົາເຈົ້າໂດຍໄມ້ແສ້ກ້ານຟອຍ; ຄູອາຈານໄດ້ດຶງ ແລະ ບິດຫູເຂົາເຈົ້າ*
>
> ຜູ້ຊາຍ, 10-14 ປີ, ໃນເຂດຕົວເມືອງ

ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ, ອຳນາດການປົກຄອງເມືອງ, ນາຍບ້ານ, ຕຳຫຼວດ, ຄູອາຈານ ແລະ ຜູ້ປົກຄອງ ເປັນຜູ້ທີ່ມີອຳນາດ ແລະ ສາມາດຈັດປະຊຸມໃນບ້ານ ແລະ ໃຫ້ຄຳປຶກສາອື່ນໆ ໃຫ້ແກ່ຊາວໜຸ່ມທີ່ເກເລບໍ່ເຊື່ອຟັງ ຫຼື ສະມາຊິກຂອງຊຸມຊົນຜູ້ອື່ນໆ ເພື່ອປັບປຸງຕົນເອງ. ໃນເຂດຕົວເມືອງ ຊາວໜຸ່ມບໍ່ຄ່ອຍເຊື່ອຟັງອຳນາດການປົກຄອງປານໃດ ແຕ່ພວກເຂົາມີຄວາມຢ້ານກົວຕໍ່ກັບເຈົ້າໜ້າທີ່, ການໃສ່ວິໄນ ແລະ ການຖືກກັກຂັງຫຼາຍກວ່າ.

ການໃສ່ວິໄນໃນໂຮງຮຽນ ອາດຮຸນແຮງເກີນໄປ, ຊາວໜຸ່ມບາງຄົນ ໃນຕົວເມືອງ ໄດ້ກ່າວເຖິງການຕີ ແລະ ການລົງໂທດທາງຮ່າງກາຍໂດຍຄູອາຈານ. ບັນຫານີ້ ແມ່ນໄດ້ຖືກກ່າວເຖິງ ທັງໃນເຂດຕົວເມືອງ ແລະ ຊົນນະບົດ.

> *ຂ້ອຍບໍ່ມັກອາຈານ ຜູ້ທີ່ຕີຫົວຂອງຂ້ອຍໂດຍໄມ້ບັນທັດ*
>
> ຜູ້ຊາຍ, 20-24 ປີ, ໃນເຂດຊົນນະບົດ

> *ບໍ່ປອດໄພ, ມີການຕີກັນ, ຍິງກັນ, ດູຖູກ, ຊາວໜຸ່ມຕິດຢາເສບຕິດ ແລະ ຜູ້ທີ່ເຮັດສິ່ງທີ່ຜິດກົດໝາຍ.*
>
> ຜູ້ຊາຍ, 20-24 ປີ, ໃນເຂດຕົວເມືອງ.

ໃນການສຶກສາວິໄຈໃນປີ 2012 ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກຍິງ ໄດ້ສະແດງໃຫ້ເຫັນວ່າ ໃນຂະນະທີ່ຊາວໜຸ່ມຫຼາຍຄົນ ຮັບຮູ້ວ່າຄວາມສະເໝີພາບເປັນສິດທິໜຶ່ງຂອງພວກເຂົາ, ແຕ່ 60% ຂອງຊາວໜຸ່ມທັງຍິງ ແລະ ຊາຍ (ອາຍຸ 15-18 ປີ) ໄດ້ລາຍງານວ່າ **ບໍ່ມີຄວາມສະເໝີພາບກັນລະຫວ່າງຍິງ ແລະ ຊາຍ** ຢູ່ໃນຂັ້ນຊຸມຊົນ ແລະ ພາລະບົດບາດ ແລະ ຄວາມຄາດຫວັງສຳລັບຜູ້ຊາຍ ແລະ ແມ່ຍິງ ກໍ່ຖືກກຳນົດເປັນປະຈຳ.[112] ໂດຍສະເພາະ, ແມ່ຍິງ ແລະ ເດັກນ້ອຍຍິງປະກົດວ່າເຂົາເຈົ້າຖືກຈຳກັດດ້ານບົດບາດຍິງ-ຊາຍສູງກວ່າຜູ້ຊາຍ ກວມລວມເອົາບົດບາດໃນການການເຮັດວຽກ, ໃນຄອບຄົວ, ຄວາມຮັບຜິດຊອບ, ການພົວພັນທາງເພດ ແລະ ການນຸ່ງຖື. ສິ່ງທີ່ສຳຄັນກໍ່ຄືຊາວໜຸ່ມ ມັກຈະຍົກເຫດຜົນສຳລັບບາງກໍລະນີຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກຍິງ ເມື່ອພວກເຂົາເຊື່ອວ່າບົດບາດຍິງ-ຊາຍ ແລະ ຄວາມຮັບຜິດຊອບຖືກລ່ວງລະເມີດ. ຜູ້ທີ່ໃຫ້ຂໍ້ມູນທັງໝົດ ທີ່ເຄີຍເຫັນເຫດການ ຫຼື ໄດ້ມີປະສົບການຕົວຈິງ ຢູ່ໃນຊຸມຊົນຂອງຕົນ, 46% ໄດ້ລາຍງານວ່າເຂົາເຈົ້າຖືກຂົ່ມຂູ່ ຫຼື ລ່ວງລະເມີດດ້ວຍການຈັບບາຍ ໃນລັກສະນະທີ່ເຮັດໃຫ້ເຂົາເຈົ້າອຶດອັດຢູ່ໃນໂຮງຮຽນ. ການສຶກສານີ້ ໄດ້ສະແດງໃຫ້ເຫັນວ່າຊາວໜຸ່ມມີຄວາມສົນໃຈ ແລະ ມີຄວາມຕັ້ງໃຈທີ່ຈະສົນທະນາ ແລະ ແກ້ໄຂບັນຫາການໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກຍິງ ແລະ ຄວນມີ

---

110 ADB and the World Bank (2012). *Country Gender Assessment for Lao PDR Reducing Vulnerability and Increasing Opportunity.*

111 ກະຊວງສາທາ ແລະ ສູນສະຖິຕິແຫ່ງຊາດ (2012). *ການສຳຫຼວດດັດຊະນີໝາຍສັງຄົມລາວ.*

112 UN Women Regional Office for Asia and the Pacific (2013). *Perceptions and Attitudes of Young People on Issues Related to Violence Against Women and Girls in Lao PDR: Summary findings.*

ຄວາມພະຍາຍາມສູງຂຶ້ນຕື່ມ ເພື່ອໃຫ້ຊາວໜຸ່ມມີສ່ວນຮ່ວມໃນການປະຕິຮູບ ແລະ ເປັນກະບອກສຽງໃນການໂຄສະນາເພື່ອໃຫ້ເກີດການປ່ຽນແປງໃນທາງທີ່ດີ.

ບັນດາຄວາມຮຸນແຮງ ທີ່ເກີດກັບແມ່ຍິງໂດຍຄົນແປກໜ້າ ແມ່ນບໍ່ໄດ້ກ່າວເຖິງປານໃດ. ຢູ່ໃນເຂດຕົວເມືອງ, ຍິງໜຸ່ມໄດ້ໃຫ້ຮູ້ວ່າ ໃນບາງຄັ້ງ ພວກເຂົາມີຄວາມຢ້ານກົວຕໍ່ຄວາມຮຸນແຮງ ຫຼື ການຂົ່ມຂືນ ແລະ ໃນເຂດຊົນນະບົດ ເຫດການຂົ່ມຂືນໃນທີ່ປ່ຽວ ຍັງຖືກຍົກຂຶ້ນໃນກຸ່ມສົນທະນາ.

**ການຕີກັນລະຫວ່າງຊາວໜຸ່ມຊາຍ** ຖືກຍົກເປັນປະເດັນເລື້ອຍໆ ໃນການສົນທະນາກຸ່ມ, ໂດຍທົ່ວໄປ ແມ່ນເປັນຜົນມາຈາກການດື່ມສິ່ງມຶນເມົາ (ເຫຼົ້າ, ເບຍ) ແລະ ການແຂ່ງຂັນເພື່ອຍາດຄວາມສົນໃຈຈາກເພດຍິງ. ໃນທົ່ວທຸກພາກ ມີຄວາມກ່ຽວພັນກັນລະຫວ່າງງານບຸນ ແລະ ສະຖານທີ່ບັນເທີງ, ຄວາມຖີ່ ແລະ ຄວາມຮຸນແຮງ ຂອງຂໍ້ຂັດແຍ່ງເຫຼົ່ານີ້ ເກີດຂຶ້ນພາຍໃນຂອບເຂດທີ່ຍັງເປັນທີ່ຍອມຮັບໄດ້ໃນສັງຄົມນັ້ນ. ເຖິງຢ່າງໃດກໍ່ຕາມ, ຫຼາຍສະຖານະການທີ່ມີຢາເສບຕິດເຂົ້າມາກ່ຽວຂ້ອງ, ລະດັບຂອງຄວາມຮຸນແຮງ ເຫັນວ່າຮ້າຍແຮງກວ່າ ແລະ ເກີນກວ່າການເວົ້າດູຖູກ ແລະ ຕີກັນດ້ວຍມືເປົ່າມາເປັນການໃຊ້ມີດ ແລະ ອາວຸດອື່ນໆແທນ. ໃນບາງກໍລະນີ ອາດຈະເກີດການຄາດຕະກຳ ໂດຍສາເຫດມາຈາກຢາເສບຕິດ.

> *ຊາວໜຸ່ມຕີກັນເມື່ອເຂົາເຈົ້າເມົາເຫຼົ້າ, ຄົນທີ່ບາດເຈັບກໍ່ແລ່ນໜີ, ມັນເກີດຂຶ້ນໃນຍາມບຸນ.*
>
> ຜູ້ຊາຍ, 20-24 ປີ, ໃນເຂດຊົນນະບົດ.

**ການໃຊ້ຄວາມຮຸນແຮງໃນຄອບຄົວ**, ບໍ່ວ່າຈະແມ່ນຄວາມຮຸນແຮງລະຫວ່າງ ຜົວແລະເມຍ, ຫຼື ພໍ່ແມ່ແລະລູກ ໄດ້ຖືກຍົກຂຶ້ນ ໃນທຸກຂົງເຂດຂອງການວິໄຈ. ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງຍາກ, ການດູຖູກ, ຮ້າຍດ່າລະຫວ່າງພໍ່ແມ່ ແລະ ລູກ ແມ່ນຖືວ່າເປັນເລື່ອງປົກກະຕິ, ແລະ ມີການກ່າວເຖິງພຽງເລັກນ້ອຍ ກ່ຽວກັບການລົງໂທດທາງຮ່າງກາຍ. ເຖິງແນວໃດກໍ່ຕາມ, ຄວາມຮຸນແຮງໃນຄອບຄົວລະຫວ່າງຜົວແລະເມຍ, ໂດຍສະເພາະມີເຫຼົ້າເບຍມາກ່ຽວຂ້ອງ, ມີແນວໂນ້ມທີ່ຈະມີການໃຊ້ຄວາມຮຸນແຮງທາງຮ່າງກາຍເພີ່ມຂຶ້ນ, ເຖິງແມ່ນວ່າ ມັນເປັນເລື່ອງທີ່ຍາກທີ່ຈະກຳນົດຄວາມຖີ່ ແລະ ປະກົດວ່າມັນເປັນເລື່ອງທີ່ຍອມຮັບ ແລະ ເກີດຂຶ້ນໂດຍບໍ່ມີການປ່ຽນແປງ. ມີການລາຍງານເຖິງເຫດການໜຶ່ງເຊິ່ງແມ່ນການຄາດຕະກຳເມຍ ໂດຍຜູ້ເປັນຜົວ ເຊິ່ງຜູ້ເປັນຜົວເອງ ພົບວ່າເສຍຊີວິດໃນເວລາຕໍ່ມາ, ຫຼື ບໍ່ກໍ່ແມ່ນການຂ້າຕົວຕາຍ. ເຫດການນີ້ ເຮັດໃຫ້ເກີດຄວາມຕົກຕະລຶງ ເພາະບໍ່ເຄີຍເກີດໃນຊຸມຊົນມາກ່ອນ, ສິ່ງດັ່ງກ່າວນີ້ ແມ່ນຖືກຍົກຂຶ້ນໃນການສົນທະນາ ໃນແຕ່ລະກຸ່ມສົນທະນາ ແລະ ກັບຜູ້ປົກຄອງ, ສະແດງໃຫ້ເຫັນວ່າເປັນສິ່ງບໍ່ຄ່ອຍເກີດຂຶ້ນ ແລະ ຄວນຈົດຈຳເປັນບົດຮຽນ.

> *ພວກເຮົາຄວນຈະສຶກສາອົບຮົມຜູ້ເປັນຜົວບໍ່ໃຫ້ຕີເມຍ.*
>
> ແມ່ຍິງ, 15 -19 ປີ, ໃນເຂດຊົນນະບົດ

> *ການຕີກັນລະຫວ່າງຜົວເມຍ, ຜົວເມົາເຫຼົ້າ*
>
> ແມ່ຍິງ, 10-14 ປີ, ໃນຊົນນະບົດ

**ຄວາມຮຸນແຮງໃນຄອບຄົວ** ເຊິ່ງຕິດພັນກັບການໃຊ້ຢາບ້າ ເມື່ອມີຊາວໜຸ່ມຊາຍຜູ້ໜຶ່ງ ທຸບຕີພໍ່ແມ່ຂອງຕົນເອງ ທີ່ປະຕິເສດບໍ່ເອົາເງິນໃຫ້ ຫຼື ບໍ່ໃຫ້ການສະໜັບສະໜູນໃນການເສບຢາເສບຕິດທີ່ເປັນນິໄສ. ຄວາມຮຸນແຮງປະເພດນີ້ ເປັນສິ່ງທີ່ຂ້ອນຂ້າງຕົກຕະລຶງ ໃນຊຸມຊົນໃນເຂດຊົນນະບົດ ເພາະໂດຍປົກກະຕິແລ້ວ ຊາວໜຸ່ມໃນເຂດດັ່ງກ່າວ ຈະສະແດງຄວາມນັບຖືພໍ່ແມ່ຂອງພວກເຂົາ ແລະ ອຳນາດການປົກຄອງ.

### 6.2.2 ອາດຊະຍາກຳ

**ການລັກຂະໂມຍ** ໄດ້ເພີ່ມຂຶ້ນໂດຍທົ່ວໄປ ໃນ ສປປ ລາວ, ທັງໃນເຂດຕົວເມືອງ ແລະ ຊົນນະບົດ. ການລັກລົດຈັກ ແລະ ລັກເຂົ້າເຮືອນແບບຜິດກົດໝາຍ ເພື່ອຄົ້ນຫາເງິນ ແລະ ສິ່ງຂອງມີຄ່າອື່ນໆໄປຂາຍ, ເຊິ່ງມີແນວໂນ້ມແມ່ນຊາວໜຸ່ມຈາກບ້ານອື່ນ ແທນທີ່ຈະລັກໃນເຂດທ້ອງຖິ່ນຕົນເອງ, ໄປລັກຈາກບ້ານອື່ນທີ່ໄກຈາກບ້ານຂອງພວກເຂົາ. ໃນເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ການລັກຂະໂມຍ ສ່ວນຫຼາຍຈະເປັນເຂົ້າ, ໄກ່ ຫຼື ເປັດ: ການລັກຂະໂມຍໂດຍຊາວໜຸ່ມບາງກຸ່ມແມ່ນເພື່ອເອົາໄປຫຼີ້ນກິນ. ໃນບາງກໍລະນີ ແມ່ນການລັກອາຫານເພື່ອປະທັງຊີວິດ ແລະ ໃນກໍລະນີອື່ນໆແມ່ນເພື່ອສະໜອງຄວາມຢາກກິນອາຫານໃໝ່ໆ.

> *ຂີ້ລັກຍ້ອນຄອບຄົວທຸກຍາກ, ລັກໄກ່ ລັກໝູ, ເປີດປະຕູ ແລະ ເຂົ້າໄປເພື່ອລັກເອົາເຂົ້າ ແລະ ລົດຈັກ*
>
> ແມ່ຍິງ, 20-24 ປີ, ໃນເຂດຊົນນະບົດ

ດັ່ງທີ່ມີຢູ່ໃນ ກົດໝາຍ ວ່າດ້ວຍ ການ ປົກ ປ້ອງສິດ ແລະ ຜົນປະໂຫຍດ ການ ຂອງ ເດັກ (2007), ການສຳຫຼວດໂດຍກຸ່ມສົນທະນາໄດ້ຢັ້ງຢືນວ່າ ການປະຕິບັດວິໄນຕໍ່ອາດຊະຍາກຳໂດຍທົ່ວໄປແມ່ນດຳເນີນການໂດຍນາຍບ້ານ, ໂດຍສົມທົບພາກສ່ວນທີ່ກ່ຽວຂ້ອງ ໃນກໍລະນີ ອາດສະຍາກຳມີຄວາມຮຸນແຮງ. ໃນເຂດຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນເຂົ້າເຖິງຍາກ, ການມີສ່ວນຮ່ວມຂອງພໍ່ແມ່, ຜູ້ປົກຄອງ, ການຕັກເຕືອນ, ປັບໄໝ ແລະ ການສຶກສາອົບຮົມ ກ່ຽວກັບກົດໝາຍ ແລະ ກ່ຽວກັບຄວາມຮັບຜິດຊອບຂອງຄົນຮຸ້ນແມ່ນເກີດຂຶ້ນກ່ອນການມີສ່ວນຮ່ວມແບບທາງການຂອງເຈົ້າໜ້າທີ່ຕຳຫຼວດ. ໃນເຂດຊົນນະບົດ, ຊາວໜຸ່ມຍິງ (ອາຍຸ 10-14 ປີ) ໄດ້ສະແດງຄວາມບໍ່ພໍໃຈທີ່ມີການລັກຂະໂມຍຊ້ຳໆຫຼາຍເທື່ອ, ໂດຍຊາວໜຸ່ມຊາຍຜູ້ກະທຳຄວາມຜິດຈາກຢາເສບຕິດ ຈະບໍ່ຄ່ອຍຖືກລົງໂທດໜັກ, ແລະ ມີການຈ່າຍສິນບົນໃຫ້ເຈົ້າໜ້າທີ່ຕຳຫຼວດ ເຮັດໃຫ້ພວກເຂົາຍັງມີການກໍ່ອາດຊະຍະກຳຢູ່. ມີຂໍ້ມູນອ້າງອີງໃນຫຼາຍໆບ່ອນ ກ່ຽວກັບການແກ້ໄຂບັນຫາອີງຕາມກົດໝາຍອາຍາໂດຍການຈ່າຍຄ່າປັບໄໝ ຫຼື ການໃຫ້ສິນບົນເຈົ້າໜ້າທີ່. ອີງຕາມຄຳເຫັນຂອງຜູ້ໃຫ້ຂໍ້ມູນຈາກການສຳພາດ ແລະ ການສົນທະນາກຸ່ມ, ວິທີການເຫຼົ່ານີ້ ເຫັນວ່າຍັງບໍ່ມີປະສິດທິພາບໃນການຢັບຢັ້ງອາສະຍາກຳ.

> *ບາງຄົນ ເສບສານເສບຕິດຕະຫຼອດເວລາ ແຕ່ເວລາເຂົາເຈົ້າບໍ່ໄດ້ເສບ, ພວກເຂົາຕີພໍ່ ແລະ ແມ່*
>
> ຜູ້ຊາຍ, 20-24 ປີ, ໃນເຂດຕົວເມືອງ

Protection

### 6.2.3 ການຂູດຮີດ/ການເອົາລັດເອົາປຽບ

ຈາກການສຳພາດຊາວໜຸ່ມຊາຍ ການຂາຍບໍລິການທາງເພດ ບໍ່ແມ່ນແຫຼ່ງລາຍໄດ້ທີ່ເປັນໄປໄດ້ສຳລັບຊາວໜຸ່ມຊາຍ. ເຖິງຢ່າງໃດກໍ່ຕາມ, ມັນໄດ້ຖືກຍົກຂຶ້ນໂດຍຊາວໜຸ່ມຍິງທີ່ຖືກສຳພາດ ໄດ້ຍົກການເປັນເມຍນ້ອຍເພື່ອຜົນປະໂຫຍດທາງເສດຖະກິດ. ພໍ່ແມ່, ຜູ້ປົກຄອງ, ນາຍບ້ານ ແລະ ພະນັກງານຂອງກະຊວງ ກໍ່ຍັງໄດ້ກ່າວວ່າ ສິ່ງນີ້ມີທ່າອ່ຽງທີ່ໜ້າເປັນຫວ່ງສຳລັບຊາວໜຸ່ມຍິງ.

> *ບາງຄົນຈະເຮັດວຽກເປັນກຳມະກອນເກັບໝາກໄມ້, ບາງຄົນຈະກາຍເປັນຜູ້ຂາຍບໍລິການທາງເພດ ຫຼັງຈາກນັ້ນ ກໍ່ຈະສົ່ງເງິນກັບບ້ານໃຫ້ພໍ່ແມ່.*
>
> ພໍ່ແມ່ຜູ້ປົກຄອງ, ໃນເຂດຕົວເມືອງ

ວຽກຂາຍບໍລິການທາງເພດ ຢູ່ ສປປ ລາວ ເກີດຂຶ້ນໃນຫຼາຍຮູບແບບ. ຊາວໜຸ່ມເພດຍິງບາງຄົນອາຍຸ 15-19 ປີ ອາດມີເພດສຳພັນເພື່ອແລກກັບເງິນເພື່ອມາໃຊ້ຈ່າຍໃນການດຳລົງຊີວິດຂອງຕົນ, ໃຊ້ຈ່າຍບາງສິ່ງບາງຢ່າງເປັນຕົ້ນໂທລະສັບ ແລະ ເຄື່ອງນຸ່ງຮົ່ມໃໝ່, ແລະ ໃນບາງກໍລະນີ ເອົາໄປຈ່າຍຄ່າຢາເສບຕິດ. ຍິງໜຸ່ມຈຳນວນໜຶ່ງອາດກາຍເປັນ *"ເມຍນ້ອຍ"* ຂອງຜູ້ທີ່ມີອາຍຸສູງ, ເພື່ອໃຫ້ໄດ້ຮັບການສະໜັບສະໜູນທາງດ້ານການເງິນແລກປ່ຽນກັບການບໍລິການທາງເພດ. ແຕ່ກໍ່ຍັງມີຄົນຈຳນວນຫຼວງຫຼາຍທີ່ຕົກເປັນເຫຍື່ອຂອງການຄ້າມະນຸດ ຫຼື ບໍ່ດັ່ງນັ້ນກໍ່ເດີນທາງໄປປະເທດໃກ້ຄຽງ ເພື່ອເຮັດວຽກຢູ່ໃນອຸດສະຫາກຳການຄ້າຂາຍບໍລິການທາງເພດ. ສິ່ງດັ່ງກ່າວຖືວ່າແມ່ນຜົນກະທົບທີ່ອັນຕະລາຍ.

> *ເດັກອາຍຸ 12-13 ປີ ຕ້ອງເຮັດວຽກໜັກ. ເຊິ່ງບໍ່ເປັນການດີສຳລັບເຂົາເຈົ້າ, ແຕ່ເຂົາເຈົ້າຕ້ອງເຮັດເພາະວ່າພໍ່ແມ່ທຸກຍາກ.*
>
> ເພດຍິງ, ອາຍຸ 20-24 ປີ, ໃນເຂດຊົນນະບົດ

**ການໃຊ້ແຮງງານເດັກ** ໂດຍສະເພາະ ຄອບຄົວທີ່ທຸກຍາກ ແມ່ນເປັນເລື່ອງປົກກະຕິຢູ່ ສປປ ລາວ, ເຖິງແມ່ນວ່າເປັນເລື່ອງທີ່ຜິດກົດໝາຍ. ການເກັບກຳຂໍ້ມູນມີໜຶ່ງສະແດງໃຫ້ເຫັນວ່າເດັກນ້ອຍຊົນນະບົດ ແລະ ຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ສ່ວນໃຫຍ່ເດັກນ້ອຍ ເຊິ່ງເລີ້ມແຕ່ອາຍຸໄດ້ ພຽງ 10 ປີ ຈະໄປຮັບຈ້າງ, ລ້ຽງສັດ ແລະ ເຮັດວຽກຊ່ວຍຄອບຄົວຕາມທົ່ງໄຮ່ທົ່ງນາ.

ພ້ອມກັນນັ້ນ ເຂົາເຈົ້າອາດເຮັດວຽກຢູ່ສະຖານທີ່ກໍ່ສ້າງແຕ່ອາຍຸຍັງນ້ອຍ. ປະກົດວ່າບໍ່ມີວຽກ ຕາມໂຮງຈັກໂຮງງານທົ່ວໄປ ສຳລັບເດັກນ້ອຍອາຍຸຕໍ່າກວ່າ 14 ປີ. ເນື່ອງຈາກວ່າເດັກນ້ອຍທີ່ອອກແຮງງານໂດຍທົ່ວໄປແລ້ວ ແມ່ນບໍ່ສາມາດສືບຕໍ່ເຂົ້າໂຮງຮຽນໄດ້, ຄວາມສ່ຽງມີສູງທີ່ພວກເຂົາຈະບໍ່ສາມາດໄດ້ວຽກທີ່ມີຄ່າຕອບແທນສູງເມື່ອເຂົາເຈົ້າໃຫຍ່ຂຶ້ນ ແລະ ຈະກາຍມາເປັນກຳມະກອນໃນເວລາເຂົາເຕີບໂຕເປັນຜູ້ໃຫຍ່.

> *ເດັກນ້ອຍຂົນດິນຈີ່ ແລະ ປູນຊີເມັນ ສຳລັບ ວຽກກໍ່ສ້າງ; ບໍ່ດີສຳລັບເດັກນ້ອຍທີ່ຈະເຮັດວຽກກໍ່ສ້າງ. ພວກເຂົາຍັງໜຸ່ມ, ແຕ່ບໍ່ຢາກຮຽນໜັງສື.*
>
> ເພດຊາຍກຸ່ມອາຍຸ 10-14 ປີ, ເຂດຊົນນະບົດ

ການເຄື່ອນຍ້າຍແຮງງານ ເຮັດໃຫ້ເດັກນ້ອຍມີຄວາມສ່ຽງຕໍ່ການຖືກເອົາລັດເອົາປຽບ. ກະລຸນາ ເບິ່ງພາກ 8.3 ກ່ຽວກັບ ການເຄື່ອນຍ້າຍ.

## 6.3 ອຸປະສັກຕໍ່ການປົກປ້ອງ

> *ຕ້ອງໄດ້ເຊີນຜູ້ປົກຄອງ ເພື່ອແນະນຳສຶກສາອົບຮົມວ່າບັນຫາຮ້າຍແຮງຂະໜາດໃດ, ປັບໃໝ, ອີງຕາມລະບຽບການ. ຜູ້ປົກຄອງສັ່ງສອນລູກ, ແຕ່ເຂົາເຈົ້າບໍ່ເຊື່ອຟັງ.*
>
> ອຳນາດການປົກຄອງບ້ານ, ໃນເຂດຕົວເມືອງ

**ການຂາດການສຶກສາ, ການປູກຈິດສຳນຶກ ແລະ ການບັງຄັບໃຊ້ກົດໝາຍປົກປ້ອງສິດຜົນປະໂຫຍດຂອງຊາວໜຸ່ມ** ແມ່ນອຸປະສັກອັນຕົ້ນຕໍຕໍ່ກັບການປົກປ້ອງເດັກ ຢູ່ ສປປ ລາວ. ກຸ່ມສົນທະນາເຫັນດີວ່າ ຍັງຂາດການປູກຈິດສຳນຶກກ່ຽວກັບກົດໝາຍເພື່ອຄຸ້ມຄອງ ແລະ ປົກປ້ອງຊາວໜຸ່ມ. ພວກເຂົາປາສະຈາກຄວາມເຂົ້າໃຈທີ່ຈະແຈ້ງຕໍ່ກັບກົດໝາຍ ແລະ ສິດທິຂອງເຂົາເຈົ້າ, ຄົນຮຸ່ນໜຸ່ມແມ່ນມີຄວາມສ່ຽງຕໍ່ອິດທິພົນຂອງຜູ້ຄ້າຢາເສບຕິດ, ຜູ້ຄ້າມະນຸດ ແລະ ຄົນອື່ນທີ່ສາມາດເອົາລັດເອົາປຽບເຂົາເຈົ້າ. ໃນເວລາດຽວກັນນັ້ນ, ມັນມີຄວາມສຳຄັນຢ່າງຈະແຈ້ງ ທີ່ຕ້ອງມີນະໂຍບາຍ ແລະ ກົດໝາຍທີ່ປົກປ້ອງຄົນຮຸ່ນໜຸ່ມ, ແລະ ພ້ອມທັງຮັບປະກັນວ່າຜູ້ມີໜ້າທີ່ຮັບຜິດຊອບ, ມີຄວາມເຂົ້າໃຈໃນການຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ກົດໝາຍ ແລະ ນະໂຍບາຍເຫຼົ່ານັ້ນ.

ຍ້ອນມີຄວາມຄາດຫວັງຕໍ່າ ຕໍ່ກັບອາຊີບຂອງຕົນເອງ, ຊາວໜຸ່ມຊົນນະບົດ ແລະ ເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ສືບຕໍ່ດຳລົງຊີວິດຢູ່ໃນ**ວົງຈອນຄວາມທຸກຍາກ** ຢູ່ ສປປ ລາວ ແລະ ສືບຕໍ່ມີຄວາມສ່ຽງ. ກຸ່ມສົນທະນາກັບອຳນາດການປົກຄອງຂັ້ນເມືອງ, ຂັ້ນບ້ານ ແລະ ຜູ້ປົກຄອງໄດ້ຊີ້ໃຫ້ເຫັນວ່າ ອິດທິພົນຂອງວັດທະນະທຳພາຍນອກ ເຊັ່ນ ໄທ ແລະ ເກົາຫຼີ ອາດນຳພາຊາວໜຸ່ມລາວ ໃຫ້ທົດລອງ ແລະ ປະພຶດ ພຶດຕິກຳທີ່ບໍ່ເປັນທີ່ຍອມຮັບ ຢູ່ ສປປ ລາວ. ເຂົາເຈົ້າເຊື່ອວ່າ ສິ່ງເຫຼົ່ານີ້ອາດນຳໄປສູ່ການສ້າງຄວາມເຫັນທີ່ແຕກຕ່າງກັນລະຫວ່າງຄົນຮຸ່ນໜຸ່ມ ແລະ ກຸ່ມຄົນອື່ນໆພາຍໃນສັງຄົມລາວ.

> *ຍ້ອນເທັກໂນໂລຍີ, ໄວໜຸ່ມ ເບິ່ງໂທລະທັດ, ຫຼິ້ນໂທລະສັບມືຖື, ເມື່ອພວກເຂົາເຫັນສິ່ງໃໝ່ໆກໍ່ຢາກລອງ ຫຼື ເຮັດນຳ.*
>
> ອຳນາດການປົກຄອງບ້ານ, ໃນເຂດຕົວເມືອງ

**ການຂາດແຜນງານຕ່າງໆທີ່ສົ່ງເສີມການມີສ່ວນຮ່ວມທີ່ດີສຳລັບຄົນຮຸ່ນໜຸ່ມ** ໂດຍຜ່ານ ກິລາ, ດົນຕີ, ເຕັ້ນລຳ ແລະ ອື່ນໆ ຈຳກັດໂອກາດສຳລັບພວກເຂົາ ໃນການສະແດງຄວາມຄິດຄວາມເຫັນ ແລະ ການແລກປ່ຽນບົດຮຽນທີ່ເປັນປະໂຫຍດກັບຜູ້ອື່ນໆ ແລະ ຍັງສາມາດນຳເຂົາເຈົ້າໄປສູ່ກິດຈະກຳທີ່ເປັນລັກສະນະບັນເທີງອື່ນໆທີ່ມີຄວາມສ່ຽງ ແລະ ເປັນອັນຕະລາຍ.

## 6.4 ສະຫຼຸບ

1. ມີຫຼາຍປະເດັນທີ່ກ່ຽວພັນກັບບັນຫາການປົກປ້ອງ ທີ່ອາດເພີ່ມຄວາມສ່ຽງ ແລະ ກີດກັ້ນສິດທິສິດ ຂອງຄົນຮຸ້ນໜຸ່ມ ຕໍ່ກັບການໄດ້ຮັບການປິ່ນປົວສຸຂະພາບ, ການສຶກສາ ແລະ ການພັດທະນາ, ເຊິ່ງຕ້ອງໄດ້ຮັບການເອົາໃຈໃສ່ເພີ່ມຕື່ມ ເຊັ່ນ: ການແຕ່ງງານກ່ອນໄວອັນຄວນ, ກຸ່ມຊົນເຜົ່າ, ບົດບາດຍິງເພດ, ການປະເຊີນຕໍ່ກັບການໃຊ້ຄວາມຮຸນແຮງໃນຄອບຄົວ, ລວມເຖິງ ການໃສ່ວິໄນທີ່ຂ້ອນຂ້າງຮຸນແຮງ (ໃນເຮືອນ ແລະ ໃນໂຮງຮຽນ), ການເຄື່ອນຍ້າຍ/ການຄ້າມະນຸດຂອງຊາວໜຸ່ມ, ແຮງງານເດັກ, ລະເບີດບໍ່ທັນແຕກ, ການນຳໃຊ້ສານເສບຕິດໃນລະດັບສູງໃນກຸ່ມຜູ້ໃຫຍ່ ແລະ ການຄ້າຢາເສບຕິດ ແລະ ການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳທີ່ເປັນການປົກປ້ອງຍັງບໍ່ທັນຮັດກຸມ (ລວມເຖິງການຕ້ານເຫຼົ້າເບຍ ແລະ ຢາສູບ; ການເຂົ້າເຖິງສະຖານທີ່ບັນເທີງ).
2. ການຂາຍບໍລິການທາງເພດ ລວມທັງ ນັກຮຽນ ເຊິ່ງເຮັດໃຫ້ພວກເຂົາມີຄວາມສ່ຽງສູງ.
3. ກຸ່ມຄົນຮຸ້ນໜຸ່ມທີ່ຢູ່ໃນສະຖານະພາບສ່ຽງຕ້ອງການການເອົາໃຈໃສ່ຢ່າງຈະແຈ້ງ, ລວມທັງ ຊາວໜຸ່ມພິການ, ຊາວໜຸ່ມ ກຸ່ມຮັກຮ່ວມເພດ ຍິງຕໍ່ຍິງ, ຊາຍຕໍ່ຊາຍ, ຫຼິ້ນສອງເພດ, ຜູ້ຜ່າຕັດປ່ຽນເພດ (LGBT), ຄົນຮຸ້ນໜຸ່ມທີ່ເຮັດວຽກງານ ຢູ່ໃນສະພາບແວດລ້ອມທີ່ເປັນອັນຕະລາຍ ແລະ ຖືກເອົາລັດເອົາປຽບ, ລວມທັງແຮງງານເຄື່ອນຍ້າຍ ແລະ ຊາວໜຸ່ມເພດຍິງທີ່ດ້ອຍໂອກາດທີ່ມີຄວາມສ່ຽງໃນການປະເຊີນກັບການໃຊ້ຄວາມຮຸນແຮງ ແລະ ການຂົ່ມຂືນ.
4. ການເຜີຍແຜ່ຢ່າງກວ້າງຂວາງ ແລະ ການຕິດຕາມຢ່າງໃກ້ຊິດ ຂອງບັນດານະໂຍບາຍ ແລະ ນິຕິກຳຕ່າງໆທີ່ມີຢູ່ ເພື່ອປົກປ້ອງ, ເຄົາລົບ ແລະ ປະຕິບັດສິດຂອງຄົນຮຸ້ນໜຸ່ມ ໃຫ້ປະກົດຜົນເປັນຈິງ ຄວນໄດ້ຮັບການພິຈາລະນາ, ລວມທັງ ການຕິດຕາມຢ່າງເປັນຮູບປະທຳຕໍ່ຄຳແນະນຳຂອງຄະນະກຳມະການວ່າດ້ວຍສິດທິເດັກ.
5. ອາສະຍາກຳ ຢູ່ ສປປ ລາວ, ໂດຍສະເພາະ ການກຳທະຜິດໂດຍຄົນຮຸ້ນໜຸ່ມ ປະກົດວ່າເພີ່ມຂຶ້ນ. ເນື່ອງຈາກວ່າ ຄວາມເຂົ້າໃຈຂອງປວງຊົນຍັງຈຳກັດຕໍ່ກັບບັນດາກົດໝາຍທີ່ມີຢູ່ ແລະ ການ(ບັງຄັບໃຊ້)ປະຕິບັດທີ່ຍັງບໍ່ສອດຄ່ອງຂອງອຳນາດການປົກຄອງ, ການປົກປ້ອງຊາວໜຸ່ມທີ່ກະທຳຄວາມຜິດທາງອາຍາ ແລະ ຜູ້ທີ່ເປັນຜູ້ໄດ້ຮັບເຄາະຮ້າຍແມ່ນຍັງມີຄວາມສ່ຽງ.
6. ນອກຈາກນັ້ນ, ຄວນປັບປຸງການຈັດຕັ້ງປະຕິບັດ ແລະ ແຜນງານຕ່າງໆ ທີ່ເລັ່ງໃສ່ຜູ້ມີໜ້າທີ່ຫຼັກ, ກວມເອົາພໍ່ແມ່, ຜູ້ປົກຄອງ, ຄູອາຈານ, ຜູ້ສະໜອງການບໍລິການ, ນາຍຈ້າງ, ອຳນາດການປົກຄອງ ແລະ ຕຳຫຼວດ, ເຊິ່ງຈະປະກອບສ່ວນອັນສຳຄັນໃນການປົກປ້ອງສິດຂອງຄົນຮຸ້ນໜຸ່ມ.

Protection




UNFPA, Lao PDR

7

# VII ການມີສ່ວນຮ່ວມ

ຄວາມໝາຍຂອງການມີສ່ວນຮ່ວມທີ່ອາງໄວ້ໃນເບື້ອງຕົ້ນຂອງການວິໄຈ ແມ່ນການ ມີສ່ວນຮ່ວ ມຂອງຊາວໜຸ່ມເຂົ້າໃນຂັ້ນການຕັດສິນບັນຫາ ແລະ ການຮັບຮູ້ບົດບາດການປະກອບສ່ວນຂອງພວກເຂົາຕໍ່ກັບສັງຄົມ. ຄົນຮຸ່ນໜຸ່ມທີ່ຖືກສໍາພາດ ສໍາລັບການສຶກສາວິໄຈຄັ້ງນີ້ ເຂົ້າໃຈຄວາມໝາຍຂອງການປະກອບສ່ວນຂອງຊາວໜຸ່ມຕໍ່ກັບສັງຄົມ ຫຼາຍກວ່າປະກອບສ່ວນເຂົ້າໃນຂັ້ນຕັດສິນບັນຫາ ແລະ ຕີຄວາມໝາຍຂອງ ການມີສ່ວນຮ່ວມ ວ່າເປັນການປະກອບສ່ວນແບບສະໝັກໃຈຂອງຕົນທີ່ຈະເຂົ້າຮ່ວມກິດຈະກໍາກ່ຽວກັບບ້ານຂອງຕົນເອງ.

## 7.1 ນະໂຍບາຍ ແລະ ແຜນງານ ທີ່ກ່ຽວພັນເຖິງ ຊາວໜຸ່ມແລະການມີສ່ວນຮ່ວມ

ສິດທິຂອງເດັກນ້ອຍທີ່ມີອາຍຸຕໍ່າກວ່າ 18 ປີ ໃນການມີສ່ວນຮ່ວມ ໄດ້ກໍານົດອອກໃນ ກົດໝາຍວ່າດ້ວຍ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2007) ຢ່າງຈະແຈ້ງ. *ມາດຕາ 7*, ການມີສ່ວນຮ່ວມຂອງເດັກນ້ອຍກໍານົດວ່າ "ລັດ, ສັງຄົມ ແລະ ຄອບຄົວຕ້ອງສ້າງເງື່ອນໄຂໃຫ້ເດັກນ້ອຍໄດ້ມີສ່ວນຮ່ວມໃນກິດຈະກໍາຕ່າງໆ ແລະ ສາມາດສະແດງທັດສະນະຂອງຕົນໃນທຸກເລື່ອງທີ່ມີຜົນກະທົບຕໍ່ພວກເຂົາ". *ມາດຕາ 6* "ປົກປ້ອງ ເດັກນ້ອຍຈາກການຈໍາແນກທີ່ເກີດຂຶ້ນບົນພື້ນຖານທາງຈາກຄວາມເປັນເພດຍິງ ແລະ ເພດຊາຍ, ເຊື້ອຊາດ, ຊົນເຜົ່າ, ພາສາ, ຄວາມເຊື່ອ, ສາດສະໜາ, ສະພາບທາງດ້ານຮ່າງກາຍ ແລະ ສະຖານະທາງດ້ານເສດຖະກິດ-ສັງຄົມ".

ສິດທິຂອງຄົນຮຸ່ນໜຸ່ມ ທີ່ສາມາດລົງຄະແນນສຽງເລືອກຕັ້ງໄດ້ແມ່ນ ອາຍຸຮອດ 18 ປີ ແລະ ເປັນຜູ້ສະໝັກເລືອກຕັ້ງ ໃນຕໍາແໜ່ງການເມືອງ ເມື່ອອາຍຸຮອດ 21 ປີ ຂຶ້ນໄປ ເຊິ່ງໄດ້ກໍານົດໄວ້ ໃນ *ມາດຕາ 6* ຂອງກົດໝາຍວ່າດ້ວຍການເລືອກຕັ້ງ (2006). ຊາວໜຸ່ມຊາຍທຸກຄົນ ສາມາດເຂົ້າເກນທະຫານ ເມື່ອອາຍຸໄດ້ 18 ປີ, ພາຍໃຕ້ກົດໝາຍວ່າດ້ວຍ ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ (1995), *ໃນມາດຕາ 3.*

ກົດໝາຍວ່າດ້ວຍຄະນະຊາວໜຸ່ມປະຊາຊົນປະຕິວັດລາວ (2009) ເປັນບ່ອນອີງ ໃນການຈັດຕັ້ງປະຕິບັດວຽກງານຂອງສູນກາງຊາວໜຸ່ມ ເຊິ່ງໄດ້ຮັບການຊີ້ນໍາຈາກ ລັດຖະບານ ຂອງ ສປປ ລາວ, ໄດ້ຮັບງົບປະມານຈາກລັດຖະບານ ແລະ ອົງການຈັດຕັ້ງສາກົນຕ່າງໆ ແລະ ສອດຄ່ອງກັບຈຸດປະສົງເປົ້າໝາຍຂອງພັກປະຊາຊົນປະຕິວັດລາວ. ບົດບາດໜ້າທີ່ອັນຕົ້ນຕໍຂອງສູນກາງຊາວໜຸ່ມ ແມ່ນສ້າງຈິດສໍານຶກກ່ຽວກັບບັນຫາສັງຄົມ ແລະ ສຸຂະພາບທີ່ກ່ຽວພັນກັບຊາວໜຸ່ມ ລວມມີ ການເຄື່ອນຍ້າຍ, ການສຶກສາ, ການໃຊ້ຢາເສບຕິດ, ການບັງຄັບນໍາໃຊ້ກົດໝາຍຈາລະຈອນ, ການປົກປ້ອງດ້ານວັດທະນະທໍາ, ແລະ ພະຍາດຕິດຕໍ່. ໃນຂະນະທີ່ ຄົນຮຸ່ນໜຸ່ມຫຼາຍຄົນບໍ່ໄດ້ເປັນສະມາຊິກຊາວໜຸ່ມ, ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ໄດ້ຊອກຫາວິທີທາງ ເພື່ອໃຫ້ພວກເຂົາມີສ່ວນຮ່ວມ ແລະ ເຕົ້າໂຮມຊາວໜຸ່ມຢ່າງຕັ້ງໜ້າ. ສູນກາງຊາວໜຸ່ມ ໄດ້ຮ່ວມງານກັບບັນດາກະຊວງ ແລະ ອົງການຈັດຕັ້ງຕ່າງໆ, ເປັນຕົ້ນ ກະຊວງ ໂຍທາທິການ ແລະ ຂົນສົ່ງ, ອົງການສະຫະປະຊາຊາດກອງທຶນປະຊາກອນ ແລະ ອົງການຊ່ວຍເຫຼືອເດັກສາກົນ.

ໄດ້ພົບວ່າ ມີສາມແຜນງານທີ່ເນັ້ນສະເພາະໃສ່ການມີສ່ວນຮ່ວມຂອງຊາວໜຸ່ມຢູ່ໃນສັງຄົມ ແລະ ຢູ່ໃນຊຸມຊົນຂອງເຂົາເຈົ້າ ລວມທັງ: ລາຍການໂທລະພາບ ແລະ ວິທະຍຸ ທີ່ໄດ້ຈັດຕັ້ງປະຕິບັດໂດຍວິທະຍຸຊາວໜຸ່ມ ຮ່ວມກັບ ອົງການສະຫະປະຊາຊາດກອງທຶນສໍາລັບເດັກ (UNICEF), ແລະ ອົງການຊ່ວຍເຫຼືອເດັກສາກົນ ກັບ ສູນກາງຊາວໜຸ່ມ, ແລະ ໂຄງການຫຼຸດຜ່ອນຄວາມສ່ຽງໄພພິບັດສໍາລັບເດັກ (DREC). ຍ້ອນວ່າໂຄງການດັ່ງກ່າວໄດ້ຈັດຕັ້ງປະຕິບັດໂດຍຜ່ານລະບົບກະຈາຍສຽງ, ຈຶ່ງສາມາດປົກຄຸມໄດ້ຢ່າງກວ້າງຂວາງ. ແຜນງານເຫຼົ່ານີ້ມີຈຸດປະສົງເພື່ອປູກຈິດສໍານຶກ ແລະ ສົ່ງເສີມການມີສ່ວນຮ່ວມຂອງຊາວໜຸ່ມເຂົ້າໃນວຽກງານສັງຄົມ. ໂຄງການ DREC ໃນປັດຈຸບັນໄດ້ດໍາເນີນພຽງແຕ່ໃນ ສາມແຂວງ ແລະ ໄດ້ຮັບອະນຸຍາດໃຫ້ເຊື່ອມສານເຂົ້າໃນຫຼັກສູດການສຶກສາແຫ່ງຊາດ.

ນອກຈາກແຜນງານເຫຼົ່ານີ້, ໃນຈໍານວນ 23 ແຜນງານ (70%) ໄດ້ກໍານົດວ່າຄົນຮຸ່ນໜຸ່ມໄດ້ມີສ່ວນຮ່ວມໃນການອອກແບບແຜນງານ, ການວາງແຜນ, ການຈັດຕັ້ງປະຕິບັດ ຫຼື ການຕິດຕາມ ແລະ ປະເມີນຜົນ. ເຖິງຢ່າງໃດກໍ່ຕາມ, ການມີສ່ວນຮ່ວມຢູ່ໃນແຜນງານເຫຼົ່ານີ້ ອາດມີຄວາມແຕກຕ່າງຈາກຄວາມໝາຍທີ່ແທ້ຈິງຂອງການມີສ່ວນຮ່ວມ. ໃນຈໍານວນແຜນງານທີ່ມີການມີສ່ວນຮ່ວມຂອງຊາວໜຸ່ມ, 10 ແຜນງານ ຫຼື (43%) ໄດ້ນໍາໃຊ້ຮູບແບບການສຶກສາເພື່ອນສອນເພື່ອນ, 15 ແຜນງານ (65%) ສະແດງໃຫ້ເຫັນການມີສ່ວນຮ່ວມຂອງຄົນຮຸ່ນໜຸ່ມຢູ່ໃນການຈັດຕັ້ງປະຕິບັດແຜນງານ, 9 ແຜນງານ (39%) ໃນການວາງແຜນ ຫຼື ການອອກແບບ ແລະ 7 ແຜນງານ (30%) ໃນການຕິດຕາມ ຫຼື ປະເມີນຜົນ.

## 7.2 ສະພາບດ້ານການມີສ່ວນຮ່ວມ

ບໍ່ມີຂໍ້ມູນກ່ຽວກັບການມີສ່ວນຮ່ວມຂອງຊາວໜຸ່ມ ໃນລະດັບການຕັດສິນບັນຫາທີ່ກ່ຽວພັນເຖິງເຂົາເຈົ້າ, ເຊິ່ງຄວນສຶກສາລົງເລິກໃນອະນາຄົດ.

ການວິໄຈໃນກຸ່ມສົນທະນາ ໄດ້ສະແດງໃຫ້ເຫັນວ່າ ແນວຄິດກ່ຽວກັບການມີສ່ວນຮ່ວມ ແມ່ນຍັງເຂົ້າໃຈຍາກສໍາລັບຊາວໜຸ່ມ. ໃນເບື້ອງຕົ້ນຂອງການອອກແບບຄໍາຖາມ ກ່ຽວກັບການມີສ່ວນຮ່ວມ ກໍ່ເພື່ອກໍານົດຂອບເຂດຂອງການມີສ່ວນຮ່ວມຂອງຊາວໜຸ່ມ ໃນການຕັດສິນບັນຫາ ໃນລະດັບບ້ານ ຫຼື ຊຸມຊົນ. ຊາວໜຸ່ມ ໄດ້ຕີຄວາມໝາຍຄໍາຖາມນີ້ ໃນລັກສະນະການເຂົ້າຮ່ວມໃນກິດຈະກໍາຂອງບ້ານ ແລະ ຄວາມພະຍາຍາມທີ່ຈະເຮັດວຽກຮ່ວມກັນດ້ວຍຄວາມ "ສາມັກຄີ" ກັບສະມາຊິກຄົນອື່ນໆໃນບ້ານ. ດັ່ງນັ້ນ, ພວກເຂົາຈຶ່ງໄດ້ອະທິບາຍຫຼາຍສິ່ງ ທີ່ພວກເຂົາໄດ້ຊ່ວຍເຫຼືອໃນບ້ານ, ໃນວັດ ແລະ ການປຸກສ້າງສະຖານທີ່, ການເຮັດສວນ ແລະ ການໃຫ້ການຊ່ວຍເຫຼືອງານສັງຄົມເຊັ່ນ: ແຕ່ງງານ, ງານສົ່ງສະການ ແລະ ງານບຸນຕ່າງໆ ໃນ ສປປ ລາວ ເຊັ່ນ: ງານບຸນຊ່ວງເຮືອປະເພນີ, ເຊິ່ງຊາວໜຸ່ມຕ້ອງຊ່ວຍແບກເຮືອ ແລະ ກະກຽມ ແລະ ຊ່ວຍໃນການບໍລິການຮັບໃຊ້ ເສີບນໍ້າ-ອາຫານ. ໂດຍ

Participation

ສະເພາະ ໃນເຂດຊົນນະບົດ ແລະ ເຂດທີ່ມີເສັ້ນທາງເຂົ້າເຖິງຍາກ ແລະ ຢູ່ທີ່ແຂວງຫຼວງພະບາງ ບຸນເທດສະການດັ່ງກ່າວ ເປັນງານບຸນປະຈຳປີທາງພຸດທະສາດສະໜາ ແລະ ມີການເຂົ້າຮ່ວມຂອງຊາວໜຸ່ມ ແລະ ເຍົາວະຊົນ ຢ່າງຫຼວງຫຼາຍ.

ບໍ່ມີຫຼັກຖານໃດທີ່ສະແດງໃຫ້ເຫັນວ່າ ມີການມີສ່ວນຮ່ວມຂອງຊາວໜຸ່ມ ໃນຂັ້ນຕັດສິນບັນຫາ ບໍ່ວ່າຢູ່ໃນເວທີໃດ ແລະ ໃນພາກໃດຂອງປະເທດ. ເຖິງແມ່ນຈະມີຜູ້ຕາງໜ້າຂອງ ສູນການຊາວໜຸ່ມ ໃນຂັ້ນບ້ານ, ຊາວໜຸ່ມກ່າວວ່າ ສ່ວນຫຼາຍພວກເຂົາເຈົ້າບໍ່ແມ່ນຢູ່ໃນເກນອາຍຸຊາວໜຸ່ມ (ໃນບາງກໍລະນີ ຊາວໜຸ່ມຂັ້ນບ້ານແມ່ນຢູ່ໃນຊ່ວງອາຍຸ 40 ປີ) ແລະ ບໍ່ສາມາດເປັນຕົວແທນທາງດ້ານແນວຄວາມຄິດຈາກແງ່ມູມຂອງຊາວໜຸ່ມ.

> *ນາຍບ້ານເປັນຜູ້ຕັດສິນໃຈ, ເລຂາຊາວໜຸ່ມບໍ່ກ້າຕັດສິນໃຈ.*
> *ເພດຊາຍ, ໃນເຂດຕົວເມືອງ, 20-24 ປີ*

> *ພວກເຮົາຊ່ວຍເຫຼືອເຊິ່ງກັນແລະກັນ, ເຮົາຊ່ວຍເຂົາ, ເຂົາຊ່ວຍເຮົາ.*
> ແມ່ຍິງ, 15-19 ປີ, ຢູ່ໃນເຂດຊົນນະບົດ

ທັງໃນເຂດຕົວເມືອງ ແລະ ຊົນນະບົດ ເປັນເລື່ອງປົກກະຕິທີ່ຊາວໜຸ່ມ ຈະຖືກເອີ້ນໃຫ້ໄປຊ່ວຍໃນການຕັດຫຍ້າ, ອະນາໄມຕາມເສັ້ນທາງ, ການສ້າງກຳແພງຂອງວັດ, ການເຮັດວຽກຮ່ວມກັນໃນຊຸມຊົນ ເພື່ອຄວາມສວຍງາມ ແລະ ຮັກສາໝູ່ບ້ານຂອງພວກເຂົາ. ໂດຍສະເພາະໃນເຂດຊົນນະບົດ, ການເຮັດວຽກເພື່ອຊຸມຊົນ ແມ່ນມີຄວາມໝາຍສຳຄັນສຳລັບຊາວໜຸ່ມ ທີ່ສະແດງໃຫ້ເຫັນພັນທະຂອງພວກເຂົາ ຕໍ່ກັບການພັດທະນາບ້ານ ແລະ ປະເທດຂອງພວກເຂົາ. ມີພຽງໃນເຂດຊົນນະບົດເທົ່ານັ້ນ ທີ່ກ່າວເຖິງຄວາມສາມັກຄີ ແລະ ການມີສ່ວນຮ່ວມຂອງພວກເຂົາກັບຊຸມຊົນ ເຊິ່ງສະແດງເຖິງຄວາມເຂັ້ມແຂງ, ການເບິ່ງແຍງ ແລະ ຄວາມຫ່ວງໃຍເຊິ່ງກັນແລະກັນ. ໃນເຂດຕົວເມືອງ, ການມີສ່ວນຮ່ວມຂອງຊາວໜຸ່ມ ແມ່ນບໍ່ຫຼາຍປານໃດ, ສ່ວນຫຼາຍແມ່ນຊາວໜຸ່ມຍິງ ທີ່ປະກອບສ່ວນໃນການຕ້ອນຮັບແຂກໃນງານດອງ. ສ່ວນຊາວໜຸ່ມຊາຍແມ່ນຊ່ວຍຈັດຕຽມງານລ້ຽງ ຫຼື ງານສັງສັນ ທັງບໍລິການໝູ່ເພື່ອນ ຫຼື ຄອບຄົວຂອງພວກເຂົາ. ຄວາມແຕກຕ່າງລະຫວ່າງຍິງ-ຊາຍ ໃນການມີສ່ວນຮ່ວມ ແມ່ນສະແດງອອກໃນພາລະບົດບາດຂອງການມີສ່ວນຮ່ວມທີ່ມອບໃຫ້ພວກເຂົາ ເຊັ່ນການຍົກໜັກ, ຂ້າສັດ ຫຼື ເຮັດວຽກໜັກ ແມ່ນໜ້າທີ່ຂອງຜູ້ຊາຍ. ສ່ວນຜູ້ຍິງ ແມ່ນເຮັດວຽກໃນການກະກຽມການແຕ່ງກິນເປັນຫຼັກ. ໃນເຂດຕົວເມືອງ, ຄວາມສາມັກຄີຂອງຊຸມຊົນ ແລະ ພັນທະຕໍ່ກັບຊຸມຊົນ ແມ່ນບໍ່ໄດ້ຖືກກ່າວເຖິງ ຄືກັນກັບຊາວໜຸ່ມ ໃນເຂດຊົນນະບົດ ແລະ ຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ.

> *ຕ້ອງການມີໂຮງຮຽນຊັ້ນມັດທະຍົມ; ຕ້ອງການໃຫ້ທຸກຄົນມີນ້ຳໃຊ້ ແລະໄຟຟ້າ.*
> ແມ່ຍິງ, 10-14 ປີ, ໃນເຂດຊົນນະບົດ

ຊາວໜຸ່ມ ຮັບຮູ້ວ່າໂອກາດຂອງການມີສ່ວນຮ່ວມຂອງພວກເຂົາ ແມ່ນກຳລັງເພີ່ມຂຶ້ນ. ໃນເຂດຊົນນະບົດ ຄວາມຕ້ອງການຂອງພວກເຂົາ ມັນກໍ່ຄືກັນກັບຄວາມຕ້ອງການຂອງຊຸມຊົນ ທີ່ມີຄວາມຕ້ອງການນ້ຳສະອາດ, ໄຟຟ້າ ແລະ ການສຶກສາ. ເຖິງແມ່ນວ່າ ຢູ່ໃນຕົວເມືອງ ຄວາມຕ້ອງການເຫຼົ່ານັ້ນຈະໄດ້ຖືກຕອບສະໜອງ ພວກເຂົາຍັງຮຽກຮ້ອງໃຫ້ທຸກຄົນສາມາດໄດ້ຮັບຄວາມຕ້ອງການເຫຼົ່ານີ້ເທົ່າທຽມກັນ.

> *ຕ້ອງການມີສິດເທົ່າທຽມກັນ, ປາສະຈາກການຈຳແນກລະຫວ່າງກຸ່ມຊົນເຜົ່າ ແລະ ຜູ້ທຸກຍາກ.*
> ຜູ້ຊາຍ, 15-19 ປີ, ໃນເຂດຕົວເມືອງ

## 7.3 ອຸປະສັກຕໍ່ການມີສ່ວນຮ່ວມ

> *ຂັ້ນເມືອງຄວນຈະເຂົ້າມາໃຫ້ການສຶກສາຊາວໜຸ່ມຂອງພວກເຮົາ ເພື່ອເຮັດໃຫ້ພວກເຂົາມີຄວາມເຂັ້ມແຂງ.*
> ພໍ່ແມ່, ໃນຊົນນະບົດ

ການມີສ່ວນຮ່ວມຂອງຊາວໜຸ່ມ ອາດຖືກຈຳກັດ ເນື່ອງຈາກວ່າຂາດທຶນຮອນເພື່ອສືບຕໍ່ສຶກສາ ແລະ ການມີສ່ວນຮ່ວມໃນຂັ້ນການຕັດສິນບັນຫາ ໃນລະດັບຕ່າງໆຂອງສັງຄົມລາວ. ໃນເຂດຊົນນະບົດ ການມີສ່ວນຮ່ວມຂອງຊາວໜຸ່ມຍັງຖືກຈຳກັດ ໃນການແບ່ງປັນແຮງງານ ໃນຊຸມຊົນ, ການເປັນອາສາສະໝັກໃນງານບຸນ. ລະດັບຄວາມຮັບຮູ້ຂອງພໍ່ແມ່ ແລະ ຜູ້ນຳໃນທ້ອງຖິ່ນອາດຈະເປັນສ່ວນເຮັດໃຫ້ມີຄວາມຈຳກັດ ການມີສ່ວນຮ່ວມຂອງຊາວໜຸ່ມ ແລະ ເຍົາວະຊົນ.

ການເປັນຕົວແທນຂອງຊາວໜຸ່ມ ບໍ່ພຽງແຕ່ບໍ່ໄດ້ຮັບໂອກາດການເຂົ້າຮ່ວມການຕັດສິນບັນຫາຕ່າງໆ ພາຍໃນບ້ານຢູ່ໃນ ສປປ ລາວ ແລ້ວ ຍັງບໍ່ເຄີຍຖືກເຊີນເຂົ້າຮ່ວມຕັດສິນແກ້ໄຂບັນຫາສຳຄັນຂອງບ້ານ ເຊັ່ນ: ການບໍ່ມີໄຟຟ້າໃຊ້ ຫຼື ການບໍ່ໄດ້ຮັບຮູ້ຂໍ້ມູນຂ່າວສານກ່ຽວກັບຊາວໜຸ່ມ.

> *ໃຫ້ໂອກາດຂັ້ນເທິງເຂົ້າມາຢ້ຽມຢາມບ້ານ ເພື່ອເບິ່ງກິດຈະກຳເພື່ອສະແດງຄວາມສາມາດ, ບາງຄົນມີຄວາມສາມາດແຕ່ບໍ່ມີໂອກາດທີ່ຈະໄດ້ສະແດງອອກ*
> ເພດຊາຍ, 20-24 ປີ, ໃນເຂດຕົວເມືອງ

ຖ້າປາສະຈາກການເປັນຕົວແທນຈາກອົງການຈັດຕັ້ງ ເຊັ່ນ ສູນກາງຊາວໜຸ່ມ, ຈະບໍ່ມີ "ເວທີສຳລັບການອອກສຽງ" ຂອງຊາວໜຸ່ມ ໃນ ສປປ ລາວ. ໃນຫຼາຍໆກໍລະນີ, ຊາວໜຸ່ມເອງກໍ່ບໍ່ມີຄວາມປາຖະໜາ ຫຼື ຕ້ອງການ ໃນການເຂົ້າຮ່ວມໃນການຕັດສິນບັນຫາ, ໂດຍສະເພາະ ໃນເຂດຊົນນະບົດ ເຊິ່ງບົດບາດຂອງອຳນາດການປົກຄອງ ແມ່ນມີຄວາມສຳຄັນ ແລະ ມີພຽງຊາວໜຸ່ມຈຳນວນໜ້ອຍທີ່ສາມາດເຂົ້າຮ່ວມໃນລະດັບນັ້ນ. ໃນກໍລະນີ ທີ່ມີຕົວແທນສຳລັບຊາວໜຸ່ມ, ພວກເຂົາມີຄວາມກັງວົນ ເນື່ອຕົວແທນ ມີຄວາມເປັນອາວຸໂສຫຼາຍ ທີ່ຈະເປັນຕົວແທນສະເໜີຄວາມຕ້ອງການຂອງຊາວໜຸ່ມ. ການບໍ່ມີໄຟຟ້າ ກໍ່ມີຜົນຕໍ່ກັບຊາວໜຸ່ມ ໃນການເຂົ້າຮ່ວມວຽກງານໃນຊຸມຊົນ: ຕົວຢ່າງ ຖ້າບໍ່ມີໄຟຟ້າ, ພວກເຂົາອາດຈະບໍ່ຮູ້ວ່າມີການຈັດງານ ຫຼື ບໍ່ສາມາດຮັບຂໍ້ມູນຕ່າງໆ ທີ່ສາມາດຊັກນຳໃຫ້ພວກເຂົາມີສ່ວນຮ່ວມ. ໃນເຂດຕົວເມືອງ, ຍິ່ງມີຄວາມຕ້ອງການໃນການມີສ່ວນຮ່ວມຫຼາຍກວ່າ.

ທັດສະນະຂອງຜູ້ທີ່ມີໜ້າຮັບຜິດຊອບ ໃນການເຮັດໃຫ້ຊາວໜຸ່ມມີສ່ວນຮ່ວມ ອາດເປັນອຸປະສັກເຊັ່ນກັນ. ການນຳຂອງບາງກະຊວງ ກ່າວວ່າສິ່ງທ້າທາຍຕົ້ນຕໍຂອງຊາວໜຸ່ມ ແມ່ນເກີດມາຈາກການຂາດຄວາມສາມາດໃນການເປັນນັກຄິດວິເຄາະ, ແລະ ຂາດແຮງຈູງໃຈ ແລະ ວິໄນ. ມັນເປັນ ເລື່ອງທຳມະ

ຊາດຢູ່ແລ້ວ ທີ່ຜູ້ໃຫຍ່ ແລະ ຊາວໜຸ່ມ ຈະມີທັດສະນະທີ່ແຕກຕ່າງກັນຕໍ່ກັບພຶດຕິກຳຂອງຊາວໜຸ່ມ. ເຖິງແນວໃດກໍ່ຕາມ ມີຄວາມເປັນຫວ່ງເປັນໃຍທີ່ເຫັນໄດ້ຊັດເຈນ ຈາກບັນດາກະຊວງ ແລະ ຜູ້ໃຫຍ່ ໃນພາກສ່ວນຕ່າງໆ ຕໍ່ກັບການປ່ຽນແປງທັດສະນະຂອງຊາວໜຸ່ມຍິງໃນການນຸ່ງຖື, ແລະ ການແຕ່ງຊົງຜົມ, ເຊິ່ງໄດ້ຮັບອິດທິພົນທາງລົບມາຈາກພາຍນອກປະເທດ, ໃນນັ້ນ ລວມທັງ ການໂຄສະນາທາງໂທລະພາບ.

ຖ້າມີວິທີການທີ່ຍອມຮັບໄດ້ທົ່ວສັງຄົມ ໃນການຕອບສະໜອງຄວາມຕ້ອງການຂອງຊາວໜຸ່ມ ບໍ່ວ່າຈະເປັນໃນເຂດຊົນ ນະບົດ ແລະ ຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ ຈົນເຖິງ ໃນເຂດຕົວເມືອງ ໃນນະຄອນຫຼວງວຽງຈັນ ແມ່ນຈະເປັນຍຸດທະສາດທີ່ສຳຄັນ ໃນການສົ່ງເສີມການມີສ່ວນຮ່ວມຂອງຊາວໜຸ່ມ ໃນອະນາຄົດ. ເພື່ອໃຫ້ຍຸດທະສາດດັ່ງກ່າວ ໄດ້ຮັບການຍອມຮັບ ແລະ ຖືກຈັດຕັ້ງປະຕິບັດ ມັນຕ້ອງຮັບປະກັນໃຫ້ມີຄວາມດຸ່ນດ່ຽງລະຫວ່າງຄ່ານິຍົມທາງສັງຄົມຂອງຜູ້ໃຫຍ່ ໃນອະດີດ ແລະ ປັດຈຸບັນ ກັບຄວາມຫວັງຂອງຊາວໜຸ່ມ ທີ່ຕ້ອງການໄດ້ຮັບໂອກາດທີ່ດີກວ່າໃກການເຂົ້າເຖິງການບໍລິການສຸຂະພາບ, ການສຶກສາ, ການມີວຽກເຮັດ, ການປົກປ້ອງ ແລະ ການມີສ່ວນຮ່ວມ.

## 7.4 ສະຫຼຸບ

1. ຊາວໜຸ່ມ ໄດ້ມີສ່ວນຮ່ວມໃນຫຼາຍດ້ານໃນບ້ານຂອງພວກເຂົາ ເຊັ່ນ: ການຊ່ວຍງານບຸນ ແລະ ການຮັກສາສິ່ງແວດລ້ອມ ແລະ ຊາວໜຸ່ມ ລວມທັງ ພໍ່ແມ່ ແລະ ອຳນາດການປົກຄອງບ້ານ ເຫັນຄວາມສຳຄັນຂອງການສ້າງຄວາມສາມັກຄີ ພາຍໃນຊຸມຊົນຂອງພວກເຂົາ.
2. ຊາວໜຸ່ມບໍ່ຄ່ອຍມີໂອກາດປະກອບສ່ວນໃນການຕັດສິນບັນຫາທີ່ກ່ຽວຂ້ອງກັບຊີວິດຂອງເຂົາເຈົ້າ ໃນທຸກລະດັບ. ຢູ່ໃນເຂດຊົນນະບົດ, ອາດບໍ່ມີຜູ້ຕາງໜ້າຂອງຊາວໜຸ່ມຢູ່ໃນບ້ານ ແລະ ໂອກາດ ໃນການມີສ່ວນຮ່ວມອາດມີບໍ່ຫຼາຍ. ອີກເຫດຜົນໜຶ່ງ ໂດຍສະເພາະຢູ່ໃນເຂດຊົນນະບົດ ບົດບາດຂອງອຳນາດການປົກຄອງມີຄວາມສຳຄັນ ແລະ ຊາວໜຸ່ມຈຳນວນໜ້ອຍຄົນທີ່ຈະສາມາດເຂົ້າຮ່ວມໃນລະດັບດັ່ງກ່າວ. ສຳລັບຊາວໜຸ່ມໃນຕົວເມືອງ, ປະກົດວ່າ ມີຄວາມຕ້ອງການທີ່ຈະປະກອບສ່ວນຫຼາຍຂຶ້ນ, ແຕ່ຍັງມີເວທີທີ່ຈຳກັດ, ໂດຍສະເພາະສຳລັບຜູ້ທີ່ມີລະດັບການສຶກສາຕໍ່າ. ນອກຈາກນັ້ນ ຄົນຮຸ່ນໜຸ່ມຍັງອາດມີຂໍ້ຈຳກັດໃນການມີສ່ວນຮ່ວມ ບໍ່ສະເພາະເນື່ອງມາຈາກແນວຄວາມຄິດຂອງຕົນເອງເທົ່ານັ້ນ ແຕ່ຍັງຖືກຈຳກັດຍ້ອນແນວຄວາມຄິດຂອງພໍ່ແມ່ ແລະ ຜູ້ນຳໃນທ້ອງຖິ່ນ. ປາສະຈາກການເປັນຕົວແທນ ຈາກອົງການຈັດຕັ້ງ ເຊັ່ນ ສູນກາງຊາວໜຸ່ມ, ກໍ່ໝາຍຄວາມວ່າບໍ່ມີ "ເວທີສຳລັບການອອກສຽງ" ຂອງຊາວໜຸ່ມ ແລະ ເຍົາວະຊົນ ໃນ ສປປ ລາວ.

Participation



UNFPA, Lao PDR

# 8

# VIII ປະເດັນທີ່ກ່ຽວກັບທຸກຂະແໜງການ

ບັນດາ 5 ຂົງເຂດ: ສຸຂະພາບ, ການສຶກສາ, ການວຽກເຮັດງານທຳ, ການປົກປ້ອງ ແລະ ການມີສ່ວນຮ່ວມ ແມ່ນຂອບສຳລັບການສຶກສາ ໃນບົດລາຍງານນີ້ ເພື່ອສະໜອງຂໍ້ມູນ ກ່ຽວກັບສະພາບຂອງຄົນຮຸ້ນໜຸ່ມ. ແຕ່ວ່າ ເພື່ອສ້າງຄວາມເຂົ້າໃຈຕໍ່ກັບສະພາບຂອງຊາວໜຸ່ມໃຫ້ໄດ້ຢ່າງຊັດເຈນ ຢູ່ ສປປ ລາວ ມັນມີຄວາມຈຳເປັນທີ່ຕ້ອງເຂົ້າໃຈເຖິງສາຍພົວພັນລະຫວ່າງຂົງເຂດດັ່ງກ່າວ.

## 8.1 ການດື່ມເຫຼົ້າ ແລະ ສິ່ງເສບຕິດ

ເຫຼົ້າໃນສັງຄົມລາວ ແມ່ນບັນຫາທີ່ກ່ຽວພັນກັບທຸກຂະແໜງການ, ເນື່ອງຈາກມີຜົນກະທົບຕໍ່ກັບສຸຂະພາບ, ການສຶກສາ, ການມີວຽກເຮັດງານທຳ, ການປົກປ້ອງ ແລະ ການມີສ່ວນຮ່ວມ. ການວິໄຈຂໍ້ມູນມີໜຶ່ງ ໄດ້ສະແດງໃຫ້ເຫັນຄວາມກ່ຽວພັນລະຫວ່າງເຫຼົ້າ ແລະ ຄວາມຮຸນແຮງໃນກຸ່ມຊາວໜຸ່ມ ແລະ ລະຫວ່າງຊາວໜຸ່ມກັບຜູ້ປົກຄອງຂອງພວກເຂົາເຈົ້າ, ແລະ ຜົນຂອງນຳໃຊ້ຢາເສບຕິດ ແລະ ການອອກໂຮງຮຽນຂອງຊາວໜຸ່ມ. ພຶດຕິກຳສ່ຽງທີ່ສົ່ງຜົນໃຫ້ເກີດຄວາມສ່ຽງໃນການເປັນໄຂ້ຍຸງ, ອຸປະຕິເຫດໃນທ້ອງຖະໜົນ, ການຖືພາທີ່ບໍ່ຕັ້ງໃຈ ແລະ ການເອົາລູກອອກ ແມ່ນລ້ວນແຕ່ມີຄວາມກ່ຽວພັນກັບການດື່ມເຫຼົ້າ.

ການນຳໃຊ້ຢາເສບຕິດ ເຊິ່ງເປັນບັນຫາຕົ້ນຕໍສຳລັບຊາວໜຸ່ມຊາຍ ແມ່ນສິ່ງຜົນກະທົບຕໍ່ສຸຂະພາບ ຈົນເຖິງການອອກໂຮງຮຽນ, ແລະ ພຶດຕິກຳສ່ຽງທີ່ມີຜົນຕໍ່ບັນຫາການປົກປ້ອງ.

ຄວາມແຕກຕ່າງທາງດ້ານແນວຄິດ ແລະ ຄວາມຄາດຫວັງ ຕໍ່ການປ່ຽນແປງພຶດຕິກຳຂອງຊາວໜຸ່ມທີ່ກ່ຽວພັນກັບແບບແຜນ ແລະ ຄ່ານິຍົມທາງສັງຄົມທີ່ມີຢູ່ໃນປັດຈຸບັນ ແລະ ອາດີດ ລະຫວ່າງຊາວໜຸ່ມ ແລະ ຜູ້ໃຫຍ່ ແມ່ນເຫັນໄດ້ຈະແຈ້ງ ແລະ ເປັນເລື່ອງທຳມະດາ, ເຊິ່ງຜູ້ໃຫຍ່ບໍ່ຢາກໃຫ້ມີການປ່ຽນແປງ ແລະ ເຮັດຄືກັບອະດີດ ແຕ່ຊາວໜຸ່ມເລືອກທີ່ຈະເດີນໜ້າຕໍ່ໄປໃນອະນາຄົດ. ລະດັບຄວາມແຕກຕ່າງທາງດ້ານແນວຄວາມຄິດເຫຼົ່ານີ້ ແມ່ນບໍ່ຄືກັນລະຫວ່າງເຂດຕົວເມືອງ, ຊົນນະບົດ ແລະ ຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ.

ການສຳພາດຜູ້ໃຫ້ຂໍ້ມູນຫຼັກ (KIIs) ຈາກຜູ້ປົກຄອງ, ນາຍບ້ານ, ອຳນາດການປົກຄອງເມືອງ, ພະສົງ, ແລະ ເຈົ້າຂອງສະຖານບັນເທີງ ແມ່ນເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບທັດສະນະຄະຕິຂອງພວກເຂົາ ຕໍ່ກັບສະພາບຂອງຊາວໜຸ່ມ. ຄວາມຄິດຄວາມເຫັນຂອງພວກເຂົາແມ່ນແມ່ນຄືກັນ ເຊິ່ງບັນຫາທີ່ເປັນກັງວົນຫຼັກ ແມ່ນການດື່ມເຫຼົ້າເບຍ ແລະ ໃຊ້ຢາເສບຕິດຂອງຊາວໜຸ່ມ, ນອກຈາກນັ້ນ ຍັງຍົກບັນຫາການບໍ່ມີວຽກເຮັດງານທຳ ແລະ ການບໍ່ສາມາດເຂົ້າເຖິງການສຶກສາ ອາດເປັນສາເຫດໜຶ່ງປະກອບສ່ວນ ໃນການພັກດັນໃຫ້ຊາວໜຸ່ມໃຫ້ນຳໃຊ້ຢາເສບຕິດ ແລະ ກໍ່ອາດຊະຍາກຳ. ເປັນເລື່ອງທີ່ແນ່ນອນແລ້ວວ່າ ພວກເຮົາບໍ່ຮູ້ວ່າບັນຫາໃດເປັນສາເຫດເລີ່ມຕົ້ນ ແລະ ເປັນຜົນຈຸດສຸດທ້າຍ ເຊິ່ງຄວາມກ່ຽວພັນຂອງບັນຫາເຫຼົ່ານີ້ ແມ່ນບໍ່ມີມື້ສິ້ນສຸດ.

ບັນດາຂັ້ນນຳຂອງກະຊວງທີ່ໄດ້ໃຫ້ການສຳພາດ ເຫັນດີກັບຄວາມເຫັນຂອງພໍ່ແມ່ຜູ້ປົກຄອງຂອງນັກຮຽນ ແລະ ອຳນາດການປົກຄອງ ກ່ຽວກັບບັນຫາຂອງຊາວໜຸ່ມ, ໃນນັ້ນ ລວມມີງການນຳໃຊ້ຢາເສບຕິດຂອງຊາວໜຸ່ມຊາຍ, ການຖືພາແຕ່ອາຍຸຍັງນ້ອຍ ແລະ ການຖືພາທີ່ບໍ່ຕັ້ງໃຈ, ການຂາຍບໍລິການທາງເພດ ແລະ ການເອົາລູກອອກສຳລັບຊາວໜຸ່ມຍິງ ແລະ ການບໍ່ມີວຽກເຮັດງານທຳສຳລັບທັງເພດຍິງ ແລະ ເພດຊາຍ.

## 8.2 ການຖືພາແຕ່ອາຍຸຍັງນ້ອຍ

ດັ່ງທີ່ໄດ້ອະທິບາຍລະອຽດຢູ່ໃນພາກສຸຂະພາບ, ການຖືພາແຕ່ອາຍຸຍັງນ້ອຍ ແມ່ນຖືວ່າເປັນເລື່ອງທີ່ບໍ່ແປກ ຢູ່ ໃນ ສປປ ລາວ ທັງໃນການແຕ່ງງານ ແລະ ບໍ່ແຕ່ງງານ. ເຖິງຢ່າງໃດກໍ່ຕາມສິ່ງດັ່ງກ່າວສະທ້ອນໃຫ້ເຫັນ ກອບຂອງຮີດຄອງປະເພນີທີ່ເຄີຍປະຕິບັດ ແຕ່ກໍ່ຄ່ອຍໆມີການປ່ຽນແປງເນື່ອງຈາກຍິງໜຸ່ມສາມາດເຂົ້າເຖິງການສຶກສາຫຼາຍຂຶ້ນ (ລວມທັງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ສຸຂະພາບໂດຍທົ່ວໄປ) ແລະ ກາລະໂອກາດດ້ານການມີວຽກເຮັດງານທຳທີ່ເປັນຜົນມາຈາກການປັບປຸງທາງດ້ານການສຶກສາ. ການຖືພາແຕ່ອາຍຸຍັງນ້ອຍບໍ່ພຽງແຕ່ເປັນບັນຫາສະເພາະສຸຂະພາບຂອງແມ່ທີ່ມີອາຍຸນ້ອຍ ແລະ ເດັກເທົ່ານັ້ນ, ແຕ່ຍັງອາດຜູກມັດເຂົາເຈົ້າໃຫ້ຢູ່ໃນວົງຈອນຄວາມທຸກຍາກ ທີ່ພົວພັນກັບລະດັບການສຶກສາຂອງແມ່ ເນື່ອງຈາກພວກເຂົາອອກໂຮງຮຽນແຕ່ອາຍຸຍັງນ້ອຍ ແລະ ມີຄວາມຈຳກັດໃນທາງເລືອກຂອງການມີວຽກເຮັດທຳ.

## 8.3 ການເຄື່ອນຍ້າຍ

ການເຄື່ອນຍ້າຍແມ່ນບັນຫາທີ່ກ່ຽວພັນກັບຫຼາຍຂະແໜງການ ເຊິ່ງມີຜົນມາຈາກການຊອກຫາໂອກາດໃນການມີວຽກເຮັດງານທຳ ແລະ ມີຜົນກະທົບຕໍ່ກັບບັນຫາສຸຂະພາບ ແລະ ການປົກປ້ອງ ແລະ ມີຜົນສ່ວນໜຶ່ງຕໍ່ກັບການສຶກສາ ແລະ ການມີສ່ວນຮ່ວມ. ເນື່ອງຈາກບໍ່ມີວຽກເຮັດງານທຳ, ເຊິ່ງອາດມີຜົນມາຈາກການຂາດການສຶກສາ, ໂອກາດທີ່ມີຢູ່ແດນໄກ ອາດເຮັດໃຫ້ຊາວໜຸ່ມສ່ຽງຕໍ່ການຕົກເປັນຫຍື່ອຍຂອງການຄ້າມະນຸດ, ຄວາມສ່ຽງດ້ານສຸຂະພາບ ແລະ ບັນຫາດ້ານການປົກປ້ອງ ທັງພາຍໃນປະເທດ, ໃນປະເທດທີ່ໃກ້ຄຽງ ແລະ ປະເທດອື່ນໆທີ່ຢູ່ຫ່າງໄກກວ່ານັ້ນ. ເຖິງແມ່ນ ການຄ້າມະນຸດ ແມ່ນຮູບແບບຄວາມຮຸນແຮງຂອງການເຄື່ອນຍ້າຍ, ຊາວໜຸ່ມທີ່ຢູ່ຕາມຊາຍແດນມີໂອກາດຫຼາຍທີ່ສຸດ, ຫຼື ເວົ້າໄດ້ວ່ານີ້ເປັນຄ້າມະນຸດທີ່ເປີດເຜີຍ. ການການຄ້າມະນຸດມີຜົນກະທົບຕໍ່ກັບຊາວໜຸ່ມທັງຍິງ ແລະ ຊາຍ, ໄດ້ມີການເນັ້ນໜັກໃສ່ເພດຍິງຫຼາຍກວ່າ ເພາະພວກເຂົາມີຄວາມສ່ຽງຈາກການຖືກກົດຂີ່ທາງເພດ. ການຂາດຄວາມເຂົ້າໃຈ ເຮັດໃຫ້ຊາວໜຸ່ມເພດຊາຍມີຄວາມສ່ຽງເຊັ່ນດຽວກັນ ໃນການຖືກເອົາລັດເອົາປຽບ ເຊັ່ນ ສະພາບ

ແວດລ້ອມໃນການເຮັດວຽກທີ່ບໍ່ເໝາະສົມ ແລະ ການເຂົ້າເມືອງຜິດກົດໝາຍ ເຮັດໃຫ້ຊາວໜຸ່ມຕົກຢູ່ໃນ ສະຖານະການທີ່ອັນຕະລາຍ ຢູ່ທັງພາຍໃນປະເທດ ແລະ ຢູ່ປະເທດໃກ້ຄຽງ. ລາຍລະອຽດເພີ່ມຕື່ມກ່ຽວກັບບັນຫາການເຄື່ອນຍ້າຍ ແມ່ນຢູ່ໃນພາກການມີວຽກເຮັດງານທຳ.

## 8.4 ບົດບາດຍິງ-ຊາຍ

ເຖິງແມ່ນວ່າ ຈະບໍ່ມີບັນຫາການເກີດລູກແຕ່ອາຍຸຍັງນ້ອຍ, ແຕ່ຊາວໜຸ່ມເພດຍິງຈຳນວນຫຼາຍ ໂດຍສະເພາະຈາກຄອບຄົວຊົນເຜົ່າ ແລະ ຄອບຄົວທີ່ມີຖານະທາງເສດຖະກິດ-ສັງຄົມທີ່ທຸກຍາກ ທີ່ບໍ່ສາມາດຮຽນຈົບຊັ້ນມັດທະຍົມ ຍັງຄົງເປັນບັນຫາໜຶ່ງທີ່ເຮັດໃຫ້ ສປປ ລາວ ຕົກຢູ່ໃນກັບດັກຂອງວົງຈອນຄວາມທຸກຍາກ. ອິດທິພົນຂອງບົດບາດຍິງ-ຊາຍ ຕໍ່ກັບການມີວຽກເຮັດງານທຳ ແລະ ການມີສ່ວນຮ່ວມ ສາມາດສືບຕໍ່ເນື່ອງໄປຕະຫຼອດ ຍ້ອນລະດັບການສຶກສາຕໍ່າ. ການສຸມໃສ່ປັບປຸງວຽກງານການສຶກສາ ແລະ ສຸຂະພາບສໍາລັບຊາວໜຸ່ມເພດຍິງ ຊຶ່ງອີກບໍ່ດົນພວກເຂົາຈະກາຍເປັນແມ່ຄົນ, ແມ່ນເປັນວິທີການດຽວທີ່ສໍາຄັນທີ່ສຸດ ຢູ່ ສປປ ລາວ ເພື່ອແກ້ໄຂບັນຫາໂພສະນາການຂອງເດັກນ້ອຍ ແລະ ການໃຫ້ອາຫານເດັກທີ່ຍັງບໍ່ເໝາະສົມ, (ໄດ້ອະທິບາຍລະອຽດຢູ່ໃນພາກສຸຂະພາບ) ແລະ ມີຄວາມສໍາຄັນໃນການສ້າງກໍາລັງແຮງງານ ທີ່ມີລະດັບການສຶກສາ, ມີສຸຂະພາບແຂງແຮງ ແລະ ເຂັ້ມແຂງ, ພ້ອມທີ່ຈະຕອບສະໜອງຕາມຄວາມຕ້ອງການ ທີ່ເພີ່ມຂຶ້ນຈາກການເປັນສະມາຊິກສະມາຄົມເສດຖະກິດອາຊຽນ.[113]

## 8.5 ການສື່ສານ ແລະ ຄົນຮຸ້ນໜຸ່ມ

ການເຂົ້າເຖິງຂໍ້ມູນກ່ຽວກັບປະເທດ, ຂໍ້ມູນກ່ຽວກັບຮ່າງກາຍຂອງຕົນເອງ ແລະ ຂໍ້ມູນກ່ຽວກັບປະເທດອື່ນໆໃນໂລກ ແມ່ນບັນຫາທີ່ກ່ຽວກັບທຸກພາກສ່ວນ ໃນ ສປປ ລາວ.

ອີງຕາມບົດລາຍງານຂອງ ການສໍາຫຼວດດັດຊະນີໝາຍສັງຄົມລາວ LSIS, ຊາວໜຸ່ມສ່ວນຫລາຍ ໃນ ສປປ ລາວ (80.1% ຂອງຜູ້ທີ່ມີອາຍຸ 20-24 ປີ ) ແມ່ນເບິ່ງໂທ ລະພາບຢ່າ ງໜ້ອຍໜຶ່ງເທື່ອ ຕໍ່ອາທິດ.[114] ໂທລະພາບ ແມ່ນສື່ທີ່ຊາວໜຸ່ມເຂົ້າເຖິງຫຼາຍກ່ວາໝູ່; ຊາວໜຸ່ມຈຳນວນເກືອບເ ຄິ່ງລາຍງານວ່າໄດ້ຟັງວິທະຍຸ ແລະ ຊາວໜຸ່ມຈຳນວນ 1 ໃນ 5 ແມ່ນໄດ້ອ່ານໜັງສືພິມ. ຜົນຈາກຫຼາຍການຄົ້ນຄວ້າ ຊີ້ໃຫ້ເຫັນວ່າຊາວໜຸ່ມໄດ້ກ່າວວ່າ ສື່ສານມວນຊົນ ໂດຍສະເພາະແມ່ນໂທລະພາບ ເປັນແຫຼ່ງຂໍ້ມູນທາງດ້ານສຸຂະພາບຈະເລີນພັນທີ່ສໍາຄັນ.[115]

LSIS ຍັງສະແດງໃຫ້ເຫັນວ່າ ມີຊາວໜຸ່ມຈຳນວນພຽງ 10% ທີ່ເຄີຍໃຊ້ອິນເຕີເນັດ.[116] ສິ່ງດັ່ງກ່າວ ສະແດງໃຫ້ເຫັນວ່າ ການສື່ສານຜ່ານອິນເຕີເນັດແມ່ນບໍ່ແທດເໝາະທີ່ຈະນໍາມາໃຊ້ເພື່ອເຂົ້າເຖິງຊາວໜຸ່ມຈຳນວນຫລາຍໃນປະຈຸບັນ. ເຖິງຢ່າງໃດກໍ່ຕາມ, ການໃຊ້ອິນເຕີເນັດ ແມ່ນມີອັດຕາເພີ້ມຂຶ້ນໄວ ແລະ ມີຄວາມກ່ຽວພັນກັບລະດັບຂອງການສຶກສາ ແລະ ຄວາມຮັ່ງມີ. ບໍ່ມີຂໍ້ມູນກ່ຽວກັບການເຂົ້າເຖິງ ແລະ ການໃຊ້ໂທລະສັບມືຖື ເຖິງແມ່ນວ່າໃນຄວາມເປັນຈິງການນໍາໃຊ້ໂທລະສັບ ໄດ້ເພີ່ມຂຶ້ນຢ່າງໄວວາໃນຂອບເຂດທົ່ວປະເທດ ແລະ ຜູ້ນໍາໃຊ້ສ່ວນໃຫຍ່ແມ່ນຊາວໜຸ່ມ, ໂດຍສະເພາະຊາວໜຸ່ມຢູ່ໃນເຂດຕົວເມືອງ.

ໃນເວລາສົນທະນາກຸ່ມ ການຂາດການເຂົ້າເຖິງຂໍ້ມູນ ແມ່ນເຫັນໄດ້ໃນຊັດເຈນຈາກຄວາມຮັບຮູ້ຂອງຊາວໜຸ່ມ ໃນເຂດຕົວເມືອງ, ເຂດຊົນນະບົດ ແລະ ເຂດຊົນນະບົດມີເສັ້ນທາງເຂົ້າເຖິງຍາກ. ຄວາມແຕກໂຕນກັນລະຫວ່າງຊາວໜຸ່ມ ໃນເຂດຕົວເມືອງ ແລະ ຊົນນະບົດ ແມ່ນມີຜົນມາຈາກການນໍາໃຊ້ພາສາທີ່ບໍ່ເປັນເອກະພາບ, ການເຂົ້າເຖິງໄຟຟ້າ ແລະ ຄວາມສາມາດໃນການໃຊ້ຈ່າຍສໍາລັບເຕັກໂນໂລຢີ ເພື່ອການສຶກສາ ແລະ ຄວາມຮູ້.

---

113 ຊາວໜຸ່ມຜູ້ທີ່ຜ່າຕັດປ່ຽນເພດ ແມ່ນບໍ່ໄດ້ຖືກສໍາພາດໃນກຸ່ມສົນທະນາ ດັ່ງນັ້ນ ຈຶ່ງບໍ່ໄດ້ລວມໃນການວິໄຈບົດບາດຍິງ-ຊາຍ ໃນອະນາຄົດ.

114 ກະຊວງສາທາ ແລະ ສູນສະຖິຕິແຫ່ງຊາດ (2012). *ການສໍາຫຼວດດັດຊະນີໝາຍສັງຄົມລາວ.*

115 ຕົວຢ່າງ: i) Assessment of Condom Programming in Lao PDR. MoH and UNFPA, 2008; ii) Young Womens Sexual Behaviour Study, Vientiane Capital, Lao PDR. PCCA, Burnet Institute and UNFPA, 2008.

116 ກະຊວງສາທາ ແລະ ສູນສະຖິຕິແຫ່ງຊາດ (2012). *ການສໍາຫຼວດດັດຊະນີໝາຍສັງຄົມລາວ.*



Micka Perier/UNFPA, Lao PDR

9

# IX ສະຫຼຸບ

1. ສປປ ລາວ ເປັນປະເທດທີ່ມີ**ໂຄງຮ່າງປະຊາກອນໜຸ່ມ**. ເມື່ອກຸ່ມຄົນຮຸ້ນໜຸ່ມກ້າວຂຶ້ນສູ່ກຸ່ມອາຍຸສູງຂຶ້ນ ໃນໂຄງຮ່າງປະຊາກອນ, ການສຶກສາ, ສຸຂະພາບ, ທັກສະ ແລະ ການພັດທະນາຂອງພວກເຂົາ ຈະ**ມີຜົນກະທົບອັນຍາວນານ ແລະ ຫຼວງຫຼາຍ ຕໍ່ກັບປັດຈຸບັນ ແລະ ອານາຄົດ**, ສໍາລັບຄົນຮຸ້ນນີ້ ແລະ ຮຸ້ນຄົນຕໍ່ໆໄປ.

1. ຈັງຫວະການປ່ຽນແປງທີ່ມີທ່າກ້າວໄວຂອງ ສປປ ລາວ ແມ່ນຂຶ້ນກັບ**ຜົນສໍາເລັດຂອງຊາວໜຸ່ມໃນຍຸກປັດຈຸບັນ ໃນການຂ້າມຜ່ານໄປສູ່ໄວຜູ້ໃຫຍ່ຢ່າງມີປະສິດຕິຜົນ** ແລະ ຮັບປະກັນ ໃນການນໍາພາປະເທດຊາດໄປຕາມເສັ້ນທາງການພັດທະນາທາງດ້ານບວກຢ່າງຕໍ່ເນື່ອງ. ປັດຈຸບັນ ເປັນຊ່ວງເວລາທີ່ມີຄວາມສໍາຄັນທີ່ສຸດ ສໍາລັບ ສປປ ລາວ ທີ່ຈະຕ້ອງເອົາໃຈໃສ່ຢ່າງພຽງພໍຕໍ່ກັບສຸຂະພາບ, ການສຶກສາ, ທັກສະ, ໂອກາດຂອງການມີວຽກເຮັດທີ່ເໝາະສົມ, ການປົກປ້ອງຈາກການຂູດຮີດ ແລະ ການເອົາລັດເອົາປຽບ ແລະ ໂອກາດໃນການເຂົ້າຮ່ວມການຕັດສິນໃຈກັບປະເດັນທີ່ມີຜົນກະທົບຕໍ່ຊີວິດຂອງເຂົາເຈົ້າ. ມີຄວາມເຫັນເປັນເອກະພາບຢ່າງກວ້າງຂວາງທີ່ຈະ**ທຸ້ມເທຊັບພະຍາກອນເພີ່ມເຕີມ ເພື່ອໃຫ້ຕອບສະໜອງໄດ້ຕາມຄວາມຕ້ອງການ ແລະ ເຮັດໃຫ້ສິດຂອງຄົນຮຸ້ນໜຸ່ມປະກົດຜົນເປັນຈິງ** ເຊິ່ງຈະເປັນຈຸດໃຈກາງຕໍ່ວຽກງານສາທາລະນະສຸກ, ທັກສະ ແລະ ການຮູ້ໜັງສື ຂອງປະຊາກອນ, ຫຼຸດຜ່ອນຄວາມທຸກຍາກ, ເພີ່ມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຮັບປະກັນການພັດທະນາເສດຖະກິດ-ສັງຄົມ **ເພື່ອສ້າງອະນາຄົດທີ່ເຂັ້ມແຂງໃຫ້ແກ່ປະເທດຊາດ.**

1. ໃນຂະນະທີ່ຊາວໜຸ່ມບາງກຸ່ມ ໃນ ສປປ ລາວ ໄດ້ມີໂອກາດໃນການມີວຽກເຮັດງານທໍາທີ່ດີ, ໄດ້ຮັບການສຶກສາ, ມີສຸຂະພາບທີ່ດີ ແລະ ສາມາດເຂົ້າເຖິງການພັກຜ່ອນຢ່ອນອາລົມທີ່ເໝາະສົມ ແລະ ປອດໄພ, ແຕ່ຍັງມີຄວາມແຕກໂຕນກັນຫຼາຍໃນການເຂົ້າເຖິງການບໍລິການດ້ານສາທາລະນະສຸກ ແລະ ການສຶກສາ ເນື່ອງຈາກ ຄວາມແຕກຕ່າງທາງດ້ານເຂດທີ່ຕັ້ງຊົນນະບົດ, ຊົນເຜົ່າ, ບົດບາດຍິງ-ຊາຍ ແລະ ລາຍຮັບຂອງຄອບຄົວ. ບົດລາຍງານສະບັບນີ້ ເນັ້ນໜັກໃສ່**ຄວາມແຕກຕ່າງລະຫວ່າງກຸ່ມຊາວໜຸ່ມ** ເນື່ອງຈາກມີປັດໄຈພາຍນອກທີ່ຫຼາກຫຼາຍ ແລະ ໃນການພັດທະນານະໂຍບາຍ ແລະ ແຜນງານຕ່າງໆ ແມ່ນຮຽກຮ້ອງໃຫ້ມີການພິຈາລະນາຄວາມຕ້ອງການຂອງກຸ່ມຄົນທີ່ຢູ່ໃນສະຖານະພາບສ່ຽງຢ່າງຊັດເຈນ.

1. ການພັດທະນາແຜນງານສໍາລັບຊາວໜຸ່ມ ບໍ່ສາມາດແຍກອອກຈາກການພັດທະນາບັນດານະໂຍບາຍ ແລະ ຍຸດທະສາດ ສໍາລັບປະຊາກອນໂດຍລວມ, ແຕ່ວ່າ **ຄວາມຕ້ອງການສະເພາະ, ຄວາມຮຽກຮ້ອງ, ແລະ ສິດທິຂອງຄົນຮຸ້ນໜຸ່ມ** ພາຍໃນນະໂຍບາຍເຫຼົ່ານັ້ນ ຄວນກໍານົດອອກຢ່າງຈະແຈ້ງ ແລະ ໃຫ້ສາມາດຕອບສະໜອງໄດ້. ພາບລວມຂອງແຜນງານທີ່ມີຢູ່ໃນປະຈຸບັນ ຍັງຢູ່ໃນຂອບເຂດຈໍາກັດ ໂດຍສະເພາະຄວາມສາມາດທີ່ຈະເຮັດໃຫ້ມີຄວາມຍືນຍົງໂດຍປາສະຈາກ ການເອື່ອຍອີງໃສ່ທຶນພາຍນອກ, ແລະ **ຍັງຂາດຂໍ້ມູນ ໃນການຕິດຕາມ ແລະ ປະເມີນຜົນ ທີ່ມີຄຸນະພາບໃນການປະເມີນປະສິດທິຜົນຂອງແຜນງານ.**

1. ບັນດານະໂຍບາຍ ແລະ ນິຕິກໍາ ຄວນສະໜັບສະໜູນບັນດາການຈັດຕັ້ງປະຕິບັດທີ່ໃຫ້ສອດຄ່ອງກັບ ຄວາມຕ້ອງການຂອງຊາວໜຸ່ມ, ແລະ **ສະໜັບສະໜູນຜູ້ມີໜ້າທີ່ຮັບຜິດຊອບຫຼັກ** (ເຊັ່ນ ຜູ້ສະໜອງການບໍລິການ, ພໍ່ແມ່ນັກຮຽນ, ຄູອາຈານ) ເພື່ອສ້າງຂີດຄວາມສາມາດຂອງເຂົາເຈົ້າໃຫ້ສອດຄ່ອງກັບຄວາມຕ້ອງການເຫຼົ່ານັ້ນ ແລະ ເພື່ອຕິດຕາມຄວາມຄືບໜ້າໃນການບັນລຸເປົ້າໝາຍກ່ຽວພັນກັບຊາວໜຸ່ມ. ໃນຂະນະທີ່ ສປປ ລາວ ມີນະໂຍບາຍ ແລະ ນິຕິກໍາທີ່ດີຫຼາຍຢ່າງ, ແຕ່**ການປະຕິບັດບັນດານະໂຍບາຍ ແລະ ກົດໝາຍເຫຼົ່ານີ້ ຍັງມີຂໍ້ຈໍາກັດ** ແລະ **ຂາດສາທາລະສໍານຶກຕໍ່ກັບເນື້ອໃນ**ທີ່ເປັນສິ່ງຈໍາກັດປະສິດທິຜົນ ໃນການປົກປ້ອງສິດທິຂອງຊາວໜຸ່ມ.

1. **ຂໍ້ມູນມືສອງທີ່ມີຢູ່ ສປປ ລາວ ສຸມໃສ່ບາງກຸ່ມຂອງປະຊາກອນ** ຊຶ່ງຊາວໜຸ່ມ ອາດເປັນສ່ວນໜຶ່ງຂອງປະຊາກອນນີ້. **ຂໍ້ມູນດັ່ງກ່າວບໍ່ໄດ້ເປັນຕົວແທນຂອງທຸກຂະແໜງການທີ່ກ່ຽວພັນເຖິງກຸ່ມຊາວໜຸ່ມ** ແລະ ຍັງບໍ່ມີລາຍລະອຽດພຽງພໍ ເພື່ອປະເມີນຂະໜາດຂອງບັນຫາທີ່ຊາວໜຸ່ມກໍາລັງປະເຊີນ ແລະ ສະພາບການຕ່າງໆທີ່ມີຜົນກະທົບຕໍ່ກັບເຂົາເຈົ້າ.

1. ມີສາຍພົວພັນຢ່າງໃກ້ຊິດລະຫວ່າງວຽກງານສາທາ, ສຶກສາ, ແຮງງານ, ການປົກປ້ອງ ແລະ ການມີສ່ວນຮ່ວມ ໃນການກໍານົດອານາຄົດຂອງຊາວໜຸ່ມ. ໃນຂະນະທີ່ຊາວໜຸ່ມ ໄດ້ສັງລວມເຂົ້າຢູ່ໃນບາງຍຸດທະສາດຂອງຂະແໜງການ, ບາງຄັ້ງຊັດເຈນ ແລະ ບາງຄັ້ງກໍ່ບໍ່ຈະແຈ້ງ, ແຕ່ປະຈຸບັນຍັງ**ບໍ່ມີຍຸດທະສາດລວມສໍາລັບຊາວໜຸ່ມ**ໃນທົ່ວປະເທດ. ຂະແໜງການທີ່ກ່ຽວຂ້ອງຈໍາເປັນຕ້ອງໄດ້ເຮັດວຽກ**ປະສານສົມທົບກັນ** ໃນຂົງເຂດເຫຼົ່ານີ້ ເພື່ອຮັບປະກັນວ່າຍຸດທະສາດຊາວໜຸ່ມແຫ່ງຊາດທີ່ມີຄວາມຄົບຖ້ວນຮອບດ້ານ ເອົາໃຈໃສ່ຕໍ່ກັການພົວພັນຂອງຂະແໜງການ ໃນການພັດທະນາຊາວໜຸ່ມ ແລະ ເຍົາວະຊົນ ແລະ ສາມາດນໍາໃຊ້ຊັບພະຍາກອນທີ່ມີຢູ່ໃຫ້ເກີດຜົນສູງສຸດ ໂດຍປະສົມປະສານການການປະກອບສ່ວນຂອງຫຼາຍພາກສ່ວນ, ລັດຖະບານ ແລະ ພາກສ່ວນຕ່າງໆທີ່ມີຄວາມສົນໃຈ.

1. ໃນຂະນະທີ່ ການວິໄຈສະພາບຊາວໜຸ່ມ ແລະ ເຍົາວະຊົນ ສຸມໃສ່ບັນຫາຂອງຊາວໜຸ່ມເປັນສ່ວນຫຼາຍ, ແຕ່ສິ່ງນີ້ກໍ່ບໍ່ຄວນຫັນເຫຈາກຫຼັກຖານທີ່ວ່າ ຊາວໜຸ່ມຫຼາຍຄົນມີສຸຂະພາບແຂງແຮງ, ເຂົາເຈົ້າໄດ້ເຂົ້າໂຮງຮຽນ, ມີເວລາສໍາລັບກິດຈະກໍາຜ່ອນຄາຍ ແລະ ປະກອບສ່ວນ ໃຫ້ແກ່ຄອບຄົວ ແລະ ຊຸມຊົນຂອງຕົນ - **ຊາວໜຸ່ມ ແມ່ນແຫຼ່ງຊັບພະຍາກອນ ທີ່ສໍາຄັນແລະມີຄຸນຄ່າຂອງປະເທດ.** ໃນໄລຍະປັດຈຸບັນ ຊຶ່ງການປ່ຽນແປງຫຼາຍຢ່າງທີ່ເກີດຂຶ້ນ ໃນ ສປປ ລາວ ສາມາດໃຫ້ທັງຜົນປະໂຫຍດ ແລະ ມີຜົນກະທົບທາງລົບ ຕໍ່ກັບສຸຂະພາບ ແລະ ການພັດທະນາຂອງຊາວໜຸ່ມ. **ການລົງທຶນໃສ່ຊາວໜຸ່ມ** ທີ່ເປັນຕົວຂັບເຄື່ອນຂອງການປ່ຽນແປງທາງດ້ານບວກ, ໂດຍການແກ້ໄຂບັນຫາສິ່ງທ້າທາຍທີ່ຊາວໜຸ່ມກໍາລັງປະເຊີນ ແລະ **ສ້າງກາລະໂອກາດໃຫ້ພວກເຂົາ ຈະສ້າງໂອກາດທີ່ພິເສດໃນການຫັນປ່ຽນສະພາບເສດຖະກິດ ແລະ ສັງຄົມຂອງປະເທດ.**



Micka Perier/UNFPA, Lao PDR

10

# X ຂໍ້ແນະນຳເພື່ອຈັດຕັ້ງປະຕິບັດ

ປະຊາກອນທີ່ມີອາຍຸຕໍ່າກວ່າ 25 ປີ ກວມເອົາ 60% ຂອງ ພົນລະເມືອງທັງໝົດ ໃນ ສປປ ລາວ. ບັນຫາສິ່ງທ້າທາຍຕ່າງໆ ທີ່ປະຊາກອນກຸ່ມນີ້ປະເຊີນ ມີຜົນກະທົບໂດຍກົງຕໍ່ກັບຜົນສຳເລັດໃນອະນາຄົດຂອງ ສປປ ລາວ. ການລົງທຶນໃສ່ເຍົາວະຊົນ ແລະ ຊາວໜຸ່ມ ຈະນຳໄປສູ່ການປ່ຽນແປງໃນທາງບວກ.

ບົດລາຍງານພາກນີ້ ນຳສະເໜີຂໍ້ແນະນຳສຳລັບຍຸດທະສາດໃນອະນາຄົດທີ່ອາດຊ່ວຍການຫັນປ່ຽນດັ່ງກ່າວ ໂດຍບໍ່ໄດ້ມອບໝາຍຄວາມຮັບຜິດຊອບສະເພາະໃດໜຶ່ງໃຫ້ແກ່ອົງການຈັດຕັ້ງຂອງລັດຖະບານ ຫຼື ຄູ່ຮ່ວມພັດທະນາ.

**1. ການປະສານສົມທົບລະຫວ່າງຂະແໜງການແມ່ນມີຄວາມຈຳເປັນເພື່ອພັດທະນາຍຸດທະສາດຊາວໜຸ່ມແຫ່ງຊາດທີ່ມີປະສິດທິຜົນ.**

- ກະຊວງ ສາທາລະນະສຸກ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງ ສຶກສາທິການ ແລະ ກິລາ, ແລະ ອົງການຈັດຕັ້ງມະຫາຊົນ ເປັນຕົ້ນ ສູນກາງຊາວໜຸ່ມ  ແລະ ສະຫະພັນແມ່ຍິງ ຄຽງຄູ່ກັບຄູ່ຮ່ວມພັດທະນາຈຳເປັນຕ້ອງໄດ້ເຮັດວຽກຮ່ວມກັນເພື່ອຮັບປະກັນວ່າ ຊາວໜຸ່ມມີຄວາມພ້ອມທີ່ຈະປະເຊີນກັບສິ່ງທ້າທາຍຂອງມາດຕະຖານໃນການເຂົ້າປະຊາຄົມເສດຖະກິດ ອາຊຽນ ໃນປີ 2015.

**2. ຂໍ້ມູນທີ່ມີຄຸນນະພາບມີຄວາມຈຳເປັນເພື່ອເປັນຫຼັກຖານພື້ນຖານສຳລັບການສ້າງນະໂຍບາຍ.**

- ການເກັບກຳຂໍ້ມູນ ກ່ຽວກັບແຜນງານ ແລະ ບັນຫາຕ່າງໆ ໃນ ສປປ ລາວ ຄວນມີການແບ່ງເປັນກຸ່ມອາຍຸ ເຊິ່ງເປັນກຸນແຈທີ່ສຳຄັນໃນການປະເມີນຜົນກະທົບຕໍ່ຊາວໜຸ່ມ.
- ຕ້ອງໄດ້ເຜີຍແຜ່ຂໍ້ມູນເປັນພາສາລາວ ແລະ ພາສາອັງກິດຢ່າງກວ້າງຂວາງ ແລະ ເປີດກວ້າງ ໃຫ້ແກ່ພາກສ່ວນຕ່າງໆທີ່ມີຄວາມສົນໃຈ.
- ການຄົ້ນຄວ້າດ້ານປະລິມານໃນອະນາຄົດຢູ່ ສປປ ລາວ ຄວນມີຂອບເຂດລະດັບຊາດ ແລະ ມີການອອກແບບທີ່ຮັດກຸມພຽງພໍ ເພື່ອສຳຫຼວດຂໍ້ມູນດ້ານພູມສັນຖານ, ຊົນເຜົ່າ, ບົດບາດຍິງ-ຊາຍ, ການສຶກສາ, ເສດຖະກິດ-ສັງຄົມ, ສະຖານະພາບສົມລົດ ແລະ ຄວາມພິການ, ເພື່ອເປັນບ່ອນອີງສຳລັບນະໂຍບາຍຂອງລັດ ແລະ ປະເມີນເຖິງອັດຕາການເພີ່ມຂຶ້ນຂອງກຸ່ມທີ່ດ້ອຍໂອກາດ. ການຄົ້ນຄວ້າເຫຼົ່ານີ້ ຄວນສຶກສາລົງເລິກຂົງເຂດທີ່ຍັງຂາດຂໍ້ມູນ ເຊັ່ນ ການເອົາການລູກອອກ/ລຸລູກ, ການເຄື່ອນຍ້າຍ, ການປົກປ້ອງ ແລະ ການມີສ່ວນຮ່ວມ.
- ຍັງມີຂໍ້ມູນຈຳນວນຫຼາຍທີ່ໄດ້ເກັບກຳສຳລັບບົດລາຍງານສະບັບນີ້. ຄວນພິຈາລະນາການເຂົ້າເຖິງຂໍ້ມູນນີ້ໜຶ່ງທີ່ຍັງບໍ່ໄດ້ວິເຄາະຂອງການວິໄຈນີ້ເພື່ອເຮັດໃຫ້ອົງການຈັດຕັ້ງອື່ນໆ ທີ່ມີຄວາມສົນໃຈ ສາມາດນຳໃຊ້ຂໍ້ມູນດັ່ງກ່າວໃນການຄົ້ນຄວ້າກ່ຽວກັບຊາວໜຸ່ມ ຢູ່ ສປປ ລາວ ເພີ່ມຕື່ມ.

**3. ຫຼຸດຜ່ອນຄວາມແຕກໂຕນກັນໃນການເຂົ້າເຖິງການບໍລິການສຸຂະພາບຂອງຊາວໜຸ່ມ.**

- ບົດບາດຍິງ-ຊາຍ, ຊົນເຜົ່າ, ຄວາມທຸກຍາກ, ທີ່ຕັ້ງພູມສັນຖານ ແລະ ສະພາບຄວາມສ່ຽງອື່ນໆ ເປັນຕົ້ນ ຄວາມພິການ ແລະ ສະຖານະພາບຂອງການພັກເຊົາ (ແຮງງານເຄື່ອນຍ້າຍ) ແລະ ຖານະພາບສົມລົດ ມີຜົນກະທົບຕໍ່ການເຂົ້າເຖິງການບໍລິການສຸຂະພາບ.
- ສະໜັບສະໜູນລະບົບສາທາລະນະສຸກແຫ່ງຊາດເພື່ອເພີ່ມຄວາມວ່ອງໄວ ແລະ ເອົາໃຈໃສ່ ຕໍ່ກັບຄວາມຕ້ອງການຂອງຊາວໜຸ່ມ ແລະ ເຍົາວະຊົນ ໂດຍຜ່ານການຝຶກອົບຮົມ ແລະ ການສະໜອງການບໍລິການທີ່ໄດ້ຮັບການປັບປຸງ ສຳລັບການວາງແຜນຄອບຄົວ ແລະ ການບໍລິການສຸຂະພາບອື່ນໆ ໂດຍບໍ່ຄຳນຶງເຖິງ ສະຖານະພາບສົມລົດ, ສະຖານະພາບທາງດ້ານເສດຖະກິດ ແລະ ຊົນເຜົ່າ.
- ສ້າງຍຸດທະສາດ ໃນການໂຄສະນາເພື່ອປ່ຽນແປງພຶດຕິກຳ ເພື່ອຮັບມືກັບສິ່ງທ້າທາຍຂອງພຶດຕິກຳສ່ຽງ ໂດຍສະເພາະໃນກຸ່ມໄວໜຸ່ມທີ່ມີຄວາມສ່ຽງທີ່ສຸດ.

**4. ຫຼຸດຜ່ອນຄວາມແຕກໂຕນກັນໃນການເຂົ້າເຖິງການສຶກສາທີ່ມີຄຸນນະພາບ ແລະ  ຄວາມປອດໄພ ລວມທັງການສຶກສາ ຊັ້ນປະຖົມ ແລະ ມັດທະຍົມ, ການສຶກສາດ້ານສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ທັກສະຊີວິດ ແລະ ການຝຶກອົບຮົມວິຊາຊີບ ແລະ ການວາງແຜນອາຊີບ, ເພື່ອຮັບປະກັນວ່າຊາວໜຸ່ມ ສາມາດເຂົ້າເຖິງການສຶກສາ ແລະ ການຝຶກອົບຮົມທີ່ກົມກຽວກັບໂອກາດການມີວຽກເຮັດງານທຳທີ່ມີຢູ່.**

- ພິຈາລະນາກາລະໂອກາດ ແລະ ຄວາມສາມາດຂອງຊາວໜຸ່ມລາວ ໃຫ້ຢູ່ໃນເງື່ອນໄຂຂອງປະຊາຄົມອາຊຽນ ເພື່ອຮັບປະກັນວ່າເຂົາເຈົ້າມີຄວາມສາມາດແຂ່ງຂັນພາຍໃນພາກພື້ນ.
- ໃຫ້ການສະໜັບສະໜູນແຜນງານໄລຍະຍາວສຳລັບການສຶກສາ ແລະ ການຝຶກອົບຮົມທັກສະຊີວິດ ເພື່ອຫຼຸດຜ່ອນຄວາມທຸກຍາກໃນຊຸມຊົນເຂດຊົນນະບົດ.
- ບັງຄັບການນຳໃຊ້ກົດໝາຍໃຫ້ມີປະສິດຕິຜົນ ເພື່ອລົບລ້າງການໃຊ້ແຮງງານເດັກ ແລະ ການແຕ່ງງານກ່ອນໄວອັນຄວນ.
- ສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂະພິບານໃຫ້ພຽງພໍແກ່ທຸກໂຮງຮຽນ
- ພິຈາລະນາການໝູນວຽນການສອນ (ຄູໝູນວຽນ) ໃນເຂດຊົນນະບົດໃຫ້ເປັນສ່ວນໜຶ່ງຂອງການຝຶກອົບຮົມຄູ.

- ເພີ່ມຂໍ້ມູນກ່ຽວກັບໂອກາດໃນການມີວຽກເຮັດງານທຳທີ່ດີ ໂດຍຜ່ານກະດານຂ່າວ, ການສື່ສານທາງອີເລັກໂຕນິກ ລວມທັງການສົ່ງຂໍ້ຄວາມ.
- ຮັບປະກັນການປົກປ້ອງການມີວຽກເຮັດງານທຳສຳລັບຊາວໜຸ່ມລາວ ໂດຍຜ່ານນະໂຍບາຍ, ລະບຽບການ ກ່ຽວກັບການຈ້າງງານທີ່ສະໜອງການເຂົ້າເຖິງການຝຶກເຮັດວຽກຕົວຈິງ ແລະ ສິ່ງຈູງໃຈສຳລັບການຈ້າງງານໃຫ້ແກ່ປະຊາກອນທີ່ດ້ອຍໂອກາດ.

5. **ລົງທຶນໃນການຂະຫຍາຍໂອກາດສຳລັບຊາວໜຸ່ມເພື່ອໃຫ້ພວກເຂົາສາມາດສະແດງຄຳເຫັນ ແລະ ປະກອບສ່ວນເຂົ້າໃນການກຳນົດອານາຄົດ ຂອງ ສປປ ລາວ.**

- ຮັບປະກັນການມີສ່ວນຮ່ວມຂອງຊາວໜຸ່ມຜູ້ດ້ອຍໂອກາດທີ່ມີຄວາມສ່ຽງທີ່ສຸດ, ເຊິ່ງສ່ວນຫຼາຍຄວາມເຫັນຂອງພວກເຂົາ ແມ່ນບໍ່ໄດ້ຖືກຮັບຮູ້.
- ຮ່ວມກັບສູນກາງຊາວໜຸ່ມ ເພື່ອຮັບປະກັນວ່າຊາວໜຸ່ມມີຕົວແທນ ໃນເວທີຂອງລັດຖະບານ ເພື່ອມີສ່ວນຮ່ວມຢ່າງຕັ້ງໜ້າໃນຂະບວນການຕັດສິນໃຈບັນຫາ.
- ສ້າງໃຫ້ຊາວໜຸ່ມ ເປັນທັງຜູ້ສະໜັບສະໜູນ ແລະ ເປັນຕົວຂັບເຄື່ອນການປ່ຽນແປງຂອງພວກເຂົາເອງ, ໂດຍໃຫ້ພວກເຂົາມີໂອກາດມີສ່ວນຮ່ວມຢ່າງຫ້າວຫັນ ເພື່ອກຳນົດ ແລະ ປົກປ້ອງ ຄວາມຕ້ອງການຂອງພວກເຂົາ, ແລະ ສ້າງເວທີທີ່ຫຼາກຫຼາຍ ເຊິ່ງປະກອບມີຫຼາຍພາກສ່ວນລວມທັງ ອົງການຈັດຕັ້ງ ທາງສັງຄົມ ແລະ ກຸ່ມຊາວໜຸ່ມ ທີ່ເປັນຕົວແທນ ແລະ ຮັບໃຊ້ກຸ່ມຊາວໜຸ່ມອື່ນໆ ເພື່ອໃຫ້ພວກເຂົາໄດ້ສະແດງອອກ.

6. **ຮັບປະກັນວ່າຄວາມອາດສາມາດຂອງຜູ້ມີໜ້າທີ່ຮັບຜິດຊອບຫຼັກ ໄດ້ຮັບການປັບປຸງເພື່ອນຳພາການພັດທະນາ ແລະ ການປົກປ້ອງຊາວໜຸ່ມ.**

- ປັບປຸງຄວາມຮູ້ຂອງພວກເຂົາກ່ຽວກັບນິຕິກຳທີ່ມີຢູ່, ຄວາມສາມາດໃນການສື່ສານ ແລະ ໂຄສະນາເຜີຍແຜ່ ແລະ ບັງຄັບໃຊ້ກົດໝາຍ,
- ສ້າງຂີດຄວາມສາມາດຂອງອົງການຕຸລາການໃນການປົກປ້ອງຊາວໜຸ່ມທີ່ດ້ອຍໂອກາດ, ໂດຍສະເພາະ ທີ່ກ່ຽວພັນກັບການຕ້ານການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ,
- ຮັບປະກັນການຈັດຕັ້ງປະຕິບັດທີ່ກວມເອົາຫຼາຍຂະແໜງການ ເພື່ອແກ້ໄຂບັນຫາການໃຊ້ຄວາມຮຸນແຮງບົນພື້ນຖານທາງເພດ ລວມທັງຕໍ່ກັບແມ່ຍິງ ແລະ ເດັກນ້ອຍຍິງ, ແລະ ຜູ້ຊາຍ ແລະ ເດັກນ້ອຍຊາຍ.

7. **ຕິດຕາມ ແລະ ປະເມີນຜົນໄດ້ຮັບຂອງມາດຕະການຕ່າງໆ ເພື່ອສະໜັບສະໜູນຊາວໜຸ່ມ ໂດຍຜ່ານການສົນທະນາກັບຊາວໜຸ່ມຢ່າງເປັນປົກກະຕິ.**

- ລົງທຶນໃນການພັດທະນາຊ່ອງທາງການສື່ສານແບບເປີດສຳລັບການປະເມີນທັດສະນະ, ຄວາມຕ້ອງການທີ່ປ່ຽນແປງຕະຫຼອດເວລາ ແລະ ຜົນສຳເລັດຕ່າງໆຂອງຊາວໜຸ່ມ.
- ຮັບປະກັນວ່າທຸກແຜນງານທີ່ຈັດຕັ້ງປະຕິບັດການບໍລິການສຳລັບຊາວໜຸ່ມ ໄດ້ຮັບການປະເມີນທາງດ້ານຄຸນະພາບຢ່າງເປັນປົກກະຕິ ແລະ ມີປະສິດທິຜົນໃນການບັນລຸເປົ້າໝາຍ ແລະ ຈຸດປະສົງ.
- ເຜີຍແຜ່ຜົນໄດ້ຮັບຂອງການຕິດຕາມ ແລະ ປະເມີນຜົນ ໃຫ້ຊາວໜຸ່ມ ແລະ ອົງການຈັດຕັ້ງຕ່າງໆທີ່ມີສ່ວນຮ່ວມໂດຍກົງ ໃນການປັບປຸງສະຫວັດດີການຂອງຊາວໜຸ່ມ.

# XI ເອກະສານອ້າງອີງ

## 11.1 ເອກະສານອ້າງອີງທາງເວັບໄຊສ


- The World Bank (2014). *Lao PDR Overview*, http://www.worldbank.org/en/country/lao/overview.
- WHO (2014): *Health for the world's adolescents – a second chance in the second decade*, http://apps.who.int/adolescent/second-decade/.
- WHO (2011): *Controlling NCDs: protecting health promoting development*,
- http://www.who.int/nmh/events/2011/ncds_booklet_2011.pdf?ua=1.
- WHO (2012): *Preconception care to reduce maternal and childhood mortality and morbidity, meeting report*, http://www.who.int/maternal_child_adolescent/documents/concensus_preconception_care/en/.
- Internet Directory of Non-Government Organizations (NGOs) in the Lao PDR (2014), http://www.directoryofngos.org.
- Vientiane Declaration on Aid Effectiveness (2006): http://www.undp.org/content/lao_pdr/en/home/library/poverty/Vientiane_Declaration_Aid_Effectiveness/.
- UNICEF (2012). *Multiple Indicator Cluster Surveys indicator for early childbearing / MICS4 Indicators: Numerators and Denominators, version 3*, http://www.childinfo.org/mics4_questionnaire.html.
- The Lao People's Democratic Republic Country Context. World Health Organisation Regional Office for the Western Pacific. [Cited 24 May 2011.] Available from: http://www.wpro.who.int/NR/rdonlyres/076BC0B0-9414-493C-A62D-30DDBE0B3B8A/0/17finalLAOpro2010.pdf.
- Human Development Report 2010. Table 2: Human Development Index Trends, 1980-2010. United Nations Development Programme. [Cited 6 November 2010.] Available from: http://hdr.undp.org/en/media/HDR_2010_EN_Table2.pdf.


## 11.2 ເອກະສານອ້າງອີງທີ່ເປັນເອກະສານ


- Government of the Lao PDR and the United Nations (2013). *The Millennium Development Goals. Progress Report for the Lao PDR 2013.*
- Centre for HIV/AIDS/STI (CHAS) (2012). *Global AIDS Response Progress (GARP)- Country Report, Lao PDR.*
- Unicef and MoE (2009). *Assessment Life-Skills Based Curriculum Project in Lao PDR. Scaling up the response for Children.*
- Thanavanh B, Harun-Or-Rashid M, Kasuya H, Sakamoto J. (2013). *Knowledge, attitudes and practices regarding HIV/AIDS among male high school students in Lao People's Democratic Republic:* J Int AIDS Soc.,16.
- Kessler RC et al. (2005). *Lifetime prevalence and age-of-onset distributions of dsm-iv disorders in the national comorbidity survey replication:* Archives of General Psychiatry, 62(6).
- WHO (publication date unknown). *Health of adolescents in Lao PDR.*
- Population census (2005).
- MoH and Lao Statistics Bureau (2012). *Lao Social Indicator Survey.*
- Ministry of Planning and Investment (2011). *Internal Migration in the Lao People's Democratic Republic. An Exploratory Study.*

- National Maternal and Child Health Centre, MoH (2007): *Adolescent Migrants in the Greater Mekong Sub-Region: Are they equipped to protect themselves against sexual and reproductive health risks?*
- Lao Women's Union (2012/13). *National Directory of Essential Services for Children and Youth in Lao PDR.* Vientiane, Lao PDR.
- Jarakayan, R. (2002): *The Ten Seed Technique.*
- Laos Penal Code (1990): Article 92.
- WHO (2012). *Baseline Survey of Alcohol Consumption: Availability and Effects on Individual Consumption*, (report presented October 2013, Vientiane).
- Sychareun V, Thomsen S, Faxelid E. (2011). *Concurrent multiple health risk behaviors among adolescents in Luangnamtha province.* Lao PDR: BMC Public Health, 11(1).
- CHAS/MoH, USAID, FHI, Global Fund, ADB and UNAIDS (2008). *Integrated Behavioral Biological Surveillance (IBBS).*
- Burnet Institute, CHAS and UHS (2009). *Amphetamine Type Stimulant Use and Sexually Transmitted Infection Risk among Young People in Vientiane Capital and Vientiane Province. Lao PDR.*
- Department of Health of Vientiane Capital, Burnet Institute and United Nations Population Fund (2008). *Young Women's Sexual Behavior Study, Vientiane Capital, the Lao People's Democratic Republic.*
- Phimphachan C, Phanalasy S, Phommanivong V, Scott A, Gray R, Mundy G. (2010). *First Round HIV/STI Prevalence and Behavioral Tracking Survey among Male-to-Female Transgenders in Vientiane Capital and Savannakhet, Lao PDR. Vientiane.* Lao PDR: Population Services International.
- Van Gemert C, Vongsaiya K, Hughes C, Jenkinson R, Bowring AL, Sihavong A, et al. (2013). *Characteristics of a Sexual Network of Behaviorally Bisexual Men in Vientiane, Lao PDR, 2010:* AIDS Educ Prev., 25.
- PSI and CHAS (2010). *TRaC:Tracking Results Continuously.*
- UNICEF Lao PDR and the Ministry of Health (2011). *Rapid Assessment: Most-At-Risk Adolescents and Young People to HIV in Lao PDR.* Bangkok.
- MoH and UNFPA (2008). *Assessment of Condom Programming in Lao PDR.*
- Department of Health of Vientiane Capital, Burnet Institute and United Nations Population Fund (2008). *Young Women's Sexual Behavior Study, Vientiane Capital, the Lao People's Democratic Republic.*
- Care, AusAid and the Lao Women's Union (2012). *Sewing the Line; A qualitative baseline analysis of the risks and opportunities posed for young women by migration from rural Laos to Vientiane for the purpose of employment in the garment industry.*
- Centre for HIV/AIDS/STI (CHAS) (2012). *Global AIDS Response Progress (GARP)- Country Report, Lao PDR.*
- Centre for HIV/AIDS/STI, Lao PDR – *HIV/AIDS Case Report 2012.*
- UNAIDS (2012): *Report on the Global Aids Epidemic.*
- Toole M, Coghlan B, Xeuatvongsa A, Holmes W, Pheualavong S, Chanlivong N. (2006). *Understanding male sexual behavior in planning HIV prevention programmes: lessons from Laos, a low prevalence country. Sex Transm Infect.*, 82.
| ລະດັບຊາດ:<br>ນະຄອນຫຼວງວຽງຈັນ | ຕົວເມືອງ | • ບັນດາກົມຂອງກະຊວງ, ອົງການໃນເຄືອຂ່າຍ ສປຊ, INGOs, ແລະ ສະມາຄົມບໍ່ຫວັງຜົນກຳໄລທີ່ມີແຜນງານທີ່ເນັ້ນໃສ່ຊາວໜຸ່ມ<br>• ຊາວໜຸ່ມທີ່ເຄື່ອນຍ້າຍ<br>• ຊາວໜຸ່ມທີ່ມີຄວາມພິການບາງຢ່າງ<br>• ຜູ້ນຳໃຊ້ຢາເສບຕິດ |
| ແຂວງ ຫຼວງພະບາງ (LPB) | ຕົວເມືອງ | • ພໍ່ແມ່ (ຂອງເດັກອາຍຸ 10-24 ປີ)<br>• ໜ່ວຍງານໄກ່ເກ່ຍຂັ້ນບ້ານ (ນາຍບ້ານ/ຮອງນາຍບ້ານ, ແນວລາວ, ຊາວໜຸ່ມ, ແມ່ຍິງ ແລະ ຄູອາຈານ ແລະ ຜູ້ໃຫ້ບໍລິການສຸຂະພາບ)<br>• ຜູ້ຕ່າງໜ້າຂັ້ນເມືອງຂອງຫ້ອງການ ສາທາ ແລະ ສຶກສາ, ຊາວໜຸ່ມ, ແມ່ຍິງ, ກຳມະບານ, ຕຳຫຼວດ<br>• ຄູບາ<br>• ຄະນະກຳມະການຊາວໜຸ່ມຂັ້ນແຂວງ<br>• ເຈົ້າຂອງສະຖານທີ່ບັນເທີງ |
| ແຂວງ ສະຫວັນນະເຂດ (SVN) | ຊົນນະບົດ | • ພໍ່ແມ່ (ຂອງເດັກອາຍຸ 10-24 ປີ)<br>• ໜ່ວຍງານໄກ່ເກ່ຍຂັ້ນບ້ານ (ນາຍບ້ານ/ຮອງນາຍບ້ານ, ແນວລາວ, ຊາວໜຸ່ມ, ແມ່ຍິງ ແລະ ຄູອາຈານ ແລະ ຜູ້ໃຫ້ບໍລິການສຸຂະພາບ)<br>• ຜູ້ຕ່າງໜ້າຂັ້ນເມືອງຂອງຫ້ອງການ ສາທາ ແລະ ສຶກສາ, ຊາວໜຸ່ມ, ແມ່ຍິງ, ກຳມະບານ, ຕຳຫຼວດ<br>• ຄະນະກຳມະການຊາວໜຸ່ມຂັ້ນແຂວງ<br>• ເຈົ້າຂອງສະຖານທີ່ບັນເທີງ |
| ແຂວງ ອັດຕະປື (ATP) | ເຂດຊົນນະບົດ<br>ບໍ່ມີເສັ້ນທາງ | • ພໍ່ແມ່ (ຂອງເດັກອາຍຸ 10-24 ປີ)<br>• ໜ່ວຍງານໄກ່ເກ່ຍຂັ້ນບ້ານ (ນາຍບ້ານ/ຮອງນາຍບ້ານ, ແນວລາວ, ຊາວໜຸ່ມ, ແມ່ຍິງ ແລະ ຄູອາຈານ ແລະ ຜູ້ໃຫ້ບໍລິການສຸຂະພາບ)<br>• ຜູ້ຕ່າງໜ້າຂັ້ນເມືອງຂອງຫ້ອງການ ສາທາ ແລະ ສຶກສາ, ຊາວໜຸ່ມ, ແມ່ຍິງ, ກຳມະບານ, ຕຳຫຼວດ<br>• ຄະນະກຳມະການຊາວໜຸ່ມຂັ້ນແຂວງ<br>• ເຈົ້າຂອງສະຖານທີ່ບັນເທີງ |

**ບັນທັດຖານໃນການເລືອກເອົາຜູ້ເຂົ້າຮ່ວມທີ່ເປັນຊາວໜຸ່ມຂອງບ້ານ ໃນກຸ່ມສົນທະນາສະເພາະ**

*ບັນທັດຖານທີ່ມີລັກສະນະອະທິບາຍ (ເຊັ່ນ ແຍກ ເປັນກຸ່ມສົນທະນາສະເພາະ):*

1. ເພດ (ເພດຊາຍ/ເພດຍິງ)
2. ກຸ່ມອາຍຸ (10-14; 15-19; 20-24 ປີ)

*ບັດທັດຖານໃນການຄັດເລືອກເພີ່ມເຕີມສຳລັບທຸກກຸ່ມສົນທະນາສະເພາະ:*

1. ຊາວໜຸ່ມທີ່ເຂົ້າໂຮງຮຽນ ແລະ ບໍ່ໄດ້ເຂົ້າໂຮງຮຽນ
2. ຊາວໜຸ່ມທີ່ມີວຽກເຮັດ ແລະ ບໍ່ມີວຽກເຮັດ
3. ຊາວໜຸ່ມທີ່ແຕ່ງງານແລ້ວ ແລະ ໂສດ
4. ຊາວໜຸ່ມຈາກຊົນເຜົ່າຕ່າງໆ (ຕາມທີ່ກ່ຽວຂ້ອງຢູ່ໃນແຕ່ລະສະພາບພື້ນທີ່)
5. ສະມາຊິກ ແລະ ບໍ່ແມ່ນສະມາຊິກຂອງຊາວໜຸ່ມ

## ຕາຕະລາງ 3: ພາບລວມຂອງກຸ່ມຈຸດສຸມທີ່ໄດ້ດຳເນີນຢູ່ແຂວງ ຫຼວງພະບາງ (LPB), ອັດຕະປື (ATP), ສະຫວັນນະເຂດ (SVK) ແລະ ນະຄອນຫຼວງວຽງຈັນ (VC)

| ກຸ່ມຈຸດສຸມ | | | ຫຼພບ | ອຕປ | ສຫນ | ນວ | ລວມ |
|---|---|---|---|---|---|---|---|
| **ຕົວເມືອງ** | ຊາວໜຸ່ມ | 10-14 | 0 | 0 | 2 | | 2 |
| | | 15-19 | 2 | 0 | 2 | | 4 |
| | | 20-24 | 2 | 0 | 2 | | 4 |
| | ພໍ່ແມ່ | | 1 | 0 | 1 | | 2 |
| | ອຳນາດການປົກຄອງບ້ານ | | 1 | 0 | 1 | | 2 |
| | ອຳນາດການປົກຄອງເມືອງ | | 1 | 0 | 0 | | 1 |
| | ສະຖານບັນເທີງ | | 1 | 0 | 0 | | 1 |
| | ຊຸບາ | | 1 | 0 | 0 | | 1 |
| | ມະຫາໄລ | | 0 | 0 | 0 | 2 | 2 |
| **ຊົນນະບົດ** | ຊາວໜຸ່ມ | 10-14 | 2 | 2 | 0 | | 4 |
| | | 15-19 | 2 | 2 | 2 | | 6 |
| | | 20-24 | 2 | 2 | 2 | | 6 |
| | ພໍ່ແມ່ | | 1 | 1 | 1 | | 3 |
| | ອຳນາດການປົກຄອງບ້ານ | | 1 | 1 | 1 | | 3 |
| | ອຳນາດການປົກຄອງເມືອງ | | 0 | 0 | 1 | | 1 |
| | ສະຖານບັນເທີງ | | 0 | 0 | 1 | | 1 |
| **ຊົນນະບົດທີ່ມີເສັ້ນທາງເຂົ້າເຖິງຍາກ** | ຊາວໜຸ່ມ | 10-14 | 0 | 0 | 0 | | 0 |
| | | 15-19 | 2 | 2 | 0 | | 4 |
| | | 20-24 | 2 | 2 | 0 | | 4 |
| | ພໍ່ແມ່ | | 1 | 1 | 0 | | 2 |
| | ອຳນາດການປົກຄອງບ້ານ | | 1 | 1 | 0 | | 2 |
| | ອຳນາດການປົກຄອງເມືອງ | | 0 | 1 | 0 | | 1 |
| | ສະຖານບັນເທີງ | | 0 | 1 | 0 | | 1 |
| **ລວມ** | | | 23 | **16** | 16 | **2** | **57** |

### ຕາຕະລາງ 4: ຜູ້ຕອບການສຳພາດຂອງຜູ້ຂໍ້ມູນຫຼັກ

| ການສຳພາດຜູ້ໃຫ້ຂໍ້ມູນຫຼັກ | |
|---|---|
| | VC |
| ອົງການ IOM | 1 |
| ອົງການ Care ສາກົນ | 1 |
| ອົງການແຮງງານ ສາກົນ (ILO) | 1 |
| ສະມາຄົມຄົນພິການລາວ | 1 |
| ອົງການ UNODC | 1 |
| ກະຊວງ ສາທາ | 1 |
| ສູນສຸຂະພາບແມ່ ແລະ ເດັກ | 1 |
| ກະຊວງ ສຶກສາ ແລະ ກິລາ | 1 |
| ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ | 1 |
| ກະຊວງ ແຜນການ ແລະ ການລົງທຶນ | 1 |
| **ລວມ** | **10** |

# ເອກະສານຊ້ອນທ້າຍ 8: ສະຫຼຸບສິ່ງທີ່ຄົ້ນພົບ

## 1. ສຸຂະພາບ

| ແຂວງ | ຊົນນະບົດ | ຕົວເມືອງ |
|---|---|---|
| ອັດຕະປື | ນຳໃຊ້ *ຢາບ້າ* [120] ເພື່ອຄວາມມ່ວນຊື່ນ ແລະ ເມື່ອຍລ້າ. ເປັນໄຂ້ຍຸງຍ້ອນຂາດການນຳໃຊ້ມຸ້ງ, ເຮັດວຽກຢູ່ໃນປ່າເພື່ອຫາໄມ້ຂະຍຸງ. ນຳໃຊ້ຢາບັງຄັບເອົາລູກອອກ. ແຕ່ງງານເມື່ອອາຍຸພຽງ 12 ປີ. ການເຈັບເປັນເກີດມາຈາກ ອາຫານ/ສຸຂະອະນາໄມສ່ວນຕົວ. ມີການນຳໃຊ້ເຫຼົ້າ, ພົວພັນກັບການຕີກັນ ແລະ ການລ່ວງລະເມີດທາງອາຈາໃນຄອບຄົວ. ຂາດເງິນທີ່ຈະຈ່າຍຄ່າປິ່ນປົວ/ຜ່າຕັດ ເຮັດໃຫ້ເສຍຊີວິດ. ບັນຫາການດູແລສຸຂະພາບແຂ້ວ. ຂາດຄວາມຮູ້ກ່ຽວກັບສຸຂະພາບທາງເພດ, ພຕພ, ລົງຂາວ. ຄວາມຮູ້ກ່ຽວກັບ "ສາມສະອາດ[121]" ລະຫວ່າງເດັກຍິງກາຍຸ 15-19 ປີ. | ບໍ່ມີເຂດຕົວເມືອງ |
| ຫຼວງພະບາງ | ໃຊ້ *ຢາບ້າ* ເພາະເມື່ອຍລ້າ.  ເປັນໄຂ້ມາເລເຣຍຈາກການເຮັດວຽກຢູ່ສະໜາມ ແລະ ປ່າ. ເດັກນ້ອຍເປັນໄຂ້ເລືອດອອກ. ນຳໃຊ້ເຫຼົ້າເຮັດໃຫ້ເປັນໄຂ້ມາເລເຣຍ ຖ້າບໍ່ດັ່ງນັ້ນ ກໍ່ມີບາງບັນຫາກ່ຽວກັບການດື່ມ. ເວົ້າໜ້ອຍໜຶ່ງກ່ຽວກັບການເອົາລູກອອກ. ໂຄງລ່າງດ້ານສຸຂະພາບທີ່ຈຳກັດ, ຂາດການສະໜອງຢາ. ນ້ຳບໍ່ສະອາດເປັນບັນຫາສຳລັບພະຍາດໄຂ່ຫຼັງ. ໄຂ້ອອກຕຸ່ມ ແລະ ອາດເປັນ ໂປລີໂອ (ເປັນລ່ອຍ) ຄິດວ່າພົວພັນກັບລະດູການ. ຂາດຄວາມຮູ້ກ່ຽວກັບສຸຂະພາບທາງເພດ, ອະນາໄມ. | ການນຳໃຊ້ *ຢາບ້າ* ເພື່ອຄວາມມ່ວນຊື່ນ. ໄພອັນຕະລາຍຂອງໄຂ້ເລືອດອອກສຳລັບພະນັກງານຮ້ານອາຫານ. ຂາດຄວາມຮູ້ກ່ຽວກັບໄຂ້ເລືອດອອກ (ບໍ່ມີມຸ້ງເປັນວິທີການປ້ອງກັນ). ການໃຊ້ເຫຼົ້າຕິດພັນກັບການເຈັບເປັນ ແລະ ການບາດເຈັບທາງທ້ອງຖະໜົນ. ສົນທະນາຫຼາຍກ່ຽວກັບການເອົາລູກອອກ. ບັນຫາກ່ຽວກັບຄຸນນະພາບນ້ຳ. ພຕພ/ການຖືພາທີ່ບໍ່ຕ້ອງການຈາກການມີເພດສຳພັນທີ່ບໍ່ໄດ້ຮັບການປ້ອງກັນ. ຄວາມອາຍປ້ອງກັນບໍ່ໃຫ້ໄດ້ຮັບການປິ່ນປົວ. |
| ສະຫວັນນະເຂດ | ໃຊ້ *ຢາບ້າ* ຍ້ອນເມື່ອຍລ້າສຳລັບກຸ່ມຜູ້ມີອາຍຸ, ຜູ້ໜຸ່ມນ້ອຍໃຊ້*ຢາບ້າ*, ກາວ ເພື່ອຄວາມບັນເທີງ, ການສະແດງອອກ. ເດັກຍິງ (10-14 ປີ) ມີຈຸດສຳນຶກສູງກ່ຽວກັບການເອົາລູກອອກ. ເປັນຫ່ວງກ່ຽວກັບການສູບຢາຫຼາຍກວ່າການກິນເຫຼົ້າ. ນຳໃຊ້ໝໍຢາພື້ນເມືອງ ແລະ ການປິ່ນປົວແບບດັ້ງເດີມ. ການເຂົ້າເຖິງການດູແລສຸຂະພາບ ຈຳກັດໂດຍຄ່າໃຊ້ຈ່າຍໃນການເດີນທາງ/ປິ່ນປົວ. | ການລອງ *ຢາບ້າ* ເຮັດໃຫ້ມີການຕິດຢາບ້າ. ພົວພັນກັນຫຼາຍສົມຄວນກ່ຽວກັບຄວາມຮຸນແຮງ. ບາງຄົນນຳໃຊ້*ຢາບ້າ* ຍ້ອນຄວາມເມື່ອຍລ້າ. ໄຂ້ເລືອດອອກລະບາດ ຍ້ອນຂາດສິ່ງອຳນວຍຄວາມສະດວກໃນການດູແລ, ກຸ່ມຄົນ. ບໍ່ມີທຶນໃນການປິ່ນປົວ. ຜູ້ຊາຍທີ່ແຕ່ງງານແລ້ວຖືເຊື້ອ HIV. ການກິນເຫຼົ້າຕິດພັນກັບການຕີກັນ ແລະ ແຂ່ງຂັນກັນ. ໂຮງງານຢາສູບແມ່ນແຫຼ່ງມົນລະພິດທາງອາການທີ່ສຳຄັນ. ການເຈັບເປັນເນື່ອງຈາກຂາດສຸຂະນາໄມສ່ວນບຸກຄົນ. |

## 2. ວຽກງານສຶກສາ

| ແຂວງ | ຊົນນະບົດ | ຕົວເມືອງ |
|---|---|---|
| ອັດຕະປື | ຂາດເງິນສຳລັບເຄື່ອງໃຊ້ໃນໂຮງຮຽນ, ການຂົນສົ່ງ. ຄູນຳໃຊ້ການລົງໂທດທາງຮ່າງ ກາຍ "ຕີ". ໂຮງຮຽນຢູ່ໄກ. ອອກໂຮງຮຽນເພື່ອເຮັດວຽກຊ່ວຍພໍ່ແມ່ຢູ່ໄຮ່, ສວນກາເຟ ຫຼື ໂຮງສີ. ເຂດຊົນນະບົດທີ່ມີເສັ້ນທາງ, ເດັກນ້ອຍຕ້ອງການສືບຕໍ່ການສຶກສາ ແຕ່ວ່ານັກຮຽນເກັ່ງສອງຄົນທຳອິດເທົ່ານັ້ນທີ່ໄດ້ຮັບທຶນການສຶກສາ. ໂຮງຮຽນມີຄວາມປອດໄພ ນອກຈາກສ່ຽງຕໍ່ການສູບຢາ. ການຕີກັນ ແລະ ຢອກກັນທີ່ໂຮງຮຽນເຮັດໃຫ້ຊາວໜຸ່ມບໍ່ມັກໂຮງຮຽນ. ໃຊ້ເວລາຫວ່າງຢູ່ປ່າ ຫາຟືນເພື່ອມາເຮັດກິນ ຫຼື ຫາໄມ້ຂະຍຸງໄປຂາຍ, ພັກຜ່ອນກັບໝູ່ເພື່ອນ. ເດັກຍິງເອົາຟືນ ແລະ ຕັກນ້ຳ. ໃນເວລາພັກຮຽນ ເດັກຍິງເຮັດວຽກຢູ່ບ້ານ, ເດັກຊາຍອາດຊອກເຮັດວຽກທີ່ໄດ້ເງິນຕອບແທນຢູ່ໃນ S&B, ຫາເຄື່ອງປ່າຂອງດົງ, ເຮັດວຽກຢູ່ສວນ. ໄລຍະທາງ, ຄວາມທຸກຍາກ ແລະ ການເຈັບເປັນ ເຮັດໃຫ້ຊາວໜຸ່ມບໍ່ສາມາດສຳເລັດການສຶກສາຂອງເຂົາເຈົ້າ. | ບໍ່ມີເຂດຕົວເມືອງ |

[120] ຢາບ້າ: methamphetamine

[121] ສາມສະອາດ: ນ້ຳສະອາດ, ຢູ່ສະອາດ, ກິນອາຫານສະອາດ

| | | |
|---|---|---|
| ຫຼວງພະບາງ | ພໍ່ແມ່ບໍ່ສະໜັບສະໜູນຄວາມຕ້ອງການສໍາລັບການສຶກສາ. ໂດຍສະເພາະກັບເດັກຍິງທີ່ອອກໂຮງຮຽນ ເພື່ອໄປແຕ່ງງານເມື່ອອາຍຸ 14-15 ປີ. ເດັກຊາຍອອກໂຮງຮຽນໄປເຮັດວຽກ. ເດັກຍິງມີທັດສະນະທີ່ດີ ແລະ ອອກສຽງສໍາລັບຄວາມຕ້ອງການຂອງເຂົາເຈົ້າເພື່ອຈະໄປໂຮງຮຽນ ແລະ ຄຸນຄ່າຂອງການສຶກສາ. ໃນເວລາຫວ່າງ, ເດັກນ້ອຍຫຼິ້ນ. ໃນເວລາພັກຮຽນ, ໄວໜຸ່ມເຮັດວຽກຢູ່ໃນ S&B ຫຼື ໄປຕ່າງແຂວງ. ນັກຮຽນເວົ້າເຖິງຄູອາຈານຕີເຂົາເຈົ້າຢູ່ໃນຫ້ອງຮຽນ. ຊາວໜຸ່ມຫຼາຍຄົນຢາກເປັນຄູອາຈານ ເມື່ອເຂົາເຈົ້າໃຫຍ່ຂຶ້ນ. ຊາວໜຸ່ມບາງຄົນຢາກເຂົ້າຮ່ວມກໍາລັງຕໍາຫຼວດ (ທັງເພດຍິງ&ເພດຊາຍ) | ຊາວໜຸ່ມອາດອອກໂຮງຮຽນໄປເຮັດທຸລະກິດ. ແລະອອກໂຮງຮຽນໄປແຕ່ງງານ ແລະ ຍ້ອນຄ່າໃຊ້ຈ່າຍ. ເດັກຍິງອາຍຸ 15-19 ປີ ແລະ ຊາວໜຸ່ມ 20-24 ປີ ມີຄວາມມຸ້ງຫວັງແຮງກ້າສໍາລັບວຽກງານທີ່ມີທັກສະ. ການນໍາໃຊ້ຢາເສບຕິດ ແລະ ຄວາມຮຸນແຮງໃນໂຮງຮຽນເຮັດໃຫ້ຊາວໜຸ່ມຮູ້ສຶກບໍ່ປອດໄພ. ໂຮງຮຽນທັນສະໄໝ, ມີແອເຢັນ ແລະ ບໍ່ມີການຕໍ່ວ່າກ່ຽວກັບສະພາບການຮຽນຮູ້. ຕ້ອງການການສະໜັບ ສະໜູນໃຫ້ນັກຮຽນເກັ່ງໄດ້ສືບຕໍ່ຮຽນ. |
| ສະຫວັນນະເຂດ | ຊາວໜຸ່ມ ແລະ ໄວໜຸ່ມບາງຄົນເຮັດວຽກຢູ່ຟາມ ແລະ ບໍ່ໄດ້ເຂົ້າໂຮງຮຽນ. ອອກໂຮງຮຽນໄປເຮັດວຽກຢູ່ໃນຟາມຂອງຄອບຄົວ. ເດັກຊາຍມັກຈະສໍາເລັດການສຶກສາ. ຫັດຖະກໍາ, ການຫາອາຫານ, ວຽກເຮືອນການຊານໃນເວລາຫວ່າງ (ບໍ່ໄດ້ຫຼິ້ນກິລາ). ໂຮງຮຽນມີຄວາມປອດໄພ ແຕ່ການເດີນທາງໄປສະຖານທີ່ດັ່ງກ່າວອາດມີຄວາມອັນຕະລາຍ. ຂາດເດີ່ນໂຮງຮຽນສໍາລັບເຮັດກິດຈະກໍາ. ເດັກຊາຍມີປາກມີສຽງຫຼາຍກ່ຽວກັບການຮຽນ, ໂຮງຮຽນ. ເວລາພັກຮຽນສຸມໃສ່ວຽກປູກຝັງ. ເດັກຍິງຕ້ອງການແຕ່ງການຫຼັງຮຽນຈົບ. ເດັກຊາຍຢາກເຮັດກະສິກໍາ ຫຼື ສອນໜັງສື. | ເດັກນ້ອຍບາງຄົນບໍ່ໄດ້ເຂົ້າໂຮງຮຽນຍ້ອນຄວາມທຸກຍາກ, ອັດຕາການອອກໂຮງຮຽນສູງເນື່ອງຈາກຄ່າໃຊ້ຈ່າຍໃນການຮຽນ, ຂາດຄວາມສົນໃຈໃນການຮຽນ (ທັງພໍ່ແມ່ ແລະ ເດັກນ້ອຍ), *ຢາບ້າ*. ເດັກຍິງອອກໂຮງຮຽນຫຼາຍກວ່າເດັກຊາຍ. ສໍາລັບຜູ້ທີ່ມີເງິນ ແລະ ພໍ່ແມ່ຂອງເຂົາເຈົ້າເຫັນຄຸນຄ່າການສຶກສາໄດ້ສືບຕໍ່ການສຶກສາຫຼັງຈາກຊັ້ນມັດທະຍົມ. ອອກສັງຄົມ, ຫຼິ້ນກິລາ, ເຮັດວຽກໃນເວລາຫວ່າງ. ໂຮງຮຽນມີຄວາມປອດໄພ. ເລື່ອງອານາໄມຂອງໂຮງຮຽນແມ່ນເປັນບັນຫາໃນລະດູຝົນ. ຄູເກັບເງິນຈາກນັກຮຽນ. ກິລາ, ກິດຈະກໍາ ແລະ ການອອກສັງຄົມໄດ້ເນັ້ນໜັກຢູ່ໂຮງຮຽນ. ເດີ່ນໂຮງຮຽນ/ອາຄານຮຽນຕ້ອງການສ້ອມແປງ. |

### 3. ການຈ້າງງານ

| ແຂວງ | ຊົນນະບົດ | ຕົວເມືອງ |
|---|---|---|
| ອັດຕະປື | ໄມ້ຂະຍຸງ, ການກໍ່ສ້າງ, ສວນ, ໂຮງງານຕັດຫຍິບ, ສວນຢາງ/ໄມ້ວິກ/ອ້ອຍ/ກາເຟ, ປະມົງ, S&B, ຮ່ອນຄໍາ. ຜູ້ເຄື່ອນຍ້າຍເຮັດວຽກຢູ່ປາກຊ່ອງ, ເຮັດວຽກເປັນ *ແມ່ບ້ານ*[122] ຢູ່ປະເທດໄປ, ວຽກກໍ່ສ້າງຢູ່ພາກພື້ນ. ອາດຖືກຄ້າມະນຸດ ຫຼື ໄປແບບຜິດກົດໝາຍ. ໄດ້ຮັບຄ່າຈ້າງ 20,000 ຫາ 30,000 ກີບ/ວັນ ເປັນຄົນເສີບ, ໄດ້ເງິນເດືອນ 600,000-800,000 ກີບ ຕໍ່ເດືອນຢູ່ສ່ວນກາເຟ. ຜູ້ເຄື່ອນຍ້າຍບາງຄົນກັບຄືນບ້ານເພື່ອເຮັດການປູກຝັງ. ບາງຄົນກັບບ້ານເປັນຄົນຕິດຢາ. ແຮງງານການປູກຝັງຕາມລະດູການແມ່ນເຫັນຢູ່ທົ່ວໄປ, ປູກເຂົ້າ, ຕົກກ້າ, ເກັບກ່ຽວ. ຜູ້ຊາຍສາມາດຊອກວຽກໜັກໄດ້, ແມ່ຍິງຫາວຽກປະເພດອື່ນໄດ້ງ່າຍກວ່າ. ມີຄວາມຕ້ອງການໂຮງງານຫຼາຍຂຶ້ນ (ຕັດຫຍິບ, ດິນຈີ່, ໂຮງເລື່ອຍ), ການບໍລິການຕ່າງໆ ເປັນ ປໍ້ານໍ້າມັນ, ບໍລິສັດຂົນສົ່ງ. | ບໍ່ມີເຂດຕົວເມືອງ |

122 ແມ່ບ້ານ:

| | | |
|---|---|---|
| ຫຼວງພະບາງ | ຂາຍຜະລິດຕະພັນປ່າໄມ້, ໝາກແໜ່ງ (Cardamom), ໜໍ່ໄມ້ ແລະ ຫວາຍ. ເຮັດວຽກຢູ່ໃນ S&B. ເດັກຊາຍເຮັດວຽກກໍ່ສ້າງ ແລະ ເດັກໜຸ່ມຊອກວຽກຂົນວັດຖຸກໍ່ສ້າງຢູ່ສະຖານທີ່ກໍ່ສ້າງ. ໂຮງງານຕັດຫຍິບ, ວຽກກຳມະກອນ ແລະ ວຽກງານອາຫານ. ບາງຄົນກໍ່ໄປຕ່າງປະເທດ ໂດຍສະເພາະປະເທດໄທ ແລະ ໄປເຮັດວຽກຢູ່ວຽງຈັນ, ສະຫວັນນະເຂດ, ໄຊຍະບຸລີ, ປາກເຊ, ອັດຕະປື, ກັບຄືນສະເພາະ "ລາວສູງ" (ປີ ໃໝ່ມົ້ງ). ເງິນເດືອນສູງເຖິງ 1 ລ້ານ ກີບຕໍ່ເດືອນສຳລັບຜູ້ຊາຍທີ່ເຮັດວຽກກໍ່ສ້າງ, ເດັກຍິງໄດ້ເງິນເດືອນໜ້ອຍກວ່າຢູ່ໂຮງຈັກໂຮງງານ (300,000 ກີບ/ເດືອນ).  ອາດມີການຄ້າມະນຸດ ແລະ ແຮງງານເດັກ. ການຫວ່າງງານເປັນຜົນມາຈາກການບໍ່ຮູ້ໜັງສື, ສ່ວນໃຫຍ່ຜູ້ຊາຍ. | ເຮັດວຽກຢູ່ບ້ານປະກອບດ້ວຍການຊ່ວຍພໍ່ແມ່ ແລະ ເຮັດວຽກຢູ່ງານດອງ, ເສີບອາຫານ ແລະ ທຳຄວາມສະອາດ. ໂຮງງານນ້ຳດື່ມ, ໂຮງງານເຟີນິເຈີ, ວຽກຮ້ານອາຫານ ແລະ ວຽກແປງລົດກໍ່ມີສຳລັບເດັກຊາຍ. "ເດັກຍິງສ່ວນໃຫຍ່ໄປໄທ". ການຄ້າມະນຸດ ແລະ ຂາຍບໍລິການທາງເພດພາຍໃນ ແລະ ຢູ່ປະເທດໄປ, ລວມທັງກາຍເປັນ "ເມຍນ້ອຍ" ທີ່ໄດ້ຄ່າຕອບແທນດີ ຊຶ່ງເປັນຄວາມສ່ຽງສຳລັບເດັກຍິງ. ກຳມະກອນໄດ້ເງິນເດືອນຕ່ຳ ປະມານ 300,000-700,000 ກີບ ຕໍ່ເດືອນ, ຜູ້ເຮັດວຽກຢູ່ໂຮງແຮມໄດ້ເງິນຫຼາຍກວ່າ (900,000-1 ລ້ານ ກີບ/ເດືອນ) ແລະ ຜູ້ນຳທ່ຽວໄດ້ເງິນເດືອນ ເຖິງ 1.4 ລ້ານ ກີບ/ເດືອນ: "ຄວາມຮູ້ຕ່ຳ=ເງິນເດືອນຕ່ຳ". ຄູບໍ່ໄດ້ຮັບເງິນເດືອນຕົງເວລາ. ວຽກທີ່ມີຢູ່ໃນຕະຫຼາດ, ຂາຍຂອງ, ຢູ່ຮ້ານອາຫານ, ວຽກກໍ່ສ້າງ ແລະ ຢູ່ສວນປູກ. ແມ່ຍິງ "ບໍ່ມີຄວາມຮູ້", ເວົ້າພາສາຕ່າງປະເທດບໍ່ໄດ້, ຮຽນບໍ່ຈົບ ແລະ ບໍ່ມີເສັ້ນ. ບາງຄົນຕິດ ພຕພ ແລະ ມີລູກຊຶ່ງເຂົາເຈົ້າທີ່ເປັນພໍ່ແມ່ເພື່ອລ້ຽງລູກ. ຊາວໜຸ່ມທີ່ມີອາຍຸແນ່ກໍ່ພະຍາຍາມຊອກວຽກທີ່ສອດຄ່ອງກັບສິ່ງທີ່ເຂົາເຈົ້າໄດ້ຮຽນມາ, ເຖິງແມ່ນມີການສຶກສາສູງ. "ຂ້ອຍຮຽນເປັນນາຍບັນຊີ, ແຕ່ວຽກທີ່ຂ້ອຍໄດ້ແມ່ນແມ່ບ້ານ". ສ່ວນຫຼາຍເດັກຍິງມີຄວາມຫຍຸ້ງຍາກຫຼາຍກວ່າໃນການຊອກວຽກ. |
| ສະຫວັນນະເຂດ | ຫາກະປູ ແລະ ໜໍ່ໄມ້, ປາ, ຕ່ຳຫູກ, ລ້ຽງເປັດ, ໄກ່, ໝູ ແລະ ຄວາຍ, ສວນ ແລະ ຕັກນ້ຳ ແລະ ເອົາຟືນເພື່ອມາແຕ່ງກິນ. ວຽກທັງໝົດທີ່ບໍ່ໄດ້ຄ່າຕອບແທນຢູ່ບ້ານເພື່ອສະໜັບສະໜູນຄອບຄົວ. ບາງຄັ້ງ ຊາວບ້ານຕ້ອງການການຊ່ວຍເຫຼືອ ແລະ ໄດ້ຄ່າຈ້າງ 30,000 ກີບ ຕໍ່ວັນສຳລັບກຳມະກອນ ເພື່ອຊ່ວຍ S&B. ວຽກກໍ່ສ້າງ ແລະ ປຸກເຮືອນຈຳນວນໜຶ່ງຢູ່ບ້ານອາດໄດ້ຮັບຄ່າຈ້າງແຕ່ໂດຍທົ່ວໄປແລ້ວວຽກແມ່ນການຊ່ວຍຄົນອື່ນໃນບ້ານແຕ່ບໍ່ມີລາຍຮັບ. ຊາວໜຸ່ມບໍ່ໄດ້ມີວຽກທີ່ໄດ້ຄ່າຕອບແທນຢູ່ໃນເຂດນີ້. | ຊາວໜຸ່ມຊ່ວຍຄອບຄົວໃນບໍລິເວນບ້ານ, ແຕ່ຍັງພົວພັນກັບການຂາຍຢາເສບຕິດ. ວຽກທີ່ໄດ້ຄ່າຕອບແທນແມ່ນມີໃນການກໍ່ສ້າງສຳລັບຊາວໜຸ່ມສູງອາຍຸ, ໃນການສ້ອມແປງລົດ ແລະ ໂຮງງານເຟີນິເຈີ. ວຽກຮ້ານອາຫານສຳລັບເດັກຍິງ ແລະ ເດັກຊາຍ. ຢູ່ມຸກດາຫານປະເທດໄທ ແລະ ປາຍທາງອື່ນ ບ່ອນທີ່ຍາດພີ່ນ້ອງຕ້ອງການເຂົາເຈົ້າ (ເຊັ່ນຢູ່ ປະເທດການາດາ, ຝຣັ່ງເສດ, ມາເລເຊຍ) ໄດ້ຖືກກ່າວເຖິງວ່າເປັນປາຍທາງສຳລັບແຮງງານເຄື່ອນຍ້າຍເພາະມີຄ່າຈ້າງສູງ ແລະ ໂອກາດທີ່ຈະເດີນທາງ ແລະ ປະສົບການໃນການພັດທະນາຢູ່ບ່ອນອື່ນ.  ກຳມະກອນ, ລູກເຮືອອາດເປັນອາຊີບສຳລັບເດັກຊາຍ ແລະ ມັນມີຄວາມງ່າຍດາຍສຳລັບເຂົາເຈົ້າເພື່ອຊອກວຽກກວ່າເດັກຍິງ. ການຄ້າມະນຸດ ໄປຍັງປະເທດໄທເພື່ອເຮັດວຽກຢູ່ຮ້ານອົບນວດ ແລະ ສະປາແມ່ນມີຄວາມສ່ຽງສຳລັບແມ່ຍິງ. ເຮັດວຽກເປັນສາວເບຍ [ມັກຈະໄດ້ຮັບສະເໜີໃຫ້ມີການບໍລິການທາງເພດ]. ເດັກໜຸ່ມອາດເປັນກຳມະກອນທີ່ມີການມັດຈຳແຮງງານຢູ່ໃນເຮືອປະມົງ. ເຮັດວຽກຢູ່ ITECC, casino, ໂຮງງານຕ່າງໆ ລວມທັງໂຮງງານຜະລິດກ້ອງ, ໂຮງງານຕັດຫຍິບ, ໂຮງງານຢາສູບ ແລະ ຂາຍເຄື່ອງຢູ່ຕະຫຼາດ ທີ່ມີຊາວໜຸ່ມອາຍຸພຽງ 16 ປີ.  ແມ່ຍິງອາດກາຍເປັນທ່ານໝໍ ແລະ ຄູອາຈານ ຫລື ເຮັດວຽກເປັນພະນັກງານລັດ. ເດັກຍິງອາຍຸ 15-19 ປີ ເຊື່ອວ່າວຽກທ້ອງການສ່ວນຫຼາຍແມ່ນວຽກຂອງຜູ້ຊາຍ. ການສູນເສຍຊາວໜຸ່ມຢູ່ໃນບ້ານເຂົ້າໃຈວ່າເປັນທາງລົບ, ຍ້ອນຂາດກຳລັງແຮງງານ ແລະ ສູນເສຍວັດທະນະທຳລາວຈາກບ້ານ. ຍາກທີ່ຈະໄດ້ວຽກຖ້າຫາກບໍ່ໄດ້ຈ່າຍເງິນ ຫຼື ມີເສັ້ນສາຍ ແລະ ເພາະມີລະດັບການສຶກສາຕ່ຳ. |

## 4. ການປົກປ້ອງ ແລະ ຄວາມອ່ອນແອ

| ແຂວງ | ຊົນນະບົດ | ຕົວເມືອງ |
|---|---|---|
| ອັດຕະປື | ຂີ້ລັກ ແລະ ການໃຊ້ຄວາມຮຸນແຮງຕິດພັນກັບການໃຊ້ຢາບ້າ. ລັກທໍ່ນໍ້າປະປາ, ສາຍໄຟຟ້າ, ເຖິງແມ່ນເກີບໃສ່. ນອກຈາກຕີສະມາຊິກຄອບຄົວເພື່ອຂູດເອົາເງິນຈາກເຂົາເຈົ້າ, ມີການໃຊ້ຄວາມຮຸນແຮງໜ້ອຍ. ພາຍໃນຄອບຄົວ, ການລ່ວງລະເມີດທາງຮ່າງກາຍ ແລະ ວາຈາໄດ້ຖືກຈັບຕາຢ່າງແຕກຕ່າງຈາກການໃຊ້ຄວາມຮຸນແຮງອື່ນ, "ມັນເປັນເລື່ອງປົກກະຕິ", "ມັນເກີດຂຶ້ນຢູ່ໃນຄອບຄົວ". ການຕີກັນລະຫວ່າງຜົວ-ເມຍ, ການລ່ວງລະເມີດທາງຮ່າງກາຍຂອງລູກຊາວໜຸ່ມທຸກຄົນຕ່າງກໍ່ໄດ້ກ່າວເຖິງ. ຢູ່ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງ, ການດື່ມເຫຼົ້າໃນຍາມບຸນເຮັດໃຫ້ມີການຕີກັນ. ການລົງໂທດເລີ່ມຈາກການສຶກສາອົບຮົມຈົນເຖິງຈໍາຄຸກ.  ຊາວໜຸ່ມພິການໄດ້ຮັບການສະໜັບສະໜູນຢູ່ບ້ານຊົນນະບົດທີ່ບໍ່ມີເສັ້ນທາງ ໂດຍການຊ່ວຍເຂົາເຈົ້າໃຫ້ເຂົາເຖິງການດູແລສຸຂະພາບ, ໃຫ້ເຂົ້າ ແລະ ເຄື່ອງນຸ່ງຮົ່ມ ແລະ ອາບນໍ້າໃຫ້ເຂົາເຈົ້າ. ໝູ່ບ້ານຊົນນະບົດໄດ້ລາຍງານວ່າ ຄົນທີ່ພິການທາງຮ່າງກາຍ, "ບໍ່ມີໃຜຊ່ວຍເຂົາເຈົ້າ". ເຂດຊົນນະບົດທີ່ມີເສັ້ນທາງເວົ້າເຖິງການຄາດຕະກໍາອັນໜຶ່ງ, ໃນຂະນະທີ່ປະສົບການຂອງເຂດຊົນນະບົດທີ່ບໍ່ມີເສັ້ນທາງລາຍງານຄວາມປອດໄພ ແລະ ລາຍງານວ່າບໍ່ມີການຄາດຕະກໍາ. | ບໍ່ມີເຂດຕົວເມືອງ |
| ຫຼວງພະບາງ | "ມີຄວາມວຸ້ນວາຍໃນລະຫວ່າງງານດອງ", ເຫຼົ້າ, ເວົ້າໃສ່ກັນ ແລະ ບໍ່ມີຄວາມເປັນເອກະພາບກັນລະຫວ່າງຄອບຄົວ. ມີການຕີກັນລະຫວ່າງໄວໜຸ່ມອາຍຸ 10-14 ປີ. ການດື່ມເຫຼົ້າ ແລະ ຂັບລົດເປັນສາຍເຫດໃຫ້ເກີດອຸບັດເຫດ ແລະ ເກີດມີລະເບີດທີ່ບໍ່ທັນແຕກດັງຂຶ້ນ. ອໍານາດການປົກຄອງບ້ານປັບໃໝສູງເຖິງ "ຄວາຍໜຶ່ງໂຕ" ແລະ ໃຫ້ຄໍາປຶກສາ. "ເມື່ອເຂົ້າເຈົ້າບໍ່ຖືກກັນ, ທ່ານຈໍາເປັນຕ້ອງໄດ້ລົມກັບເຂົາ" ຄວາມຮັບຜິດຊອບສໍາລັບການໄກ່ເກັ່ຍຂຶ້ນຢູ່ກັບ "ນາຍບ້ານ ແລະ ແນວລາວ". | ຊາວໜຸ່ມພົວພັນກັບການຕີກັນ, ຄາດຕະກໍາ, ການຄ້າຢາເສບຕິດ. ຂໍ້ຂັດແຍ່ງທີ່ໃຊ້ຄວາມຮຸນແຮງກັບຕໍາຫຼວດ. "ກຸ່ມໄວໜຸ່ມອາຍຸ 14-15 ປີ ຕັ້ງແກັງ ແລະ ຈາກນັ້ນ ຂາຍ ແລະ ສົ່ງຢາເສບຕິດ". ຂີ້ລັກງັດແງະ ແລະ ການໃຊ້ຄວາມຮຸນແຮງພົວພັນກັບການໃຊ້ຢາເສບຕິດ ແລະ ການດົມກາວ. "ເພາະເຂົາເຈົ້າມື້ວສູບຢາບ້າ". ການແຂ່ງລົດຈັກສ້າງຄວາມລົບກວນ ແລະ ສ່ຽງຕໍ່ການບາດເຈັບ. "ບາງຄົນພິການຈາກອາການບາດເຈັບ". ການຂົ່ມຂືນ, ລັກພາຕົວ ແລະ "ການຂູດຮີດ" ເກີດຂຶ້ນ. ການລົງໂທດບາງຄັ້ງກໍ່ຮ້າຍແຮງ. "ນາຍຄູຕີ ແລະ ບິດຫູເຂົາເຈົ້າ". ຊາວໜຸ່ມຕ້ອງການຄວາມຮັບຜິດຊອບຈາກເຈົ້າໜ້າທີ່. "ຖ້າຫາກບາງຄົນລັກກະເປົາຂອງທ່ານ, ຕໍາຫຼວດຈະຈັບເຂົາເຈົ້າ, ແຕ່ເຂົາເຈົ້າໃຫ້ສິນບົນຕໍາຫຼວດ ແລະ ຕໍາຫຼວດກໍປ່ອຍເຂົາໄປ". ເກີດມີການຄ້າຜູ້ຂາຍບໍລິການທາງເພດ. |
| ສະຫວັນນະເຂດ | ໂດຍຕົ້ນຕໍແມ່ນລັກອາຫານເພື່ອເອົາຊີວິດລອດ ຫຼື ເພື່ອເອົາໄປຂາຍເພື່ອໄດ້ເງິນເພື່ອມີຊີວິດລອດ. "ບາງຄົນລັກໝາກນັດໄປຂາຍ, ລັກໄກ່, ລັກເຂົ້າ"; "ລັກເພາະຄອບຄົວທຸກຍາກ, ລັກໄກ່, ລັກໝູ, ເປີດປະຕູບ້ານ ແລະ ເຂົ້າໄປ ແລະ ເຂົາເຈົ້າເອົາເຂົ້າ" ໃນບາງກໍລະນີ, ການໃຊ້ຢາເສບຕິດພາໃຫ້ລັກ "ຄົນດັ່ງກ່າວແມ່ນຜີສາດຢາເສບຕິດ, ຄົນຕິດຢາບ້າ ຫຼື ຝິ່ນ. ເຂົາເຈົ້າລັກໄກ່ ແລະ ເປັດ". ການດູຖູກກັນ ແລະ ຕີກັນລະຫວ່າງຜົວ-ເມຍ ແລະ ລະຫວ່າງເດັກນ້ອຍ. "ບາງຄອບຄົວທຸກຍາກ ແລະ ມີຄວາມຮຸນແຮງໃນຄອບຄົວ" ໃຊ້ຢາບ້າ, ດົມກາວ ແລະ "ເປັນໄຂ້" ແມ່ນເຫດຜົນສໍາລັບຄວາມຮຸນແຮງທີ່ໄດ້ກ່າວໄວ້. ການລົງໂທດ, ການແກ້ໄຂໂດຍຜ່ານພິທີບາສີ, ໂດຍມີການນໍາໃຊ້ລະບົບກົດໝາຍເມື່ອຈໍາເປັນ. ອໍານາດການປົກຄອງເມືອງມີສ່ວນຮ່ວມເມື່ອມີອາສະຍາກໍາຮ້າຍແຮງ. ແນວຄວາມຄິດທີ່ວ່າຕໍາຫຼວດ "ບໍ່ເຮັດຫຍັງໃຫ້ເຂົາເຈົ້າ [ຄົນຂີ້ລັກ] ພຽງແຕ່ຮ້ອງໃສ່". ຊາວໜຸ່ມຮູ້ສຶກເສຍຄວາມປອດໄພເພາະການຕີ ແລະ ຜູ້ຄ້າຢາ. ຊາວໜຸ່ມພິການໄດ້ຮັບການຊ່ວຍເຫຼືອຈາກຄົນອື່ນ. "ຍາກເພາະຄົນດັ່ງກ່າວຕາບອດ, ບໍ່ສາມາດໄປໃສໄດ້, ຕ້ອງການຄວາມຊ່ວຍເຫຼືອຈາກຄົນອື່ນ". | ການງັດແງະ ແລະ ດຶງກະເປົ໋າໂດຍຜູ້ຕິດຢາເສບຕິດ. ຈີ້ດ້ວຍມີດ. ເດັກຊາຍອາຍຸ 16 ປີ ລັກໝາກໄມ້, ໄກ່ ແລະ ເປັດ. ອາຍຸ 17-18 ປີ ສູບຊາ, ດົມກາວ ແລະ ລັກ. ການດື່ມເຫຼົ້າກໍ່ນໍາພາໄປສູ່ການລັກ. ທັງຍິງ ແລະ ຊາຍ ອາດມີໜີ້ຈາກການພະນັກ ແລະ ຫຼິ້ນໄພ້. ການຂົ່ມຂືນ, ການຄ້າມະນຸດກໍ່ໄດ້ເວົ້າເຖິງ. ການຕີກັນລະຫວ່າງຊາວໜຸ່ມ, ບາງຄັ້ງໃຊ້ມີດ. ຊາວໜຸ່ມຊັກຊວນນາຍບ້ານ ແລະ ການມີສ່ວນຮ່ວມຂອງພໍ່ແມ່ເພື່ອແກ້ໄຂການໃຊ້ຄວາມຮຸນແຮງ. "ສູ່ຂວັນ" ເປັນພິທີກໍາຂອງການຂໍໂທດ. ການປັບໃໝ. "ໃໝເຂົາເຈົ້າ ແລະ ຖ້າບໍ່ມີການປັບປຸງ, ສົ່ງເຂົາເຈົ້າໃຫ້ກຸ່ມບ້ານ [ເມືອງ]". ຊາວໜຸ່ມ (ເດັກຍິງ) ຮູ້ສຶກໄດ້ຮັບການຂົ່ມຂູ່ຈາກແກັງ ແລະ ຄົນຂີ້ລັກ. "ບໍ່ປອດໄພ, ມີການຕີກັນ, ຍິງກັນ, ດູຖູກຊາວໜຸ່ມທີ່ຕິດຢາ ແລະ ຄົນທີ່ເຮັດສິ່ງຜິດກົດໝາຍ". ເພດຊາຍ ອາຍຸ 20-24 ປີ ກ່າວ. |

## 5. ການມີສ່ວນຮ່ວມ

| ແຂວງ | ຊົນນະບົດ | ຕົວເມືອງ |
| --- | --- | --- |
| ອັດຕະປື | ຊາວໜຸ່ມຕີຄວາມໝາຍການມີສ່ວນຮ່ວມເປັນວຽກທີ່ເຂົ້າເຈົ້າໄດ້ເຮັດໃຫ້ບ້ານ. "ພວກເຮົາເຮັດວຽກທີ່ພັກ ແລະ ລັດຖະບານບອກພວກເຮົາ, ລວມທັງ ເຮັດຮົ້ວໃຫ້ໂຮງໝໍ". ວຽກອາສາສະໝັກອື່ນໆກວມເອົາການສ້ອມແປງເສັ້ນທາງ, ຊ່ວຍປະຊາຊົນຍ້າຍເຮືອນ, ປຸກເຮືອນ ແລະ ຊ່ວຍເມື່ອມີຄົນເສຍຊີວິດ.  ຊາວໜຸ່ມໄດ້ເຮັດອາຫານ ແລະ ໜື້ງເຂົ້າເພື່ອລ້ຽງຍາດພີ່ນ້ອງຂອງຜູ້ຕາຍ. ຊາວໜຸ່ມຊ່ວຍງານບຸນຕ່າງໆ ແລະ ປ່ອຍເຮືອໄຟຢູ່ໃນແມ່ນ້ຳ. ວຽກງານມີລັກສະນະເດັ່ນສຳລັບເພດຍິງ ແລະ ຊາຍ. ເດັກຍິງໜື້ງເຂົ້າ; ແລະ ເດັກຊາຍເຮັດວຽກໜັກທາງກາຍະພາບ ເຊັ່ນ ແບກໄມ້ເພື່ອເອົາມາເຮັດຮົ້ວ, ກໍ່ສ້າງ, ສົມຊີມັງ. ເດັກໜຸ່ມມີສ່ວນຮ່ວມໃນການຂ້າສັດເພື່ອເປັນອາຫານ. "ເດັກຍິງຈະເຮັດວຽກເບົາ, ເດັກຊາຍຈະເຮັດວຽກໜັກ". ຊາວໜຸ່ມຈາກເຂດຊົນນະບົດທີ່ບໍ່ມີເສັ້ນທາງ ສຸມໃສ່ປັບປຸງຊີວິດຂອງເຂົາເຈົ້າສຳລັບອະນາຄົດ, ໂດຍຜ່ານການສຶກສາ ແລະ ການເປັນຕົວຢ່າງທີ່ດີ. ຊາວໜຸ່ມຊົນນະບົດສຸມໃສ່ການຫຼີກຈາກເມົາ ແລະ ຂັບ ແລະ ການຕີກັນ. ຄວາມສາມັກຄີ ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນແມ່ນມີຄວາມສຳຄັນຕໍ່ກັບຊຸມຊົນຊົນນະບົດ. ຊາວໜຸ່ມຮູ້ສຶກວ່າເຂົາເຈົ້າມີສ່ວນຮ່ວມໃນກິດຈະກຳວາງແຜນຈຳນວນໜຶ່ງ, ແຕ່ບໍ່ໄດ້ມີສ່ວນຮ່ວມໃນການແກ້ໄຂບັນຫາ. ສຳລັບອະນາຄົດ, ຊາວໜຸ່ມຊົນນະບົດຫວັງທີ່ຈະໄດ້ຮັບການພັດທະນາ, ເຊັ່ນ ອາຄານຕ່າງໆ (ທີ່ມີ "ຂັ້ນໃດເລື່ອນ", ຂົວ "ຂ້າມນ້ຳເຊ", ໂຮງສີເຂົ້າ ແລະ ຮ້ານອາຫານ. | ບໍ່ມີເຂດຕົວເມືອງ |
| ຫຼວງພະບາງ | "ແຕ່ລະຄົນຊ່ວຍກັນໃນຍາມເທດສະການ", ເພດຍິງ ອາຍຸ 10-14 ປີ, ແຕ່ງງານ, ທຳຄວາມສະອາດ, ຕັດຫຍ້າ, ກ່ຽວເຂົ້າ. ເດັກຊາຍຂ້າໝູ, ຊ່ວຍໃນການສ້າງເຮືອນ. "ເດັກຊາຍເຮັດວຽກໜັກ, ເດັກຍິງເຮັດວຽກງ່າຍໆ" ເພດຊາຍອາຍຸ 15-19. ວຽກສ່ວນຫຼາຍໄດ້ເຮັດນຳກັນໃນຊ່ວງ "ປີໃໝ່ Lao Soum". ເດັກຊາຍກໍ່ອາດ "ຊ່ວຍນາຍບ້ານຊອກຫາຄົນບໍ່ດີ" ຫຼື "ເກັບເງິນ" ເພດຊາຍ ອາຍຸ 15-19 ປີ. ເດັກຍິງຮູ້ສຶກວ່າເຂົາເຈົ້າປະກອບສ່ວນໂດຍການໃຫ້ແນວຄວາມຄິດ ແລະ ຂໍ້ສະເໜີແນະ. ເຂົາເຈົ້າກໍຍັງຮູ້ສຶກວ່າ "ເດັກຍິງເຮັດວຽກຫຼາຍກວ່າ", ເພດຍິງ ອາຍຸ 20-24 ປີ. ວຽກທີ່ເຂົາເຈົ້າເຮັດຮ່ວມກັນແມ່ນ "ສຳຄັນຫຼາຍ, ມັນສ້າງຄວາມສາມັກຄີ". ຊາວໜຸ່ມຊົນນະບົດຫວັງວ່າເຂົາເຈົ້າຈະມີ ໄຟຟ້າ ແລະ ນ້ຳປະປາ ແລະ ເຂົາເຈົ້າຈະສາມາດຊ່ວຍໃນການສ້າງໂຮງຮຽນ. ການມີສ່ວນຮ່ວມແມ່ນມີຄວາມສຳຄັນສຳລັບເຂົາເຈົ້າ, ເຂົາເຈົ້າມີຄວາມຕ້ອງການທີ່ແຮງກ້າໃນການຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ເຮັດວຽກຮ່ວມກັນ. "ການຊ່ວຍເຫຼືອແມ່ນດີທີ່ສຸດເມື່ອພວກເຮົາຮັກກັນ". ກຸ່ມດັ່ງກ່າວນີ້ມີການສະແດງອອກຂອງຄວາມຕ້ອງການທີ່ແຮງກ້າທີ່ສຸດ ສຳລັບຄວາມສາມັກຄີ ວ່າເປັນການສະແດງອອກເຖິງນ້ຳໃຈຂອງຊຸມຊົນ ແລະ ການມີສ່ວນຮ່ວມ. ເດັກຊາຍກໍ່ອາດມີຄວາມຕ້ອງການຢ່າງແຮງກ້າເພື່ອພັດທະນາຕົນເອງ "ພວກເຮົາຕ້ອງພັດທະນາຕົນເອງ", "ພວກເຮົາຢາກມີຄວາມຮູ້ ແລະ ສະຫຼາດ" ເພດຍິງ ອາຍຸ 15-19 ປີ. ເດັກຍິງເນັ້ນການຟັງຄວາມ, ເຄົາລົບພໍ່ແມ່, ການເປັນຕົວຢ່າງທີ່ດີ. | ໃນຊ່ວງງານບຸນ, ເດັກຊາຍເຮັດວຽກປ້ອງກັນ ແລະ ກາງໂຕະ ແລະ ຕັ່ງ, ເສີບນ້ຳ ແລະ ນ້ຳກ້ອນ. ເດັກຍິງຢືນຢູ່ທາງໜ້າເພື່ອທັກທາຍແຂກ. ໃນໄລຍະບຸນຊ່ວງເຮືອ, ເຂົາເຈົ້າຫາມເຮືອລົງແມ່ນ້ຳ ແລະ ປະດັບດ້ວຍໄຟ. ເມື່ອເມືອງຕ້ອງການອາສາສະໝັກຊາວໜຸ່ມ, ບ້ານກໍ່ຈະສົ່ງເຂົາເຈົ້າໄປ. ການມີສ່ວນຮ່ວມ "ສ້າງຄວາມສາມັກຄີພາຍໃນ". ຊາວໜຸ່ມຢູ່ໃນເມືອງນີ້ຫວັງຖ້າໂອກາດທີ່ຈະສະແດງອອກເຖິງສິ່ງທີ່ເຂົາເຈົ້າສາມາດ. ເຂົາເຈົ້າຮັບຮູ້ວ່າໂດຍຜ່ານການມີສ່ວນຮ່ວມ, ເຂົາເຈົ້າມີໂອກາດທີ່ຈະເຮັດ ແລະ ຮຽນຮູ້ໃນເວລາດຽວກັນ.  ຊາວໜຸ່ມຊອກຫາໂອກາດທີ່ເທົ່າທຽມກັນສຳລັບການຮຽນຮູ້ ແລະ ເສລີພາບຈາກການຈຳແນກ. ເດັກຍິງ ອາຍຸ 15-19 ປີ ເສຍໃຈສຳລັບການປ່ຽນແປງໃນວັດທະນະທຳຂອງເຂົາເຈົ້າ ແລະ ການສູນເສຍມໍລະດົກຂອງຊາດລາວ. "ທຸກຄົນມີຊີ່ງຜົມໃນຮູບແບບເກົາຫຼີ" ເພດຍິງອາຍຸ 15-19 ປີ ກ່າວ. ສຳລັບອະນາຄົດ, ຊາວໜຸ່ມທີ່ມີອາຍຸ 20-24 ປີ ຕ້ອງການສະໜາມກິລາທີ່ປອດຢາເສບຕິດ, ໂອກາດທີ່ຈະມີການແຂ່ງຂັນຮ້ອງເພັງ ແລະ ຄວາມຮູ້. ເຂົາເຈົ້າຕ້ອງການກອງທຶນບ້ານສຳລັບຊາວໜຸ່ມ, ເພື່ອວ່າເຂົາເຈົ້າສາມາດເລີ່ມທຸລະກິດ. ເຂົາເຈົ້າຮູ້ສຶກບໍ່ໄດ້ມີການເປັນຕົວແທນເທົ່າທີ່ຄວນຈາກຫົວໜ້າຊາວໜຸ່ມ. "ນາຍບ້ານຕັດສິນໃຈ, ເລຂາຊາວໜຸ່ມບໍ່ກ້າຕັດສິນໃຈ". |

| | | |
|---|---|---|
| ສະຫວັນນະເຂດ | ຊາວໜຸ່ມຕອບສະໜອງຕໍ່ກັບແຮງງານຂອງຊຸມຊົນ, ເກັບສິ່ງເສດເຫຼືອ, ບຸກເບີກດິນ, ຕັດຫຍ້າ, ກໍ່ສ້າງໂຮງຮຽນ ແລະ ຊ່ວຍເຫຼືອກັນເພື່ອມີຄົນເສຍຊີວິດ. ຄວາມສາມັກຄີຂອງຊາວໜຸ່ມແມ່ນມີຄວາມສຳຄັນໃນການເຮັດສຳເລັດວຽກທີ່ຈຳເປັນຢູ່ໃນບ້ານ. "ເພາະນາຍບ້ານເຮັດໃຫ້ມັນມີຄວາມສຳຄັນ, ພວກເຮົາໄດ້ຖືກສະເໜີໃຫ້ເຂົ້າຮ່ວມ". | ການຂົນຂວາຍດ້ານອະນາໄມ ແລະ ການຕັດຫຍ້າ, ການເຮັດວຽກໃນຍາມບຸນ, ເກັບຂີ້ເຫຍື້ອ, ຮັບໃຊ້ງານດອງ ແລະ ເມື່ອມີຄົນເສຍຊີວິດ. ການມີສ່ວນຮ່ວມແມ່ນວິທີທີ່ເຂົາເຈົ້າປົກປ້ອງບ້ານ ແລະ ສິ່ງແວດລ້ອມຂອງເຂົາເຈົ້າ "ຈົ່ງໃຫ້ຜູ້ໃຫຍ່ເຫັນພວກເຮົາ". ໃນອະນາຄົດ, ພວກເຂົາຫວັງຢາກໃຫ້ມີການບັງຄັບປະຕິບັດກ່ຽວກັບຢາເສບຕິດເຂັ້ມຂຸ້ນຫຼາຍຂຶ້ນ, ຫ້າມການມີເພດສຳພັນກ່ອນການແຕ່ງງານ ແລະ ການມີສ່ວນຮ່ວມຫຼາຍຂຶ້ນຢູ່ໃນບ້ານ. |

### 6. ສະຫຼຸບແບ່ງຕາມກຸ່ມ ແລະ ຂົງເຂດພູມສັນຖານ/ທີ່ຢູ່ອາໃສ

| ພໍ່ແມ່ ແລະ ອຳນາດການປົກຄອງ | |
|---|---|
| **ເຂດ ຊົນນະບົດ ທີ່ບໍ່ມີ ເສັ້ນທາງ** | • ສະໜັບສະໜູນການແຕ່ງງານແຕ່ຍັງໜຸ່ມນ້ອຍ<br>• ຄວາມເປັນຫ່ວງກ່ຽວກັບ ມາເລເຣຍ ແລະ ຄວາມສ່ຽງອື່ນຂອງການເຮັດວຽກຢູ່ໃນປ່າ<br>• ຈິດສຳພນຶກກ່ຽວກັບ ຍຸດທະສາດດ້ານສຸຂະພາບ/ອະນາໄມ<br>• ການກິນເຫຼົ້າແມ່ນພຶດຕິກຳຄວາມສ່ຽງທີ່ພົບເຫັນທົ່ວໄປຫຼາຍທີ່ສຸດ<br>• ການເຂົ້າເຖິງການດູແລສຸຂະພາບມີຄວາມຫຍຸ້ງຍາກເພາະໄລຍະທາງ ແລະ ຄ່າໃຊ້ຈ່າຍ<br>• ອຸປະສັກໃນການສື່ສານເນື່ອງຈາກທັກສະດ້ານພາສາ ສຳລັບ ຊົນເຜົ່າບາງກຸ່ມ<br>• ອັດຕາການສຶກສາຕ່ຳສຳລັດເດັກນ້ອຍ, "ເພາະເຂົາເຈົ້າໄປຕາມພໍ່ແມ່ຂອງເຂົາ"<br>• ພັນທະຕໍ່ຄອບຄົວຂັດເຂື່ອນອະນາຄົດຂອງຊາວໜຸ່ມ<br>• ຄວາມຕ້ອງການທີ່ຈຳກັດສຳລັບຊາວໜຸ່ມເພື່ອອອກຈາກບ້ານໄປຊອກຫາວຽກນອກ<br>• ເຫັນບົດບາດຂອງເຈົ້າໜ້າທີ່ເປັນຜູ້ໃຫ້ການສຶກສາ, ວິໃນ ແລະ ເປັນແບບຢ່າງ |
| **ຊົນນະບົດ** | • ຄິດວ່າຊາວໜຸ່ມບໍ່ໄດ້ຮັບສຸຂະສຶກສາພຽງພໍ, ເຖິງແມ່ນໄດ້ຮຽນຮູ້ທີ່ໂຮງຮຽນ<br>• ອາໃສໂທລະພາບ ສຳລັບການຮຽນຮູ້ ແຕ່ການເຂົ້າເຖິງໂທລະພາບຍັງຈຳກັດ/ຍັງບໍ່ມີ<br>• ໄລຍະທາງຫາໂຮງຮຽນ, ຄ່າໃຊ້ຈ່າຍໃນການຮຽນ ແລະ ເຄື່ອງນຸ່ງຮົ່ມ ເປັນຕົວຂັບເຂື່ອນອັດຕາການອອກໂຮງຮຽນ, ມັກເປັນການຕັດສິນໃຈຂອງພໍ່ແມ່<br>• ພັນທະຕໍ່ຄອບຄົວຍັງຈຳກັດຄວາມສາມາດເພື່ອໄດ້ຮັບການສຶກສາ<br>• ການອອກໂຮງຮຽນເພື່ອແຕ່ງງານແມ່ນເລື່ອງປົກກະຕິ ແລະ ຍອມຮັບໄດ້ສຳລັບເດັກຍິງ<br>• ແມ່ຍິງໜຸ່ມບາງຄົນຈະຊອກວຽກຢູ່ຮ້ານເສີມສວຍ ແລະ ຮ້ານອາຫານ ແຕ່ວຽກສ່ວນໃຫຍ່ແມ່ນຢູ່ໃນຂະແໜງກະສິກຳ ຫຼື ປູກຝັງ.<br>• ເຄື່ອນຍ້າຍໄປປະເທດ ຫວຽດນາມ, ປະເທດໄທ.<br>• ແຮງງານເດັກແມ່ນເລື່ອງປົກກະຕິ (ອາຍຸ 10+), ແລະ ຍອມຮັບໄດ້ ເພາະວ່າຄອບຄົວທຸກຍາກ ແລະ ວຽກທັງໝົດເພື່ອຊ່ວຍສະໜັບສະໜູນຄອບຄົວ<br>• ພໍ່ແມ່ຄິດວ່າຄວນມີລະບຽບການວ່າຮ້ານອາຫານຄວນປິດຈັກໂມງ ແລະ ຊາວໜຸ່ມອາຍຸຈັກປີຈຶ່ງສາມາດເຂົ້າສະຖານທີ່ບັນເທີງໄດ້, ເຊັ່ນ ດິສໂກ້.<br>• ການລ່ວງລະເມີດລະຫວ່າງຄູ່ສົມລົດ, ການລ່ວງລະເມີດທາງຮ່າງກາຍຂອງຊາວໜຸ່ມ, ການລ່ວງລະເມີດທາງວາຈາ ແມ່ນຖືກຫ້າມ<br>• ເຊື່ອວ່າເຈົ້າໜ້າທີ່ມີບົດບາດໃນທາງວິໃນ, ໃນນາມເປັນຜູ້ໃຫ້ການສຶກສາ<br>• "ຊາວໜຸ່ມແມ່ນກະດູກສັນຫຼັງຂອງປະເທດ", ຕ້ອງການທີ່ຈະຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງຊາວໜຸ່ມ ແລະ ສ້າງມະໂນພາບໃຫ້ແກ່ຄວາມຕ້ອງການຂອງເຂົາເຈົ້າ |

| | |
|---|---|
| **ຕົວເມືອງ** | • ເຫັນຄວາມແຕກຕ່າງໃນຄວາມສາມາດທີ່ຈະມີອິດທິພົນຕໍ່ກຸ່ມອາຍຸໜ້ອຍທີ່ສຸດ. ອາຍຸ 15-19 ປີ ກຳລັງທົດລອງກັບຊີວິດ<br>• ເຊື່ອວ່າ ທາງເລືອກດ້ານການແຕ່ງກາຍ ແລະ ຊົງຜົມເປັນອຸປະສັກຕໍ່ວັດທະນະທຳລາວ<br>• ເປັນຮ່ວງກ່ຽວກັບການນຳໃຊ້ຢາເສບຕິດໃນເດັກນ້ອຍ, ການຖືພາແຕ່ອາຍຸຍັງນ້ອຍ, ການເອົາລູກອອກຢູ່ປະເທດໄທ ຫຼື ພາຍໃນປະເທດ, ເດັກຍິງເປັນ ພຕພ/HIV<br>• ອອກໂຮງຮຽນເພື່ອເຮັດ "ທຸລະກິດ" ຫລື ເພື່ອແຕ່ງງານ, ບໍ່ໜຸ່ມ ຫຼື ຖີ່ເທົ່າກັບປະຊາກອນໃນເຂດຊົນນະບົດ<br>• ສ່ວນໃຫຍ່ເດັກຊາຍທີ່ອອກໂຮງຮຽນ, ພົວພັນກັບຢາເສບຕິດ, ຕ້ອງການຈະເຮັດຕາມເພື່ອນ<br>• ແມ່ນແຕ່ກັບການສຶກສາມະຫາວິທະຍາໄລ, ຕ້ອງການເງິນເພື່ອຊອກວຽກ<br>• ອາໃສ "ເຈົ້າໜ້າທີ່" ໜ້ອຍລົງ, ອາໃສພໍ່ແມ່, ຄູອາຈານຫຼາຍຂຶ້ນ<br>• ເຮັດວຽກໃນໂຮງງານ, ເຮັດວຽກຢູ່ປະເທດໄທເປັນຜູ້ຂາຍບໍລິການທາງເພດ, ກຳມະກອນ<br>• ເບິ່ງຊາວໜຸ່ມລາວວ່າບໍ່ມີທັກສະ, ບໍ່ສາມາດເຮັດວຽກກ່ຽວກັບຊີມັງ, ບໍ່ສາມາດຂັບລົດ, ມີຄວາມສາມາດຈຳກັດທີ່ຈະຊອກວຽກເຮັດ<br>• ສະໜັບສະໜູນການຝຶກອົບຮົມວິຊາຊີບ<br>• ແຮງງານເດັກທີ່ມີຈຳກັດ<br>• ສົ່ງເສີມຊາວໜຸ່ມໃຫ້ມີທັກສະປະກອບການ, ເປີດທຸລະກິດ<br>• ເຊື່ອມໂຍງການໃຊ້ຄວາມຮຸນແຮງ ແລະ ອາສະຍາກຳໃສ່ການນຳໃຊ້ຢາເສບຕິດ<br>• ຢາກເຫັນຈຸດສຸມກ່ຽວກັບກິດຈະກຳຕ່າງໆ ເຊັ່ນ ການແຂ່ງຂັນດົນຕີ ແລະ ເຫດການອື່ນສຳລັບຊາວໜຸ່ມ<br>• ສະເໜີແນະຈຸດສຸມທີ່ເຂັ້ມແຂງກວ່າເກົ່າກ່ຽວກັບອົງການຊາວໜຸ່ມ |

## ເອກະສານຊ້ອນທ້າຍ 9: ສະຫຼຸບຫຍໍ້ ກ່ຽວກັບ ອຸປະສັກຕໍ່ສຸຂະພາບ, ການສຶກສາ, ການມີວຽກເຮັດງານທຳ, ການປົກປ້ອງ ແລະ ການມີສ່ວນຮ່ວມ

**1) ອຸປະສັກຕໍ່ສຸຂະພາບ**

| ອຸປະສັກ | ຜົນກະທົບຕໍ່ສາທາ |
|---|---|
| **ດ້ານການເງິນ** | |
| ຂາຍຢາບ້າເອົາເງິນ | ກາຍເປັນຕິດຢາບ້າ |
| ບໍ່ມີເງິນປິ່ນປົວທີ່ຄລີນິກ ຫຼື ໂຮງໝໍ | ບໍ່ໄດ້ໄປປິ່ນປົວ |
| ບໍ່ມີເງິນເດີນທາງໄປໂຮງໝໍ ຫຼື ຄລີນິກ (ອາດເດີນທາງບົກ ຫຼື ເດີນທາງເຮືອ) | ບໍ່ໄດ້ໄປປິ່ນປົວ |
| ຂາດການໃຫ້ສຸຂະສຶກສາທາງເພດ | ການຖືພາແຕ່ອາຍຸຍັງນ້ອຍ, ພຕພ, ເອົາລູກອອກ. ຂາດຄວາມຮູ້ກ່ຽວກັບຮ່າງກາຍຕົນເອງ [ສິ່ງທີ່ໜ້າເປັນຫ່ວງບາງອັນແມ່ນດ້ານສຸຂະພາບຂອງຕົນ ຈຳນວນໜຶ່ງອາດເປັນການລິງຂາວທຳມະດາ, ອື່ນໆ.] |
| ມີລູກທີ່ບໍ່ຕ້ອງການ/ການຖືພາທີ່ບໍ່ໄດ້ມີການວາງແຜນ | ຄວາມສ່ຽງຕໍ່ການເອົາລູກອອກທີ່ເປັນອັນຕະລາຍ ຫຼື ມີລູກທີ່ບໍ່ເປັນທີ່ຕ້ອງການ |
| ຂາດເງິນຊື້ຖົງຢາງອານາໄມ | ຄວາມສ່ຽງຂອງ ພຕພ/ເອດສໄວວີ |
| ເຮັດວຽກຢູ່ໃນປ່າຫາອາຫານ ຫຼື ໄມ້ຂະຍຸງ | ເປັນໄຂ້ມາເລເລຍ, ໃຊ້ຢາບ້າເພື່ອມີພະລັງເຮັດວຽກ. ບໍ່ມີເງິນຊື້ເສື້ອແຂນຍາວ, ສະນັ້ນ ຈຶ່ງມີຄວາມສ່ຽງເປັນໄຂ້ມາເລເລຍ |
| ຂາດເງິນເພື່ອສືບຕໍ່ການສຶກສາຕໍ່ຈາກຊັ້ນມັດທະຍົມ | ຂາດແພດ/ພະຍາບານຊົນເຜົ່າທີ່ໄດ້ຮຽນມາເປັນຢ່າງດີ ແລະ ແພດ/ພະຍາບານຢູ່ເຂດຊົນນະບົດທີ່ມາຈາກຊຸມຊົນໃນທ້ອງຖິ່ນ |
| **ດ້ານການຈັດຕັ້ງ** | |
| ຖະໜົນຫົນທາງໃໝ່ອຳນວຍຄວາມສະດວກຕໍ່ການຄ້າຢາເສບຕິດ | ເຮັດໃຫ້ມີການຕິດຢາໄດ້ງ່າຍ |
| ຂາດກອບທາງດ້ານນິຕິກຳ/ການບັງຄັບໃຊ້ເພື່ອປ້ອງກັນການນຳໃຊ້ເຫຼົ້າ - | ມີຮ້ານກິນດື່ມຫຼາຍແຫ່ງໃກ້ກັບມະຫາວິທະຍາໄລ, ນັກຮຽນດື່ມຫຼາຍເກີນໄປ ແລະ ເກີດອຸບັດຕິເຫດ. ຄົນອື່ນ (ບໍ່ສະເພາະນັກຮຽນ) ກໍ່ມີອຸບັດຕິເຫດທາງຖະໜົນ |
| ຂາດຈິດສຳນຶກກ່ຽວກັບອານາໄມທາງດ້ານ ອາຫານ, ນ້ຳ | ມີການເຈັບເປັນຫຼາຍ |
| ສຸກສາລາບໍ່ຢູ່ໃກ້ | ບໍ່ສາມາດເຂົ້າເຖິງການປິ່ນປົວເມື່ອຕ້ອງການ.<br>ທ່າອ່ຽງຊອກຫາຢາພື້ນເມືອງ ຫຼື ຢາ "ເອກະຊົນ" ເພື່ອປິ່ນປົວ. |
| ບໍ່ມີການປິ່ນປົວຜູ້ໃຊ້ຢາເສບຕິດຢູ່ໃນບາງແຂວງ (ຫຼື ບໍ່ຮັບຮູ້ເຂົາເຈົ້າ) | ບໍ່ມີວິທີຈະໄດ້ຮັບການປິ່ນປົວໃຫ້ແກ່ຜູ້ໃຊ້ຢາເສບຕິດ |
| ຂາດຈິດສຳນຶກກ່ຽວກັບກົດໝາຍຈໍລະຈອນ, ຂາດ, ການຝຶກການຂັບຂີ່ | ຄວາມສ່ຽງຕໍ່ອຸບັດເຫດທາງຖະໜົນ |
| ຂາດຄວາມຄາດຫວັງສຳລັບອະນາຄົດຂອງເຂົາເຈົ້າ | ພຶດຕິກຳສ່ຽງ |
| ຂາດການບັງຄັບປະຕິບັດກົດໝາຍຈໍລະຈອນໂດຍຕຳຫຼວດ | ມີຫຼາຍຄົນເກີນໄປຂີ່ລົດຈັກຄັນດຽວນຳກັນ ແລະ ເກີດອຸບັດຕິເຫດ |
| **ວັດທະນະທຳ-ສັງຄົມ** | |
| ຂາດວາງແຜນລູກຮ່າງຢູ່ໃນບາງກຸ່ມຊົນເຜົ່າ | [ບໍ່ມີເວລາພຽງພໍລະຫວ່າງການຖືພາແຕ່ລະຄັ້ງເພື່ອຮັບປະກັນສຸຂະພາບ] |
| ການແຕ່ງງານແຕ່ອາຍຸຍັງນ້ອຍນຳໄປສູ່ບໍ່ມີເວລາເພື່ອ ວາງແຜນອະນາຄົດກ່ອນເລີ່ມຕົ້ນຄອບຄົວ | ອາໃສການອອກແຮງງານໜັກເປັນຫຼັກ |

| | |
|---|---|
| ອາຍທີ່ຈະລົມເລື່ອງ ພຕພ | ບໍ່ໄດ້ຊອກປິ່ນປົວເນື່ອງຈາກບໍ່ມີການຮັກສາຄວາມລັບ |
| ອາໃສຄວາມເຊື່ອແບບດັ້ງເດີມສຳລັບການດູແລສຸຂະພາບ | ມີຄວາມຊິນເຄີຍກັບໝໍຢາພື້ນເມືອງ ເຮັດໃຫ້ເຂົ້າເຖິງການດູແລສຸຂະພາບຍາກຂຶ້ນ |
| ອຸປະສັກທາງສັງຄົມຕໍ່ຄວາມສະເໝີພາບລະຫວ່າງເດັກຍິງ-ເດັກຊາຍ ສ້າງໃຫ້ມີຄວາມຂັດແຍ່ງກັນ ລະຫວ່າງເຈົ້າໜ້າທີ່ /ພໍ່ແມ່ ແລະ ເດັກຍິງ | ເດັກຍິງຢາກເຮັດສິ່ງທີ່ເດັກຊາຍເຮັດ, ດື່ມ, ໄປທ່ຽວນອກ ແຕ່ເດັກຍິງມີຄວາມສ່ຽງຕໍ່ສຸຂະພາບຫຼາຍກວ່າ |
| ກຸ່ມຊົນເຜົ່າບໍ່ສາມາດເວົ້າ/ອ່ານພາສາລາວ ໄດ້ | ພະນັກງານແພດບໍ່ສາມາດເຂົ້າໃຈເຂົາເຈົ້າໄດ້. ບໍ່ເຂົ້າໃຈການນຳສະເໜີສຸຂະສຶກສາ. ບໍ່ເຂົ້າໃຈ "ການສະແດງລະຄອນກ່ຽວກັບ ສຸຂະພາບ" |
| ດຳລົງຊີວິດຢູ່ເທິງພູ, ເຂົ້າເຖິງໄດ້ເປັນບາງລະດູການເທົ່ານັ້ນ, ມີການຕິດຕໍ່ພົວພັນກັບຄົນອື່ນຢ່າງຈຳກັດ | ພະນັກງານແພດບໍ່ສາມາດເຂົ້າເຖິງ: ແຜນງານເຄື່ອນທີ່ບໍລິການ, ການຝຶກອົບຮົມດ້ານສຸຂະສຶກສາ |
| ຄວາມກົດດັນທາງລົບຈາກໝູ່ເພື່ອນ | ຢາບ້າ, ການມີເພດສຳພັນແຕ່ຍັງນ້ອຍ, ສູບຢາ, ດື່ມເຫຼົ້າ, ແຂ່ງລົດຈັກ |
| **ອຸປະສັກດ້ານວິຊາການ** | |
| ຂາດນ້ຳສະອາດ | ເປັນສາຍເຫດຕໍ່ບັນຫາໄຕ, ກະເພາະ. ອາການຂາດນ້ຳ. ເປັນເລື່ອງປົກກະຕິສຳລັບຄົນຊົນເຜົ່າ ທີ່ຈະນຳໃຊ້ນ້ຳຈາກແມ່ນ້ຳ, ແຕ່ນ້ຳດັ່ງກ່າວເປື້ອນເກີນໄປສຳລັບເຂົາເຈົ້າທີ່ຈະໃຊ້. |
| ໄດ້ຮັບການດູແລສຸຂະພາບທີ່ມີຄຸນນະພາບບໍ່ເໝາະສົມ ເຖິງແມ່ນມີປະກັນສຸຂະພາບ | ບໍ່ໄດ້ຮັບການປິ່ນປົວພຽງພໍ - ບົ່ງມະຕິບໍ່ຖືກ, ບາງຄັ້ງເປັນໄຂ້ເລືອດອອກ ພັດບົ່ງມະຕິວ່າຖືພາ. ບາງຄັ້ງບໍ່ມີການກວດກາແຕ່ຢ່າງໃດ, ພຽງແຕ່ວາງຢາ |
| ຂາດການສຶກສາ | ບໍ່ເຂົ້າໃຈພຶດຕິກຳທີ່ມີສຸຂະພາບແຂງແຮງ |
| ມຸ້ງຍ້ອມຢານ້ອຍເກີນໄປ ຫຼື ມີຢູ່ຢ່າງຈຳກັດ ເພື່ອໃຫ້ສະມາຊິກຄອບຄົວໄດ້ນຳໃຊ້ | ເປັນໄຂ້ຍຸງຍ້ອນປະເຊີນກັບສະພາບທີ່ບໍ່ໄດ້ຮັບການປ້ອງກັນ. ນຳໃຊ້ມຸ້ງຈາກຕະຫຼາດທີ່ບໍ່ໄດ້ມີການຍ້ອມຢາ. |
| ຂາດໄຟຟ້າ ເພື່ອສະໜັບສະໜູນການສື່ສານໃນບ້ານ | ບໍ່ສາມາດປະກາດແຈ້ງການກ່ຽວກັບສຸຂະພາບໃຫ້ແກ່ຊາວບ້ານເວລາມຸ້ງມາຮອດບ້ານ, ເວລາມີການບໍລິການເຄື່ອນທີ່, ອື່ນໆ. |
| ສຸກສາລາຂາດອຸປະກອນ, ຢາ | ສຸກສາລາບໍ່ສາມາດປະຕິບັດງານໄດ້ດີ, ຄົນບໍ່ຢາກໄປຫາ |
| ແຜນງານປະກັນສຸຂະພາບມີຄວາມຈຳກັດ ດ້ານມູນຄ່າ | ຄຸນນະພາບຂອງຢາ ແລະ ຄຸນນະພາບຂອງການດູແລທີ່ໄດ້ສະໜອງໃຫ້ແກ່ຜູ້ມີປະກັນສຸຂະພາບແມ່ນຍັງຕໍ່າຫຼາຍ |

**2) ສາເຫດຂອງການອອກໂຮງຮຽນແຕ່ຍັງນ້ອຍ**

| ອຸປະສັກ | ຜົນກະທົບຂອງການສຶກສາ |
|---|---|
| **ດ້ານການເງິນ** | |
| ຂາດສຸຂະສຶກສາ | ອອກໂຮງຮຽນ |
| ມີລູກທີ່ບໍ່ຕ້ອງການ/ຖືພາໂດຍບໍ່ມີການວາງແຜນ | ອອກໂຮງຮຽນແຕ່ງງານ |
| ບໍ່ມີເງິນປິ່ນປົວຢູ່ຄລີນິກ ຫຼື ໂຮງໝໍ | ສຸຂະພາບບໍ່ແຂງແຮງພໍທີ່ຈະເຂົ້າໂຮງຮຽນ |
| ບໍ່ມີເງິນເດີນທາງໄປໂຮງໝໍ ຫຼື ຄລີນິກ (ອາດເດີນທາງບົກ ຫຼື ເດີນທາງເຮືອ) | ສຸຂະພາບບໍ່ແຂງແຮງພໍທີ່ຈະເຂົ້າໂຮງຮຽນ |
| ຄ່າໃຊ້ຈ່າຍຂອງການສຶກສາ (ຊັ້ນປະຖົມ ແລະ ມັດທະຍົມ) ແມ່ນສູງຫຼາຍສຳລັບບາງຄອບຄົວ | ຄ່າໂຮງຮຽນ, ປຶ້ມ, ເຄື່ອງນຸ່ງ, ບິກ, ສໍ ກໍ່ແພງ |

| | |
|---|---|
| ພໍ່ແມ່ເຈັບເປັນ, ເຮັດວຽກບໍ່ໄດ້ ຫຼື ເດັກຕ້ອງ ຫາເງິນເພື່ອສະໜັບສະໜູນຄອບຄົວ | ຊາວໜຸ່ມຕ້ອງອອກໂຮງຮຽນເພື່ອເຮັດວຽກໃຫ້ຄອບຄົວ (ຫຼື ຫາເງິນ) |
| ຂາດເງິນເພື່ອຮຽນຕໍ່ການສຶກສາ ຫຼັງມັດທະຍົມ | ການສຶກສາ ຫຼັງມັດທະຍົມບໍ່ສາມາດເຂົ້າເຖິງໄດ້ສໍາລັບນັກຮຽນສ່ວນຫຼາຍ. ຄ່າອາຫານ, ຫໍພັກ, ສອນເພີ່ມແມ່ນສູງຫຼາຍ. |
| **ດ້ານການຈັດຕັ້ງ** | |
| ຂາດຈິດສໍານຶກກ່ຽວກັບອານາໄມອາຫານ, ນໍ້າ | ເວລາບໍ່ສະບາຍບໍ່ສາມາດໄປໂຮງຮຽນໄດ້ |
| ຂາດເສັ້ນສາຍເພື່ອໄດ້ຕໍາແໜ່ງລັດທີ່ດີ | ບໍ່ສາມາດໄດ້ຮັບທຶນການສຶກສາ |
| ບໍ່ມີຫໍພັກສໍາລັບເດັກນ້ອຍຊົນນະບົດເພື່ອ ໃຫ້ຮຽນໂຮງຮຽນມັດທະຍົມ | ເດັກນ້ອຍບໍ່ສາມາດຊອກທີ່ພັກໃກ້ໂຮງຮຽນມັດທະນາຍົມ ສະນັ້ນຈຶ່ງອອກຮຽນ |
| ຂາດຄູ (ຫຼື ຄູບໍ່ມາສອນ) | ເດັກນ້ອຍອອກໂຮງຮຽນ, ບໍ່ມີໂຮງຮຽນ |
| ຂາດໂອກາດໃນການເຮັດວຽກສໍາລັບນັກຮຽນທີ່ຮຽນຈົບ | ການສຶກສາອາດບໍ່ໄດ້ກະກຽມນັກຮຽນດີພໍສໍາລັບວຽກທີ່ຕ້ອງການ. |
| ຂາດກອບດ້ານນິຕິກໍາ/ການບັງຄັບໃຊ້ ເພື່ອປ້ອງກັນການດື່ມເຫຼົ້າ - | ເຂົ້າເຖິງການດື່ມສິ່ງມຶນເມົາທີ່ມະຫາວິທະຍາໄລປ້ອງກັນໃຫ້ນັກດື່ມຈາກການໄດ້ຮັບການສຶກສາ ແລະ ລົບກວນນັກຮຽນຄົນອື່ນ |
| ຂາດຄວາມຄາດຫວັງໃນອານາຄົດຂອງຕົນ | ຂາດຄວາມກະຕືລືລົ້ນ/ຄວາມພະຍາຍາມທີ່ຈະໄດ້ຮັບການສຶກສາ |
| ຂາດຈິດສໍານຶກກ່ຽວກັບກົດໝາຍຈໍລະຈອນ, ຂາດການຝຶກອົບຮົມການຂັບຂີ່ | ຂາດການສຶກສາກ່ຽວກັບກົດໝາຍ |
| ຂາດການສະໜັບສະໜູນເພື່ອໄດ້ວຽກ - ການເຂົ້າເຖິງຂໍ້ມູນ | ຂາດຄວາມເຂົ້າໃຈ/ການຝຶກອົບຮົມ ວິທີຂຽນຊີວະປະຫວັດຫຍໍ້, ຈົດໝາຍສະໝັກງານ. ທັກສະໃນການສໍາພາດ |
| ບໍ່ມີໂຮງຮຽນຢູ່ໃກ້ | ບໍ່ມີຄວາມສາມາດເຂົ້າຮຽນໄດ້ຖ້າຫາກບໍ່ມີບ່ອນຮຽນຢູ່ໃກ້ |
| ຂາດການໃຫ້ຄໍາແນະນໍາດ້ານອາຊີບ | ແຈ້ງໃຫ້ນັກຮຽນຊາບບ່ອນທີ່ມີວຽກເຮັດ |
| ຂາດການເຂົ້າເຖິງການຝຶກອົບຮົມວິຊາຊີບ, ຂາດແຜນງານການຝຶກງານຢ່າງເປັນທາງການ | ບໍ່ສາມາດສືບຕໍ່ອາຊີວະສຶກສາ ຖ້າຫາກຮຽນບໍ່ຈົບມັດທະຍົມ |
| **ດ້ານວັດທະນະທໍາ-ສັງຄົມ** | |
| ກຸ່ມຊົນເຜົ່າບໍ່ສາມາດເວົ້າ/ອ່ານພາສາລາວໄດ້ | [ອາດເປັນອຸປະສັກຕໍ່ການສຶກສາ] |
| ຂາດການວາງແຜນລູກຮ່າງຢູ່ໃນບາງກຸ່ມຊົນເຜົ່າ | ບໍ່ສາມາດສຶກສາເດັກນ້ອຍທຸກຄົນ, ຜູ້ທີ່ມີອາຍຸແກ່ຢູ່ບ້ານເພື່ອເບິ່ງແຍງຜູ້ທີ່ອ່ອນກວ່າ. ສ່ວນໃຫຍ່ເດັກຊາຍຍັງສາມາດເຂົ້າຮຽນຢູ່ |
| ດໍາລົງຊີວິດຢູ່ເທິງພູ, ເຂົ້າເຖິງໄດ້ເປັນບາງລະດູການເທົ່ານັ້ນ, ມີການຕິດຕໍ່ພົວພັນກັບຄົນອື່ນຢ່າງຈໍາກັດ | ບໍ່ສາມາດເຂົ້າຫາໂຮງຮຽນເພື່ອໄດ້ຮັບການສຶກສາ, ບໍ່ມີບ່ອນພັກທີ່ໃກ້ກັບໂຮງຮຽນ |
| ອາຍທີ່ຈະລົມເລື່ອງ ພຕພ | ບໍ່ໄດ້ຮັບສຸຂະສຶກສາ ເນື່ອງຈາກບໍ່ໄດ້ຖາມເລື່ອງນີ້ |
| ຂາດຄວາມເຂົ້າໃຈຕໍ່ຄຸນຄ່າຂອງການສຶກສາ, ການສຶກສາບໍ່ໜ້າສົນໃຈ, ການສອນບໍ່ໄດ້ຄຸນນະພາບ | ອອກໂຮງຮຽນເພື່ອເຮັດວຽກ ຫຼື ພຽງເລາະຫຼິ້ນ. ຄູບໍ່ໄດ້ຮັບການຝຶກອົບຮົມພຽງພໍ ສະນັ້ນ ນັກຮຽນຈຶ່ງບໍ່ສາມາດຮຽນໄດ້ຫຼາຍຈາກຄູ |
| ຄວາມກົດດັນທາງລົບຈາກໝູ່ | ອອກໂຮງຮຽນ |
| ການແຕ່ງງານແຕ່ຍັງນ້ອຍເຮັດໃຫ້ຂາດເວລາວາງແຜນອະນາຄົດກ່ອນເລີ່ມຕົ້ນຄອບຄົວ | ອອກໂຮງຮຽນໄວຈໍາກັດຄວາມຮູ້ກ່ຽວກັບທາງເລືອກ ແລະ ໂອກາດໃນຊີວິດ |
| ໂອກາດການໃນການມີວຽກເຮັດແຕກຕ່າງ ກັນລະຫວ່າງຍິງ-ຊາຍ | ເດັກຍິງອາດບໍ່ສືບຕໍ່ເຂົ້າຮຽນ |
| ຄວາມແຕກຕ່າງດ້ານບົດບາດຍິງ-ຊາຍ ໃນການສຶກສາໃນກຸ່ມຊົນເຜົ່າຕ່າງໆ | ເດັກຍິງອາດບໍ່ສືບຕໍ່ເຂົ້າຮຽນ |

| | |
|---|---|
| ໂທລະພາບລາວບໍ່ມີຫຼາຍລາຍການ ສະນັ້ນ ເບິ່ງໂທລະພາບໄທ | ຄວາມກົດດັນຂອງໝູ່ເພີ່ມຂຶ້ນ |
| **ດ້ານວິຊາການ** | |
| ໄດ້ຮັບການດູແລສຸຂະພາບທີ່ບໍ່ມີຄຸນນະພາບດີເຖິງແມ່ນມີປະກັນສຸຂະພາບກໍຕາມ | ໄດ້ຮັບການດູແລສຸຂະພາບທີ່ບໍ່ມີຄຸນນະພາບດີເຖິງແມ່ນມີປະກັນສຸຂະພາບກໍ່ຕາມ |
| ຂາດການສຶກສາ | ຂາດການສຶກສາ |
| ຂາດອຸປະກອນສຳລັບກິລາ, ຂາດສິ່ງອຳນວຍຄວາມສະດວກ | ຂາດອຸປະກອນສຳລັບກິລາ, ຂາດສິ່ງອຳນວຍຄວາມສະດວກ |

**3) ອຸປະສັກຕໍ່ການສຶກສາ**

| ອຸປະສັກດ້ານການເງິນ | ຜົນກະທົບຕໍ່ການສຶກສາ |
|---|---|
| **ດ້ານການເງິນ** | |
| ຂາດສຸຂະສຶກສາ | ອອກໂຮງຮຽນ |
| ມີລູກທີ່ບໍ່ຕ້ອງການ/ຖືພາໂດຍບໍ່ມີການວາງແຜນ | ອອກໂຮງຮຽນແຕ່ງງານ |
| ບໍ່ມີເງິນປິ່ນປົວຢູ່ຄລີນິກ ຫຼື ໂຮງໝໍ | ສຸຂະພາບບໍ່ແຂງແຮງພໍທີ່ຈະເຂົ້າໂຮງຮຽນ |
| ບໍ່ມີເງິນເດີນທາງໄປໂຮງໝໍ ຫຼື ຄລີນິກ (ອາດເດີນທາງບົກ ຫຼື ເດີນທາງເຮືອ) | ສຸຂະພາບບໍ່ແຂງແຮງພໍທີ່ຈະເຂົ້າໂຮງຮຽນ |
| ຄ່າໃຊ້ຈ່າຍຂອງການສຶກສາ (ຊັ້ນປະຖົມ ແລະ ມັດທະຍົມ) ແມ່ນສູງຫຼາຍສຳລັບບາງຄອບຄົວ | ຄ່າໂຮງຮຽນ, ປຶ້ມ, ເຄື່ອງນຸ່ງ, ບົກ, ສໍ ກໍ່ແພງ |
| ພໍ່ແມ່ເຈັບເປັນ, ເຮັດວຽກບໍ່ໄດ້ ຫຼື ເດັກຕ້ອງຫາເງິນເພື່ອສະໜັບສະໜູນຄອບຄົວ | ຊາວໜຸ່ມຕ້ອງອອກໂຮງຮຽນເພື່ອເຮັດວຽກໃຫ້ຄອບຄົວ (ຫຼື ຫາເງິນ) |
| ຂາດເງິນເພື່ອຮຽນຕໍ່ການສຶກສາ ຫຼັງມັດທະຍົມ | ການສຶກສາ ຫຼັງມັດທະຍົມບໍ່ສາມາດເຂົ້າເຖິງໄດ້ ສຳລັບນັກຮຽນສ່ວນຫຼາຍ. ຄ່າອາຫານ, ທີ່ພັກ, ສອນເພີ່ມແມ່ນສູງຫຼາຍ. |
| **ດ້ານການຈັດຕັ້ງ** | |
| ຂາດຈິດສຳນຶກກ່ຽວກັບການອານາໄມອາຫານ, ນ້ຳ | ເວລາບໍ່ສະບາຍບໍ່ສາມາດໄປໂຮງຮຽນໄດ້ |
| ຂາດເສັ້ນສາຍເພື່ອໄດ້ຕຳແໜ່ງລັດທີ່ດີ | ບໍ່ສາມາດໄດ້ຮັບທຶນການສຶກສາ |
| ບໍ່ມີຫໍພັກສຳລັບເດັກນ້ອຍຊົນນະບົດເພື່ອ ໃຫ້ຮຽນໂຮງຮຽນມັດທະຍົມ | ເດັກນ້ອຍບໍ່ສາມາດຊອກທີ່ພັກໃກ້ໂຮງຮຽນມັດທະນາຍົມ ສະນັ້ນຈຶ່ງອອກຮຽນ |
| ຂາດຄູ (ຫຼື ຄູບໍ່ມາສອນ) | ເດັກນ້ອຍອອກໂຮງຮຽນ, ບໍ່ມີໂຮງຮຽນ |
| ຂາດໂອກາດໃນການເຮັດວຽກສຳລັບນັກຮຽນທີ່ຮຽນຈົບ | ການສຶກສາອາດບໍ່ໄດ້ກະກຽມນັກຮຽນດີພໍສຳລັບວຽກທີ່ຕ້ອງການ. |
| ຂາດຂອບດ້ານນິຕິກຳ/ການບັງຄັບປະຕິບັດ ເພື່ອປ້ອງກັນການດື່ມເຫຼົ້າ - | ເຂົ້າເຖິງການດື່ມສິ່ງມຶນເມົາທີ່ມະຫາວິທະຍາໄລປ້ອງກັນໃຫ້ນັກດື່ມຈາກການໄດ້ຮັບການສຶກສາ ແລະ ລົບກວນນັກຮຽນຄົນອື່ນ |
| ຂາດຄວາມຄາດຫວັງໃນອານາຄົດຂອງຕົນ | ຂາດຄວາມກະຕືລືລົ້ນ/ຄວາມພະຍາຍາມທີ່ຈະ ໄດ້ຮັບການສຶກສາ |
| ຂາດຈິດສຳນຶກກ່ຽວກັບກົດໝາຍຈໍລະຈອນ, ຂາດການຝຶກອົບຮົມການຂັບຂີ່ | ຂາດການສຶກສາກ່ຽວກັບກົດໝາຍ |
| ຂາດການສະໜັບສະໜູນເພື່ອໄດ້ວຽກ - ການເຂົ້າເຖິງຂໍ້ມູນ | ຂາດຄວາມເຂົ້າໃຈ/ການຝຶກອົບຮົມ ວິທີຂຽນຊີວະປະຫວັດຫຍໍ້, ຈົດໝາຍສະໝັກງານ. ທັກສະໃນການສຳພາດ |
| ບໍ່ມີໂຮງຮຽນຢູ່ໃກ້ | ບໍ່ມີຄວາມສາມາດເຂົ້າຮຽນໄດ້ຖ້າຫາກບໍ່ມີບ່ອນຮຽນຢູ່ໃກ້ |

| | |
|---|---|
| ຂາດການໃຫ້ຄຳແນະນຳດ້ານອາຊີບ | ແຈ້ງໃຫ້ນັກຮຽນຊາບບ່ອນທີ່ມີວຽກເຮັດ |
| ຂາດການເຂົ້າເຖິງການຝຶກອົບຮົມວິຊາຊີບ, ຂາດແຜນງານການຝຶກງານຢ່າງເປັນທາງການ | ບໍ່ສາມາດສືບຕໍ່ອາຊີວະສຶກສາ ຖ້າຫາກຮຽນບໍ່ຈົບມັດທະຍົມ |
| **ດ້ານວັດທະນະທຳ-ສັງຄົມ** | |
| ກຸ່ມຊົນເຜົ່າເວົ້າ ແລະ ອ່ານພາສາລາວບໍ່ໄດ້ | [ອາດເປັນອຸປະສັກຕໍ່ການສຶກສາ] |
| ຂາດການວາງແຜນລູກຫ່າງຢູ່ໃນຊົນເຜົ່າບາງກຸ່ມ | ບໍ່ສາມາດສຶກສາເດັກນ້ອຍທຸກຄົນ, ຜູ້ທີ່ມີອາຍຸແນ່ຢູ່ບ້ານເພື່ອເບິ່ງແຍງຜູ້ທີ່ອ່ອນກວ່າ. ສ່ວນໃຫຍ່ເດັກຊາຍຍັງສາມາດເຂົ້າຮຽນຢູ່ |
| ດຳລົງຊີວິດຢູ່ເທິງພູ, ເຂົ້າເຖິງໄດ້ບາງລະດູການເທົ່ານັ້ນ, ມີການຕິດຕໍ່ພົວພັນກັບຄົນອື່ນຢ່າງຈຳກັດ | ບໍ່ສາມາດເຂົ້າຫາໂຮງຮຽນເພື່ອໄດ້ຮັບການສຶກສາ, ບໍ່ມີບ່ອນພັກທີ່ໃກ້ກັບໂຮງຮຽນ |
| ອາຍທີ່ຈະລົມເລື່ອງ ພຕພ | ບໍ່ໄດ້ຮັບສຸຂະສຶກສາ ເນື່ອງຈາກບໍ່ໄດ້ຖາມເລື່ອງນີ້ |
| ຂາດຄວາມເຂົ້າໃຈຕໍ່ຄຸນຄ່າຂອງການສຶກສາ, ການສຶກສາບໍ່ໜ້າສົນໃຈ, ການສອນບໍ່ໄດ້ຄຸນນະພາບ | ອອກໂຮງຮຽນເພື່ອເຮັດວຽກ ຫຼື ພຽງເລາະຫຼິ້ນ. ຄູບໍ່ໄດ້ຮັບການຝຶກອົບຮົມພຽງພໍ ສະນັ້ນ ນັກຮຽນຈຶ່ງບໍ່ສາມາດຮຽນໄດ້ຫຼາຍຈາກຄູ |
| ຄວາມກົດດັນທາງລົບຈາກໝູ່ | ອອກໂຮງຮຽນ |
| ການແຕ່ງງານແຕ່ຍັງນ້ອຍເຮັດໃຫ້ຂາດເວລາວາງແຜນອະນາຄົດກ່ອນເລີ່ມຕົ້ນຄອບຄົວ | ອອກໂຮງຮຽນໄວຈຳກັດຄວາມຮູ້ກ່ຽວກັບທາງເລືອກ ແລະ ໂອກາດໃນຊີວິດ |
| ໂອກາດການໃນການມີວຽກເຮັດແຕກຕ່າງກັນລະຫວ່າງຍິງ-ຊາຍ | ເດັກຍິງອາດບໍ່ສືບຕໍ່ເຂົ້າຮຽນ |
| ຄວາມແຕກຕ່າງດ້ານບົດບາດຍິງ-ຊາຍ ໃນການສຶກສາໃນກຸ່ມຊົນເຜົ່າຕ່າງໆ | ເດັກຍິງອາດບໍ່ສືບຕໍ່ເຂົ້າຮຽນ |
| ໂທລະພາບລາວບໍ່ມີຫຼາຍລາຍການ ສະນັ້ນ ເບິ່ງໂທລະພາບໄທ | ຄວາມກົດດັນຂອງໝູ່ເພີ່ມຂຶ້ນ |
| **ດ້ານວິຊາການ** | |
| ໄດ້ຮັບການດູແລສຸຂະພາບທີ່ບໍ່ມີຄຸນນະພາບດີເຖິງແມ່ນມີປະກັນສຸຂະພາບກໍຕາມ | ບໍ່ສາມາດເຂົ້າໂຮງຮຽນ |
| ຂາດການສຶກສາ | ບໍ່ສາມາດສືບຕໍ່ອາຊີວະສຶກສາ ຖ້າຫາກຮຽນບໍ່ຈົບປະຖົມສຶກສາ |
| ຂາດອຸປະກອນສຳລັບກິລາ, ຂາດສິ່ງອຳນວຍຄວາມສະດວກ | ບໍ່ມີອຸປະກອນສຳລັບກິລາ, |

### 4) ອຸປະສັກຕໍ່ການມີວຽກເຮັດງານທຳ

| ອຸປະສັກ | ຜົນກະທົບຕໍ່ການຈ້າງງານ |
|---|---|
| **ດ້ານການເງິນ** | |
| ບໍ່ມີເງິນສຳລັບການປິ່ນປົວ ຢູ່ຄຣີນິກ ຫຼື ໂຮງໝໍ* | ບໍ່ສາມາດເຂົ້າໂຮງຮຽນ (ພິການ) |
| ບໍ່ມີເງິນສຳລັບການເດີນທາງໄປໂຮງໝໍ ຫຼື ຄຣີນິກ (ອາດຈະເດີນທາງທາງຖະໜົນ ແລະທາງເຮືອ) | ບໍ່ສາມາດເຂົ້າໂຮງຮຽນ (ພິການ) |
| ຄ່າໃຊ້ຈ່າຍໃນການສຶກສາ (ໃນຊັ້ນປະຖົມ ແລະ ຊັ້ນມັດທະຍົມ) ທີ່ສູງເກີນໄປສຳຫຼັບບາງຄອບຄົວ | ຂໍ້ຈຳກັດທາງການສຶກສາ, ໂອກາດໄດ້ເຮັດວຽກມີຈຳກັດ |
| ການຕັ້ງຄັນທີ່ບໍ່ຕ້ອງການ / ບໍ່ໄດ້ວາງແຜນ | ມີໂອກາດເຮັດວຽກພຽງເລັກນ້ອຍສຳລັບແມ່ຍິງ |
| ຂາດການສຶກສາດ້ານສຸຂະພາບທາງເພດ | [ຄວາມສ່ຽງຂອງການຈ້າງງານທີ່ເປັນອັນຕະລາຍ] ເນື່ອງຈາກບໍ່ຮູ້ເຖິງຄວາມສ່ຽງຈາກການເຮັດວຽກ ການບໍລິການທາງເພດ |
| ຂາດເງິນທີ່ຈະຊື້ຖົງຢາງອະນາໄມ | [ບໍ່ມີເງິນອາດນຳພາໄປສູ່ການເຮັດວຽກບໍລິການທາງເພດ - ທີ່ເປັນບັນຫາຕໍ່ການຈ້າງງານທີ່ປອດໄພ] |

| | |
|---|---|
| ຂາຍຢາບ້າເພື່ອໃຫ້ໄດ້ເງິນ | [ອຸປະສັກຕໍ່ການຈ້າງງານທີ່ປອດໄພ] |
| ຂາດເງິນເພື່ອສືບຕໍ່ຮຽນຫຼັງຊັ້ນມັດທະຍົມ | ຂາດການສຶກສາຫຼັງຊັ້ນມັດທະຍົມປາຍ ຈຳກັດການພັດທະນາໃນຊຸມຊົນ ແລະ ໂອກາດ ໃນການເຮັດວຽກ |
| ເຮັດວຽກໃນປ່າ ເພື່ອຫາອາຫານ ຫຼື ໄມ້ຂະຍູງ | [ອຸປະສັກຕໍ່ການຈ້າງງານທີ່ປອດໄພ, ເນື່ອງຈາກການເຮັດວຽກໃນປ່າມີຄວາມອັນຕະລາຍ, ແລະ ສາມາດເປັນໄຂ້ມາລາເລຍ] |
| **ດ້ານການຈັດຕັ້ງ** | |
| ຂາດການປຶກສາທາງດ້ານອາຊີບ | ນັກສຶກສາບໍ່ມີແຜນສຳລັບການສຶກສາຂອງພວກເຂົາວ່າຈະເຮັດວຽກຢູ່ໃສເມື່ອເຂົາເຈົ້າຮຽນຈົບຈາກໂຮງຮຽນ. |
| ຂາດການເຂົ້າເຖິງການຮຽນສາຍວິຊາຊີບ, ຂາດແຜນງານການຝຶກງານທີ່ເປັນທາງການ | ແຮງງານທີ່ມີສີມືບໍ່ມີໃນ ສປປ ລາວ (ຕົວຢ່າງ ຊ່າງນ້ຳປະປາ, ກຳມະກອນກໍ່ສ້າງ, ຊ່າງໄມ້, ຊ່າງໄຟຟ້າ) |
| ການຄ້າຢາບ້າໄດ້ຮັບການອຳນວຍຄວາມສະດວກຈາກເສັ້ນທາງໃໝ່ | ຂາຍຢາບ້າແມ່ນເປັນອາຊີບໜຶ່ງ |
| ຂາດຄູອາຈານ (ຫຼື ຄູອາຈານບໍ່ປະກົດຕົວ) | ບໍ່ມີການສຶກສາ ຈຳກັດການເຂົ້າເຖິງການຈ້າງງານ |
| ຂາດຈິດສຳນຶກກ່ຽວກັບສຸຂະອະນາໄມ ດ້ານອາຫານ ແລະ ນ້ຳ | ບໍ່ມີການສຶກສາ ຈຳກັດການເຂົ້າເຖິງການຈ້າງງານ |
| ບໍ່ມີຕະຫຼາດຂາຍຜະລິດຕະພັນປ່າໄມ້ ເມື່ອພວກເຂົາເກັບຜົນຜະລິດຈາກປ່າ | ຂາດຄວາມສາມາດທີ່ຈະຫາເງິນ ຈາກຜະລິດຕະພັນທີ່ເກັບໄດ້ຈາກປ່າ. |
| ຂາດການສະໜັບສະໜູນ ການເຂົ້າເຖິງຂໍ້ມູນກ່ຽວກັບເຮັດວຽກ | ວຽກອາດຈະມີຢູ່ ແຕ່ຄົນບໍ່ມີວິທີທີ່ຈະຮັບຮູ້ກ່ຽວກັບວຽກ. |
| ຂາດໂຮງຮຽນທີ່ຢູ່ໃກ້ | ເປັນສິ່ງທີ່ຍາກ ສຳລັບເດັກນ້ອຍໃນຊຸມຊົນນະບົດຈະໄດ້ວຽກທີ່ອີງຕາມການສຶກສາ. |
| ຂາດໂອກາດການຈ້າງງານສຳລັບນັກຮຽນທີ່ຈົບໃໝ່. | ອາດຕ້ອງການເສັ້ນສາຍເພື່ອຈະໄດ້ວຽກເຮັດທີ່ດີທີ່ສຸດ. |
| ຂາດເສັ້ນສາຍທີ່ຈະໄດ້ເຮັດວຽກໃນຕຳແໜ່ງທີ່ດີໃນລັດຖະບານ | ບໍ່ສາມາດໄດ້ວຽກເຮັດທີ່ດີໃນລັດຖະບານໄດ້ ຖ້າບໍ່ຮູ້ຄົນຊ່ວຍ. |
| ຂາດທາງເລືອກດ້ານການເງິນຈຸລະພາກ ເພື່ອເລີ່ມທຸລະກິດຂະໜາດນ້ອຍ | ບໍ່ສາມາດສ້າງວຽກ ຫຼື ລາຍຮັບ ເນື່ອງຈາກບໍ່ມີທຶນຮອນ ໃນການເລີ່ມທຸລະກິດຂະໜາດນ້ອຍ |
| **ດ້ານວັດທະນະທຳ-ສັງຄົມ** | |
| ການຊັກຊວນຂອງໝູ່ຄູ່ໃນທາງລົບ | ບໍ່ມີການສຶກສາ ຈຳກັດການເຂົ້າເຖິງການຈ້າງງານ |
| ອາໃສຢູ່ເຂດພູດອຍ, ເຂົ້າເຖິງໄດ້ສະເພາະຕາມລະດູການ, ມີການຕິດຕໍ່ພົວພັນກັບຄົນອື່ນພຽງເລັກນ້ອຍ | ກາລະໂອກາດໃນການເຮັດວຽກຈຳກັດ ນອກຈາກຜະລິດຕະພັນປ່າໄມ້ ແລະ ການຖາງປ່າເຮັດໄຮ່. ໂອກາດຫາເງິນມີເລັກນ້ອຍ, ພໍແຕ່ໄດ້ຢູ່ໄດ້ກິນ. |
| ແຕ່ງງານກ່ອນໄວອັນຄວນ ພາໃຫ້ຂາດເວລາວາງແຜນສຳລັບອະນາຄົດກ່ອນທີ່ຈະເລີ່ມມີຄອບຄົວ | ມີຂໍ້ຈຳກັດໃນການເບິ່ງເງື່ອນໄຂອື່ນໆ ຫຼາຍວ່າເຮັດວຽກປູກຝັງໃນຄອບຄົວ. ບໍ່ມີແນວຄິດການເຮັດວຽກແບບໃໝ່ |
| ໂອກາດໃນການຈ້າງງານມີຄວາມແຕກຕ່າງກັນລະຫວ່າງ ຍິງ ແລະ ຊາຍ. | ມີວຽກພຽງເລັກໜ້ອຍທີ່ໄດ້ຮັບຄ່າແຮງສູງສຳລັບເດັກຍິງ |
| ຄວາມແຕກຕ່າງດ້ານບົດບາດຍິງ-ຊາຍ ໃນໂອກາດການຈ້າງງານ | ເດັກຊາຍມີໂອກາດຖືກວ່າຈ້າງຫຼາຍກວ່າ |
| ຄົນຊົນເຜົ່າ ເວົ້າ/ອ່ານ ພາສາລາວບໍ່ໄດ້ | [ອາດເປັນອຸປະສັກຕໍ່ການຈ້າງງານ] |
| **ດ້ານວິຊາການ** | |
| ຂາດການສຶກສາ | ປາດສະຈາກການສຶກສາ ພວກເຂົາບໍ່ສາມາດໄດ້ວຽກທີ່ໄດ້ຮັບຄ່າຈ້າງສູງ. |
| ຂາດປະສົບການ ແລະ ການຝຶກອົບຮົມດ້ານວິຊາການ | ເມື່ອຊອກວຽກເຮັດ, ໃບປະກາດຈົບມັດທະຍົມບໍ່ພຽງພໍ, ບໍ່ສາມາດໄດ້ວຽກດີເຮັດ, ເຮັດໄດ້ແຕ່ເປັນແຮງງານທີ່ບໍ່ມີສີມືເທົ່ານັ້ນ. |
| ໄດ້ຮັບການບໍລິການດ້ານສຸຂະພາບທີ່ບໍ່ມີຄຸນນະພາບດີ ເຖິງແມ່ນວ່າມີປະກັນສຸຂະພາບກໍຕາມ | ຜົນການເຮັດວຽກບໍ່ໄດ້ດີ |

### 5) ອຸປະສັກຕໍ່ການປົກປ້ອງ

| ອຸປະສັກ | ຜົນກະທົບຕໍ່ການປົກປ້ອງ |
|---|---|
| **ດ້ານການເງິນ** | |
| ຂາດການສຶກສາດ້ານສຸຂະພາບທາງເພດ | ບໍ່ຮັບຮູ້ກ່ຽວກັບຄວາມສ່ຽງທີ່ຕິດພັນກັບການມີເພດສຳພັນ ທີ່ບໍ່ມີການປ້ອງກັນ [ໃນຊົນນະບົດ] |
| ຜູ້ປົກຄອງເຈັບເປັນ, ບໍ່ສາມາດເຮັດວຽກໄດ້ ຫຼື ລູກຕ້ອງເຮັດວຽກເພື່ອຫາເງິນຊ່ວຍຄອບຄົວ. | ເດັກນ້ອຍອາດເລີ່ມວຽກເມື່ອອາຍຸໄດ້ 10 ປີ ເພື່ອຊ່ວຍທາງດ້ານການເງິນຂອງຄອບຄົວ. |
| ລູກທີ່ບໍ່ຕ້ອງການຢາກໄດ້ /ຖືພາທີ່ບໍ່ໄດ້ມີການວາງແຜນ | ການໃຊ້ຄວາມຮຸນແຮງໃນຄອບຄົວ ອາດເປັນຜົນມາຈາກຄວາມບໍ່ເປັນຜູ້ໃຫຍ່, ແຮງກົດດັນຈາກການມີລູກກ່ອນໄວອັນຄວນ. |
| ຂາຍຢາບ້າເພື່ອຫາເງິນ | ການຕີກັນ, ຕີພໍ່ແມ່, ການລັກຂະໂມຍ |
| ບໍ່ມີເງິນຊື້ຖົງຢາງອະນາໄມ | ຄວາມສ່ຽງຂອງການຖືກບັງຄັບໃຫ້ມີເພດສຳພັນໂດຍບໍ່ປ້ອງກັນ |
| ການລັກ, ການອາດຊະຍາກຳ ທີ່ເກີດຈາກຄວາມທຸກຍາກ | ການລັກໄກ່, ເຂົ້າ ເພື່ອການຢູ່ລອດ |
| ການຊັກຊວນຈາກໝູ່ຄູ່ ເພື່ອໃຊ້ຈ່າຍສິນຄ້າລາຄາແພງ ເຮັດໃຫ້ເກີດບັນຫາທາງດ້ານການເງິນ | ໄວໜຸ່ມອາດຈະເລືອກພຶດຕິກຳທີ່ອັນຕະລາຍ (ຜູ້ຂາຍບໍລິການທາງເພດ, ການລັກ) ເພື່ອຫາເງິນ ໄປຊື້ເຄື່ອງຂອງຕາມທ່າອ່ຽງຂອງສັງຄົມ [iphone5] |
| **ດ້ານການຈັດຕັ້ງ** | |
| ຂາດຄວາມທະເຢີທະຍານສຳລັບອະນາຄົດຂອງພວກເຂົາ | ອາດຊະຍາກຳ, ການໃຊ້ຢາເສບຕິດ |
| ຂາດນິຕິກຳ/ການບັງຄັບໃຊ້ລະບຽບກົດໝາຍເພື່ອປົກປ້ອງການດື່ມເຫຼົ້າ | ການດື່ມເຫຼົ້າພົວພັນກັບການຕີກັນ, ອຸບັດເຫດທາງຖະໜົນ. |
| ຂາດຈິດສຳນຶກ ກ່ຽວກັບກົດໝາຍການສັນຈອນ, ຂາດການຝຶກແອບການຂັບຂີ່ | ຂາດຄວາມປອດໄພທາງຖະໜົນ ແລະ ຄວາມຮູ້ກ່ຽວກັບກົດໝາຍການສັນຈອນ ທີ່ພາໃຫ້ເກີດບັນຫາ. |
| ຂາດການບັງຄັບປະຕິບັດ ເມື່ອມີການລ່ວງລະເມີດກົດໝາຍ | ຜູ້ລ່ວງລະເມີດກົດໝາຍຖືກປັບໄໝ ຫຼື ຕັກເຕືອນເທົ່ານັ້ນ, ແລະ ຈາກນັ້ນກໍ່ເຮັດອີກ. |
| ບໍ່ມີການປິ່ນປົວຜູ້ໃຊ້ຢາເສບຕິດ ໃນບາງແຂວງ (ຫຼື ບໍ່ມີຈິດສຳນຶກໃນພວກເຂົາ) | ເມື່ອບາງຄົນເລີ່ມໃຊ້ຢາເສບຕິດ, ມັນເປັນເລື່ອງທີ່ຍາກຫຼາຍສຳລັບພວກເຂົາທີ່ຈະຢຸດມັນ. |
| ຂາດການບັງຄັບປະຕິບັດກົດໝາຍການສັນຈອນໂດຍຕຳຫຼວດ | ຄວາມສ່ຽງການເກີດອຸບັດຕິເຫດ, ການບາດເຈັບ. |
| **ດ້ານວັດທະນະທຳ-ສັງຄົມ** | |
| ອຸປະສັກທາງສັງຄົມ ຕໍ່ຄວາມສະເໝີພາບ ສຳລັບເດັກຍິງແລະຊາຍ ສ້າງຄວາມຂັດແຍ່ງກັນລະຫວ່າງ ອຳນາດການປົກຄອງ/ພໍ່ແມ່ ແລະ ເດັກຍິງ. | ເດັກຍິງຊອກຫາວິທີການເຂົ້າເຖິງບ່ອນທີ່ພວກເຂົາຮູ້ສຶກເທົ່າທຽມກັບເດັກຊາຍ, ແຕ່ບ່ອນເຫຼົ່ານັ້ນ ບໍ່ໄດ້ເຫັນພວກເຂົາເທົ່າທຽມກັນເທື່ອ. ເຮັດໃຫ້ມັນມີຄວາມອັນຕະລາຍຫຼາຍຂຶ້ນ ສຳລັບເດັກຍິງທີ່ຈະຕ້ອງອອກມາ. |
| ໂທລະພາບລາວ ບໍ່ມີລາຍການໃຫ້ເບິ່ງຫຼາຍ ສະນັ້ນ, ຈຶ່ງມັກເບິ່ງໂທລະພາບໄທ | ການຊັກຊວນຈາກໝູ່ຄູ່ ຈາກວັດທະນະທຳຂອງໄທ |
| ຄວາມອາຍ ທີ່ສົນທະນາກ່ຽວກັບ ພຕພ | ການປ້ອງກັນຄວາມສ່ຽງທີ່ມີຄວາມເປັນໄປໄດ້ ຖ້າການຕິດພະຍາດບໍ່ໄດ້ຮັບການປິ່ນປົວ. |
| ຂາດການຮັບຮູ້ເຖິງຄຸນຄ່າການສຶກສາ, ການສຶກສາບໍ່ໜ້າສົນໃຈ, ການສິດສອນມີຄຸນນະພາບຕ່ຳ | ຄູອາຈານອາດມີຕີໄວໜຸ່ມ, ຫຼື ຮ້ອງໃສ່ພວກເຂົາ. |

| ດ້ານວິຊາການ | |
|---|---|
| ຂາດອຸປະກອນ ກິລາ, ຂາດສິ່ງອຳນວຍຄວາມສະດວກ | ບໍ່ມີບ່ອນທີ່ປອດໄພ ໃນການຫຼິ້ນກິລາ |
| ຂາດໄຟຟ້າ ເພື່ອສະໜັບສະໜູນ ການຕິດຕໍ່ສື່ສານໃນໝູ່ບ້ານ | ບໍ່ມີລະບົບການເຕືອນຢູ່ບ້ານ [ໂທລະໂຄ່ງ] |
| ຂາດປະສົບການ, ການຝຶກອົບຮົມດ້ານວິຊາການ | ໄວໜຸ່ມຍິງ ທີ່ມີການສຶກສາໜ້ອຍ ມີຄວາມສ່ຽງຕໍ່ກັບການຖືກຄ້າມະນຸດ ໄປປະເທດໄທ ເພື່ອໄປຊອກວຽກ. ພວກເຂົ້າຖືກລໍ້ໃຈຈາກຄຳສັນຍາວ່າຈະໄດ້ຮັບເງິນເດືອນສູງ, ແຕ່ລົງທ້າຍດ້ວຍການເຮັດວຽກທີ່ອັນຕະລາຍ |

**6) ອຸປະສັກຕໍ່ການມີສ່ວນຮ່ວມ**

| ອຸປະສັກ | ຜົນກະທົບຕໍ່ການມີສ່ວນຮ່ວມ |
|---|---|
| **ດ້ານການເງິນ** | |
| ລູກທີ່ບໍ່ຕ້ອງການຢາກໄດ້ /ການຖືພາທີ່ບໍ່ໄດ້ວາງແຜນ | ການຫຍ່າ / ການແຍກທາງ / ສະພາບທີ່ມີແຕ່ພໍ່ ຫຼື ມີແຕ່ແມ່ພຽງລຳພັງ ອາດຈຳກັດ ການມີສ່ວນຮ່ວມຂອງບ້ານກັບຊາວໜຸ່ມ |
| ບໍ່ມີເງິນເພື່ອສືບຕໍ່ເຂົ້າຮຽນຫຼັງຊັ້ນມັດຕະຍົມ | ສະເພາະຜູ້ທີ່ຮັ່ງມີທີ່ສຸດເທົ່ານັ້ນ ທີ່ສາມາດໄດ້ສຶກສາທີ່ຈຳເປັນສຳລັບພວກເຂົາເພື່ອເຂົ້າຮ່ວມໃນການນຳພາຂອງບ້ານ/ເມືອງ/ແຂວງ. |
| **ດ້ານການຈັດຕັ້ງ** | |
| ສູນກາງຊາວໜຸ່ມລາວ ຍັງບໍ່ໄດ້ເຄື່ອນໄຫວ ໃນໝູ່ບ້ານຂອງພວກເຂົາ | ບໍ່ມີຕົວແທນ, ບໍ່ມີສິດມີສຽງ |
| ຂາດຄວາມທະເຍີທະຍານ ໃນອະນາຄົດຂອງພວກເຂົາ | ຂາດຄວາມຕ້ອງການ ໃນການເຂົ້າຮ່ວມກັບບ້ານ. |
| ແນວຄວາມຄິດຂອງໄວໜຸ່ມ ບໍ່ໄດ້ພົວພັນກັບການຕັດສິນໃຈໃນບ້ານ | ຕົວແທນຊາວໜຸ່ມ ໃນໝູ່ບ້ານມີຄວາມອາວຸໂສຫຼາຍ [ອາຍຸເກີນ 40 ປີ] ແລະ ບໍ່ໄດ້ຕ່າງໜ້າຊາວໜຸ່ມ ໃນກອງປະຊຸມກັບອົງການພັດທະນາຕ່າງໆ ທີ່ເຂົ້າມາໃນໝູ່ບ້ານ. ຊາວໜຸ່ມອາໄສລາວ ແຕ່ບໍ່ສາມາດເວົ້າຫຍັງໃຫ້ລາວໄດ້. |
| **ດ້ານວັດທະນະທຳ-ສັງຄົມ** | |
| ການຊັກຊວນຈາກໝູ່ຄູ່ໃນທາງລົບ | ເດັກຊາຍບໍ່ຕ້ອງການຊ່ວຍວຽກໃນບ້ານ |
| ອຸປະສັກທາງສັງຄົມ ຕໍ່ຄວາມສະເໝີພາບ ສຳລັບເດັກຍິງແລະຊາຍ ສ້າງຄວາມຂັດແຍ່ງກັນລະຫວ່າງອຳນາດການປົກຄອງ/ພໍ່ແມ່ ແລະ ເດັກນ້ອຍຍິງ. | ເດັກຍິງຕ້ອງການ ອອກໄປນອກບ້ານກັບໝູ່ຄູ່ ແລະມີສັງຄົມຄືກັບເດັກນ້ອຍຊາຍ. |
| ອາໄສຢູ່ເຂດພູດອຍ, ເຂົ້າເຖິງໄດ້ພຽງແຕ່ບາງລະດູການ, ມີການຕິດຕໍ່ພົວພັນກັບຄົນອື່ນພຽງເລັກນ້ອຍ | ບໍ່ໄດ້ເຂົ້າເຖິງ ເພື່ອຮູ້ເຖິງແຜນງານ, ຂໍ້ລິເລີ່ມຕ່າງໆຂອງລັດຖະບານ, ບໍ່ມີສຽງ |
| **ດ້ານວິຊາການ** | |
| ຂາດໄຟຟ້າ ເພື່ອຊ່ວຍໃນການຕິດຕໍ່ສື່ສານໃນບ້ານ | ຂາດຈິດສຳນຶກກ່ຽວກັບເຫດການຕ່າງໆໃນບ້ານ, ຂາດການເຂົ້າເຖິງການຕິດຕໍ່ສື່ສານ. |
| ຂາດອຸປະກອນກິລາ, ຂາດສິ່ງອຳນວຍຄວາມສະດວກ | ບໍ່ມີສະຖານທີ່ສຳລັບຊາວໜຸ່ມ ເພື່ອແຂ່ງຂັນກິລາ ແລະ ມີກິດຈະກຳຮ່ວມກັນ. |